2-16-99

# ບົດທີ 1

# ຄວາມສຳຄັນແລະຄວາມໝາຍ ໃນການອະພິບາລສິດ

"ການອະພິບາລສິດ" ແມ່ນມີຄວາມສຳຄັນອັນສູງສຸດທີ່ອົງພຣະເຢຊູຄຣິສໄດ້ສັ່ງໄວ້ ພຣະອົງໄດ້ໃຫ້ຜູ້ນຳສິດຍາພິບາລ ພ້ອມທັງຜູ້ບໍວລະບັດຫລືເຖົ້າແກ່ໃຫ້ເບິ່ງແຍງຮັກສາແກະ ອັນໝາຍເຖິງສມາຊິກທຸກຄົນໃນຄຣິສຈັກທີ່ຕ້ອງມີສ່ວນຮ່ວມມືຊ່ວຍເຫລືອສິດຍາພິບາລ ເພື່ອໃຫ້ການເບິ່ງແຍງຮັກສາລ້ຽງດູຊຶ່ງກັນແລະກັນຢ່າງທົ່ວເຖິງ ແຕ່ທີ່ສຳຄັນແມ່ນຜູ້ເປັນສິດຍາພິບາລຕ້ອງມີໜ້າທີ່ຮັບຜິດຊອບໂດຍກົງໃນເຣື້ອງນີ້ ພຣະເຢຊູຄຣິສໄດ້ຖາມທ່ານອັຄສາວົກເປໂຕເຖິງສາມເທື່ອ ເພື່ອເປັນການຫຍັ່ງນ້ຳໃຈແລະຄວາມຮູ້ສຶກຂອງທ່ານອັຄສາວົກເປໂຕ ຊຶ່ງເຮົາສລູບຄຳກຳຊັບຂອງພຣະເຢຊູໄດ້ວ່າ **"ຈົ່ງລ້ຽງແກະຂອງເຮົາ"** (ຢຮ 21:15-17)

ຕາມປະສົບການທີ່ຜ່ານມາຄຣິສຈັກທີ່ມີຢູ່ໃນປວັດສາດແລະໃນປັດຈຸບັນ ສິດຍາພິບາລແລະຜູ້ນຳຄຣິສຈັກທັງຫລາຍພາກັນຍອມຮັບວ່າ ແທ້ທີ່ຈິງວຽກງານໃນຄຣິສຈັກນັ້ນມີຫລາຍແນວ ມີຫລາຍພາກສ່ວນເປັນອົງປະກອບເຂົ້າດ້ວຍກັນ ນັບຕັ້ງແຕ່ການຈັດຣະບົບບໍຣິຫານງານ ການຈັດຕຽມເຈົ້າໜ້າທີ່ຂອງຄຣິສຈັກ ການຈັດໃຫ້ມີການອົບຮົມສັ່ງສອນໃນທຸກຣະດັບທຸກວັຍ ແລະການຮັບໃຊ້ສມາຊິກ ການເບິ່ງແຍງຮັກສາແກ່ຄົນທຸກເພດທຸກວັຍ ຕັ້ງແຕ່ເລັ້ມແຕ່ງງານ ການເກີດເດັກນ້ອຍ ຜູ້ເຖົ້າ ຜູ້ເຈັບເປັນຈົນເຖິງຄົນຕາຍ ເຖິງແມ່ນວ່າວຽກຈະຫລາຍແນວປານໃດ ເມື່ອນຳເອົາວຽກການທັງໝົດເຫລົ່ານັ້ນມາຣວມກັນເຂົ້າໄວ້ດ້ວຍກັນແລ້ວ ກໍສາມາດສລູບເຂົ້າເປັນຈຸດປະສົງສຳຄັນທີ່ເປັນການສົ່ງເສີມສນັບສນຸນວຽກງານຂອງຄຣິສຈັກທີ່ສຳຄັນທີ່ສຸດໄດ້ 2 ປະການ

1. *ການປະກາດຂ່າວປະເສີດຂອງພຣະເຢຊູຄຣິສ ເພື່ອໃຫ້ມະນຸດໄດ້ຫັນຈາກໃຈເກົ່າ ກັບໃຈບັງເກີດໃໝ່ໃນພຣະຄຣິສ*
2. *ລ້ຽງດູຮັກສາຈິດວິນຍານຂອງຜູ້ກັບໃຈໃໝ່ທີ່ເຮົາເອີ້ນວ່າ "ຄຣິສຕຽນ" ໃຫ້ຈະເຣີນເຕີບໃຫຍ່ຝ່າຍຈິດວິນຍານ ໂດຍພຣະວັຈນະຂອງພຣະເຈົ້າ ໂດຍການຊົງນຳພາຂອງພຣະວິນຍານບໍຣິສຸດ ແລະໂດຍການຊີ້ແຈງສົ່ງເສີມສນັບສນຸນລ້ຽງດູເບິ່ງແຍງເຂົາໃຫ້ມີຄວາມເຊື່ອ ເພື່ອສາມາດເປັນພຍານ ນຳຜູ້ອື່ນ ໆ ໃຫ້ມີຄວາມເຊື່ອຕໍ່ໄປໄດ້ຈົນເຖິງຄວາມຣອດພົ້ນ*

ໃນປະການທີ່ສອງນີ້ແຫລະເປັນ ເຣື້ອງສຳຄັນທີ່ເຮົາຈະເນັ້ນແມ່ນການສນັບສນຸນເບິ່ງແຍງລ້ຽງດູສມາຊິກໃຫ້ເຂົາໃຫຍ່ໃນຄວາມເຊື່ອໃນຝ່າຍຈິດວິນຍານ ຊຶ່ງຈະເປັນຜົນໂດຍກົງທີ່ສົ່ງເສີມໃຫ້ເຂົາຮູ້ຈັກການດຳເນີນຊີວິດໃນໂລກນີ້ໃຫ້ດີຂຶ້ນໃຫ້ຖືກຕ້ອງຂຶ້ນ ໃຫ້ຊອບທັມຂຶ້ນ ແລະມີສັນຕິສຸກໃນອົງພຣະຜູ້ເປັນເຈົ້າ ພ້ອມກັບການຮູ້ຈັກນຳຄອບຄົວ ແລະຜູ້ອື່ນ ໆ ມາເຖິງຄວາມຮັກຂອງພຣະເຈົ້າດ້ວຍ

## ນີ້ງ. ຄວາມໝາຍຄຳວ່າ "ອະພິບາລສິດ"

ຖ້າຈະເວົ້າກັນຢ່າງຊັດແຈ້ງແລ້ວຄຳວ່າ "ອະພິບາລສິດ" ມີຄວາມໝາຍວ່າ "ການເບິ່ງແຍງຮັກສາລ້ຽງດູສິດ" ຫລື "ການລ້ຽງດູລູກແກະ" ຕາມຄຳສັ່ງຂອງພຣະເຢຊູຄຣິສ

ການອະພິບາລສິດມາຈາກຄວາມໃນພາສາອັງກິດວ່າ "Pastoral Care" ແລະມາຈາກຄວາມຜະສົມ ຂອງຄຳວ່າ **"ອະພິບາລ"** ສົມກັບຄຳວ່າ **"ສິດ"** ຈຶ່ງເປັນ **"ອະພິບາລສິດ"** ແມ່ນການເບິ່ງແຍງຮັກສາລ້ຽງດູສິດໃຫ້ເກີດການເຕີບໃຫຍ່ໃນຝ່າຍຈິດໃຈ ແລະຈິດວິນຍານ ລວມໄປເຖິງຄວາມຕ້ອງການຝ່າຍຮ່າງກາຍດ້ວຍ ຊຶ່ງເປັນປັດຈັຍທີ່ຈຳເປັນຕໍ່ການດຳລົງຊີວິດຂອງຜູ້ເຊື່ອທຸກຄົນ

ເມື່ອເຮົາສຶກສາເຖິງເຣື່ອງຫລັກການອະພິບາລສິດ ຈະພົບວ່າມີຜູ້ໃຫ້ຄວາມຫມາຍໄວ້ຫລາຍແນວ ແຕ່ຂໍສລູບໄວ້ໃນບົດຮຽນນີ້ວ່າ ການອະພິບາລສິດຫມາຍເຖິງ

**(ກ)** *"ຜູ້ເປັນສິດຍາພິບາລມີໜ້າທີ່ເບິ່ງແຍງຮັກສາສິດ ເພື່ອເສີມສ້າງໃຫ້ເກີດການເຕີບໃຫຍ່ໃນຄວາມເຊື່ອ ແລະຊ່ວຍໃຫ້ຄຳປຶກສາແກ່ສະມາຊິກ ເພື່ອເຂົາຈະຮູ້ຈັກຫົນທາງແກ້ໄຂບັນຫາທີ່ເກີດໃນຊີວິດຂອງເຂົາ ໂດຍການນຳພາໃຫ້ຜູ້ເຊື່ອຮູ້ຈັກສະແຫວງຫາການຊ່ວຍເຫລືອ ແລະການຊົງນຳພາຂອງພຣະເຈົ້າ ພ້ອມທັງຮຽນຮູ້ຈັກການແກ້ໄຂບັນຫາ ຫລືຮູ້ຈັກຜະເຊີນກັບບັນຫາທີ່ມີຢູ່ຕໍ່ໜ້າຢ່າງຖືກຕ້ອງຕາມຫລັກຄວາມເຊື່ອໃນພຣະຄັມພີ"*

**(ຂ)** *"ການອະພິບາລສິດ ຫມາຍເຖິງຜູ້ເປັນສິດຍາພິບາລ ຮູ້ຈັກນຳພາຜູ້ນຳຄຣິສຕຽນແລະສມາຊິກທຸກຄົນໃຫ້ເກີດຄວາມຮ່ວມມື ແລະຮູ້ຈັກຊ່ວຍເຫລືອບຸກຄົນທີ່ປະສົບກັບບັນຫາຄວາມຈຳເປັນຝ່າຍຮ່າງກາຍ (ເຊັ່ນ ອາຫານການກິນ ທີ່ຢູ່ອາສັຍ) ຝ່າຍຈິດໃຈ (ເຊັ່ນ ຄວາມອຸກອັ່ງໃຈ) ແລະຝ່າຍຈິດວິນຍານ (ເຊັ່ນ ການເຂົ້າໃກ້ຊິດພຣະເຈົ້າຢ່າງຖືກຕ້ອງ) ໂດຍໃຊ້ຄຳສອນຂອງພຣະຄັມພີ ແລະອາສັຍການຊົງນຳພາຂອງພຣະວິນຍານບໍຣິສຸດເປັນຫລັກເຂົ້າແກ້ບັນຫາຂອງສມາຊິກ"*

ຈາກຄວາມທີ່ບັນຍາຍໄວ້ໃນຂໍ້ ກ. ມີຄວາມຫມາຍວ່າ ຜູ້ເປັນສິດຍາພິບາລມີຄວາມຮັບຜິດຊອບໂດຍ ກົງທີ່ຈະນຳພາໃຫ້ສມາຊິກໃຫຍ່ໃນຄວາມເຊື່ອ ເພາະວ່າສິດຍາພິບາລເປັນບຸກຄົນສຳຄັນທີ່ຈະສັ່ງສອນ ເສີມສ້າງ ແລະໃຫ້ຄຳປຶກສາແກ່ສມາຊິກໃຫ້ເຂົາຮູ້ຈັກການຮຽນຮູ້ ຮູ້ຈັກການຕັດສິນໃຈ ຮູ້ຈັກການແກ້ໄຂບັນຫາ ດ້ວຍຕົວຂອງເຂົາເອງ ໂດຍເພິ່ງພາອາສັຍການຊົງນຳພາຂອງພຣະເຈົ້າ ຕາມຫລັກຄຳສອນຂອງພຣະຄັມພີ ຫລືສາມາດເວົ້າກັນຢ່າງງ່າຍ ໆ ວ່າ ສິດຍາພິບາລຕ້ອງຮູ້ຈັກສັ່ງສອນອົບຮົມສິດໃຫ້ເຂົາຮູ້ຈັກແກ້ໄຂບັນຫາຂອງເຂົາແລະຄຣິສຈັກຮ່ວມກັນ ບໍ່ແມ່ນວ່າທ່ານຈະເປັນຜູ້ເຂົ້າໄປຮັບແກ້ໄຂບັນຫາທັງໝົດ **ແຕ່ຕ້ອງມີໜ້າທີ່ຊີ້ແຈງ ອົບຮົມ ສົ່ງເສີມ ແລະສັ່ງສອນໃຫ້ສິດຮູ້ຈັກການແກ້ໄຂບັນຫາຂອງເຂົາເອງ ໂດຍອາສັຍຄວາມເຊື່ອທີ່ເຂົາມີຢູ່ແລະຄວາມຕັ້ງໃຈຈິງຂອງເຂົາທີ່ຈະຕັ້ງຕົ້ນຊີວິດອັນຖືກຕ້ອງກັບພຣະເຈົ້າ ຊຶ່ງຈະນຳພາໃຫ້ຜູ້ນັ້ນໃຫຍ່ຂຶ້ນໃນທຸກ ໆ ດ້ານ**

ຈາກຄວາມບັນຍາຍໃນຂໍ້ ຂ. ມີຄວາມຫມາຍວ່າ ສິດຍາພິບາລເປັນບຸກຄົນສຳຄັນທີ່ຈະນຳພາໃຫ້ສມາຊິກທຸກຄົນ ເຂົ້າມາມີສ່ວນຮ່ວມໃນການໃຫ້ຄວາມຊ່ວຍເຫລືອຊຶ່ງກັນແລະກັນ ຄືຜູ້ເປັນສິດຍາພິບາລຕ້ອງຮູ້ຈັກສອນແລະອົບຮົມຜູ້ນຳແລະສມາຊິກໃນຄຣິສຈັກ ໃຫ້ຮູ້ຈັກການເບິ່ງແຍງຮັກສາລ້ຽງດູຊ່ວຍເຫລືອແກ່ຜູ້ທີ່ປະສົບບັນຫາ ເມື່ອເຫັນ

ວ່າມີຄວາມຈຳເປັນເກີດຂຶ້ນທີ່ກ່ຽວຂ້ອງກັບທາງດ້ານຮ່າງກາຍ ຈິດໃຈ ແລະຝ່າຍວິນຍານຈິດ ໂດຍເຫັນວ່າຜູ້ທີ່ປະສົບກັບບັນຫາຢູ່ໃນສະພາບທີ່ຊ່ວຍຕົວເອງບໍ່ໄດ້ນັ້ນ ຈຳເປັນຕ້ອງມີຜູ້ເຂົ້າໄປຊ່ວຍເຫລືອຈຸນເຈືອແລະນຳພາໃຫ້ຜູ້ນັ້ນຮູ້ຈັກການສະແຫວງ ຫາຄວາມຮັກຄວາມເມດຕາຈາກພຣະເຈົ້າ ໂດຍອາສັຍການຊ່ວຍເຫລືອນຳພາຂອງພຣະວິນຍານບໍຣິສຸດ ແລະອາສັຍພຣະຄັມພີເປັນຫລັກຄຳສອນໃນການແກ້ໄຂບັນຫາ

## **ສອງ. <u>ຄວາມໝາຍຂອງການເປັນສິດຍາພິບາລ</u>**

ໃນຄຣິສຈັກລາວເຮົາ ສ່ວນຫລາຍມີການເອີ້ນວ່າ "**ອາຈານ**" ແລະເອີ້ນວ່າ "**ຜູ້ນຳ**" ຫລາຍກວ່າຄຳວ່າ "**ສິດຍາພິບາລ**" (Pastor) ຊຶ່ງໂດຍແທ້ຈິງແລ້ວຄຳວ່າ "**ສິດຍາພິບາລ**" ແມ່ນມີຄວາມຖືກຕ້ອງຕາມຄວາມໝາຍທີ່ພຣະເຢຊູໄດ້ມອບໝາຍໃຫ້ເປັນຜູ້ລ້ຽງແກະ ຫລືເບິ່ງແຍງຮັກສາສິດຫລາຍກວ່າຄຳວ່າ "**ອາຈານ**"

**ສິດຍາພິບາລ** ແມ່ນຜູ້ທີ່ພຣະເຈົ້າໄດ້ຊົງເອີ້ນໃຫ້ທ່ານມາຮັກສາເບິ່ງແຍງສິດ ຕາມພາກສ່ວນທີ່ພຣະເຈົ້າມອບໝາຍໃຫ້ທ່ານຮັບຜິດຊອບ ແມ່ນວ່າຈະເປັນສິດຜູ້ທີ່ເປັນສມາຊິກສົມບູນແລະທີ່ຍັງບໍ່ເປັນສມາຊິກສົມບູນທີ່ມາຮ່ວມຢູ່ນຳໃນຄຣິສຈັກ ຊຶ່ງຢູ່ໃນຂອບເຂດທີ່ສິດຍາພິບາລຕ້ອງຮຽນຮູ້ທີ່ຈະເບິ່ງແຍງຮັກສາລ້ຽງດູ ເພາະແມ່ນໜ້າທີ່ຊຶ່ງທ່ານຈະຕ້ອງເຮັດຕາມທີ່ພຣະເຈົ້າໄດ້ມອບໝາຍບັນຊາແລະແຕ່ງຕັ້ງທ່ານໄວ້ສຳລັບວຽກການອັນນີ້

**ສິດຍາພິບາລ** ມາຈາກຄຳ 2 ຄຳ ຄື **ສິດ + ອະພິບາລ** ເມື່ອລວມກັນເຂົ້າຈຶ່ງໄດ້ຄວາມວ່າ "**ສິດຍາພິບາລ**" ແມ່ນຜູ້ ອະພິບາລເບິ່ງແຍງຮັກສາສິດທີ່ຢູ່ພາຍໃຕ້ການນຳພາຂອງຕົນ ດັ່ງນັ້ນຜູ້ເປັນສິດຍາພິບາລຈຶ່ງເປັນບຸກຄົນສຳຄັນທີ່ຈະຊັກນຳໃຫ້ບຸກຄົນອື່ນ ໆ ຕົວຢ່າງ ເຖົ້າແກ່ຫລືຜູ້ປົວລະບັດ ກັມມະການ ແລະຜູ້ນຳລວມເຖິງສມາຊິກອື່ນ ໆ ໃຫ້ເຂົ້າຮ່ວມຮັບໃຊ້ວຽກການທີ່ສຳຄັນທີ່ພຣະເຢຊູຄຣິສໄດ້ບັນຊາໄວ້ນີ້ ແມ່ນການເບິ່ງແຍງຮັກສາລ້ຽງດູຝ່າຍວິນຍານແກ່ລູກສິດຫລືສມາຊິກຕາມຄວາມສັ່ງສອນທີ່ພຣະເຢຊູຄຣິສ ໄດ້ຝາກໄວ້ຄື "**ຈົ່ງລ້ຽງລູກແກະຂອງເຮົາ**"

ຜູ້ນຳ ເຖົ້າແກ່ຫລືຜູ້ປົວລະບັດ ກັມມະການ ແລະສະມາຊິກຄົນອື່ນ ໆປຽບຄື ຫູ ຕາ ແຂນ ຂາ ເປັນອະວັຍວະຂອງພຣະກາຍ ທີ່ຈະຊ່ວຍເປັນຫູເປັນຕາແກ່ສິດຍາພິບາລ ຊ່ວຍເຫລືອ ສະນັບສະນູນໃຫ້ວຽກການ ແມ່ນເຣື່ອງການລ້ຽງດູຮັກສາເບິ່ງແຍງລູກສິດໃຫ້ດຳເນີນໄປເຖິງເປົ້າໝາຍຢ່າງສະດວກຮາບຣື່ນແລະສົມບູນ ຕາມຄຳສັ່ງຂອງພຣະເຢຊູ ເພາະວ່າຈະອາສັຍສິດຍາພິບາລເປັນຜູ້ເຮັດແຕ່ຜູ້ດຽວກໍຈະເປັນໄປໄດ້ແຕ່ບໍ່ສົມບູນ ເພາະຈະມີການຂາດເຂີນ ບໍ່ທ່ວງທັນເວລາ ບໍ່ທັນກັບຜູ້ທີ່ມີຄວາມຕ້ອງການຄວາມຊ່ວຍເຫລືອ ດັ່ງນັ້ນຜູ້ເປັນສິດຍາພິບາລຈຶ່ງເປັນຜູ້ທີ່ມີຄວາມສຳຄັນຫລາຍທີ່ສຸດ ທີ່ພຣະເຈົ້າໄດ້ເອີ້ນທ່ານເປັນດັ່ງຜູ້ຕ່າງໜ້າພຣະອົງ ໃຫ້ທ່ານໄດ້ຮູ້ຈັກການລ້ຽງດູເບິ່ງແຍງຮັກສາລູກແກະຂອງພຣະເຈົ້າ ໃຫ້ເຕີບໃຫຍ່ໃນຄວາມເຊື່ອ ຄວາມຮູ້ ປະສົບການຊີວິດ ໃຫ້ຄຳປຶກສາຊ່ວຍເຫລືອແກ່ລູກແກະທີ່ປະສົບພົບກັບບັນຫາ ສິດຍາພິບາລຕ້ອງມີຄວາມຮັກ ຄວາມເມດຕາ ການເອົາໃຈໃສ່ຊ່ວຍເຫລືອແລະອົບຣົມສມາຊິກໃຫ້ຮຽນຮູ້ຈັກການດຳເນີນຊີວິດທີ່ບໍຣິສຸດ ຖືກຕ້ອງຕາມນ້ຳພຣະທັຍພຣະເຈົ້າ ແລະມີພລັງອຳນາດຈາກພຣະເຈົ້າ ໃຫ້ຮູ້ຈັກການແກ້ບັນຫາຊີວິດໄດ້ທັງທາງຕົງແລະທາງອ້ອມ

ນອກຈາກນີ້ ສິດຍາພິບາລຍັງເປັນຜູ້ນຳພາ ແລະເປັນຜູ້ກະຕຸ້ນຕັກເຕືອນໃຫ້ສະມາຊິກອື່ນ ໆ ເຂົ້າມາຮ່ວມໃນວຽກການຮັບໃຊ້ ການລ້ຽງດູເບິ່ງແຍງຮັກສາສິດ ເພື່ອວ່າການລ້ຽງດູລູກແກະຈະໄດ້ທົ່ວເຖິງສົມບູນແບບ ຕາມຄວາມສັ່ງຂອງພຣະເຢຊູຄຣິສ

## ສາມ. ຄຸນສົມບັດແລະໜ້າທີ່ໂດຍທົ່ວໄປຂອງຜູ້ເປັນສິດຍາພິບາລ

ການເປັນສິດຍາພິບາລແຕກຕ່າງຈາກການມີອາຊີບອື່ນ ໆ ແມ່ນຄວາມຈິງທີ່ວ່າຜູ້ນຶ່ງຜູ້ໃດ ທີ່ມີອາຊີບໃດອາຊີບນຶ່ງຕ້ອງມີຄຸນສົມບັດ ແລະຫນ້າທີ່ຄວາມຮັບຜິດຊອບຕາມອາຊີບນັ້ນ ໆ ຜູ້ນັ້ນຕ້ອງມີຄວາມຮູ້ຄວາມຊຳນານໃນອາຊີບຂອງຕົວ ຈຶ່ງຈະເໝາະສົມກັບຄ່າຈ້າງທີ່ເຂົາໄດ້ວ່າຈ້າງໄວ້ ຕົວຢ່າງ ຜູ້ເປັນນາຍທະຫານຕ້ອງມີຄຸນສົມບັດທີ່ສຳຄັນ ແມ່ນກ້າຫານ ຮັກຊາດ ບໍ່ຢ້ານຕາຍ ຮູ້ຈັກມີຣະບຽບວິນັຍ ຮູ້ຈັກການໃຊ້ອາວຸດຍຸດທະພັນເພື່ອປ້ອງກັນປະເທດຊາດ ບໍ່ຂັດຂືນຄຳສັ່ງເມື່ອເຈົ້ານາຍເອີ້ນໃຫ້ອອກເສິກ ອີກທັງຕ້ອງມີຄວາມສັດຊື່ ຈົ່ງຮັກພັກດີຕໍ່ປະເທດຂອງຕົນເປັນຕົ້ນ ຖ້າຫາກເຮົາເອົາແຕ່ລະອາຊີບຂຶ້ນມາພິຈາຣະນາແລ້ວ ແຕ່ລະອາຊີບມີການຮຽກຮ້ອງແຕ່ລະແນວຕ່າງ ໆ ກັນຕາມຄຸນສົມບັດຂອງອາຊີບນັ້ນ ໆ ແຕ່ວ່າໃນຖານະສິດຍາພິບາລມີຄວາມພິເສດຫລາຍກວ່ານັ້ນອີກ ຄືສິດຍາພິບາລແມ່ນຜູ້ທີ່ພຣະເຈົ້າໄດ້ຊົງເອີ້ນມາ ໃຫ້ເຮັດວຽກຮັບຜິດຊອບຕາມໜ້າທີ່ ໆ ພຣະເຈົ້າໄດ້ມອບໝາຍໄວ້ໃຫ້ ຊຶ່ງບໍ່ໄດ້ເປັນແຕ່ພຽງອາຊີບນຶ່ງ ແຕ່ມີຄວາມໝາຍແລະຄວາມຮັບຜິດຊອບທີ່ສູງເກີນກວ່າການມີອາຊີບເພື່ອລ້ຽງຊີບ ແຕ່ເປັນການເສັຍສະລະຂອງຜູ້ນັ້ນທີ່ຖືກເອີ້ນມາເພື່ອປະຕິບັດຕາມພຣະບັນຊາທີ່ພຣະເຈົ້າໄດ້ຊົງມອບໝາບໄວ້ໃຫ້ແກ່ເຂົາ ຜູ້ທີ່ເປັນສິດຍາພິບາລຕ້ອງມີປະສົບການໃນເຣື່ອງການຊົງຮຽກທີ່ພຣະເຈົ້າໄດ້ເອີ້ນເຂົາ ຫລືຢ່າງນ້ອຍທີ່ສຸດຕ້ອງມີຄວາມຮູ້ສຶກຢູ່ໃນໃຈວ່າ ພຣະເຈົ້າໄດ້ເອີ້ນທ່ານມາຮັບໃຊ້ແລະທ່ານຍິນດີຍອມຖວາຍຊີວິດ ຖວາຍຕົວຕາມການຊົງເອີ້ນຮຽກຂອງພຣະເຈົ້າດ້ວຍຄວາມເສັຍສະລະແລະອົດທົນ

ຈາກການສຳຣວດພົບວ່າ ສິດຍາພິບາລທີ່ດີ ທີ່ເປັນແບບຢ່າງໄດດີໃນເຣື່ອງການເສັຍສະລະນັ້ນ ແມ່ນຜູ້ທີ່ຮູ້ຕົວວ່າ "ພຣະເຈົ້າໄດ້ເອີ້ນເຂົາມາຮັບໃຊ້" ຜູ້ໃດກໍຕາມທີ່ມາເຮັດໜ້າທີ່ສິດຍາພິບາລຍ້ອນມີຈຸດປະສົງອື່ນ ໆ ເຊັ່ນ ອຳນາດ ຊື່ສຽງ ຫລືພຽງຍຶດໄວ້ເປັນອາຊີບນຶ່ງເທົ່ານັ້ນ ຜູ້ນັ້ນມັກຈະພົບກັບບັນຫາ ແລະຄວາມຍຸ້ງຍາກທີ່ຕາມມາໃນພາຍຫລັງ

ຜູ້ທີ່ເປັນສິດຍາພິບາລຕ້ອງເປັນຄົນທີ່ມີນ້ຳໃຈເມດຕາກະຣຸນາ ແລະມີຄວາມເສັຍສະລະຢ່າງສູງສຸດ ຕ້ອງມີຄວາມຮັກຫລາຍທີ່ສຸດ ແລະຕ້ອງມີສະຕິປັນຍາແລະນ້ຳໃຈທີ່ມາຈາກພຣະເຈົ້າ ແມ່ນສະຕິປັນຍາແລະນ້ຳຈິດນ້ຳໃຈທີ່ເປັນຄວາມດີ ຄວາມຂອບທັມແລະຄວາມບໍຣິສຸດ ສິດຍາພິບາລຕ້ອງເປັນຜູ້ທີ່ມັກເຂົ້າເຝົ້າພຣະເຈົ້າ ມັກອ້ອນວອນມັກອ່ານພຣະວັຈນະຂອງພຣະອົງ ແລະມີຈິດໃຈຫລືນ້ຳໃຈສະອາດເສາະໃສຕາມຢ່າງພຣະເຢຊູ ຍອມມອບກາຍຖວາຍຊີວິດແດ່ພຣະເຈົ້າ ມີຄວາມຕັ້ງໃຈຢ່າງເຂັ້ມແຂງໃນການຮັບໃຊ້ພຣະເຈົ້າຫລາຍກວ່າສິ່ງອື່ນໃດທັງໝົດ ຄວາມສົນໃຈຂອງສິດຍາພິບາລ ຕ້ອງຢູ່ທີ່ການເບິ່ງແຍງຮັກສາລູກແກະຂອງຕົນຕາມທີ່ພຣະເຈົ້າໄດ້ມອບໝາຍໃຫ້ ມີຄວາມຮັກ ຄວາມເມດຕາ ແລະເປັນຫ່ວງຝູງແກະຢ່າງແທ້ຈິງທີ່ມາຈາກໃຈຈິງຂອງທ່ານເອງ

ຄຸນສົມບັດແລະໜ້າທີ່ຂອງສິດຍາພິບາລທີ່ສຳຄັນມີຫລາຍປະການ ແຕ່ໃນທີ່ນີ້ເຮົາຂໍເນັ້ນເຖິງສິດຍາພິບາລໃນຖານະຜູ້ລ້ຽງດູເບິ່ງແຍງແກະທີ່ມີຢູ່ໃນຄອກຂອງເຂົາ ແມ່ນການອະພິບາລສິດຕາມພຣະທັມໂຢຮັນ 10:11-16 ໄດ້ກ່າວເຖິງຄຸນນະລັກສະນະ ແລະໜ້າທີ່ຂອງຜູ້ລ້ຽງດູແລ ດັ່ງຕໍ່ລົງໄປນີ້

1. ຜູ້ລ້ຽງທີ່ດີຕ້ອງຮູ້ຈັກແກະຂອງເຂົາ
2. ຜູ້ລ້ຽງທີ່ດີຕ້ອງຍອມເສັຍສະລະຊີວິດຂອງເຂົາເພື່ອແກະ
3. ຜູ້ລ້ຽງທີ່ດີຕ້ອງມີຄວາມກ້າຫານອົດທົນ

4. ຜູ້ລ້ຽງທີ່ດີຕ້ອງມີຄວາມຮັກຫວ່ງໃຍໃນລູກແກະທີ່ຫລົງຫາຍ
5. ຜູ້ລ້ຽງທີ່ດີຕ້ອງເຮັດທຸກວິທີທາງ ເພື່ອນຳໃຫ້ລູກແກະກັບຄືນດີກັບພຣະເຈົ້າ

ຄຣິສຈັກລາວໃນປັດຈຸບັນມີການເບິ່ງແຍງລ້ຽງດູຮັກສາສມາຊິກໃນຄຣິສຈັກ ທີ່ເປັນລູກແກະຂອງພຣະເຈົ້ານັ້ນກໍເປັນການດີຢູ່ ຫາກແຕ່ວ່າຍັງມີສມາຊິກຈຳນວນທີ່ເປັນຄຣິສຕຽນແລ້ວແຕ່ຍັງອ່ອນແອໃນຄວາມເຊື່ອ ຊຶ່ງມີຈຳນວນຫລາຍກວ່າໝູ່ ແລະຜູ້ນຳທີ່ເຂັ້ມແຂງມີນ້ອຍບໍ່ພຽງພໍທີ່ຈະຊ່ວຍເຫລືອແກ້ໄຂບັນຫາຂອງສມາຊິກທີ່ມີຢູ່ໃນຄຣິສຈັກ ນອກຈາກນີ້ຍັງຂາດອຸປະກອນ ບົດຮຽນ ຫລືການອົບຮົມສັ່ງສອນໃນເຣື້ອງການອະພິບາລສິດທີ່ຍັງບໍ່ພຽງພໍ ຫລືຍັງບໍ່ມີຄວາມເຂົ້າໃຈໃນເຣື້ອງການລ້ຽງດູເບິ່ງແຍງສມາຊິກຢ່າງແທ້ຈິງ ຄົນສ່ວນຫລາຍມັກຄິດວ່າ ການຮັກສາສິດປ່ອຍໄວ້ເປັນໜ້າທີ່ຂອງສິດຍາພິບາລເທົ່ານັ້ນ ແຕ່ແທ້ຈິງແລ້ວ ການເບິ່ງແຍງລ້ຽງດູຮັກສາສິດຕ້ອງມີການຮ່ວມມືຈາກຜູ້ນຳຫລາຍຝ່າຍ ບໍ່ແມ່ນປະປ່ອຍໃຫ້ເປັນຫນ້າທີ່ຂອງສິດຍາພິບາລແຕ່ພຽງຜູ້ດຽວ ເພາະວ່າສິດຍາພິບາລຈະມີຄວາມຈຳກັດໃນເຣື້ອງເວລາ ແລະບໍ່ສາມາດເບິ່ງແຍງແກ້ໄຂບັນຫາຂອງສມາຊິກແຕ່ລະຄົນໄດ້ທ່ວງທັນເວລາ ແລະບໍ່ທົ່ວເຖິງທັງໝົດ ແຕ່ໃນທາງກົງກັນຂ້າມ ກັບພົບວ່າ... ແຕ່ໃນທຳນອງດຽວກັນ ຜູ້ເປັນສິດຍາພິບາລຫລາຍທ່ານກໍຖືເອົາຂໍ້ອ້າງແລະປ່ອຍປະລະເລີຍໜ້າທີ່ຂອງຕົນຍ້ອນບໍ່ມີຄວາມເຂົ້າໃຈ ຫລືຍ້ອນໄດ້ເງິນຄ່າຕອບແທນບໍ່ພຽງພໍກັບເວລາແລະແຮງງານທີ່ເສັຍໄປຈຶ່ງຂາດກຳລັງໃຈ ເລີຍເຮັດໄປແບບພໍຜ່ານ ໆ ຢ່າງບໍ່ສົນໃຈບ້າງ ຫລືຍ້ອນຕ້ອງມີອາຊີບສຳລອງເພື່ອລ້ຽງດູຄອບຄົວຂອງຕົນເຮັດໃຫ້ບໍ່ມີເວລາ ເຖິງຢ່າງໃດກໍຕາມ ໜ້າທີ່ການຮັກສາເບິ່ງແຍງລ້ຽງດູລູກສິດນັ້ນ ເປັນພາຣະໜ້າທີ່ຮັບຜິດຊອບໂດຍຕົງຂອງສິດຍາພິບາລ ທີ່ຈະປະປ່ອຍໃຫ້ເກີດຄວາມອ່ອນແອໃນເຣື້ອງນີ້ບໍ່ໄດ້ ແຕ່ຕ້ອງເປັນຜູ້ນຳທີ່ເຂັ້ມແຂງ ເປັນຜູ້ຣິເລີ້ມສ້າງສາ ສົ່ງເສີມໃຫ້ສມາຊິກຜູ້ອື່ນ ໆ ໃຫ້ເກີດຄວາມຮູ້ຄວາມເຂົ້າໃຈ ແລະກະຕຸ້ນເຕືອນໃຫ້ຜູ້ນຳທຸກຝ່າຍຮ່ວມມືກັນ ເປັນຫູ ເປັນຕາ ເປັນຂາ ເປັນແຂນ ເປັນມື ໃນການອອກໄປເກື້ອກູນ ເບິ່ງແຍງຮັກສາ ຊ່ວຍເຫລືອແກ່ຜູ້ທີ່ພົບກັບບັນຫາ ສິດຍາພິບາລຕ້ອງຮູ້ຈັກຝຶກຝົນອົບຮົມຕົນເອງ ແລະນຳໄປຝຶກຝົນອົບຮົມຜູ້ນຳໃນຄຣິສຈັກຂອງຕົນເອງ ຮູ້ຈັກວາງແຜນງານ ແລະມອບໝາຍໜ້າທີ່ໃຫ້ຜູ້ນຳຫລືສມາຊິກອື່ນ ໆ ຊ່ວຍໃນຍາມທີ່ຕົນເອງບໍ່ສາມາດເຮັດໄດ້ທັນເວລາ ເພາະແມ່ນຄວາມຈິງທີ່ວ່າສິດຍາບິບາລເຮັດຜູ້ດຽວບໍ່ໄດ້ ຜູ້ນຳຄຣິສຈັກສົມຄວນຈະແບ່ງເບົາພາຣະໃນເຣື້ອງນີ້ນຳກັນ ແຕ່ບໍ່ໃຫ້ຜູ້ເປັນສິດຍາພິບາລຖືເອົາເຣື້ອງນີ້ເປັນຂໍ້ອ້າງຢູ່ສເມີ ຍ້ອນວ່າຕົນເອງເຫັນແກ່ຕົວ ມັກວາງຕົວເປັນເຈົ້ານາຍໃຊ້ຜູ້ອື່ນ ອັນນີ້ເຮັດໃຫ້ຄຣິສຈັກເກີດການເສັຍຫາຍ ແລະເກີດການແຕກແຍກຕາມມາ ອັນເນື່ອງຈາກການໃຊ້ອຳນາດແລະການວາງຕົວເປັນເຈົ້ານາຍ ແລະເຮັດໃຫ້ພຣະເຈົ້າເສັຍພຣະທັຍ ພຣະເຢຊູກ່າວວ່າ "ທ່ານທັງຫລາຍຮູ້ຢູ່ວ່າ ຜູ້ທີ່ນັບວ່າເປັນຜູ້ປົກຄອງຄົນຕ່າງຊາດກໍບັງຄັບບັນຊາເຂົາ ແລະພວກຜູ້ໃຫຍ່ກໍໃຊ້ອຳນາດເໜືອເຂົາ ແຕ່ໃນຣະຫວ່າງພວກທ່ານບໍ່ເປັນເຊັ່ນນັ້ນ ຖ້າຜູ້ໃດຢາກເກີດເປັນໃຫຍ່ໃນພວກທ່ານ ຜູ້ນັ້ນຈະຕ້ອງເປັນຜູ້ຮັບໃຊ້ທ່ານທັງຫລາຍ ແລະຖ້າຜູ້ໃດຢາກເປັນເອກເປັນຕົ້ນໃນພວກທ່ານ ຜູ້ນັ້ນຈະຕ້ອງເປັນຂ້ອຍໃຊ້ຂອງທ່ານທັງໝົດ ເພາະບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນປະຕິບັດຕົນ ແຕ່ມາເພື່ອປະຕິບັດເຂົາ ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫລາຍ" (ມກ 10:41-45)

ສົ່ 3-27-99

# ບົດທີ 2

# ພາຣະໜ້າທີ່ຂອງສິດຍາພິບາລ
# ແລະ
# ລັກສະນະຂອງການອະພິບາລສິດ

ພາຣະໜ້າທີ່ຮັບຜິດຊອບ ແລະຮູບແບບການອະພິບາລສິດຂອງສິດຍາພິບາລ ເປັນເຣື່ອງທີ່ມີຄວາມລະອຽດອ່ອນ ແລະຕ້ອງໃຊ້ກຳລັງຄວາມສາມາດພິເສດ ລວມໄປເຖິງພອນສວັນ (Gift) ທີ່ພຣະເຈົ້າຊົງປະທານໃຫ້ແກ່ຜູ້ນັ້ນ ຜູ້ເປັນສິດຍາພິບາລຕ້ອງມີກຳລັງໃຈພິເສດແລະຈິດວິນຍານເຂັ້ມແຂງທີ່ມາຈາກພຣະເຈົ້າ ຊຶ່ງມີຄວາມໝາຍລວມໄປເຖິງຄວາມຕັ້ງໃຈຢ່າງເດັດຂາດທີ່ຕົນເອງໄດ້ປະຕິຍານໄວ້ເພື່ອການຮັບໃຊ້ພຣະເຈົ້າ ຜູ້ເປັນສິດຍາພິບາລຈຳເປັນຕ້ອງມີຄວາມຮັກແພງໃນອົງພຣະຜູ້ເປັນເຈົ້າ ແລະພ້ອມທີ່ຈະເສັຍສະລະຕົວເອງ ເພື່ອເບິ່ງແຍງຮັກສາລູກແກະຂອງພຣະຄຣິສ ນອກຈາກສິ່ງດັ່ງກ່າວມາແລ້ວ ຜູ້ເປັນສິດຍາພິບາລຍັງຕ້ອງມີຄວາມພະຍາຍາມທີ່ຈະຮຽນຮູ້ຈັກສິ່ງໃໝ່ ໆ ໃຫ້ທັນສມັຍ ທັນຕໍ່ການປ່ຽນແປງຂອງໂລກແລະສັງຄົມ ຊຶ່ງແທ້ຈິງແລ້ວການປ່ຽນແປງຂອງໂລກແລະສັງຄົມນັ້ນແຫລະຈະກາຍເປັນຕົ້ນເຫດທີ່ກໍ່ໃຫ້ເກີດບັນຫາຫລາຍ ໆ ແນວ ທີ່ເຂົ້າມາແຊກແຊງຢູ່ໃນຊີວິດຂອງຄຣິສຕຽນ ໂດຍສະເພາະຢ່າງຍິ່ງຜູ້ທີ່ບໍ່ມີຄວາມເຂັ້ມແຂງໝັ້ນຄົງໃນພຣະເຈົ້າ ແລະບັນຫາເຫລົ່ານີ້ອາດຈະບຸກລຸກລາມເຂົ້າມາໃນຄຣິສຈັກ ດັ່ງນັ້ນຜູ້ທີ່ເປັນສິດຍາພິບາລຈຶ່ງຕ້ອງມີຄວາມສາມາດພິເສດ ແລະມີຄວາມວ່ອງໄວ ເພື່ອຈະເຂົ້າແກ້ໄຂບັນຫາໄດ້ທັນເວລາ ສິດຍາພິບາລຕ້ອງມີຫລັກການແລະຮູ້ຈັກຮູບແບບໃນການແກ້ໄຂບັນຫາຕ່າງ ໆ ໂດຍອາສັຍຄວາມເຊື່ອ ແລະການຕິດຕາມຄຳສອນຂອງພຣະຄັມພີ ສິດຍາພິບາລທີ່ມີປະສົບການຂອງການຮັບໃຊ້ພຣະເຈົ້າມາແລ້ວ ໄດ້ຍອມຮັບເປັນສຽງດຽວກັນວ່າ ໜ້າທີ່ຄວາມຮັບຜິດຊອບຂອງສິດຍາພິບາລ ມີຫລາຍຮູບແບບຫລາຍບົດບາດ ແລະຫລາຍລັກສະນະ ຊຶ່ງເປັນການຍາກຫລາຍທີ່ຈະຮັບຜິດຊອບຫນ້າທີ່ເຫລົ່ານີ້ໃຫ້ດີຄົບຖ້ວນບໍຣິບູນ ແຕ່ວ່າສິດຍາພິບາລທັງຫລາຍທີ່ປະຕິບັດງານຢູ່ໄດ້ໃນທຸກມື້ນີ້ ຍ້ອນພຣະຄຸນຄວາມຊ່ວຍເຫລືອແລະການນຳພາຂອງພຣະເຈົ້າ ສິດຍາພິບາລຕ້ອງອາສັຍຄວາມເຊື່ອ ແລະການນຳພາຂອງພຣະເຈົ້າຢ່າງແທ້ຈິງ ແລະມີຄວາມຕັ້ງໃຈທີ່ຈະເຮັດວຽກຮັບໃຊ້ພຣະເຈົ້າໂດຍຖວາຍສຸດຄວາມສາມາດຂອງຕົນ ແຕ່ວ່າໃນສ່ວນທີ່ຍັງຂາດເຂີນຢູ່ນັ້ນ ຕ້ອງເພິ່ງພາອາສັຍພຣະເຈົ້າທີ່ຈະນຳພາໄປ ແລະຕ້ອງອາສັຍສມາຊິກຫລືຜູ້ນຳທີ່ມີຄວາມເຂັ້ມແຂງຊ່ວຍເຫລືອສນັບສນຸນໃຫ້ເກີດຄວາມສົມບູນ

**ນຶ່ງ. <u>ພາຣະຫນ້າທີ່ຂອງສິດຍາພິບາລ</u>** ມີຫລາຍຢ່າງດັ່ງນີ້

**ກ. ດ້ານການເທສນາ ສັ່ງສອນ**

- ຕຽມການເທສນາ ແລະເທສນາໃນວັນອາທິດ
- ຕຽມການສອນ ແລະສອນໃນເຊົ້າວັນອາທິດ
- ຕຽມການສອນ ແລະສອນໃນຣະຫວ່າງອາທິດ

ຂ. ດ້ານການຝຶກແອບ ແລະອົບຮົມຜູ້ນຳ

- ອົບຮົມຝຶກແອບການເປັນຜູ້ນຳ
- ອົບຮົມຝຶກແອບການປະກາດເປັນພະຍານ
- ອົບຮົມຝຶກແອບກັມມະການ ແລະເຈົ້າຫນ້າທີ່ຂອງຄຣິສຈັກ
- ອົບຮົມຝຶກແອບນາຍຄຣູແລະຜູ້ສອນພຣະຄັມພີ
- ອົບຮົມຝຶກແອບ ກູ່ມຊາວຫນູ່ມ ເດັກນ້ອຍ ແມ່ຍິງ ແລະອື່ນ ໆ

ຄ. ດ້ານການປ່າວປະກາດເປັນພະຍານ

- ຈັດຕັ້ງກູ່ມປະກາດ ແລະຈັດແບ່ງຫນ້າທີ່ວຽກງານ
- ຈັດໃຫ້ມີການຟື້ນຟູ
- ຈັດໃຫ້ມີລາຍການພິເສດ ເພື່ອປ່າວປະກາດ
- ສອນຫລັກການ ແລະແນວທາງການເປັນພະຍານ

ງ. ສນັບສນຸນເສີມສ້າງພະລັງຝ່າຍວິນຍານ

- ການອະທິຖານ ອ່ານພຣະຄັມພີ ເປັນການສ່ວນຕົວ
- ການປະຊູມອະທິຖານເປັນກູ່ມ
- ສຶກສາພຣະຄັມພີ ຕາມບ້ານເຮືອນ
- ຈັດການຟື້ນຟູ ປະຈຳປີ
- ຈັດລາຍການພິເສດ ເພື່ອອົບຮົມເສີມສ້າງພະລັງຄວາມເຊື່ອ

ຈ. ດ້ານກິດຈະການທົ່ວໄປ

- ອົບຮົມຜູ້ນຳກັມມະການ ເຈົ້າຫນ້າທີ່ປະຈຳຄຣິສຈັກ
- ເປັນຜູ້ນຳ ຫລືນຳພາໃຫ້ມີການປະຊູມທຸຣະກິດປະຈຳທຸກເດືອນ
- ໃຫ້ຄຳແນະນຳດ້ານການເງິນແລະຊ່ວຍຈັດງົບປະມານຂອງຄຣິສຈັກ
- ການພັດທະນາຕົວຕຶກອາຄານຄຣິສຈັກ ຕລອດເຖິງການສ້ອມແຊມ ແລະຄວາມສະອາດ

ສ. ດ້ານປະຊາສັມພັນ

- ການອອກຈົດຫມາຍ ກ້ານເຊີນ ປະຊາສັມພັນ
- ສົ່ງລາຍງານການປະຊູມ
- ໂທຣະສັບຕິດຕໍ່ ບອກຂ່າວ
- ເຮັດໃບປິວ ຕິດປ້າຍ ຂຽນໂຄສະນາ

ຊ. ການປະກອບພິທີຕ່າງ ໆ

- ປະກອບພິທີບັບຕິສມາ
- ປະກອບພິທີຣະລຶກເຖິງພຣະເຢຊູ
- ປະກອບພິທີແຕ່ງງານ

- ປະກອບພິທີຂຶ້ນບ້ານໃໝ່
- ປະກອບພິທີຖວາຍບຸດ
- ປະກອບພິທີປົງສົບ ( ສິ່ງສະການ )

**ຍ. ດ້ານການຢ້ຽມຢາມ**

- ຢ້ຽມຢາມຜູ້ທີ່ຕົກທຸກໄດ້ຍາກ
- ຢ້ຽມຢາມຜູ້ມາໃໝ່ ຫລືສະມາຊິກໃໝ່
- ຢ້ຽມຢາມຄົນປະສົບອຸບັດຕິເຫດ
- ຢ້ຽມຢາມຄົນເຈັບປ່ວຍ
- ຢ້ຽມຢາມຄອບຄົວ ຜູ້ເສັຍຊີວິດ
- ຢ້ຽມຢາມຄົນຕ້ອງໂທດຄຸມຂັງ

**ດ. ດ້ານການໃຫ້ຄໍາປຶກສາ**

- ແກ່ຜູ້ທີ່ມີບັນຫາທຸກໃຈ
- ແກ່ຄອບຄົວທີ່ແຕກແຍກ
- ຄອບຄົວທີ່ສູນເສັຍສມາຊິກ
- ການໂຍກຍ້າຍຖິ່ນຖານທີ່ຢູ່
- ການທໍາມາຫາລ້ຽງຊີບ ທາງການງານ
- ຄົນວິກົນຈິດ (ເສັຍເສັ້ນ ) ແນະນໍາໄປຫານາຍໝໍ
- ແນະນໍາດ້ານການສຶກສາ

**ຕ. ດ້ານສັງຄົມສົງເຄາະ**

- ເງິນທຶນຊ່ອຍເຫລືອຜູ້ທຸກຍາກ
- ການແຈກຍາຍອາຫານເຄື່ອງນຸ່ງຫົ່ມ
- ຈັດຫາທີ່ພັກເຊົາແກ່ຜູ້ທີ່ຜ່ານໄປມາ

**ຖ. ດ້ານການສ້າງມິດຕະພາບກັບຊຸມຊົນ**

- ຮຽນຮູ້ປະສົບການ ການປ່ຽນແປງຂອງຊຸມຊົນທີ່ຢູ່ອ້ອມຂ້າງ
- ອ່ານຂ່າວສານການເຄືອນໄຫວຄວາມເປັນມາຂອງທ້ອງຖິ່ນ
- ສໍາຣວດຈໍານວນປະຊາກອນ ທີ່ຈະມີໂອກາດປະກາດຂ່າວປະເສີດ
- ອອກໄປທໍາການສະນິດສະນົມທັກທາຍປາໄສກັບຊາວບ້ານ
- ອອກແຈກຍາຍໃບລາຍການນມັສການຂອງຄຣິສຈັກ
- ອອກແຈກຍາຍໃບປີວພຣະວັຈນະຂອງພຣະເຈົ້າ
- ອອກຊັກຊວນຊາວບ້ານມາຮ່ວມຟື້ນຟູ ຫລືມາຮ່ວມສລອງງານພິເສດ

ທ. ດ້ານການຫາເງິນທືນມາພັດທະນາຄຣິສຈັກ

- ສຳຣວດເບິ່ງເຖິງຄວາມຕ້ອງການຂອງວຽກງານແຕ່ລະດ້ານ
- ຈັດວາງແຜນການ ການພັດທະນາຄຣິສຈັກໄລຍະສັ້ນ
- ຈັດວາງແຜນການ ການພັດທະນາຄຣິສຈັກໄລຍະຍາວ
- ຂະຫຍາຍວຽກງານຄຣິສຈັກ
- ຂະຫຍາຍຕຶວຕຶກ ອາຄານ ສະຖານທີ່
- ວາງແຜນຊື້ທີ່ດິນ ແລະການປູກສ້າງ

ລາຍການທີ່ຂຽນລຽງໄວ້ຍາວທາງເທິງນີ້ ເປັນພຽງຄຳສລູບຢ່າງຫຍໍ້ ໆ ຊຶ່ງໃນຄວາມເປັນຈິງແລ້ວ ແຕ່ລະລາຍການທີ່ຈະຖືປະຕິບັດອອກມາໃຫ້ສົມບູນຄົບຖ້ວນນັ້ນ ຈະຕ້ອງໃຊ້ເວລາ ໃຊ້ຄວາມຄິດ ແຮງງານ ແຮງອະທິຖານ ແລະປັດໃຈດ້ານການເງິນ ບໍ່ແມ່ນວ່າສິດຍາພິບາລຜູ້ດຽວຈະເປັນຜູ້ເຮັດໄດ້ໝົດທຸກແນວ ແຕ່ໝາຍຄວາມວ່າສມາຊິກພ້ອມທັງຜູ້ນຳອື່ນ ໆ ຕ້ອງໃຫ້ຄວາມຮ່ວມມືຊ່ວຍເຫລືອຄ້ຳຈຸນໃນກິຈການທຸກ ໆ ດ້ານດ້ວຍ ຢ່າງໃດກໍຕາມ ດັ່ງທີ່ໄດ້ກ່າວມາແລ້ວຜູ້ທີ່ເປັນສິດຍາພິບາລມີໜ້າທີ່ໂດຍກົງທີ່ຈະເປັນຜູ້ຣິເລີ້ມຫລືເປັນຜູ້ເລີ້ມຕົ້ນດຳເນີນງານ ໂດຍເປັນຜູ້ນຳໜ້າແລະສນັບສນຸນໃຫ້ຜູ້ນຳອື່ນ ໆ ໃນຄຣິສຈັກ ເຂົ້າມາມີສ່ວນຮັບຜິດຊອບດຳເນີນງານ ສິດຍາພິບາລຕ້ອງຮູ້ຈັກອົບຮົມນຳພາແລະມອບໝາຍງານແຕ່ລະດ້ານໃຫ້ຜູ້ນຳຄົນອື່ນ ໆ ໃນຄຣິສຈັກໄປຮັບຜິດຊອບ ຕ້ອງຮຽນຮູ້ຈັກການປະສານງານໃຫ້ເປັນໄປຢ່າງຕໍ່ເນື່ອງ ຜູ້ເປັນສິດຍາພິບາລຕ້ອງຮຽນຮູ້ໜ້າທີ່ຂອງຕົນວ່າ ກິຈການວຽກງານທັງໝົດນີ້ເປັນໜ້າທີ່ໂດຍກົງຂອງສິດຍາພິບາລ ທີ່ຈະເບິ່ງແຍງຮັກສາບໍ່ໃຫ້ວຽກງານເຫລົ່ານີ້ຢຸດສະງັກ ຫລືຂາດເຂີນ ຊຶ່ງເປັນເຫດໃຫ້ຄຣິສຈັກບໍ່ຈະເຣີນກ້າວໜ້າ ແຕ່ວ່າໃນເວລາດຽວກັນນັ້ນຜູ້ເປັນສິດຍາພິບາລບໍ່ແມ່ນເປັນເຈົ້ານາຍ ທີ່ຮູ້ຈັກແຕ່ສັ່ງການໂດຍບໍ່ຍອມເຮັດຫຍັງ ຫລືບໍ່ໄດ້ສະແດງໃຫ້ເຫັນເຖິງຄຸນລັກສະນະຂອງການເປັນຜູ້ລ້ຽງແກະທີ່ດີ ໃນທຳນອງດຽວກັນກໍບໍ່ແມ່ນເປັນບ່າວຮັບງານໄວ້ເຮັດແຕ່ພຽງຜູ້ດຽວ ຄຣິສຈັກຈະຈະເລີນກ້າວໜ້າໄດ້ຕ້ອງອາສັຍສມາຊິກທຸກຄົນໃນຄຣິສຈັກໃຫ້ມີສ່ວນຮ່ວມມື ເຮັດວຽກນຳກັນ ໂດຍໃຫ້ສິດຍາພິບາລ ເປັນຜູ້ໃຫ້ຄຳແນະນຳ (Suggestion) ສນັບສນຸນ (Support) ສົ່ງເສີມການອົບຮົມ (Training) ເກີດຄວາມຄິດຣິເລີ້ມເສີມສ້າງ (Creative) ໂດຍມີສມາຊິກເປັນເພື່ອນຮ່ວມງານ (Team Work)

ພາຣະໜ້າທີ່ທັງໝົດທີ່ໄດ້ກ່າວມານີ້ ເປັນວຽກງານໂດຍສ່ວນຣວມ ໂດຍທົ່ວໄປແລ້ວຜູ້ເປັນສິດຍາພິບາລຕ້ອງຮູ້ຈັກໜ້າທີ່ຂອງຕົນໂດຍເປັນຜູ້ຣິເລີ້ມ ແລະນຳພາໃຫ້ສມາຊິກໄດ້ຮ່ວມໃຈຮັບໃຊ້ພຣະເຈົ້ານຳກັນ ເພື່ອເປັນການເສີມສ້າງໃຫ້ຄຣິສຈັກສາມາດດຳເນີນງານຕໍ່ ໆ ໄປ ແລະນຳພາໃຫ້ຄຣິສຈັກເຕີບໃຫຍ່ຂຍາຍຕົວອອກໄປໄດ້ ຕາມໜ້າທີ່ທັງໝົດທີ່ໄດ້ກ່າວມານີ້ ຕັ້ງແຕ່ຂໍ້ ກ. ເຖິງຂໍ້ ຖ. ນັ້ນ ແມ່ນເຣື່ອງການອະພິບາລສິດຂອງສິດຍາພິບາລຊຶ່ງເປັນທັງທາງຕົງແລະທາງອ້ອມ ດັ່ງຈະໄດ້ກ່າວເຖິງຢ່າງສະເພາະເຈາະຈົ່ງໃນບົດຕໍ່ ໆ ໄປ ແຕ່ວ່າໃນວິຊານີ້ ເຮົາຈະຂໍເນັ້ນໜັກເຖິງໜ້າທີ່ອັນສຳຄັນ ແມ່ນເຣື່ອງລັກສະນະຮູບແບບຂອງການອະພິບານສິດ ຊຶ່ງປາກົດຢູ່ໃນຫົວຂໍ້ທີ່ສອງ

## ສອງ. ລັກສະນະຮູບແບບຂອງການອະພິບາລສິດ

ເມື່ອໄດ້ສຶກສາໃນຂໍ້ທີ່ນຶ່ງເຖິງພາຣະໜ້າທີ່ຂອງການເປັນສິດຍາພິບາລນັ້ນ ພາຣະໜ້າທີ່ເຫລົ່ານັ້ນ ຜູ້ເປັນສິດຍາພິບາລແຕ່ລະຄົນ ອາດຈະສາມາດນຳອອກມາປະຕິບັດໄດ້ເກືອບທຸກປະການ ແຕ່ລັກສະນະທ່າທີຂອງສິດຍາພິບາລນັ້ນມີຄວາມສຳຄັນຫລາຍ ເພາະວ່າສິດຍາພິບາລທີ່ດີນັ້ນ ບໍ່ພຽງແຕ່ດຸໝັ່ນໃນພາຣະໜ້າທີ່ເທົ່ານັ້ນ ແຕ່ໃນເວລາທີ່ກຳລັງເຮັດວຽກຕ້ອງປະກອບດ້ວຍລັກສະນະ ຫລືອາການທ່າທີຂອງການເປັນຜູ້ລ້ຽງດູເບິ່ງແຍງ ຮັກສາສິດດ້ວຍຄວາມຮັກ ຄວາມເປັນຫ່ວງ ດ້ວຍຄວາມເອົາໃຈໃສ່ ຊຶ່ງໃນບົດນີ້ຂໍນຳເອົາລັກສະນະແລະຮູບແບບຂອງການອະພິບາລສິດ ທີ່ໄດ້ສະແດງໄວ້ໃນພຣະຄັມພີ ໂດຍສະລຸບໄດ້ອອກເປັນ 5 ແບບດັ່ງນີ້

1. **ລັກສະນະຂອງຜູ້ລ້ຽງແກະທີ່ດີຕ້ອງຮູ້ຈັກບອກແຈ້ງເຖິງເສັ້ນທາງເດີນ ຫລືຮູ້ຈັກໃຫ້ຄຳປຶກສາແນະນຳແນວທາງເດີນຊີວິດ** ດັ່ງທີ່ພຣະເຢຊູໄດ້ສົນທະນາກັບນີໂກເດມ (ຢຮ 3:1-16); ໄດ້ແນະນຳແກ່ເສດຖີໜຸ່ມ (ມທ 19: 16-30); ໄດ້ໄຂຈິດໃຈຂອງຊັກຄາຍ (19:1-10); ພຣະເຢຊູໄດ້ຊີ້ງນຳພາເຂົາໃຫ້ເຫັນເສັ້ນທາງເດີນທີ່ຖືກຕ້ອງ ແລະໄດ້ໃຫ້ໂອກາດແກ່ເຂົາ ທີ່ຈະເລືອກເສັ້ນທາງທີ່ຈະເດີນອັນຖືກຕ້ອງນັ້ນ ໂດຍບໍ່ໄດ້ບັງຄັບຜູ້ໃດ ສິດຍາພິບາລຕ້ອງຮູ້ຈັກໃຫ້ຄຳປຶກສາ ຊີ້ແນະເສັ້ນທາງເດີນ ແລະເປີດໂອກາດໃຫ້ເຂົາຮູ້ຈັກການຕັດສິນໃຈເລືອກ ເອົາເສັ້ນທາງເດີນທີ່ຖືກຕ້ອງ ໃຫ້ເຂົາຮູ້ຈັກຂັບຕາມພຣະຄຣິສ

2. **ລັກສະນະຂອງຜູ້ລ້ຽງແກະທີ່ຮູ້ຈັກການປົກປ້ອງຮັກສາແກະ** ຜູ້ເປັນສິດຍາພິບາລຕ້ອງຮູ້ຈັກນຳພາແລະປ້ອງກັນສມາຊິກບໍ່ໃຫ້ຫລົງຫາຍ ຫລືຕົກລົງໄປໃນການທົດລອງຂອງມານ ຕ້ອງຮູ້ຈັກຊັກນຳແລະດຶງຈ່ອງລູກແກະທີ່ຫລົງຫາຍໃຫ້ເຂົ້າກັບຄືນສູ່ອ້ອມອົກແຫ່ງຄວາມຮັກຂອງພຣະເຈົ້າ ຕ້ອງຮູ້ຈັກອະພິບາລຮັກສາເຂົາ ໂດຍການນຳພາລູກແກະໃຫ້ໄດ້ຮັບອາຫານ ແລະນ້ຳສຳລັບຊີວິດຝ່າຍຈິດວິນຍານ ແລະລາງເທື່ອກໍມີຄວາມຈຳເປັນຕ້ອງຊ່ວຍເຂົາຝ່າຍຮ່າງກາຍເມື່ອຍາມເຈັບເປັນ ແມ່ນລັກສະນະຂອງຜູ້ລ້ຽງທີ່ມີຄວາມຮັກ ດັ່ງທີ່ປາກົດໃນພຣະທັມບົດເພງສັຣເສີນບົດທີ 23 ແລະຕາມທີ່ປາກົດແຈ້ງໃນພຣະຄັມພີຫລາຍຕອນ ຕົວຢ່າງໃນໂຢຮັນບົດ 10:7- 18 ແລະເຣື້ອງແກະຫລົງຫາຍ ໃນລູກາ 15:3-7 ອັນເປັນລັກສະນະຂອງຜູ້ລ້ຽງທີ່ເປັນຫ່ວງລູກແກະທີ່ປົກປ້ອງຮັກສາ ເພື່ອຊ່ວຍເຫລືອຜູ້ມີບັນຫາ ທີ່ບໍ່ຮູ້ຈັກຊ່ວຍຕົນເອງໃຫ້ຮູ້ຈັກຮັບຄວາມຊ່ວຍເຫລືອຈາກພຣະເຈົ້າ

3. **ລັກສະນະຂອງຜູ້ລ້ຽງແກະທີ່ເປັນເໝືອນດັ່ງອ້າຍນ້ອງຄືກັບຄົນໃນຄົວເຮືອນດຽວກັນ** ສມາຊິກໃນຄຣິສຈັກຄືອ້າຍຄືນ້ອງໃນອົງພຣະຜູ້ເປັນເຈົ້າ ຊຶ່ງບໍ່ສາມາດປະຖິ້ມໃຫ້ຜູ້ຕົກທຸກຕ້ອງພະເຊີນກັບບັນຫາຢູ່ໂດຍລຳພັງ ຕົວຢ່າງ ອາຈານໂປໂລໄດ້ໃຫ້ການປຶກສາແກ່ໂອເນຊີໂມຜູ້ເປັນທາດໃຫ້ກັບຄືນດີກັບຟີເລໂມນ (ຟີເລໂມນບົດທີ 1) ພຣະເຢຊູກັບຄອບຄົວຂອງລາຊະໂຣ ນາງມາຣີອາແລະນາງມາທາ ເບິ່ງຕົວຢ່າງທ່ານອັບຣາຮາມສ່ຽງອັນຕລາຍໄປຊ່ວຍໂລດ ແລະຄອບຄົວຂອງໂລດອອກຈາກເມືອງໂຊໂດມ ເປັນລັກສະນະອ້າຍແລະນ້ອງ ແມ່ນ ຍາດພີ່ນ້ອງທີ່ສະນິດຕິດແທດກັນ ທີ່ຕ້ອງເບິ່ງແຍງຮັກສາກັນໄວ້ບໍ່ໃຫ້ຂາດໃນພຣະເຈົ້າ ຜູ້ເປັນສິດຍາພິບາລຕ້ອງຮູ້ຈັກສອນແລະອົບຮົມ ໃຫ້ສມາຊິກມີສັມພັນທະພາບແລະຄວາມຮັກແພງ ມີຄວາມເປັນພີ່ນ້ອງກັນໃນພຣະຄຣິສ

4. **ລັກສະນະຂອງຜູ້ຮັບໃຊ້** ພຣະເຢຊູຊົງຕັດວ່າ ເຮົາມາເພື່ອຮັບໃຊ້ ບໍ່ໄດ້ມາໃຫ້ຜູ້ອື່ນປົວລະບັດ (ມກ 10:42-45) ລັກສະນະນີ້ຜູ້ເປັນສິດຍາພິບາລຕ້ອງເຂົ້າໃຈ ແລະຮູ້ຈັກຕົວເອງດີວ່າພຣະເຈົ້າໄດ້ເລືອກສັນແລະເອີ້ນເຂົາມາໃຫ້ປົວລະບັດພີ່ນ້ອງ ແມ່ນສມາຊິກໃນຄຣິສຈັກ ບໍ່ແມ່ນໃຫ້ມາເປັນນາຍຫລືເປັນໃຫຍ່ ແຕ່ແມ່ນຜູ້ຮັບໃຊ້ ແລະໃຊ້ຄວາມສາມາດພິເສດພ້ອມທັງຂອງປະທານທີ່ພຣະເຈົ້າມອບໃຫ້ທັງຫມົດ ຮັບໃຊ້ຢ່າງສຸດຈິດ ສຸດໃຈ ແລະສຸດກຳລັງ ດ້ວຍຄວາມຮັກແພງໃນພຣະຄຣິສ ໃນເວລາດຽວກັນກໍເປັນແບບຢ່າງທີ່ດີໃນການຮັບໃຊ້ເພື່ອນຳພາແລະກະຕຸ້ນເຕືອນໃຫ້ສມາຊິກອື່ນ ໆ ຮູ້ຈັກຮ່ວມມືຮ່ວມກັນຮັບໃຊ້ຊຶ່ງກັນແລະກັນດ້ວຍ

5. **ລັກສະນະຂອງຜູ້ລ້ຽງແກະທີ່ຍອມເສັຍສະລະ** ຊຶ່ງເປັນຄວາມຮັກອັນສູງສຸດ ດັ່ງທີ່ພຣະເຢຊູໄດ້ຕາຍໄຖ່ບາບເທິງໄມ້ກາງແຂນ ສິດຍາພິບາລທີ່ມີລັກສະນະນີ້ ຍ່ອມເສັຍສະລະທຸກສິ່ງ ບໍ່ເຫັນແກ່ເງິນຄຳ ກຽດແລະຊື່ສຽງ ແຕ່ພ້ອມທີ່ຈະມອບກາຍຖວາຍຊີວິດແລະທຸກສິ່ງແກ່ພຣະເຈົ້າ ເພື່ອຊ່ວຍເຫລືອມະນຸດຜູ້ອື່ນ ໆ ທີ່ຕົກຢູ່ໃນຄວາມມືດ ໃນຄວາມຜິດບາບໃຫ້ພົ້ນ ແລະນຳເອົາຄົນເຫລົ່ານັ້ນເຂົ້າມາສູ່ຄວາມສະຫວ່າງແຫ່ງຊີວິດໃນອົງພຣະຜູ້ເປັນເຈົ້າ ໃນປວັດສາດມີຫລາຍ ໆ ທ່ານທີ່ເປັນແບບຢ່າງແກ່ເຮົາ ທີ່ຍອມສະລະຊີວິດ ເພື່ອຂ່າວປະເສີດຂອງພຣະເຢຊູຄຣິສ ດັ່ງພຣະທັມເອເຟໂຊ 5:1-2 "ເພາະສັນນັ້ນທ່ານທັງຫລາຍ ຈົ່ງເປັນຜູ້ດຳເນີນຊີວິດຕາມແບບຢ່າງພຣະເຈົ້າເຫມືອນເປັນບຸດທີ່ຊົງຮັກ ແລະຈົ່ງດຳເນີນຊີວິດນັ້ນໃນຄວາມຮັກ ເຫມືອນດັ່ງພຣະຄຣິສໄດ້ຊົງຮັກທ່ານທັງຫລາຍ ແລະຊົງສະລະພຣະອົງເອງເພື່ອພວກເຮົາ ໃຫ້ເປັນເຄື່ອງບູຊາແລະເຄື່ອງຖວາຍທີ່ມີກິ່ນຫອມຫວານແກ່ພຣະເຈົ້າ"

ລັກສະນະທັງຫ້າແບບທີ່ໄດ້ກ່າວມາທາງເທິງນີ້ ແມ່ນລັກສະນະຂອງຜູ້ລ້ຽງແກະທີ່ສົມບູນແບບ ຊຶ່ງໄດ້ປາກົດຢູ່ໃນອົງພຣະເຢຊູຄຣິສ ພຣະອົງໄດ້ເປັນແບບຢ່າງໃນຖານະຜູ້ລ້ຽງແກະທີ່ສົມບູນ ຊຶ່ງສິດຍາພິບາລທັງຫລາຍສົມຄວນທີ່ຈະຕ້ອງຮຽນເອົາແບບຢ່າງຂອງພຣະອົງ

ໃນປັດຈຸບັນ ເຮົາຈຳເປັນຕ້ອງຍອມຮັບວ່າ ການຈະເລືອກຫລືສັນຫາສິດຍາພິບາລທີ່ມີລັກສະນະສົມບູນດັ່ງທີ່ກ່າວມານັ້ນຍາກເຕັມທີ ແຕ່ຢ່າງນ້ອຍທີ່ສຸດ ຜູ້ທີ່ຖວາຍຕົວເປັນຜູ້ຮັບໃຊ້ ຫລືເປັນສິດຍາພິບາລກໍສົມຄວນທີ່ຈະສຳຣວຈຕົວເອງ ແລະຮຽນຮູ້ລັກສະນະຂອງການເປັນຜູ້ອະພິບາລສິດທີ່ຖືກຕ້ອງຕາມພຣະຄັມພີ ເຖິງແມ່ນວ່າຈະບໍ່ຄົບຖ້ວນທຸກປະການ ແຕ່ຢ່າງນ້ອຍກໍຕ້ອງຝຶກຝົນຕົນເອງ ແລະຮັບເອົາຈຸດເດັ່ນບາງປະການມາຖືປະຕິບັດ ໂດຍຕ້ອງສຳນຶກຢູ່ສເມີວ່າ ຕົນເປັນຜູ້ອະພິບາລສິດ ແລະສົມຄວນຮຽນເອົາແບບຢ່າງຂອງພຣະເຢຊູ

ເຖິງຢ່າງໃດກໍຕາມ ເຮົາຕ້ອງຍອມຮັບວ່າ ສິດຍາພິບາລທີ່ດີນັ້ນມີຈຳນວນຫລາຍຢູ່ ແລະທ່ານເຫລົ່ານັ້ນໄດ້ພະຍາຍາມຢ່າງດີທີ່ສຸດ ທີ່ຈະໃຊ້ຄວາມສາມາດທີ່ຕົນມີຢູ່ມາຮັບໃຊ້ໃຫ້ຄຣິສຈັກເກີດໝາກຜົນເພື່ອຖວາຍພຣະເຈົ້າ ຊຶ່ງສມາຊິກຂອງຄຣິສຈັກກໍສົມຄວນໃຫ້ຄວາມເຫັນອົກເຫັນໃຈສນັບສນຸນອຸ້ມຊູ ໂດຍບໍ່ຮຽກຮ້ອງເອົາຕາມໃຈປາດຖນາຂອງຜູ້ເປັນສມາຊິກແຕ່ລະຄົນ ຊຶ່ງອາດຈະມີຄວາມຫລາຍຄວາມຄິດເຫັນທີ່ແຕກຕ່າງກັນໄປ ຜູ້ນຳຂອງຄຣິສຈັກພ້ອມທັງສມາຊິກຈະຕ້ອງບໍ່ຄາດຫວັງໃຫ້ສິດຍາພິບາລຂອງຕົນເປັນຜູ້ສຳເຣັດຄົບຖ້ວນທຸກປະການ ເພາະວ່າເຮົາທັງຫລາຍຍັງຢູ່ໃນສະພາບແຫ່ງການຂາດເຂີນບໍ່ຄົບຖ້ວນ ທັງຂາດກຳລັງເຫື່ອແຮງ ຂາດປະສົບການ ແລະຂາດປັດຈັຍການສນັບສນຸນໃນດ້ານຕ່າງ ໆ ແຕ່ໂດຍອາສັຍພຣະຄຸນແລະຄວາມຮັກທີ່ພຣະເຈົ້າຊົງປະທານໃຫ້ ຂໍໃຫ້ການຮັບໃຊ້ຂອງ

ທ່ານມາຈາກຄວາມບໍຣິສຸດໃຈ ແລະຄວາມຈິງໃຈທີ່ສຸດທີ່ທ່ານໄດ້ເຮັດເພື່ອຖວາຍແດ່ອົງພຣະຜູ້ເປັນເຈົ້າ ອັນນີ້ແຫລະ ແມ່ນເຄື່ອງຖວາຍບູຊາທີ່ພຣະເຈົ້າພໍພຣະທັຍ

# ບົດທີ 3
# ຄຸນສົມບັດຂອງສິດຍາພິບາລ

ມີຜູ້ກ່າວວ່າ "ຜູ້ເປັນສິດຍາພິບາລ (Pastor) ແມ່ນຕົວແທນຂອງພຣະເຈົ້າ ເປັນດັ່ງທູດຕ່າງໜ້າຂອງພຣະຄຣິສ ແລະເປັນທີ່ພຣະພອນຂອງອົງພຣະວິນຍານບໍລິສຸດ ທີ່ຈະນຳພາເອົາພຣະພອນທັງມວລມາສູ່ສມາຊິກຄຣິສຈັກ" ຜູ້ເປັນສິດຍາພິບາລໂດຍທົ່ວໄປໄດ້ຮັບການຍົກຍໍນັບຖືວ່າ ແມ່ນຜູ້ມີກຽດ ມີຖານະສູງ ແມ່ນຜູ້ແທນ ແລະແມ່ນກະບອກສຽງຂອງພຣະເຈົ້າ ທີ່ຈະປ່າວປະກາດພຣະວັຈນະຂອງພຣະອົງ ສິດຍາພິບາລຕ້ອງເປັນຜູ້ທີ່ມີຄວາມເຊື່ອມີຄວາມຮູ້ໃນພຣະຄຣິສ ມີຊີວິດທີ່ສັດຊື່ບໍລິສຸດຕາມພຣະວັຈນະຂອງພຣະເຈົ້າ ມີຄວາມສາມາດພຽງພໍທີ່ຈະສິດສອນໃຫ້ການຕັກເຕືອນ ໃຫ້ຄຳແນະນຳ ແລະການອົບຮົມ ເປັນທີ່ປຶກສາແລະຮູ້ຈັກການນຳພາສມາຊິກ ບຸກຄົນທີ່ຈະມາເຮັດໜ້າທີ່ນີ້ຈຳເປັນຕ້ອງເປັນຜູ້ທີ່ປະກອບດ້ວຍຄຸນສົມບັດຫລາຍ ໆ ປະການ ທີ່ຈະເປັນແບບຢ່າງແກ່ສມາຊິກແລະເໝາະສົມແກ່ຄຣິສຈັກທີ່ຈະແຕ່ງຕັ້ງສະຖາປະນາຜູ້ນັ້ນເປັນສິດຍາພິບາລ

ກ່ອນທີ່ເຮົາຈະສຶກສາລາຍລະອຽດຂອງຄຸນສົມບັດຂອງສິດຍາພິບາລໃນພຣະຄຣິສທັມຄັມພີ ນັກສຶກສາຈຳເປັນຕ້ອງມີຄວາມເຂົ້າໃຈພື້ນຖານເຖິງເລື້ອງເຈົ້າໜ້າທີ່ໃນຄຣິສຈັກ ພຣະຄຣິສທັມຄັມພີໄດ້ກ່າວເຖິງຂອງພຣະຣາຊທານຫລາຍແນວທີ່ພຣະວິນຍານບໍລິສຸດຊົງປະທານໃຫ້ແກ່ຜູ້ເຊື່ອໃນການຮັບໃຊ້ (1 ກທ 12:8-11) ແຕ່ຜູ້ທີ່ເປັນເຈົ້າໜ້າທີ່ເຮັດວຽກແລະມີໜ້າທີ່ຮັບຜິດຊອບປະຈຳໃນແຕ່ລະຄຣິສຈັກທ້ອງຖິ່ນນັ້ນໄດ້ແກ່ສິດຍາພິບາລ ແລະຜູ້ບົວລະບັດ (Deacon ຄຣິສຈັກບາງແຫ່ງເອີ້ນວ່າເຖົ້າແກ່) ບາງຄຣິສຈັກອາດມີການຈັດຣະບົບການປົກຄອງແລະການບໍຣິຫານແຕກຕ່າງກັນອອກໄປ ຂໍໃຫ້ນັກສຶກສາພິຈາຣະນາບົດຮຽນນີ້ຮ່ວມກັບຫລັກຄວາມເຊື່ອແລະການບໍຣິຫານປົກຄອງຂອງຄຣິສຈັກຂອງທ່ານ ແຕ່ທີ່ຄືກັນໃນແຕ່ລະຄຣິສຈັກທ້ອງຖິ່ນ ແມ່ນທຸກຄຣິສຈັກທ້ອງຖິ່ນສ່ວນຫລາຍມີສິດຍາພິບາລຕຳແໜ່ງສິດຍາພິບາລເປັນເຈົ້າໜ້າທີ່ ໆ ໄດ້ຮັບການລ້ຽງດູຈາກສມາຊິກ (1 ກທ 9:13-14) ເພາະຖືວ່າເປັນຜູ້ທີ່ອຸທິດຕົວໃຫ້ແກ່ວຽກງານຮັບໃຊ້ເປັນຫລັກໃນການດຳເນີນຊີວິດ ສ່ວນຜູ້ບົວລະບັດເປັນວຽກທີ່ອາສາສມັກ ຄວາມແຕກຕ່າງຣະຫວ່າງສິດຍາພິບາລແລະຜູ້ບົວລະບັດຍັງມີລາຍລະອຽດຫລາຍກວ່ານີ້ ດັ່ງທີ່ເຮົາຈະສຶກສາຕໍ່ໄປ

ໃນປັດຈຸບັນຄຣິສຈັກທ້ອງຖິ່ນນັ້ນ ໆ ຂອງແຕ່ລະຄະນະນິກາຍໃນຄະນະນິກາຍໂປເທັສເຕນ ມີການຈັດແບ່ງເຈົ້າໜ້າທີ່ແລະຄະນະກັມມະການໃນຄຣິສຈັກຕ່າງ ໆ ກັນ ແຕ່ຜູ້ທີ່ຮັບຜິດຊອບໜ້າທີ່ຫລັກເປັນປະຈຳໃນແຕ່ລະຄຣິສຈັກທ້ອງຖິ່ນ ແມ່ນສິດຍາພິບາລແລະຜູ້ບົວລະບັດ ເຮົາຈຳເປັນຕ້ອງສຶກສາເບິ່ງໃນພຣະຄຣິສທັມຄັມພີໃຫ້ຊັດແຈ້ງ ຈຶ່ງຈະບໍ່ສັບສົນໃນໜ້າທີ່ແລະເຫັນເຖິງຄຸນສົມບັດທີ່ຊັດແຈ້ງຂອງສິດຍາພິບາລໄດ້ ເພື່ອເຮົາຈະໄດ້ເຂົ້າໃຈໜ້າທີ່ແລະໃຫ້ຄວາມເຄົາຣົບນັບຖືແລະໃຫ້ຄວາມຮ່ວມມືໃນວຽກການຂອງເພິ່ນ ໃນພຣະຄຣິສທັມຄັມພີ ຄຳທີ່ກ່າວເຖິງໜ້າທີ່ການອະພິບາລລ້ຽງດູສິດມີ 3 ຄຳດ້ວຍກັນ ໃນພາສາເດີມຄືຄຳວ່າ "Pastor ຫລື Shepherd" ໝາຍເຖິງ "ສິດຍາພິບາລຫລືການອະພິບາລສິດ" "Elder" ໝາຍເຖິງ "ເຖົ້າແກ່" "Bishop ຫລື Overseer" ໝາຍເຖິງ "ຜູ້ດູແລ" ໃນພຣະຄຣິສທັມຄັມພີສະບັບພາສາລາວແປໄດ້ຊັດແຈ້ງຕາມພາສາເດີມ ຄຳວ່າ "Deacon" ຊຶ່ງເປັນອີກຕຳແໜ່ງໜ້າທີ່ນຶ່ງທີ່ແຕກຕ່າງກັບສິດຍາພິບາລໃຊ້ຄຳວ່າ "ຜູ້ບົວລະບັດ" ຊຶ່ງເປັນການແປທີ່ຊັດແຈ້ງກົງກັບພາສາເດີມ ແຕ່ຄຣິສຈັກລາວໃນຫລາຍແຫ່ງເອີ້ນ "Deacon" ວ່າ "ເຖົ້າແກ່" ກໍພາໃຫ້ສັບສົນກັບຄຸນສົມບັດແລະໜ້າທີ່ຂອງສິດຍາພິບາລ ເມື່ອ

ເຮົາສຶກສາອ່ານພຣະຄຣິສທັມຄັມພີ ຈະພົບເຫດຜົນທີ່ຄຣິສຈັກເຊື່ອຖືວ່າ "ສິດຍາພິບາລ" "ຜູ້ດູແລ" ແລະ"ເຖົ້າແກ່" ລວມເປັນຕຳແໜ່ງໜ້າທີ່ດຽວກັນ ເພາະຍຶດຖືຄວາມໝາຍໃນພຣະຄຣິສທັມຄັມພີສອງຕອນດ້ວຍກັນ ຕອນແຣກຢູ່ໃນພຣະທັມກິຈການ 20:17 "ໂປໂລຈຶ່ງໃຊ້ຄົນຈາກເມືອງມີເລໂຕໄປຍັງເມືອງເອເຟໂຊ ເຊີນເອົາພວກເຖົ້າແກ່ (elders) ຂອງຄຣິສຈັກນັ້ນມາ" ແລະໃນຂໍ້ 28 ທ່ານໂປໂລກ່າວກຳຊັບກັບພວກເຖົ້າແກ່ທີ່ໄດ້ເຊີນມາເຖິງພາຣະໜ້າທີ່ວ່າ "ທ່ານທັງຫລາຍຈົ່ງຣະວັງຕົວເອງໃຫ້ດີ ແລະລະວັງຮັກສາຝູງແກະທີ່ພຣະວິນຍານບໍຣິສຸດໄດ້ຊົງຕັ້ງພວກທ່ານໄວ້ໃຫ້ເປັນຜູ້ດູແລ (overseers) ເພື່ອບຳຣຸງລ້ຽງ (ແມ່ນວຽກການອະພິບາລສິດ shepherds/ pastor) ຄຣິສຈັກຂອງພຣະເຈົ້າ.." ຈະເຫັນໄດ້ວ່າ "ເຖົ້າແກ່" "ຜູ້ດູແລ" ແລະການບຳຣຸງລ້ຽງຫລືອະພິບາບສິດ" ແມ່ນພວກດຽວກັນທີ່ເຮັດວຽກຢ່າງດຽວກັນ ຂໍ້ພຣະທັມອີກຕອນນຶ່ງທີ່ປາກົດໃຫ້ເຫັນຊັດວ່າ ໜ້າທີ່ທັງສາມເປັນຄົນພວກດຽວກັນ ແມ່ນປາກົດໃນພຣະທັມເປໂຕສະບັບຕົ້ນ 5:1-3 "ເຫດສັນນັ້ນຂ້າພະເຈົ້າຈຶ່ງຕັກເຕືອນບັນດາເຖົ້າແກ່ (elders) ໃນພວກທ່ານທັງຫລາຍ ໃນຖານະທີ່ຂ້າພະເຈົ້າກໍເປັນເຖົ້າແກ່ (elder) ຜູ້ນຶ່ງ ແລະເປັນພຍານເຖິງຄວາມທຸກທໍຣະມານຂອງພຣະຄຣິສ ແລະມີສ່ວນທີ່ຈະຮັບສງ່າຣາສີຊຶ່ງຈະປາກົດມາພາຍຫລັງ ຈົ່ງລ້ຽງຝູງແກະ (pastor/shepherd) ຂອງພຣະເຈົ້າທີ່ຝາກໄວ້ກັບພວກທ່ານ ຈົ່ງດູແລ (oversight/bishop) ເຂົາບໍ່ແມ່ນດ້ວຍໃຈຂົມຂື່ນ ແຕ່ດ້ວຍເຕັມໃຈຕາມນ້ຳພຣະທັຍຂອງພຣະເຈົ້າ ບໍ່ແມ່ນດ້ວຍເຫັນແກ່ຊັບສິ່ງຂອງທີ່ໄດ້ມາໃນທາງທຸຈຣິດ ແຕ່ດ້ວຍໃຈເຫລື້ອມໃສ ບໍ່ແມ່ນເປັນເໝືອນເປັນເຈົ້ານາຍເໝືອນພວກທີ່ຊົງຝາກໄວ້ກັບພວກທ່ານ ແຕ່ໃຫ້ເປັນແບບຢ່າງແກ່ຝູງແກະນັ້ນ" ດັ່ງນັ້ນ ສິຍາພິບາລເປັນຄົນມີທີ່ໜ້າທີ່ບຳຣຸງລ້ຽງໃຫ້ສມາຊິກເກີດຄວາມເຊື່ອຄວາມສັດທາໃນພຣະເຢຊູຄຣິສແລ້ວ ຈະເຣີນເຕີບໃຫຍ່ດ້ວຍພຣະວັຈນະຂອງພຣະເຈົ້າ ນອກນັ້ນສິດຍາພິບາລຍັງມີໜ້າທີ່ປົກປ້ອງຄຣິສຈັກ ໂດຍບໍ່ໃຫ້ຜູ້ທີ່ມີຄຳສອນຜິດມາກໍ່ຄວາມຫວຸ້ນວາຍຈົນເກີດຄວາມແຕກແຍກ ດັ່ງນັ້ນຜູ້ທີ່ຈະເປັນສິດຍາພິບາລຈຶ່ງຈຳເປັນຕ້ອງມີຄຸນສົມບັດສູງ ແລະມີຄຸນພາບດີພໍທີ່ຈະເປັນແບບຢ່າງແກ່ຜູ້ອື່ນໄດ້ ແລະມີຊີວິດບໍຣິສຸດພໍທີ່ຈະມີສິດທີທີ່ຈະສອນຜູ້ອື່ນ ຄຸນສົມບັດຂອງສິດຍາພິບາລໄດ້ກ່າວໄວ້ໃນພຣະຄຣິສທັມຄັມພີດັ່ງທີ່ປາກົດໃນຕາຕະຣາງໜ້າຕໍ່ໄປ

ສ່ວນຕຳແໜ່ງໜ້າທີ່ຂອງຜູ້ບົວລະບັດ ມາຈາກຄຳໃນພາສາກຣີກວ່າ "Deakonos" (ດີອາໂຄໂນສ) ອັນໝາຍເຖິງ "ຜູ້ບົວລະບັດ" ຫລື "ຄົນຮັບໃຊ້" ຕຳແໜ່ງໜ້າທີ່ນີ້ ໄດ້ມີຂຶ້ນເທື່ອທຳອິດໃນພຣະທັມກິຈການບົດທີ 6:1-4 ເພື່ອຊ່ວຍເຫລືອວຽກທຸຣະກິຈຕ່າງ ໆ ຂອງຄຣິສຈັກພາຍໃຕ້ການນຳພາຂອງພວກອັຄສາວົກ ໜ້າທີ່ຂອງຜູ້ບົວລະບັດບໍ່ແມ່ນຮັບໃຊ້ແລະຈັດໂຕ໊ະອາຫານເທົ່ານັ້ນ ລາງເທື່ອກໍຊ່ວຍເທສນາປ່າວປະກາດຂ່າວປະເສີດ ຕົວຢ່າງ ທ່ານຊະເຕຟາໂນ ແລະທ່ານຟີລິບ ແມ່ນວ່າສະພາບການຂອງຄຣິສຈັກຈະປ່ຽນແປງພັດທະນາໄປ ວຽກການຮັບໃຊ້ຂອງຜູ້ບົວບັດກໍບໍ່ໄດ້ປ່ຽນແປງ ຜູ້ບົວລະບັດຮັບໃຊ້ວຽກຄຽງຂ້າງຮ່ວມກັບສິດຍາພິບາລ ໂດຍມີສິດຍາພິບາລເປັນຜູ້ນຳພາບຸກເບີກ ແມ່ນວ່າການເທສນາສິດສອນພຣະວັຈນະບໍ່ເປັນໜ້າທີ່ໂດຍກົງຂອງຜູ້ບົວລະບັດ ແຕ່ຜູ້ບົວລະບັດບາງທ່ານກໍມີພຣະພອນໃນການເທສນາແລະປ່າວປະກາດຄືກັບທ່ານຊະເຕຟາໂນ ດັ່ງນັ້ນຄຣິສຈັກບາງແຫ່ງໄດ້ເປີດໂອກາດໃຫ້ຜູ້ບົວລະບັດເທສນາສິດສອນໃນການນະມັສການວັນອາທິດແລະໃນໂອກາດຕ່າງ ໆ ໂດຍໄດ້ຮັບຄວາມເຫັນຊອບແລະຄຳແນະນຳຈາກສິດຍາພິບາລ ແຕ່ວຽກການຢ້ຽມຢາມສມາຊິກແລະຜູ້ທີ່ຕົກທຸກໄດ້ຍາກ ເປັນໜ້າທີ່ຫລັກອັນສຳຄັນຂອງຄຣິສຈັກໃນປັດຈຸບັນນີ້ ເພາະໃນວຽກການນີ້ ຜູ້ບົວລະບັດເຮັດໜ້າທີ່ຄືກັບຂົວທີ່ນຳຄົນມາຮະດຄຣິສຈັກ ແລະນຳສມາຊິກໃຫ້ເກີດສັມພັນທະພາບໃນຄອບຄົວຂອງພຣະຄຣິສ ຄຸນສົມບັດຂອງຜູ້ບົວລະບັດ ມີສ່ວນທີ່ຄືກັນແລະແຕກຕ່າງກັບສິດຍາພິບາລ ດັ່ງທີ່ປາກົດໃນຕາຕະຣາງປຽງທຽບໜ້າຕໍ່ໄປນີ້

ຕາຕະລາງປຽບທຽບຄຸນສົມບັດຂອງສິດຍາພິບາລ (ຫລືຜູ້ດູແລຫລືເຖົ້າແກ່) ແລະຜູ້ບົວລະບັດ ເປັນຕາຕະລາງເພື່ອປຽບທຽບໃຫ້ເຫັນແຈ້ງເຖິງຄຸນສົມບັດດ້ານຕ່າງ ໆ ຈາກພຣະຄຣິສທັມຄັມພີ ແລະໃຫ້ເຫັນເຖິງຄຸນສົມບັດທີ່ຄືກັນແລະແຕກຕ່າງກັນຣະຫວ່າງຄຸນສົມບັດຂອງສິດຍາພິບາລແລະຜູ້ບົວລະບັດ

## ຕາຕະລາງປຽບທຽບຄຸນສົມບັດຂອງສິດຍາພິບາລ (ຫລືຜູ້ດູແລຫລືເຖົ້າແກ່) ແລະຜູ້ບົວລະບັດ

| ຄຸນສົມບັດ | ສິດຍາພິບາລ (ຜູ້ດູແລ/ເຖົ້າແກ່) | ຜູ້ບົວລະບັດ | ຂໍ້ພຣະທັມ |
|---|---|---|---|
| ຮູ້ຈັກບັງຄັບຕົນເອງ | ✡ | | 1 ຕທ 3:2, ຕຕ 1:8 |
| ສັດທາເຫລື້ອມໃສຕ້ອນຮັບແຂກ | ✡ | | 1 ຕທ 3:2, ຕຕ 1:8 |
| ສົມທີ່ຈະເປັນນາຍຄຣູ | ✡ | | 1 ຕທ 3:2, 5:17, ຕຕ 1:9 |
| ມີສະຕິອັນດີຮອບຄອບ | ✡ | | 1 ຕທ 3:2, ຕຕ 1:8 |
| ບໍ່ຫຽາບຊ້າ/ບໍ່ເປັນອັນຕະພານ ແຕ່ມີໃຈສຸພາບ | ✡ | | 1 ຕທ 3:3, ຕຕ 1:7 |
| ບໍ່ມັກຜິດຖຽງກັບຜູ້ອື່ນ | ✡ | | 1 ຕທ 3:3 |
| ບໍ່ເຫັນແກ່ເງິນ | ✡ | | 1 ຕທ 3:3 |
| ບໍ່ເປັນຜູ້ເຊື່ອໃຫມ່ ໆ | ✡ | | 1 ຕທ 3:6 |
| ຜູ້ທີ່ຄົນພາຍນອກນັບຖື | ✡ | | 1 ຕທ 3:7 |
| ບໍ່ມີຂໍ້ຕຳຫນິ | ✡ | | ຕຕ 1:7 |
| ບໍ່ເລືອດຮ້ອນ | ✡ | | ຕຕ 1:7 |
| ຮັກຄວາມດີ | ✡ | | ຕຕ 1:8 |
| ຍຸດຕິທັມ/ບໍຣິສຸດ | ✡ | | ຕຕ 1:8 |
| ຮູ້ຈັກບັງຄັບຕົນ | ✡ | | ຕຕ 1:8 |
| ບໍ່ມີຂໍ້ຕຳຫນິ/ບໍ່ມີໃຜຕິໄດ້ | ✡ | ✣ | 1 ຕທ 3:2,10, ຕຕ 1:6 |
| ເປັນຜົວຂອງຍິງຄົນດຽວ | ✡ | ✣ | 1 ຕທ 3:2, 12, ຕຕ 1:6 |
| ບໍ່ເມົາເຫລົ້າ | ✡ | ✣ | 1 ຕທ 3:3, 8, ຕຕ 1:7 |
| ບໍ່ໂລບເຫັນແກ່ໄດ້ | ✡ | ✣ | ຕຕ 1:7, 1 ຕທ 3:8 |
| ຄອບຄອງເຮືອນຂອງຕົນໄດ້ດີ | ✡ | ✣ | 1 ຕທ 3:4,1 ຕທ 3:12 |
| ເບິ່ງວ່າລູກມີຄວາມເຊື່ອຟັງ | ✡ | ✣ | 1 ຕທ 3:4-5,12, ຕຕ 1:6 |
| ຍຶດຫມັ້ນຫລັກຄຳສອນທີ່ຖືກຕ້ອງ | ✡ | ✣ | ຕຕ 1:9, 1 ຕທ 3:9 |
| ເອົາການເອົາງານ | | ✣ | 1 ຕທ 3:8 |
| ບໍ່ເປັນຄົນສອງລີ້ນ | | ✣ | 1 ຕທ 3:8 |
| ລອງເບິ່ງເສັຍກ່ອນ | | ✣ | 1 ຕທ 3: 10 |

✡ ແມ່ນຄຸນສົມບັດຂອງສິດຍາພິບາລ (ຜູ້ດູແລ/ເຖົ້າແກ່)    ✣ ແມ່ນຄຸນສົມບັດຂອງຜູ້ບົວລະບັດ

ຄຸນສົມບັດຂອງສິດຍາພິບາລດັ່ງທີ່ປາກົດໃນພຣະຄຣິສທັມຄັມພີໃນຕອນທີ່ໄດ້ສຶກສາມາ ຜູ້ທີ່ເປັນສິດຍາພິບາລຈຳເປັນຕ້ອງມີຄຸນສົມບັດເຫລົ່ານີ້ ແລະພວກຜູ້ປົວລະບັດກໍຈຳເປັນຕ້ອງມີດ້ວຍ ຊຶ່ງຜູ້ນຳເຫລົ່ານີ້ຈຳເປັນຕ້ອງໄດ້ພິຈາຣະນາຕົນເອງແລະດຳເນີນຊີວິດດ້ວຍຊຳຣະຕົວໃຫ້ເໝາະສົມກັບການເອີ້ນຮຽກຂອງພຣະເຈົ້າ ດັ່ງນັ້ນໃນບົດນີ້ ຈະໄດ້ກ່າວເນັ້ນໜັກເຖິງຄຸນສົມບັດຕ່າງ ໆ ຂອງສິດຍາພິບາລ

ໃນປັດຈຸບັນນີ້ ຄຸນສົມບັດຂອງສິດຍາພິບາລ ໄດ້ມີການຍອມອ່ອນຜ່ອນຜັນໄປຕາມຍຸກສມັຍແລະສຖານະການ ຍ້ອນວ່າ ບໍ່ສາມາດຫາບຸກຄົນທີ່ສົມບູນແບບຕາມທີ່ພຣະຄັມພີໄດ້ກ່າວໄວ້ ດ້ວຍເຫດທີ່ວ່າບຸກຄົນທີ່ເໝາະສົມນັ້ນອາດຈະມີຄຸນສົມບັດດີແບບນຶ່ງ ແລະຕ້ອງເສັຽໄປອີກແບບນຶ່ງ ແຕ່ວ່າຄຣິສຈັກຕ່າງ ໆ ໄດ້ພຍາຍາມຢ່າງທີ່ສຸດທີ່ຈະເລືອກຄົນທີ່ກັບໃຈມີຊີວິດໃໝ່ ຊຶ່ງພຣະເຈົ້າຊົງເອີ້ນຮຽກ ແລະສັດຊື່ຍອມຮັບໃຊ້ພຣະເຈົ້າຢ່າງຈິງໃຈ ໂດຍທີ່ຜູ້ນັ້ນໄດ້ຍອມດຳເນີນຊີວິດໃໝ່ກັບພຣະເຈົ້າຢ່າງແທ້ຈິງ ຂຶ້ນເປັນສິດຍາພິບາລ

ສິ່ງທີ່ສຳຄັນທີ່ສຸດຢູ່ທີ່ວ່າ ຜູ້ທີ່ໄດ້ຮັບການແຕ່ງຕັ້ງໃຫ້ເປັນສິດຍາພິບາລ ຈຳເປັນຕ້ອງຣະລຶກເຖິງຄຸນສົມບັດທີ່ກ່າວໄວ້ໃນພຣະວັຈນະຂອງພຣະເຈົ້າເປັນຂໍ້ເຕືອນໃຈຢູ່ສເມີ ເຖິງແມ່ນວ່າຕົນເອງບໍ່ສາມາດມີຄວາມຄົບຖ້ວນສົມບູນແບບຕາມທີ່ກຳໜົດໄວ້ ແຕ່ກໍຕ້ອງພະຍາຍາມປຸ່ງແປງຊີວິດໃຫ້ເຖິງຄວາມຖືກຕ້ອງຕາມທີ່ກຳໜົດໄວ້ໃນພຣະວັຈນະໃຫ້ໄດ້ຫລາຍທີ່ສຸດ ມີສິດຍາພິບາລຜູ້ນຶ່ງກ່າວວ່າ ທຸກ ໆ ເດືອນໃນຄືນກ່ອນວັນທີ່ເພິ່ນຈະເຮັດພິທີຣະລຶກເຖິງພຣະເຢຊູຄຣິສ ເພິ່ນຈະທັນຄືນໄປອ່ານຄຸນສົມບັດຂອງສິດຍາພິບາລຫລືຜູ້ດູແລຄຣິສຈັກໃນພຣະທັມ 1 ຕີໂມທຽວ 3:1-7 ແລະຄິດທົບທວນວ່າ ມີຫຍັງແດ່ທີ່ເພິ່ນຂາດຕົກບົກພ່ອງ ເພິ່ນຈະຂໍພຣະເຈົ້າຊ່ວຍຊຳຣະຈິດໃຈເພິ່ນ ແລະຂໍກຳລັງແຮງຈາກພຣະເຈົ້າ ທີ່ຈະຕັ້ງຕົ້ນໃໝ່ໃຫ້ສົມບູນກວ່າເກົ່າ ເພາະເພິ່ນຮູ້ຢູ່ແກ່ໃຈວ່າ ຫາກວ່າຜູ້ເປັນສິດຍາພິບາລບໍ່ສະອາດ ບໍ່ເຂົ້າໃກ້ຊິດພຣະເຈົ້າ ບໍ່ຍອມຊຳຣະຕົວ ແລະບໍ່ມີຄຸນສົມບັດສົມຄວນແກ່ການເປັນແບບຢ່າງຂອງສມາຊິກແລ້ວ **ສິດຍາພິບາລຜູ້ນັ້ນຈະກາຍເປັນດັ່ງທໍ່ອຸດຕັນພຣະພອນໄວ້** ຄຣິສຈັກຍ່ອມບໍ່ໄດ້ຮັບພຣະພອນອັນແທ້ຈິງ ຊຶ່ງໃນທີ່ນີ້ບໍ່ໄດ້ໝາຍຄວາມວ່າ ຄຣິສຈັກທີ່ບໍ່ໄດ້ຮັບພຣະພອນຍ້ອນສິດຍາພິບາລແຕ່ຜູ້ດຽວ ສມາຊິກຕ້ອງສຳນຶກຕົວ ແລະຮັບການຊຳຣະຈາກພຣະເຈົ້າ ພ້ອມກັບການຈະເຣີນເຕີບໃຫຍ່ຝ່າຍຈິດວິນຍານໄປນຳກັນດ້ວຍ

## ຄຸນສົມບັດ 10 ປະການທີ່ຈຳເປັນຕ້ອງພິຈາລະນາ

*__ປະການແລກ ຜູ້ດູແລນັ້ນຕ້ອງເປັນຄົນທີ່ບໍ່ມີໃຜຕິໄດ້__* ( 1 ຕທ 3:2)

ໂດຍທົ່ວໄປເຮົາພົບວ່າບໍ່ມີໃຜສົມບູນຄົບຖ້ວນ (Nobody Perfect) ເວັ້ນໄວ້ແຕ່ອົງພຣະເຢຊູຄຣິສ ແຕ່ເຖິງປານນັ້ນກໍຍັງມີພວກມັກຕິຕຽນ ຄອຍຈ້ອງຈັບຜິດພຣະເຢຊູຄຣິສ ແຕ່ວ່າຂໍ້ພຣະຄັມພີນີ້ເປັນຂໍ້ຄວາມຈິງທີ່ວ່າ ໃນຖານະທີ່ຜູ້ນຶ່ງຜູ້ໃດໄດ້ເປັນສິດຍາພິບາລຫລືຜູ້ເບິ່ງແຍງດູແລນັ້ນ ສົມຄວນຈະຕ້ອງຣະວັງຣະໄວໃນດ້ານກິຣິຍາ ວາຈາ ຄວາມຄິດ ການກະທຳ ແລະຄວາມຖືກຕ້ອງຂອງສິນທັມແລະກົດໝາຍ ມີຄວາມຍຸຕິທັມໃນການຕັດສິນໃຈ ບໍ່ເປັນເຫດໃຫ້ຜູ້ອື່ນສະດຸດ ຫລືຖືກໝິ່ນປະມາທເອົາໄດ້ ຊຶ່ງໂດຍທັມຊາດແລ້ວ ເຫັນວ່າສິດຍາພິບາລເປັນຜູ້ທີ່ໜ້ານັບຖືແຕ່ກໍຕ້ອງຍອມຮັບວ່າເຮົາເປັນມະນຸດປຸຖຸຊົນຄົນສາມັນ ອາດມີຂໍ້ຜິດບົກພ້ອງໄດ້ເພາະວ່າຮູ້ເທົ່າບໍ່ເຖິງການ ກໍສົມ

ຄວນທີ່ສມາຊິກຈະໃຫ້ການອະພັຍຊ່ວຍເຫລືອສນັບສນູນແກ້ໄຂໃຫ້ສົມບູນດີຂຶ້ນໄດ້ ຂ້າພະເຈົ້າໄດ້ເຫັນສິດຍາພິບາລທີ່ດີໜ້ານັບຖືມີຈຳນວນບໍ່ນ້ອຍເລີຍ

**<u>ປະການທີສອງ ຢ່າຕັ້ງຜູ້ເຊື່ອໃໝ່ໃຫ້ເປັນຜູ້ດູແລ</u>** (1 ຕທ 3:6)

ຄຳຂໍຮ້ອງຂອງຄຣິສຈັກໃນສມັຍທຳອິດແມ່ນວ່າ ຢ່າຕັ້ງຜູ້ທີ່ເຊື່ອໃໝ່ທີ່ຍັງບໍ່ທັນໄດ້ພິສູດຄວາມເຊື່ອຂອງເຂົາຢ່າງໜັກແໜ້ນຂຶ້ນເປັນຜູ້ດູແລ ຍ້ານວ່າຜູ້ນັ້ນຈະອວດຕົວຂຶ້ນດ້ວຍຄວາມຈອງຫອງ ຫລືອາດຈະນຳພາຄຣິສຈັກໄປໃນຄວາມເຊື່ອທີ່ບໍ່ຖືກຕ້ອງຕາມພຣະຄັມພີ ຍ້ອນວ່າມີອຳນາດທີ່ຈະຊັກນຳສມາຊິກໄປຕາມຄວາມຄິດເຫັນຂອງຕົວທັງ ໆ ທີ່ຕົນເອງຍັງຂາດປະສົບການໃນພຣະເຈົ້າ ອີກທັງຍັງບໍ່ທັນເຂົ້າໃຈພຣະວັຈນະຂອງພຣະເຈົ້າ ແລະຍັງບໍ່ທັນເຂົ້າໃຈຈຸດປະສົງແທ້ຂອງຄຣິສຈັກ ອາດຈະເກີດການໂລບຫລົງໃນສິດທິອຳນາດ ແລະຜິດຖຽງກັນໃນເຣື່ອງຄວາມເຊື່ອຕາມພຣະຄັມພີ ຊຶ່ງອາດເປັນເຫດດັ່ງທີ່ພຣະວັຈນະຂອງພຣະເຈົ້າໄດ້ກ່າວໄວ້ແລ້ວວ່າຈະຖືກໂທດເຫມືອນຢ່າງພະຍາມານ (1 ຕທ 3:6, 6:4-5)

**<u>ປະການທີສາມ ຜູ້ດູແລຕ້ອງເປັນຜົວຂອງຍິງຄົນດຽວ</u>** (1 ຕທ 3:2)

ໃນຍຸກສມັຍທີ່ຄຣິສຈັກເລີ້ມແຜ່ຂຍາຍອອກໄປທ້າມກາງຄົນຕ່າງຊາດນັ້ນ ເຣື່ອງທີ່ຊາຍນຶ່ງມີເມັຽຫລາຍກວ່ານຶ່ງຄົນ ເປັນເຣື່ອງທີ່ຊາວຕ່າງຊາດທີ່ບໍ່ເປັນຄຣິສຕຽນຖືກປະຕິບັດກັນ ແລະເປັນທີ່ຍອມຮັບຂອງສັງຄົມໂດຍທົ່ວໄປທ່ານໂປໂລຜູ້ຂຽນພຣະທັມຕີໂມທຽວແລະຕິໂຕ ຕ້ອງການເນັ້ນໃຫ້ເຫັນວ່າ ສິດຍາພິບາລຫລືຜູ້ດູແລຄຣິສຈັກ ຕ້ອງເປັນຄຣິສຕຽນທີ່ເປັນແບບຢ່າງ ບໍ່ເຫມືອນກັບຊາວຕ່າງຊາດທີ່ບໍ່ຮູ້ຈັກພຣະເຈົ້າ ສິດຍາພິບາລຕ້ອງເປັນຜົວຂອງຍິງຄົນດຽວ ອັນເປັນການສະແດງເຖິງຄວາມເປັນປຶກແຜ່ນໜັກແໜ້ນ ມີໃຈດຽວ ບໍ່ແມ່ນຄົນສອງໃຈ ໂດຍສະເພາະຢ່າງຍິ່ງແລ້ວ ຄຣິສຕຽນເຊື່ອຖືໃນພຣະເຈົ້າອົງດຽວ ບໍ່ມີພຣະຫລາຍອົງຄືກັນກັບຊາວຕ່າງຊາດທີ່ຖືພຣະຫລາຍ ໆ ອົງ ຫລືມີຫລາຍໃຈ

ໂດຍທັມມະດາແລ້ວ ຄຣິສຈັກຈະບໍ່ແຕ່ງຕັ້ງສິດຍາພິບາລຫລືຜູ້ດູແລທີ່ມີການປະຮ້າງເມັຽເກົ່າ ດ້ວຍສາເຫດຫລາຍປະການ ທີ່ຜູກພັນໃຫ້ເກີດຄວາມຍຸ້ງຍາກໃນດ້ານການເບິ່ງແຍງຮັກສາຄຣິສຈັກ ແຕ່ກໍມີຄຣິສຈັກບາງບ່ອນທີ່ຍອມຮັບ ແລະສຖາປນາແຕ່ງຕັ້ງໃຫ້ຜູ້ທີ່ຢ່າຮ້າງມາກ່ອນເປັນສິດຍາພິບາລຄຣິສຈັກໄດ້ ຍ້ອນວ່າການປະຮ້າງກັນນັ້ນໄດ້ເກີດຂຶ້ນກ່ອນການກັບໃຈບັງເກີດໃຫມ່ເປັນຄຣິສຕຽນຂອງຜູ້ນັ້ນ ບັດນີ້ຜູ້ນີ້ໄດ້ເປັນຄົນເກີດໃໝ່ໃນພຣະຄຣິສແລ້ວສິ່ງເກົ່າ ໆ ກໍລ່ວງໄປ ແລະມີຄຸນສົມບັດອື່ນ ໆ ທີ່ດີເກີດຂຶ້ນໃໝ່ເມື່ອຕັ້ງຕົ້ນຊີວິດກັບພຣະເຈົ້າ ແລະສມາຊິກຄຣິສຈັກຍອມຍົກໂທດໃຫ້ອະພັຍ ແລະໄດ້ຍອມລົງມັດຕິຍົກໂທດໃຫ້ອະພັຍ ດັ່ງທີ່ພຣະຄຣິສໄດ້ໃຫ້ອະພັຍເພິ່ນ ແລະຍອມໃຫ້ມີການແຕ່ງຕັ້ງໃຫ້ເພິ່ນເປັນສິດຍາພິບາລ

**<u>ປະການທີສີ່ ຕ້ອງເປັນຄົນຄອບຄອງບ້ານເຮືອນຂອງຕົນໄດ້ດີ</u>** (1 ຕທ 3:4-5)

ເຫດທີ່ສິດຍາພິບາລຫລືຕ້ອງຮູ້ຈັກເບິ່ງແຍງຮັກສາ ປົກຄອງໃຫ້ລູກຫລານແລະເມັຽຂອງຕົນຍອມຟັງຄວາມໃນທາງຂອງອົງພຣະຜູ້ເປັນເຈົ້າ ດ້ວຍຄວາມຮັກ ທະນຸ ຖະນອມລ້ຽງດູ ເອົາໃຈໃສ່ຊີ້ແຈງດ້ວຍເຫດຜົນ ແລະມີຄວາມອ່ອນນ້ອມທຸກຢ່າງ ເພາະວ່າ ຖ້າຊາຍຜູ້ໃດບໍ່ຮູ້ຈັກຄອບຄອງບ້ານເຮືອນຂອງຕົນ ຜູ້ນັ້ນຈະດູແລຄຣິສຈັກຂອງພຣະ

ເຈົ້າໄດ້ຢ່າງໃດ ໃນຂໍ້ນີ້ໄດ້ກ່າວໄວ້ແຈ້ງແລ້ວ ດັ່ງນັ້ນ ໃນຖານະທີ່ຜູ້ດູແລຕ້ອງເປັນພໍ່ທີ່ຮູ້ຈັກປົກຄອງດູແລລູກຂອງຕົນ ບໍ່ແມ່ນດ້ວຍອຳນາດ ແຕ່ດ້ວຍຄວາມຮັກແລະການເອົາໃຈໃສ່ ຊຶ່ງໃນລັກສະນະດຽວກັນ ຜູ້ດູແລຕ້ອງເບິ່ງແຍງຮັກສາສມາຊິກ ດັ່ງພຣະທັມ 1 ເປໂຕ 5:2, 3 ທີ່ກ່າວວ່າ "ຈົ່ງລ້ຽງຝູງແກະຂອງພຣະເຈົ້າທີ່ຝາກໄວ້ກັບພວກທ່ານ ຈົ່ງດູແລເຂົາບໍ່ແມ່ນດ້ວຍໃຈຂືນຂື່ນ ແຕ່ດ້ວຍເຕັມໃຈຕາມນ້ຳພຣະທັຍຂອງພຣະເຈົ້າ ບໍ່ແມ່ນດ້ວຍເຫັນແກ່ຊັບສິ່ງຂອງທີ່ໄດ້ມາໃນທາງທຸຈຣິດ ແຕ່ດ້ວຍໃຈເຫລື້ອມໃສ ບໍ່ແມ່ນເຫມືອນເປັນເຈົ້ານາຍເຫມືອນພວກທີ່ຊົງຝາກໄວ້ກັບພວກທ່ານ ແຕ່ໃຫ້ເປັນແບບຢ່າງແກ່ຝູງແກະນັ້ນ"

<u>ປະການທີຫ້າ ຜູ້ດູແລຕ້ອງເປັນຄົນຮູ້ຈັກບັງຄັບຕົນເອງ</u> (1 ຕທ 3:2ຂ)

ໝາຍເຖິງເປັນບຸກຄົນທີ່ມີສະຕິອັນຮອບຄອບ ມີກິຣິຍາຮຽບຮ້ອຍ ມີໃຈສັດທາເລື່ອມໃສໃນການຮັບແຂກ ໜ້າທີ່ຂອງສິດຍາພິບາລຫລືຜູ້ດູແລຄຣິສຈັກຕ້ອງກ່ຽວຂ້ອງກັບ ການຕິດຕໍ່ກັບຜູ້ຄົນ ຕ້ອງຮູ້ຈັກນຳພາໃຫ້ຄະນະກັມມະການຮູ້ຈັກການວາງແຜນງານ ການຕັດສິນໃຈ ແລະການແກ້ປັນຫາຕ່າງ ໆ ທີ່ມີຢູ່ໃນຄຣິສຈັກ ຊຶ່ງວຽກການເຫລົ່ານີ້ສາມາດເຮັດໃຫ້ເກີດຄວາມກົດດັນ (Stress) ຫລືເກີດໃຈຮ້າຍໄດ້ ຖ້າຫາກວ່າສມາຊິກບໍ່ຍອມຮ່ວມມື ແລະຕ້ອງປະເຊີນກັບຫລາຍບັນຫາຫລາຍດ້ານ ດັ່ງນັ້ນໃນຖານະສິດຍາພິບາລຫລືຜູ້ດູແລແລ້ວຈຳເປັນຕ້ອງເປັນຄົນໜັກແໜ້ນ ຮູ້ຈັກການບັງຄັບຕົນມີສະຕິຮອບຄອບ ບໍ່ມີໃຈໂລເລຫລືໃຈຮ້າຍງ່າຍ ແຕ່ວ່າມີຈິດໃຈທີ່ຮູ້ຈັກຕ້ອນຮັບແຂກ ຕ້ອນຮັບເອົາຄວາມຄິດເຫັນຂອງສມາຊິກ ຮູ້ຈັກພິຈາຣະນາເບິ່ງ ແລະຮູ້ຈັກການຕອບຮັບ ແລະຕອບປະຕິເສດຢ່າງຖືກຕ້ອງສົມຄວນຕາມສະຖານະການ ນອກຈາກທີ່ກ່າວມານີ້ ຜູ້ດູແລຕ້ອງວາງຕົວເປັນແບບຢ່າງໃນດ້ານການສັ່ງສອນເຕືອນສະຕິ ແລະເປັນຜູ້ໃຫ້ຄຳປຶກສາແກ່ ສມາຊິກບາງຄົນທີ່ມີຈິດໃຈຜິດປົກຕິ ໃຈນ້ອຍ ເຈົ້າອາຣົມ ໃຈຮ້າຍມັກຜິດຖຽງກັນ ເປັນພວກທີ່ບໍ່ຮອບຄອບ ແລະບໍ່ສາມາດບັງຄັບຕົນເອງ ສິດຍາພິບາລຕ້ອງຮູ້ຈັກຊັກຈູງໃຈສມາຊິກເຫລົ່ານີ້ໃຫ້ເກີດການປ່ຽນແປງແກ້ໄຂໄປໃນທາງຂອງອົງພຣະຜູ້ເປັນເຈົ້າ

<u>ປະການທີຫົກ ຜູ້ດູແລຕ້ອງເປັນຄົນຍຶດໝັ້ນໃນຫລັກອັນທ່ຽງທັມທີ່ຖືກຕ້ອງຕາມໂອວາດຄຳສອນ</u> (ຕິໂຕ 1:9)

ກ່ອນທີ່ຈະຮູ້ຈັກສອນຜູ້ອື່ນ ສິດຍາພິບາລຫລືຜູ້ດູແລຕ້ອງມີຫລັກຄຳສອນອັນທ່ຽງແທ້ ແລະໄດ້ຍຶດໝັ້ນຢູ່ໃນຄຳສອນເຫລົ່ານັ້ນເສັຽກ່ອນ ຈຶ່ງຈະສາມາດເຕືອນສະຕິຜູ້ອື່ນດ້ວຍຄຳສອນອັນມີຫລັກ ແລະສາມາດຊີ້ແຈງແກ່ຄົນທີ່ຄັດຄ້ານຕໍ່ຄຳສອນອັນຖືກຕ້ອງໄດ້ ເພາະວ່າມີຫລາຍຄົນທີ່ດື້ດ້ານ ກ່າວຄວາມທີ່ບໍ່ມີແກ່ນສານແລະຫລອກລວງຄົນອື່ນໃຫ້ຫລົງ ຜູ້ທີ່ເປັນຜູ້ດູແລຕ້ອງມີຄວາມເຊື່ອ ແລະຄວາມເຂົ້າໃຈແຈ້ງໃນຄວາມຈິງແຫ່ງພຣະວັຈນະຂອງພຣະເຈົ້າ ບໍ່ສົງສັຍຫລືຂາດຄວາມເຊື່ອ ຈຶ່ງຈະສາມາດນຳພາແລະເບິ່ງແຍງຮັກສາສມາຊິກໃຫ້ ໄປເຖິງຄວາມຈິງແທ້ແຫ່ງຂ່າວປະເສີດໄດ້ ຫາກວ່າຜູ້ດູແລບໍ່ມີຫລັກອັນທ່ຽງທັມຖືກຕ້ອງຕາມຄຳສອນແລ້ວ ຈະນຳພາໃຫ້ສມາຊິກຫລົງງົມງາຍໃນສິ່ງຜິດ ບໍ່ໄດ້ຍຶດໝັ້ນໃນຄຳສອນອັນຖືກຕ້ອງບາງແນວ ໃນພຣະຄຣິສທັມຄັມພີໃໝ່ໄດ້ບັນທຶກເຖິງບາງຄົນທີ່ປອມແປງຄຳສອນ ແລະເນັ້ນໜັກຄວາມເຊື່ອອັນບໍ່ຖືກຕ້ອງ ທີ່ແອບອີງໄປຕາມຄວາມຄິດເຫັນຂອງຕົວເອງ ອັນເປັນການຕີຄວາມໝາຍທີ່ຂາດຫລັກຍຶດໝັ້ນອັນທ່ຽງທັມຕາມພຣະຄັມພີ ແມ່ນໃນປັດຈຸບັນກໍຍັງມີປາກົດໃຫ້ເຫັນຄົນພວກນີ້ຢູ່ບໍ່ຂາດ ດັ່ງນັ້ນສິດຍາພິບາລຫລືຜູ້ດູແລຄຣິສຈັກຈຶ່ງຈຳເປັນຕ້ອງເປັນຄົນທີ່ຍຶດໝັ້ນໃນຫລັກຄຳສອນອັນຖືກຕ້ອງເພື່ອປົກປ້ອງຮັກສາສິດ ບໍ່ໃຫ້ໝາຈິ້ງຈອກປອມຕົວເຂົ້າມາສອນກໍ່ໃຫ້ເກີດຄວາມຫວຸ້ນວາຍ ເກີດການທຳລາຍ

ຫລັກຄວາມເຊື່ອຂອງສມາຊິກ ໂດຍທີ່ສິດຍາພິບາລຫລືຜູ້ດູແລສາມາດສອນແລະເຕືອນສະຕິລູກແກະຂອງຕົວດ້ວຍຫລັກຄຳສອນທີ່ຖືກຕ້ອງຕາມພຣະຄັມພີ

**ປະການທີເຈັດ ຜູ້ດູແລຕ້ອງເປັນຄົນເຫມາະສົມທີ່ຈະເປັນຄຣູ** (1 ຕທ 3:3)

ຄວາມໝາຍຂອງຂໍ້ນີ້ຄື ສິດຍາພິບາລຫລືຜູ້ດູແລຕ້ອງຮູ້ຈັກສອນຜູ້ຄົນອື່ນດ້ວຍຄຳສອນອັນຖືກຕ້ອງ ແລະມີຫລັກແຫ່ງຄວາມຈິງ ຫລາຍກວ່າຄວາມໝາຍຂອງການວາງຕົວເປັນນາຍຄຣູ ເພາະເຫດວ່າໃນຖານະທີ່ເປັນຜູ້ດູແລຕ້ອງເປັນຄົນກາງ ເປັນຕົວແທນເປີດເຜີຍພຣະທັມຄວາມຈິງແລະຄຳສອນທັງມວລຂອງພຣະເຈົ້າ ດັ່ງນາຍຄຣູທີ່ຮູ້ຈັກສິດສອນແລະນຳພາລູກແກະໃໝ່ເຂົ້າໃນຄວາມເຊື່ອຝ່າຍວິນຍານອັນເຂັ້ມແຂງ

ພຣະທັມຕີໂມທຽວສະບັບສອງ 4:2,5 ກ່າວວ່າ "ຈົ່ງປະກາດພຣະທັມ ຈົ່ງເອົາໃຈໃສ່ເຮັດການທັງໃນເວລາມີໂອກາດແລະບໍ່ມີໂອກາດ ຈົ່ງຊັກຊວນດ້ວຍເຫດຜົນ ຈົ່ງເຕືອນສຕິແລະຕັກເຕືອນ ດ້ວຍຄວາມພຽນອົດທົນທຸກຢ່າງໃນການສອນ ... ຈົ່ງອົດທົນຕໍ່ການຍາກລຳບາກ ຈົ່ງເຮັດໜ້າທີ່ຂອງຜູ້ປະກາດຂ່າວປະເສີດ ແລະຈົ່ງປະຕິບັດໜ້າທີ່ການຂອງເຈົ້ານັ້ນໃຫ້ສຳເຣັດ" ສິດຍາພິບາລຫລືຜູ້ດູແລຕ້ອງຂົນຂວາຍຮຽນຮູ້ຈັກສວຍໂອກາດທີ່ຈະສອນ ດ້ວຍຄຳສອນອັນມີຫລັກຖືກຕ້ອງ ເພື່ອວາງຮາກຖານແຫ່ງຄວາມຈິງທີ່ເສີມສ້າງຄວາມເຊື່ອໃຫ້ສມາຊິກເກີດຄວາມໝັ້ນໃຈໃນຂ່າວປະເສີດແຫ່ງພຣະເຢຊູຄຣິສ ແຕ່ບໍ່ສອນແອບອຽງໄປຕາມຄວາມຄິດຂອງນິຍາຍ ຫລືເອົາແນວຄິດຮີດຄອງອື່ນ ໆ ເຂົ້າມາປະປົນເພື່ອໃຫ້ພໍໃຈແກ່ຜູ້ຟັງ ເພາະວ່າໃນພຣະທັມຕີໂມທຽວສະບັບສອງ 4:3-4 ກ່າວວ່າ "ເພາະຈະມີເວລານຶ່ງທີ່ເຂົາບໍ່ທົນຮັບເອົາຄຳສອນອັນມີຫລັກ ແຕ່ຕາມຄວາມປາຖນາຂອງເຂົານັ້ນ ເຂົາຈະຮອບຮວມຄຣູໄວ້ສຳລັບເຂົາເອງເພື່ອບັນເທົາຫູຄັນຂອງເຂົາ ເຂົາຈະອ່ວາຍຫູໜີຈາກຄວາມທ່ຽງທັມ ຕ່າວໄປຟັງນິຍາຍຕ່າງ ໆ" ຫາກວ່າຜູ້ດູແລຫລືສິດຍາພິບາລໄດ້ສອນໄວ້ຖືກຕ້ອງ ແລະວາງຮາກຖານແຫ່ງຄວາມຈິງຢ່າງຖືກຕ້ອງແຕ່ແລກແລ້ວ ບໍ່ວ່າລູກສິດຜູ້ນັ້ນຈະໄປໃສຫລືຕົກຢູ່ໃສ ເຂົາຈະເປັນເມັດພືດແຫ່ງຂ່າວປະເສີດທີ່ຖືກຕ້ອງໃນທຸກບ່ອນທີ່ເຂົາໄປ

**ປະການທີແປດ ສິດຍາພິບາລຕ້ອງມີຄວາມເຕັມໃຈ** (1 ປຕ 5:2)

ພຣະທັມເປໂຕກ່າວເຖິງສິດຍາພິບາລຫລືຜູ້ດູແລ ທີ່ລ້ຽງດູຝູງແກະຂອງພຣະເຈົ້າດ້ວຍຄວາມເຕັມອົກເຕັມໃຈບໍ່ແມ່ນດ້ວຍໃຈຂິ່ມຂື່ນ ຫລືດ້ວຍຝືນໃຈເຮັດ ໂດຍທັມດາແລ້ວບໍ່ວ່າເຮົາຈະເຮັດສິ່ງນຶ່ງສິ່ງໃດ ຫາກວ່າເຮົາເຮັດດ້ວຍຄວາມຝືນໃຈ ຫລືດ້ວຍຄວາມຂິ່ມຂື່ນ ນ້ອຍເນື້ອຕ່ຳໃຈແລ້ວ ສິ່ງທີ່ເຮົາເຮັດໄປນັ້ນກໍບໍ່ເກີດຜົນສົມບູນຕາມທີ່ສົມຄວນແລະຜູ້ອື່ນຈະເບິ່ງເຫັນຄວາມຂາດເຂີນທີ່ປາກົດຂຶ້ນ ຈະເກີດການວິພາກວິຈານ ຈະເກີດການເວົ້າຂວັນ ແລະໃນທີ່ສຸດກາຍເປັນການຕຳໜິຕິຕຽນ ຊຶ່ງຈະພາໃຫ້ເສັຍໄປທັງໝົດ ໃນຂໍ້ນີ້ຍັງໄດ້ລວມເຖິງການເບິ່ງແຍງຮັກສາຝູງແກະ ຫລືນຳພາຄຣິສຈັກໂດຍບໍ່ເຫັນແກ່ຊັບສິ່ງຂອງທີ່ໄດ້ມາໃນທາງບໍ່ຖືກຕ້ອງ ອັນນີ້ບໍ່ແມ່ນວ່າຄຣິສຈັກບໍ່ຕ້ອງຈ່າຍເງິນເດືອນແກ່ສິດຍາພິບາລ ແຕ່ຜູ້ທີ່ເປັນສິດຍາພິບາລຕ້ອງເປັນຄົນບໍ່ໂລບ ບໍ່ຫວັງເອົາສິ່ງຂອງຣາງວັລ ຫລືການຕອບແທນໃນທາງທີ່ບໍ່ຖືກຕ້ອງ ດ້ວຍວ່າສິດຍາພິຍາລສົມຄວນຮັບໃຊ້ດ້ວຍໃຈເລື່ອມໃສສັດທາ ເພາະເຫດວ່າ ເຮົາເຕັມອົກເຕັມໃຈຮັບໃຊ້ພຣະເຈົ້າ ເພື່ອເປັນພະຍານເຖິງຄວາມທຸກທໍຣະມານຂອງພຣະຄຣິສ (1 ປຕ 5:1) ບໍ່ແມ່ນສິ່ງອື່ນອັນໃດທີ່ຊັກຈູງຢູ່ໃນຕົວເຮົາ ແຕ່ແມ່ນຄວາມຮັກແທ້ ແລະຄວາມເຕັມອົກເຕັມໃຈທີ່ເຮົາຍອມເຊື່ອຟັງຂັບຕາມຄຳໝັ້ນສັນຍາ ທີ່ເຮົາຈະບົວລະບັດລ້ຽງດູຝູງແກະໃຫ້ສົມກັບການເອີ້ນຮຽກຂອງພຣະເຈົ້າ ແຕ່ວ່າໃນເວລາດຽວກັນສມາຊິກຂອງຄຣິສຈັກກໍສົມຄວນເບິ່ງແຍງດູແລຜູ້ເປັນສິດຍາພິບາລ ໃຫ້ມີພໍຢູ່ ພໍກິນເໝາະສົມກັບການດຳຣົງຊີວິດ

## ປະການທີເກົ້າ ສິດຍາພິບາລຕ້ອງບໍ່ວາງຕົວເປັນເຈົ້ານາຍ (1 ປຕ 5:3)

ເຮົາຕ້ອງຍອມຮັບວ່າ ສິດທິອຳນາດມາພ້ອມ ໆ ກັບໜ້າທີ່ຮັບຜິດຊອບ ເມື່ອສິດຍາພິບາລຕ້ອງເປັນຜູ້ເກັບກຳໜ້າທີ່ໃຫ້ສົມບູນໃນດ້ານການເບິ່ງແຍງຮັກສາແລະການດູແລ ດັ່ງນັ້ນຈຶ່ງເກີດມີສິດທິອຳນາດຢູ່ໃນຕົວໂດຍທັມມະຊາດ ແຕ່ສິດທິອຳນາດເຫລົ່ານັ້ນ ມີໄວ້ໃຊ້ເພື່ອການປົກຄອງດູແລໃຫ້ເກີດຄວາມເປັນຣະບຽບ ແລະເກີດຄວາມຈະເຣີນກ້າວໜ້າ ເກີດການເຊື່ອຟັງ ແລະເກີດຄວາມເປັນອັນນຶ່ງອັນດຽວກັນໃນຝູງແກະ ສິດຍາພິບາລຕ້ອງສຳນຶກຢູ່ສເມີວ່າ ຕົວເອງເປັນຜູ້ຮັບໃຊ້ພຣະເຈົ້າ ບໍ່ແມ່ນເຈົ້ານາຍແລະບໍ່ແມ່ນບ່າວທາດຂອງສມາຊິກ ດັ່ງນັ້ນຈຶ່ງບໍ່ສົມຄວນທີ່ຈະມີຈິດໃຈທະເຍີທະຍານ ອວດຕົວ ແລະເປັນຄົນທີ່ມັກໃຊ້ສິດທິອຳນາດກົດຂີ່ຂົ່ມເຫັງຜູ້ອື່ນ ແຕ່ວ່າຕ້ອງເປັນຄົນທີ່ສາມາດເປັນແບບຢ່າງແກ່ຝູງແກະ ປະກອບດ້ວຍຄວາມຮັກແລະມີຄວາມອ່ອນສຸພາບຈຶ່ງຈະໜ້ານັບຖື ຫາກວ່າຕ້ອງມີການວ່າກ່າວຕັກເຕືອນຜູ້ໃດ ກໍຕ້ອງເຮັດດ້ວຍນ້ຳໃສໃຈຈິງ ດ້ວຍທ່າທີທີ່ສະແດງເຖິງຄວາມຮັກ ຄວາມຫ່ວງໃຍ ຄວາມຫວັງດີຕໍ່ຜູ້ນັ້ນຫລາຍກວ່າການໃຊ້ອຳນາດຂົ່ມຂູ່ ດັ່ງຕົວຢ່າງເຈົ້າໜ້າທີ່ຕຳຣວດມີໜ້າທີ່ເປັນຜູ້ເບິ່ງແຍງປະຊາຊົນ ຊຶ່ງເຈົ້າໜ້າທີ່ຕຳຣວດນັ້ນ ມີສິດທິອຳນາດຢູ່ໃນຕົວ ແຕ່ເຈົ້າໜ້າທີ່ຕຳຣວດບໍ່ສົມຄວນໃຊ້ສິດທິອຳນາດເພື່ອວາງຕົວເປັນເຈົ້ານາຍ ແຕ່ໃຊ້ສິດທິອຳນາດນັ້ນຄຸ້ມຄອງປະຊາຊົນ ຮັບໃຊ້ປະຊາຊົນໃຫ້ເກີດຄວາມສງົບສຸກ ແລະຢູ່ໃນຣະບຽບ ຊຶ່ງແທ້ຈິງແລ້ວການສົມທຽບນີ້ບໍ່ສົມບູນ ຍ້ອນວ່າສິດຍາພິບາລຕ້ອງຄຳນຶງເຖິງຜົນທີ່ຈະເກີດຂຶ້ນແກ່ຄຣິສຈັກດ້ວຍ ເພາະວ່າສິດຍາພິບາລເປັນຜູ້ລ້ຽງແກະຂອງພຣະເຈົ້າ ແກະໃນຄອກບໍ່ແມ່ນສິດຍາພິບາລເປັນເຈົ້າຂອງ ແຕ່ເປັນຂອງຜູ້ລ້ຽງແກະຜູ້ຍິ່ງໃຫຍ່ຄືພຣະເຢຊູຄຣິສ ຊຶ່ງຈະສະເດັດມາປາກົດ ແລະຈະປະທານສງ່າຣາສີ ແລະພວງມາລັຍອັນບໍ່ຮູ້ຫ່ຽວແຫ້ງ ແກ່ຜູ້ທີ່ຖ່ອມໃຈລົງຮັບໃຊ້ ດ້ວຍວ່າ "ພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງ ແຕ່ຊົງປະທານພຣະຄຸນແກ່ຄົນທີ່ຖ່ອມໃຈລົງ" (1 ປຕ 5:4-5) ໃນພຣະທັມຂໍ້ດຽວກັນນີ້ໄດ້ສັ່ງສອນໃຫ້ສມາຊິກຮູ້ຈັກຍອມຟັງຄວາມອັນຖືກຕ້ອງຂອງພວກສິດຍາພິບາລ ຊຶ່ງເປັນຜູ້ທີ່ມີປະສົບການຫລາຍກວ່າ ເພື່ອທຸກຝ່າຍຈະຍອມຟັງຄວາມຊຶ່ງກັນແລະກັນ

## ປະການທີສິບ ສິດຍາພິບາລຕ້ອງປະກອບດ້ວຍພຣະວິນຍານບໍຣິສຸດແລະສະຕິປັນຍາ (ກຈ 6:3, 5)

ການເບິ່ງແຍງຮັກສາລູກແກະຂອງພຣະເຈົ້າ ແມ່ນການເບິ່ງແຍງຝ່າຍຈິດວິນຍານເປັນເຣື້ອງເອກ ການນຳພາຄຣິສຈັກແມ່ນການຂຍາຍຣາຊອານາຈັກແລະແຜ່ນດິນຂອງພຣະເຈົ້າ ຊຶ່ງຈຳເປັນຕ້ອງເພິ່ງພາອາສັຍການນຳພາຈາກພຣະວິນຍານບໍຣິສຸດ ຊຶ່ງເປັນຫົວໃຈສຳຄັນຂອງຜູ້ນຳຝ່າຍຈິດວິນຍານ ດັ່ງນັ້ນຜູ້ທີ່ປະກອບດ້ວຍພຣະວິນຍານບໍຣິສຸດເທົ່ານັ້ນ ຈຶ່ງຈະເປັນຜູ້ເຂົ້າໃຈເຖິງການນຳພາຂອງພຣະເຈົ້າ ພຣະທັມກິຈການໄດ້ເລືອກຜູ້ດູແລຫລືສິດຍາພິບາລທີ່ປະກອບດ້ວມພຣະວິຍານບໍຣິສຸດ ຊຶ່ງມີຊື່ສຽງດີ ເປັນທີ່ຍອມຮັບຂອງຄົນທັງໃນແລະນອກຄຣິສຈັກ ເປັນຜູ້ທີ່ມີສະຕິປັນຍາແລະໄດ້ຕັ້ງເຂົາໃຫ້ເປັນຜູ້ເບິ່ງຜູ້ດູແລວຽກງານຂອງຄຣິສຈັກ ສມາຊິກແລະຜູ້ນຳຄຣິສຈັກຕ້ອງມີຈິດໃຈຝັກໃຝ່ການໄຫວ້ວອນ ອະທິຖານ ແລະສຶກສາພຣະວັຈນະຂອງພຣະເຈົ້າ ເພື່ອຈະໄດ້ເຂົ້າໃຈເຖິງການຊົງນຳພາຂອງພຣະເຈົ້າໂດຍພຣະວິນຍານບໍຣິສຸດ ສິດຍາພິບາລທີ່ປະກອບດ້ວຍພຣະວິນຍານບໍຣິສຸດ ຈະມີຊີວິດທີ່ຍອມຮັບການຊຳຣະລ້າງຈາກພຣະເຈົ້າ ອັນເປັນຊີວິດທີ່ມີຊັຍຊນະເຫນືອບາບ ແລະເຂົ້າສ່ວນຂອງຄວາມບໍຣິສຸດໃນການດຳເນີນຊີວິດຂອງຕົນເອງແລະຄອບຄົວ ແລະນຳພາໃຫ້ເກີດການຊຳຣະໃນຄຣິສຈັກ ເຮັດໃຫ້ຝູງແກະດຳເນີນຊີວິດໄປໃນທາງທີ່ຖືກຕ້ອງແລະບໍຣິສຸດ ສິດຍາພິບາລທີ່ປະກອບດ້ວຍພຣະວິນຍານບໍຣິສຸດຈະປະກອບດ້ວຍຖ້ອຍຄຳທີ່ມາຈາກພຣະເຈົ້າ ການເທສນາການສັ່ງສອນ ການເຕືອນສະຕິທີ່ມາຈາກພຣະວັຈນະຂອງພຣະເຈົ້າ ຫລາຍກວ່າສະຕິປັນຍາຂອງຕົນເອງ ແຕ່ແມ່ນ

ສະຕິປັນຍາທີ່ມາຈາກພຣະເຈົ້າ ສິດຍາພິບາລປະກອບດ້ວຍພຣະວິນຍານບໍຣິສຸດ ຈະປາກົດໃຫ້ເຫັນຣັສມີພາບຂອງພຣະເຈົ້າໃນບຸກຄະລິກລັກສະນະ ໃນຄວາມເຊື່ອ ໃນຄວາມກະຕືຣືຣົ້ນ ໃນຄວາມເປັນອັນນຶ່ງອັນດຽວກັນກັບສມາຊິກ ມີຄວາມຊົມຊື່ນຍິນດີ ມີຂອງພຣະຣາຊທານໃນການຮັບໃຊ້ ເກີດຣິດເດດອຳນາດໃນຄຳເທສນາ ນຳພາໃຫ້ສມາຊິກເກີດການຖວາຍຕົວ ມີການໃຫ້ອະພັຍບາບ ມີການກັບໃຈໃໝ່ ຊຶ່ງສິ່ງເຫລົ່ານີ້ເປັນໝາຍສຳຄັນທີ່ທຸກ ໆ ຄຣິສຈັກຕ້ອງກ້າວໄປໃຫ້ເຖິງ ບໍ່ແມ່ນແຕ່ຕົວເລກ ແລະຈຳນວນຄົນທີ່ມາໃນແຕ່ລະອາທິດເທົ່ານັ້ນ

ສົ່ງ 6/27/99

# ບົດທີ 4

# ພລັງອຳນາດທີ່ສົ່ງເສີມຖານະ ແລະບົດບາດຂອງສິດຍາພິບາລ

ເຮົາໄດ້ສຶກສາມາແລ້ວວ່າຕຳແໜ່ງສິດຍາພິບາລ ແມ່ນຕຳແໜ່ງຂອງຜູ້ຮັບໃຊ້ບົວລະບັດພຣະເຈົ້າໃນຄຣິສຈັກ ແມ່ນຜູ້ທີ່ໃຫ້ການເບິ່ງແຍງຮັກສາອະພິບາລສິດ ອັນເປັນຕຳແໜ່ງສູງທີ່ມີກຽດ ແຕ່ໃນເວລາດຽວກັນ ກໍມີພາລະໜ້າທີ່ຢ່າງຫລວງຫລາຍ ມີຄວາມຮັບຜິດຊອບສູງ ດັ່ງນັ້ນຜູ້ເປັນສິດຍາພິບາລ ຈຶ່ງຈຳເປັນຕ້ອງຮູ້ຈັກຖານະແລະບົດບາດຂອງຕົນ ເພື່ອຈະຕອບສະໜອງຕາມພຣະມະຫາບັນຊາຂອງພຣະເຢຊູຄຣິສ ຕໍ່ຄວາມຈະເຣີນເຕີບໂຕຂອງສມາຊິກ ແລະນຳພາໃຫ້ຄຣິສຈັກເຂັ້ມແຂງຂຍາຍຕົວ ຜູ້ເປັນສິດຍາພິບາລຈຶ່ງຈຳເປັນຕ້ອງມີການຕຽມຕົວໄວ້ໃຫ້ພ້ອມທັງໃນດ້ານການສຶກສາ ໃນດ້ານປະສົບການ ມີການຮຽນຮູ້ຈັກສິ່ງໃໝ່ ໆ ຍອມເຂົ້າຮັບການຝຶກອົບຮົມ ເພື່ອຊ່ວຍໃຫ້ເກີດຄວາມເຂົ້າໃຈ ເກີດຄວາມຊຳນານໃນໜ້າທີ່ການງານ ອີກທັງຕ້ອງເປັນຜູ້ທີ່ດຸໝັ່ນໃນການສຶກສາພຣະວັຈນະຂອງພຣະເຈົ້າ ມີການເຂົ້າເຝົ້າໄຫວ້ວອນຂໍສະຕິປັນຍາຈາກພຣະເຈົ້າ ເພື່ອຈະເສີມພລັງຄວາມເຂັ້ມແຂງແລະສາມາດພະເຊີນກັບເຫດການ ທີ່ຈະເກີດຂຶ້ນໃນແຕ່ລະມື້ດ້ວຍຄວາມໝັ້ນໃຈໃນການຊົງນຳພາຂອງພຣະເຈົ້າ

## ນຶ່ງ. <u>ໜ້າທີ່ແລະບົດບາດ ຕາມຄວາມຄາດໝາຍຂອງສະມາຊິກ</u>

ໂດຍທົ່ວໄປ ໃນຖານະທີ່ເປັນສິດຍາພິບາລ ສມາຊິກຂອງຄຣິສຈັກ ມັກຄາດໝາຍໄວ້ວ່າ ຜູ້ເປັນສິດຍາພິບາລ ຕ້ອງມີບົດບາດໜ້າທີ່ດັ່ງນີ້

1. ສາມາດເທສນາໄດ້ຖືກຕ້ອງແລະຖືກໃຈຜູ້ຟັງ
2. ສັ່ງສອນ ແລະໃຫ້ການຊ່ອຍເຫລືອແກ່ສມາຊິກໄດ້ທັນເວລາ
3. ສັ່ງສອນໃຫ້ສມາຊິກມີຄວາມຮັກແພງ ແລະຊ່ວຍເຫລືອຊຶ່ງກັນ ແລະກັນ
4. ສ້າງຄວາມເປັນອັນນຶ່ງອັນດຽວກັນ ໃນຄຣິສຈັກ ແລະໃນຊຸມຊົນ
5. ມີຄວາມສາມາດສູງ ແລະເປັນສູນກາງໃນການແກ້ໄຂບັນຫາໄດ້ທຸກຢ່າງ
6. ອົບຮົມຝຶກຝົນສມາຊິກໃຫ້ມີຄວາມຮູ້ ຄວາມສາມາດໃນການບົວລະບັດຮັກສາຄຣິສຈັກ
7. ນຳພາໃຫ້ຄຣິສຈັກໃຫຍ່ຂຍາຍຕົວ ເພີ່ມຕື່ມສມາຊິກ
8. ຮູ້ຈັກຫລັກການບໍຣິຫານແລະວາງແຜນງານ
9. ມີກິຣິຍາຮຽບຮ້ອຍ ມີນິໃສໄມຕຣີດີ ເຫລື້ອມໃສໃນການຕ້ອນຮັບແຂກ
10. ຮູ້ຈັກອົບຮົມສັ່ງສອນສມາຊິກ ແລະມອບໝາຍໃຫ້ສອນຜູ້ອື່ນໄດ້ດີ
11. ເປັນຜູ້ໃຫ້ຄຳປຶກສາ ໃນບັນຫາຕ່າງ ໆ ກ່ຽວກັບວຽກການຂອງຄຣິສຈັກ
12. ເປັນຜູ້ໃຫ້ຄຳປຶກສາ ສາມາດເຂົ້າໃຈບັນຫາສ່ວນຕົວຂອງສມາຊິກແຕ່ລະຄົນ ແຕ່ລະຄອບຄົວ

13. ມີຄວາມຄິດຣິເລີ່ມ ສ້າງສາສິ່ງໃໝ່ ໆ ລວມເຖິງການກິລາ ແລະການມ່ວນຊື່ນ

14. ຄອບຄົວຂອງສິດຍາພິບາລ ຕ້ອງເຂັ້ມແຂງ ເປັນແບບຢ່າງແກ່ຄົນໃນຄຣິສຈັກ

15. ນຳພາໃຫ້ສມາຊິກເກີດການ ເຊື່ອຟັງເຂົ້າໃກ້ຊິດຕິດສະນິດກັບພຣະເຈົ້າ.

ຕາມລາຍງານທັງ 15 ຂໍ້ທີ່ເປັນໜ້າທີ່ແລະບົດບາດຂອງສິດຍາພິບາລ ຊຶ່ງສມາຊິກຄຣິສຈັກມັກຄາດໝາຍໄວ້ ນັບໄດ້ວ່າເປັນສິ່ງທີ່ຍາກທີ່ສຸດ ທີ່ບຸກຄົນໃດບຸກຄົນນຶ່ງຈະເຮັດໄດ້ຄົບຖ້ວນສົມບູນ ຫລາຍທ່ານອາດຈະຖາມວ່າໃຜລະຈະກ້າເປັນສິດຍາພິບາລ ແລະຈະມີໃຜທີ່ຈະເຮັດໄດ້ຕາມທີ່ສມາຊິກຄິດຄາດຫວັງໄວ້ໄດ້ ຜູ້ເປັນສິດຍາພິບາລຈະເອົາສິດອຳນາດຫລືພະລັງມາແຕ່ໃສ ຈຶ່ງຈະສາມາດເຮັດໃຫ້ໄດ້ຖືກໃຈຂອງສມາຊິກ ແລະເກີດຜົນຕາມຄວາມຄາດໝາຍຂອງຄຣິສຈັກ ແຕ່ວ່າຕາມປວັດສາດທີ່ຜ່ານມາ ເຮົາໄດ້ເຫັນການອັດສະຈັນເກີດຂຶ້ນຢ່າງໃຫຍ່ຫລວງ ທີ່ພົບວ່າແທ້ຈິງມີສິດຍາພິບາລຈຳນວນບໍ່ນ້ອຍ ທີ່ສາມາດສວມຖານະຫລືບົດບາດຂອງການເປັນສິດຍາພິບາລຢ່າງມີຄຸນພາບແລະໜ້ານັບຖື ມີຜູ້ຮັບໃຊ້ພຣະເຈົ້າຈຳນວນຫລາຍທີ່ສາມາດຮັບຜິດຊອບວຽກງານໄດ້ເກືອບຄົບຖ້ວນສົມບູນທັງ 15 ຂໍ້ຕາມທີ່ໄດ້ກ່າວມາ ຫລືຈະຫລາຍກວ່ານີ້ອີກ ຊຶ່ງນຳໃຫ້ເກີດຄຳຖາມຕໍ່ໄປອີກວ່າ ສິດຍາພິບາລເຫລົ່ານີ້ໄດ້ພລັງອຳນາດແຫ່ງຄວາມສາມາດມາແຕ່ໃສ ພລັງອຳນາດໃດ ທີ່ສາມາດຊ່ວຍສົ່ງເສີມສິດຍາພິບາລໃຫ້ສາມາດດຳລົງຕຳແໜ່ງຖານະຂອງຕົນ ແລະປະຕິບັດໜ້າທີ່ໄດ້ຄົບຖ້ວນສົມບູນ ຊຶ່ງເຮົາຈະໄດ້ສຶກສາໃນຂໍ້ຕໍ່ໄປ

## ສອງ. <u>ແຫລ່ງພລັງອຳນາດທີ່ສົ່ງເສີມຖານະແລະບົດບາດຂອງສິດຍາພິບາລ</u>

ມີຂໍ້ສເນີຊຶ່ງສາມາດສລູບໄວ້ໄດ້ດັ່ງນີ້ວ່າ ອົງປະກອບທີ່ກໍ່ໃຫ້ເກີດພລັງອຳນາດແລະຄວາມສາມາດຂອງສິດຍາພິບາລໄດ້ມາຈາກຂໍ້ຕ່າງ ໆ ດັ່ງຕໍ່ໄປນີ້

(1) **ແມ່ນພລັງອຳນາດທີ່ພຣະເຈົ້າປະທານໃຫ້** ສິ່ງນຶ່ງທີ່ຜູ້ເປັນສິດຍາພິບາລລືມບໍ່ໄດ້ ແມ່ນການທີ່ພຣະເຈົ້າຊົງເອີ້ນເຂົ້າມາໃຫ້ເປັນຜູ້ຮັບໃຊ້ບົວລະບັດຄຣິສຈັກ ດັ່ງນັ້ນການຊົງເອີ້ນຮຽກຂອງພຣະເຈົ້າ ຈຶ່ງເປັນພລັງອຳນາດສູງສຸດທີ່ຊັກຈູງໃຈໃຫ້ຜູ້ເປັນສິດຍາພິບາລ ມີພລັງງານພິເສດທີ່ດຶງດູດຢູ່ໃນຕົວເຂົາ ເຮັດໃຫ້ເຂົາໄດ້ຮັບຂອງປະທານພິເສດຈາກພຣະເຈົ້າທີ່ແຕກຕ່າງໄປຈາກຜູ້ເຊື່ອອື່ນ ໆ ຜູ້ເປັນສິດຍາພິບາລຕ້ອງຖາມຕົນເອງວ່າ ຕົນມີປະສົບການຂອງການຊົງຮຽກ ຫລືມີຄວາມຮູ້ສຶກໃນຕົວເອງຫລືບໍ່ວ່າ ການຮັບໃຊ້ທີ່ຕົນປະຕິບັດຢູ່ນັ້ນຍ້ອນການຊົງຮຽກຂອງພຣະເຈົ້າແລະເປັນຄວາມຕ້ອງການຂອງປະຊາຊົນ

(2) **ພລັງອຳນາດຂອງການອຸທິດຖວາຍຕົວຂອງຜູ້ເປັນສິດຍາພິບາລ** ຜູ້ທີ່ຮັບໃຊ້ບົວລະບັດພຣະເຈົ້າ ຕ້ອງມີຄວາມຮູ້ສຶກ ແລະສຳນຶກຢູ່ສເມີວ່າ ຕົນເອງໄດ້ອຸທິດຊີວິດ ອຸທິດເວລາ ອຸທິດຕົວ ເພື່ອການຮັບໃຊ້ພຣະເຈົ້າ ຊຶ່ງອົງພຣະຜູ້ເປັນເຈົ້າໄດ້ເອີ້ນຕົວເຂົາ ໃຫ້ເຂົ້າສ່ວນເປັນປະໂລຫິດ ໃນການຮັບໃຊ້ບົວລະບັດພຣະອົງໃນພຣະວິຫານ (ຄຣິສຈັກ) ພລັງແຫ່ງການອຸທິດຖວາຍຕົວນີ້ມີອຳນາດສູງ ທີ່ກໍ່ໃຫ້ເກີດການຮັບໃຊ້ຢ່າງເກີດຜົນ ແລະຕົງຕາມເປົ້າໝາຍຂອງພຣະເຈົ້າຜູ້ເປັນສິດຍາພິບາລຕ້ອງຮູ້ຈັກເຂົ້າເຝົ້າພຣະເຈົ້າ ແລະສຳຫລວດກວດເບິ່ງຕົນເອງ ມີການອຸທິດຖວາຍຕົວໃໝ່ແກ່ພຣະເຈົ້າເປັນປະຈຳ ມີການຊຳຣະຕົວໃຫ້ບໍຣິສຸດ ແລະຂໍການຊົງຊ່ວຍເຫລືອຈາກພຣະເຈົ້າ ທີ່ຈະໃຫ້ເກີດການປ່ຽນແປງຊີວິດຕາມແບບຢ່າງຂອງພຣະເຢຊູຄຣິສ

(3) **ພລັງອຳນາດຈາກການແຕ່ງຕັ້ງ** ການສະຖາປະນາແຕ່ງຕັ້ງເປັນສິດອຳນາດສົ່ງເສີມໃຫ້ສິດຍາພິບາລສາມາດມີພລັງໃນການຮັບໃຊ້ສມາຊິກ ຄຣິສຈັກຕ້ອງມີການຄິດພິຈາຣະນາເຖິງຄຸນສົມບັດຄວາມສາມາດຂອງຜູ້ທີ່ຈະມາເປັນສິດຍາພິບາລ ແລະເມື່ອໄດ້ປະຊຸມລົງມັດຕິກັນແລ້ວ ຈຶ່ງເກີດການສະຖາປະນາແຕ່ງຕັ້ງ ສມາຊິກຕ້ອງພ້ອມໃຈກັນຍອມຮັບ ນັບຖື ແລະໄວ້ວາງໃຈໃຫ້ຜູ້ນັ້ນເປັນສິດຍາພິບາລ ໃຫ້ເປັນຜູ້ນຳພາຄຣິສຈັກ ດັ່ງນັ້ນການແຕ່ງຕັ້ງສະຖາປະນາ ຈຶ່ງເປັນສິດອຳນາດນຶ່ງ ທີ່ສົ່ງເສີມໃຫ້ສິດຍາພິບາລເກີດພລັງອຳນາດໃນການຮັບໃຊ້ສມາຊິກໃນຄຣິສຈັກ ຜູ້ທີ່ຮັບການແຕ່ງຕັ້ງສະຖາປະນາເປັນຜູ້ຮັບໃຊ້ ກໍຕ້ອງຮູ້ຈັກການຖວາຍຕົງເອງ ແລະຮັບຕຳແໜ່ງດ້ວຍຄວາມຖ່ອມໃຈຮັບໃຊ້ພຣະເຈົ້າໂດຍຄວາມສັດຊື່ຕໍ່ຕຳແໜ່ງໜ້າທີ່

(4) **ພລັງອຳນາດທີ່ມາຈາກຄວາມເຫລື້ອມໃສສັດທາຂອງສມາຊິກ** ເປັນພລັງອຳນາດອີກອັນນຶ່ງ ທີ່ເຮັດໃຫ້ຜູ້ເປັນສິດຍາພິບາລເກີດຄວາມໝັ້ນໃຈແລະກ້າຫານ ໂດຍທີ່ສະມາຊິກໃຫ້ຄວາມໄວ້ວາງໃຈ ເຊື່ອໝັ້ນໃນຕົວລາວ ໃຫ້ລາວມີສິດອຳນາດໃນການເທສນາ ສັ່ງສອນຈາກພຣະຄຳຂອງພຣະເຈົ້າ ໃນການຕັກເຕືອນວ່າກ່າວຢ່າງທ່ຽງທັມ ເຮັດໃຫ້ເກີດຄວາມຮັບຜິດຊອບ ກໍ່ໃຫ້ເກີດຄວາມຈະເຣີນກ້າວໜ້າຂອງຄຣິສຈັກ ເກີດຄວາມຄິດບຸກບືນກ້າຫານໃນການສ້າງສາ ແລະວາງແຜນງານເພື່ອອານາຄົດ ຜູ້ເປັນສມາຊິກຕ້ອງຍອມຮັບນັບຖືຄຳສອນຂອງສິດຍາບາລ ຊຶ່ງແມ່ນຕົວແທນຂອງພຣະເຈົ້າ ແມ່ນຜູ້ເປີດເຜີຍພຣະວັຈນະ ແລະແມ່ນຜູ້ນຳພາຝ່າຍຈິດວິນຍານທີ່ມາຈາກພຣະເຈົ້າ

(5) **ພລັງອຳນາດຈາກການຮ່ວມແຮງຮ່ວມໃຈກັນຂອງສມາຊິກ** ທີ່ສມາຊິກພາກັນອຸດໜູນ ຊວ່ານຊູ ໃຫ້ກິຈການງານຕ່າງ ໆ ໃນຄຣິສຈັກ ໃຫ້ດຳເນີນໄປໃຫ້ສົມກັບເປົ້າໝາຍແລະເຂົ້າເຖິງຈຸດປະສົງຂອງພຣະເຈົ້າ ມີຄວາມເປັນອັນນຶ່ງອັນດຽວກັນສົ່ງເສີມກິຈການຕ່າງ ໆ ຕາມທີ່ສິດຍາພິບາລກຳລັງນຳພາເດີນກ້າວໜ້າໄປ ເມື່ອທຸກຝ່າຍທຸກຄົນຮ່ວມໄມ້ ຮ່ວມມື ຮ່ວມແຮງ ຮ່ວມໃຈກັນ ໂດຍຄວາມເຊື່ອ ໂດຍການໄຫວ້ວອນທູນຂໍຈາກແລ້ວ ຈະເກີດພລັງອຳນາດແຫ່ງຄວາມເປັນນ້ຳນຶ່ງໃຈດຽວກັນ ຊຶ່ງສາມາດສົ່ງເສີມຖານະແລະບົດບາດຂອງສິດຍາພິບາລ ແລະສາມາດນຳພາໃຫ້ກິຈການຕ່າງ ໆ ດຳເນີນໄປໄດ້ສະດວກຮາບຮື່ນ ແລະຮັບພຣະພອນນຳກັນທັງຄຣິສຈັກ

(6) **ພລັງອຳນາດແຫ່ງຄວາມຮັກ ແລະການຍົກໂທດໃຫ້ອະພັຍຊຶ່ງກັນແລະກັນ** ຄວາມຮັກເປັນພລັງສັກສິດ ມີອຳນາດອັນຍິ່ງໃຫຍ່ ທີ່ມີຜົນປາກົດມາໃຫ້ເຫັນຕລອດທຸກຍຸກທຸກທຸກສມັຍ ຄວາມຮັກສາມາດຊະນະ ອຸປະສັກທຸກສິ່ງໄດ້ ຫລາຍກວ່ານັ້ນອີກ ການຍົກໂທດໃຫ້ອະພັຍຕໍ່ຄວາມຜິດພາດທີ່ມີຕໍ່ກັນແລະກັນ ຈະເປັນພລັງອັນເດັດຂາດ ທີ່ຈະທຳລາຍບັນຫາທີ່ຂັດຂວາງຢູ່ນັ້ນ ໃຫ້ສາບສູນຫາຍໄປ ດັ່ງທີ່ປາກົດໃຫ້ເຮົາໄດ້ຮູ້ຈັກວ່າ ແມ່ນຄວາມຮັກແລະການຍົກໂທດອະພັຍບາບຂອງພຣະເຈົ້າ ທີ່ເຮັດໃຫ້ຄຣິສຈັກຂອງພຣະຄຣິສຍັ້ງຍືນຕລອດໄປ ດັ່ງນັ້ນທັງສມາຊິກແລະສິດຍາພິບາລ ຈຶ່ງຕ້ອງເຂົ້າໃຈໃນຫລັກແຫ່ງຄວາມຈິງນີ້ ແລະຍຶດຖືປະຕິບັດຢູ່ໃນຄຣິສຈັກ ຕາມທີ່ພຣະເຢຊູໄດ້ສອນໃຫ້ເຮົາທັງຫລາຍຈົ່ງຮັກຊຶ່ງກັນແລະກັນ ເພາະວ່ານີ້ເປັນພຣະບັນຍັດຂໍ້ໃຫຍ່ ສິດສອນໃຫ້ເຮົາຮູ້ຈັກຍົກໂທດໃຫ້ກັບຜູ້ອື່ນ ດັ່ງທີ່ພຣະເຈົ້າໄດ້ຊົງໂຜດຍົກໂທດໃຫ້ແກ່ເຮົາ

(7) **ພລັງອຳນາດຈາກພຣະວັຈນະຂອງພຣະເຈົ້າ** ການເຊື່ອຟັງພຣະວັຈນະຂອງພຣະເຈົ້າຂອງຕົວສິດຍາພິບາລເອງ ເປັນອຳນາດແລະຣິດເດດສຳຄັນ ທີ່ກໍໃຫ້ເກີດຄວາມເຂົ້າໃຈຢ່າງເລິກຊຶ້ງເຖິງນ້ຳພຣະທັຍ ແລະພຣະປະສົງຂອງພຣະເຈົ້າ ດັ່ງນັ້ນແລ້ວທັງສິດຍາພິລາແລະສມາຊິກ ທັງສອງຝ່າຍຕ້ອງມີຄວາມເຊື່ອຟັງພຣະວັຈນະຂອງພຣະເຈົ້າ ຊຶ່ງກໍ່ໃຫ້ເກີດພລັງອຳນາດອັນຍິ່ງໃຫຍ່ ເພາະວ່າພຣະວັຈນະຂອງພຣະເຈົ້າສາມາດຊຳຣະລ້າງຈິດໃຈຂອງມະນຸດ ແລະສາມາດເສີມສ້າງໃຫ້ເກີດການປ່ຽນແປງໃໝ່ ໆ ໃນຊີວິດຂອງຜູ້ທີ່ເຊື່ອ ເຮັດໃຫ້ເກີດການຈະເຣີນເຕີບໃຫຍ່ຂຶ້ນໃນຝ່າຍ

ວິນຍານ ແລະເຮັດໃຫ້ທັງສມາຊິກແລະສິດຍາພິບາລສາມາດດຳເນີນວຽກການຂອງຄຣິສຈັກຢ່າງມີພລັງ ແລະເກີດໝາກຜົນຖວາຍແກ່ພຣະເຈົ້າ

(8) **ພລັງການອະທິຖານ** ແມ່ນມີຄວາມສຳຄັນສູງສຸດອີກພລັງນຶ່ງ ເພາະວ່າພລັງການອະທິຖານໄຫວ້ວອນ ທີ່ມາຈາກສມາຊິກທຸກຄົນ ທີ່ພ້ອມໃຈກັນໄຫວ້ວອນເພື່ອສົ່ງເສີມສິດຍາພິບາລໃນຄຣິສຈັກຂອງຕົນເປັນເຣື້ອງຈຳເປັນ ຍ້ອນວ່າຜູ້ເຊື່ອຫລາຍ ໆ ທ່ານບໍ່ໄດ້ໄຫວ້ວອນ ຈຶ່ງເປັນເຫດໃຫ້ເກີດການອ່ອນແອແລະຂັດແຍ້ງກັນໃນຄຣິສຈັກ ຖ້າສມາຊິກທຸກຄົນ ຮູ້ຈັກເສີມແຮງ ເສີມກຳລັງສິດຍາພິບາລດ້ວຍການໄຫວ້ວອນອະທິຖານແລ້ວ ສິດຍາພິບາລຜູ້ນັ້ນຈະມີເຫື່ອແຮງ ແລະສະຕິປັນຍາຈາກພຣະເຈົ້າ ແຕ່ວ່າຕົວສິດຍາພິບາລເອງ ກໍຕ້ອງມີນ້ຳໃຈໃນການເຂົ້າເຝົ້າໄຫວ້ວອນທັງເພື່ອຕົນເອງ ແລະເພື່ອສມາຊິກບໍ່ໄດ້ຂາດຄືກັນ ການອະທິຖານໄຫວ້ວອນແມ່ນກະແຈໄຂໄປສູ່ພລັງອຳນາດທີ່ມາຈາກພຣະເຈົ້າ

(9) **ພລັງອຳນາດທີ່ຮັກຄວາມກ້າວໜ້າແລະສະແຫວງຫານິມິດໝາຍຈາກພຣະເຈົ້າ** ທັງສິດຍາພິບາລແລະສມາຊິກຕ້ອງສະແຫວງຫາ ແລະເບິ່ງເຫັນການນຳພາຂອງພຣະເຈົ້າທີ່ຈະກ້າວໄປສູ່ອານາຄົດ ໂດຍບໍ່ມີຜູ້ໃດໃຝ່ຫາການແຕກແຍກ ການຕຳນິຕິຕຽນ ແຕ່ໃຫ້ແຕ່ລະຝ່າຍ ສົ່ງເສີມຊ້ອນຊູກັນ ໂດຍໃຫ້ຄຳແນະນຳ ປັບປຸງແກ້ໄຂໃນແຕ່ລະພະແນກ ແຕ່ລະໜ່ວຍງານ ໃຫ້ກ້າວໜ້າສູ່ນິມິດໝາຍທີ່ພຣະເຈົ້ານຳພາໄປໃນອານາຄົດ ແລະບໍ່ຕ້ອງມີການແຍ່ງຊີງອຳນາດຄວາມເປັນໃຫຍ່ ຫລືສະແຫວງຫາກຽດຊື່ສຽງໃສ່ຕົນເອງ ພລັງອຳນາດທີ່ຮັກຄວາມກ້າວໜ້າ ແລະຕ້ອງການເຫັນນິມິໝາຍຈາກພຣະເຈົ້າຮ່ວມກັນ ນຳໃຫ້ເກີດຄວາມເປັນນ້ຳນຶ່ງໃຈດຽວກັນ ຈະນຳພາໃຫ້ຄຣິສຈັກມີຄວາມເປັນປຶກແຜ່ນ ແໜ້ນໜາ ມີອານາຄົດ ມີຄວາມກ້າວໜ້າສາມາດຟັນຝ່າອຸປະສັກໄປໄດ້ຢ່າງສະດວກ ແລະມີຄວາມມຸ່ງຫວັງໃນທິດທາງດຽວກັນ

(10) **ພລັງອຳນາດແຫ່ງການຖວາຍຊັບອຸດໜູນເກື້ອກູນຄຣິສຈັກ** ບໍ່ວ່າວຽກງານໃດກໍຕາມ ຈຳເປັນຕ້ອງມີປັດຈັຍໄວ້ໃຊ້ຈ່າຍ ເພື່ອສົ່ງເສີມໃຫ້ວຽກງານຕ່າງ ໆ ໃຫ້ສາມາດກ້າວໜ້າດຳເນີນຕໍ່ໄປໄດ້ຢ່າງມີປະສິດທິພາບຕາມທີ່ໄດ້ກຳນົດຄາດໝາຍໄວ້ ຫາກວ່າຂາດການຖວາຍຊັບ ຈະເກີດການຂັດສົນ ແລະເປັນອຸປສັກຂັດຂວາງຕໍ່ການດຳເນີນວຽກການຕາມແຜນການທີ່ວາງໄວ້ ເຮັດໃຫ້ເກີດຄວາມລົ້ມເຫລວ ເກີດບັນຫາຕິດຂັດ ແລ້ວຄວາມຫຍຸ້ງຍາກໃຈກໍຈະເກີດຂື້ນ ດັ່ງນັ້ນພລັງແຫ່ງການຖວາຍອຸດໜູນເກື້ອກູນຢ່າງມີນ້ຳໃຈກວ້າງຂວາງຂອງສມາຊິກ ຈຶ່ງເປັນສິ່ງທີ່ສຳຄັນສ່ວນນຶ່ງ ໃນການສົ່ງເສີມຖານະຕຳແໜ່ງຂອງສິດຍາພິບາລ ແລະສາມາດສົ່ງເສີມວຽກງານກິຈການອື່ນ ໆ ໃຫ້ກ້າວໜ້າໄປຕາມແຜນການແລະພຣະປະສົງຂອງພຣະເຈົ້າ

## ສາມ. ການພັດທະນາປັບປຸງຕົວຂອງຜູ້ເປັນສິດຍາພິບາລ

ເປັນທີ່ຮູ້ກັນວ່າ ການເປັນສິດຍາພິບາລ ຫລືການເປັນຜູ້ນຳບໍ່ໄດ້ຈົບລົງທີ່ວັນແຕ່ງຕັ້ງສະຖາປະນາເຂົ້າຮັບຕຳແໜ່ງໜ້າທີ່ ແຕ່ວັນແຕ່ງຕັ້ງສະຖາປະນາເປັນວັນແຫ່ງການເລີ້ມຕົ້ນຮັບໃຊ້ຂອງຜູ້ນັ້ນ ໂດຍສະເພາະຢ່າງຍິ່ງໃນຖານະທີ່ເປັນສິດຍາພິບາລ ຊຶ່ງໝາຍເຖິງການເປັນຕົວແທນຂອງພຣະເຈົ້າ ແລະເປັນຜູ້ນຳພາຝູງແກະຂອງພຣະອົງ ຊຶ່ງຈຳເປັນທີ່ຈະຕ້ອງມີການພັດທະນາຕົນເອງໃນທຸກ ໆ ດ້ານ ດັ່ງນີ້

1. *ດ້ານການບໍຣິຫານງານ* ຜູ້ເປັນສິດຍາພິບາລແລະຜູ້ນຳ ສົມຄວນປັບປຸງຕົວແລະຮຽນຮູ້ການຈັດຣະບຽບຂອງວຽກງານ ການມອບໝາຍວຽກງານແລະໜ້າທີ່ໃຫ້ແກ່ຜູ້ອື່ນ ການມອບອຳນາດແລະຄວາມໄວ້ວາງໃຈໃຫ້ສມາຊິກ

ຮັບຜິດຊອບໃນແຕ່ລະພາກສ່ວນຂອງວຽກງານ ການຮູ້ຈັກຕິດຕາມຜົນ ການຮູ້ຈັກໃຫ້ຄຳແນະນຳແກ່ຜູ້ຮ່ວມງານ ສິ່ງຕ່າງ ໆ ເຫລົ່ານີ້ເປັນສິລະປະທີ່ມີລາຍລະອຽດ ທີ່ຜູ້ເປັນສິດຍາພິບາລແລະຜູ້ນຳຕ້ອງຮູ້ຈັກການສຶກສາຄົ້ນຄວ້າ ຮັບການຝຶກອົບຮົມ ແລະເປີດຫູເປີດຕາສັກເກດການທຳງານຂອງຜູ້ອື່ນ ແລ້ວນຳມາປັບປຸງຕົນເອງໃຫ້ດີຂຶ້ນ

2. **ດ້ານສັນພັນທະພາບ** ຜູ້ເປັນສິດຍາພິບາລຕ້ອງຮູ້ຈັກກະຕຸ້ນໃຫ້ຜູ້ອື່ນມີຄວາມກະຕືຣືລົ້ນ ມີຄວາມຈິງຈັງ ມີຄວາມສັດຊື່ ແລະມີການຍຳເກງພຣະເຈົ້າຫລາຍຂຶ້ນ ເພື່ອທຸກ ໆ ຝ່າຍທີ່ຮ່ວມງານກັນນັ້ນຕ່າງຄົນຕ່າງອຸທິດຖວາຍຕົວຢ່າງເລິກຊຶ້ງໃນການຮັບໃຊ້ພຣະເຈົ້າ ເປັນຜູ້ຮ່ວມງານກັນເພື່ອຖວາຍກຽດແດ່ພຣະເຈົ້າ ບໍ່ໄດ້ສະແດງເຖິງຄວາມສູງເດັ່ນ ຫລືຄວາມຕ່ຳຕ້ອຍຂອງຜູ້ນຶ່ງຜູ້ໃດ ຊຶ່ງຈະກໍ່ໃຫ້ເກີດຜົນແຫ່ງຄວາມສຳເຣັດໄດ້ຫລາຍຂຶ້ນ ເພາະວ່າທຸກຝ່າຍຮ່ວມມືກັນ ແລະມີສັມພັນທະພາບທີ່ດີຕໍ່ກັນ ຜູ້ເປັນສິດຍາພິບາລຕ້ອງເປັນຕົວເຊື່ອມໂຍງໃຫ້ເກີດຄວາມເຂົ້າໃຈອັນດີໃນແຕ່ລະຝ່າຍ ໂດຍບໍ່ມີໃຈລຳອຽງຝັກໃຝ່ຝ່າຍນຶ່ງຝ່າຍໃດ ຊຶ່ງອາດກໍ່ໃຫ້ເກີດການແບ່ງພັກແບ່ງພວກກັນໄດ້

3. **ດ້ານການສຶກສາຄົ້ນຄວ້າ** ເປັນການພັດທະນາຕົນເອງທີ່ບໍ່ມີວັນສິ້ນສຸດ ຜູ້ນຳທີ່ຢູ່ໃນຣະດັບສູງແຮງຕ້ອງໃຊ້ເວລາໃນການສຶກສາຄົ້ນຄວ້າຫລາຍຂຶ້ນ ບໍ່ມີນັກເທດຫລືນັກສອນຄົນໃດທີ່ຈະເທດຫລືສອນໄດ້ຈັບໃຈຜູ້ຟັງ ໂດຍບໍ່ນັ່ງລົງສຶກສາຄົ້ນຄວ້າເສັຍກ່ອນ ເວັ້ນໄວ້ແຕ່ພວກນັກຕະລົກເຮຮາເວົ້າປາກເປົ່າ ຫລືພວກເລົ່າເຣື່ອງໄຮ້ສາຣະພາມ່ວນໄປເທົ່ານັ້ນ ແຕ່ໃນຖານະທີ່ສິດຍາພິບາລຖືກເອີ້ນມາໂດຍອົງພຣະຜູ້ເປັນເຈົ້າ ແລະໂດຍສິດອຳນາດຂອງກອງປະຊຸມແລ້ວ ເຣື່ອງການພັດທະນາຕົນເອງໃນດ້ານການສຶກສາຄົ້ນຄວ້າຈຶ່ງຈຳເປັນ ແລະຂາດບໍ່ໄດ້ ຢ່າໃຫ້ຕົວເຮົາເປັນຜູ້ສໍ້ໂກງຝູງແກະໂດຍການຍືນຂຶ້ນສອນເຣື່ອງນິຍາຍໜ້າຊວນຫົວ ຊຶ່ງບໍ່ມີຄວາມໝາຍຫຍັງທີ່ຈະນຳໃຫ້ເກີດຄວາມເຊື່ອຫລືເກີດການກັບໃຈໃໝ່ 1 ຕີໂມທຽວ 4:16 ກ່າວວ່າ "ຈົ່ງຣະວັງຕົວແລະການສັ່ງສອນຂອງເຈົ້າໃຫ້ດີ ຈົ່ງຕັ້ງໝັ້ນຢູ່ໃນຂໍ້ຄວາມເຫລົ່ານີ້ ເພາະເມື່ອເຮັດຢ່າງນັ້ນເຈົ້າຈະຊ່ວຍຕົນເອງ ກັບທັງຊ່ວຍຄົນທັງຫລາຍທີ່ຟັງເຈົ້ານັ້ນໃຫ້ພົ້ນ"

4. **ດ້ານການໃຊ້ເວລາ** ຜູ້ນຳຕ້ອງຮູ້ຈັກພັດທະນາຕົນໃນເຣື່ອງການໃຊ້ເວລາໃຫ້ເປັນປໂຍດ ຮູ້ຈັກການຈັດສັນປັນສ່ວນໃຫ້ຖືກຕ້ອງຕໍ່ຄຣິສຈັກແລະຕໍ່ຄອບຄົວ ຫາກວ່າຜູ້ນຳສົນໃຈແຕ່ໄປຍິງນົກຕຶກປາ ຜົນກໍຈະປາກົດໃຫ້ເຫັນຢູ່ໃນຄຣິສຈັກຂອງເຂົາ ຄຳເວົ້າຂວັນກໍຈະປາກົດຢູ່ຮອບຂ້າງ ພຣະເຈົ້າໄດ້ປະທານເວລາຢ່າງພຽງພໍເພື່ອການຮັບໃຊ້ຜູ້ເປັນສິດຍາພິບາລຕ້ອງຖວາຍເວລາຮັບໃຊ້ພຣະອົງຢ່າງມີຄຸນພາບ ຜູ້ທີ່ເຮັດຫລາຍຈົນເກີນເລີຍຈົນເປັນເຫດໃຫ້ເສັຍສຸຂພາບ ເສັຍຄອບຄົວກໍບໍ່ຖືກຕ້ອງ ຜູ້ທີ່ປ່ອຍປະເວລາໄປໂດຍບໍ່ໄດ້ສັດຊື່ຕໍ່ຄຣິສຈັກແລະຝູງແກະຂອງຕົນກໍຖືວ່າເປັນການສໍ້ໂກງຄືກັນ ດັ່ງນັ້ນເຮົາຕ້ອງມີຄວາມສັດຊື່ ໃນເຣື່ອງໂມງຍາມໃນຖານະເປັນຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າ

5. **ດ້ານບຸກຄະລິກກະພາບ** ການແຕ່ງກາຍ ຄວາມສະອາດ ແລະມາຣະຍາດ ສິ່ງເຫລົ່ານີ້ ແມ່ນພຽງຕົວຢ່າງທີ່ກ່າວເຖິງ ຍ້ອນເພາະເຫດວ່າ ຜູ້ເປັນສິດຍາພິບາລແມ່ນຈຸດສູນລວມຂອງສາຍຕາ ແລະຢູ່ໃນຄວາມສົນໃຈຂອງສມາຊິກ ເປັນຜູ້ນຳໜ້າແລະຕ້ອງປາກົດຕົວໃນຖານະເປັນຕົວແທນຂອງພຣະເຈົ້າ ເປັນຕົວແທນຂອງຄຣິສຈັກແລະກຸ່ມຊົນບຸກຄະລິກກະພາບທີ່ສະແດງອອກມາ ການແຕ່ງກາຍ ຄວາມສະອາດລວມເຖິງກິ່ນສະອາດ ເປັນເຣື່ອງຈຳເປັນທີ່ສຸດ ເພາະວ່າຜູ້ທີ່ເບິ່ງເຮົານັ້ນຈະພິຈາຣະນາເຖິງສິ່ງເຫລົ່ານີ້ເປັນອັນດັບແລກ ກ່ອນທີ່ເຂົາຈະເຂົ້າໃຈເລິກຊຶ້ງໃນຕົວເຮົາ ດັ່ງນັ້ນຈຶ່ງຈຳເປັນຕ້ອງຮູ້ຈັກພັດທະນາຕົວເອງໃຫ້ເໝາະສົມ ຊຶ່ງບໍ່ຈຳເປັນຕ້ອງໃຊ້ເຄື່ອງຂອງຣາຄາແພງແຕ່ງກາຍ ແຕ່ຄວາມສະອາດ ແລະມາຣະຍາດທີ່ຖືກຕ້ອງເໝາະສົມກັບກາລະເທສະເປັນເຣື່ອງຈຳເປັນທີ່ສຸດ

6. **ດ້ານຄວາມສັດຊື່** ຜູ້ເປັນສິດຍາພິບາລຈະສາມາດດຳຣົງຕຳແໜ່ງ ຖານະໜ້າທີ່ ແລະບົດບາດຂອງຕົນໄດ້ ຕ້ອງອາສັຍຄວາມສັດຊື່ທີ່ມີຕໍ່ພຣະເຈົ້າ ແລະຄວາມເຂັ້ມແຂງບຸກບືນທີ່ຈະຂັບຕາມຄຳຮຽກເອີ້ນຂອງພຣະເຈົ້າ ຈຳເປັນຢ່າງຍິ່ງທີ່ຜູ້ເປັນສິດຍາພິບາລຕ້ອງສັດຊື່ໃນເຣື່ອງເງິນຄຳ ບໍ່ເປັນຜູ້ທີ່ມັກສ້າງໜີ້ສິນ ຫລືເກີດການສໍ້ໂກງ ສິ່ງທີ່ດີທີ່ສຸດແມ່ນມອບໝາຍໃຫ້ຄະນະກັມມະການດ້ານການເງິນ ເປັນຜູ້ເບິ່ງແຍງຮັກສາຊັບສິນບັດຂອງຄຣິສຈັກ ນອກຈາກນີ້ແລ້ວຜູ້ເປັນສິດຍາພິບາລຂອງຄຣິສຈັກຕ້ອງສັດຊື່ໃນການຮັກສາສັດຈະວາຈາ ຮັກສາຄວາມເວົ້າ ມີຄວາມຈິງໃຈ ບໍ່ເປັນຜູ້ມັກຕົວະ ມັກປັ້ນ ຫລືເວົ້າເກີນຄວາມຈິງ ພຣະທັມເອເຟໂຊ 4:25 ກ່າວວ່າ "ເຫດສັນນັ້ນທ່ານທັງຫລາຍຈົ່ງເລີກກ່າວຄວາມຕົວະເສັຍ 'ທຸກຄົນຈົ່ງກ່າວຄວາມຈິງຕໍ່ເພື່ອນບ້ານຂອງຕົນ' ເພາະວ່າເຮົາທັງຫລາຍເປັນອະວັຍວະຂອງກັນແລະກັນ"

ເຮົາຕ້ອງຍອມຮັບຄວາມຈິງໃນຂໍ້ທີ່ວ່າ ບໍ່ມີໃຜຈະເປັນຜູ້ດີຮອບຄອບ ສົມບູນແບບໃນທຸກປະການ ແຕ່ຜູ້ທີ່ຮັບໜ້າທີ່ເປັນສິດຍາພິບາລ ກໍຕ້ອງມີຄວາມພະຍາຍາມຢ່າງຫລາຍທີ່ສຸດ ທີ່ຈະເຮັດໃຫ້ຖານະບົດບາດຂອງຕົນສົມບູນທີ່ສຸດເທົ່າທີ່ຈະເຮັດໄດ້ ໃຫ້ໃກ້ຄຽງກັບຄຳຮ້ອງຂໍ ແລະຄວາມຕ້ອງການຂອງສະມາຊິກ ຫລືຕາມທີ່ຄຣິສຈັກໄດ້ຄາດໝາຍໄວ້ໃນຕົວຂອງຜູ້ເປັນສິດຍາພິບາລ ມີສິດຍາພິບາລຢູ່ຈຳນວນບໍ່ນ້ອຍຄືກັນ ທີ່ໄດ້ຮັບການແຕ່ງຕັ້ງສະຖາປະນາແລ້ວ ກໍເລີຍຖືໂອກາດຢູ່ໃນຕຳແໜ່ງຊື່ ໆ ໂດຍບໍ່ມີຄວາມກະຕືລືລົ້ນ ບໍ່ມີຄວາມສົນໃຈຫລືນິມິດໝາຍໃດ ໆ ທີ່ຈະນຳພາໃຫ້ສມາຊິກຂອງຄຣິສຈັກກ້າວໜ້າ ບຸກຄົນແນວນີ້ສົມຄວນທີ່ຈະຕ້ອງຕັ້ງຕົ້ນໃໝ່ກັບພຣະເຈົ້າ ເກີດການກັບໃຈໃໝ່ແລະເກີດການແກ້ໄຂປັບປຸງ ປ່ຽນແປງໃໝ່ ຕື່ນຕົວ ເປີດຈິດໄຂໃຈ ມີນຕາເບິ່ງເຖິງຄວາມກ້າວໜ້າ ທີ່ຈະຕ້ອງມຸ່ງໄປ ຫາກວ່າມີຄວາມຂັດຂ້ອງໃຈອັນໃດອັນນຶ່ງຕໍ່ກັນ ກໍຈຳເປັນຕ້ອງເຂົ້າປຶກສາຫາລືກັບສະມາຊິກ ແຕ່ສ່ວນຄະນະກັມມະການແລະຜູ້ບໍລິຫານຫລືເຖົ້າແກ່ທັງໝົດຕ້ອງໃຫ້ການສນັບສນູນ ແນະນຳ ຊ່ວຍເຫລືອຕໍ່ສິດຍາພິບາລຢ່າງເຕັມກຳລັງ ຫລືຖ້າຈຳເປັນທີ່ສຸດສິດຍາພິບາລຜູ້ນັ້ນ ໄດ້ພິຈາຣະນາແລ້ວວ່າຕົນເອງ ບໍ່ໄດ້ເປັນພຣະພອນແກ່ຄຣິສຈັກນັ້ນ ໆ ແຕ່ກັບກາຍເປັນອຸປສັກ ກໍສົມຄວນພິຈາຣະນາຕົວເອງຕໍ່ພຣະເຈົ້າ ແລະຂໍລາອອກຈາກໜ້າທີ່ການເປັນສິດຍາພິບາລ ຫລືອາດຈະໂຍກຍ້າຍໄປຮັບໃຊ້ໃນຄຣິສຈັກບ່ອນອື່ນ ເພື່ອຕັ້ງຕົ້ນໃໝ່ກັບພຣະເຈົ້າ ກໍຈະເປັນການເໝາະສົມຫລາຍກວ່າ

ສົ່ງ June 30, 99

# ບົດທີ 5

# ຫລັກແລະວິທີການອະພິບາລສິດ

ເປັນການຍາກທີ່ຈະກ່າວເນັ້ນສະເພາະເຈາະຈົງລົງໄປເຖິງຫລັກການອະພິບາລສິດ ແລະເປັນການຍາກຫລາຍທີ່ສຸດທີ່ຈະສເນີແນະຕໍ່ທ່ານຜູ້ເປັນສິດຍາພິບາລວ່າ ມີກົດເກນຫລືມີວິທີອັນໃດທີ່ເໝາະສົມແລະດີທີ່ສຸດ ທີ່ຈະນຳໄປໃຊ້ເພື່ອໃຫ້ການອະພິບາລສິດໃຫ້ເກີດຜົນສຳເຣັດທີ່ດີເລີດ ຈິງຢູ່ເຮົາພົບວ່າມີບົດຮຽນ ແລະຕຳຣາຢູ່ຫລາຍທີ່ໃຫ້ຂໍ້ສເນີແນະເຖິງຫລັກການ ແລະວິທີການອະພິບາລສິດ ແຕ່ທີ່ຈະສລູບລົງໄປວ່າແນວທາງໃດຫລືວິທີໃດທີ່ດີທີ່ສຸດນັ້ນຕ້ອງຂຶ້ນຢູ່ກັບຕົວຂອງສິດຍາພິບາລເອງ ຊຶ່ງແຕ່ລະຄົນຕ້ອງຮູ້ຈັກສຶກສາຄົ້ນຄວ້າ ແລະຕ້ອງຮູ້ຈັກເຂົ້າໃຈເຖິງທັມມະຊາດຂອງຕົນເອງ ບຸກຄະລິກນິສັຍ ຄວາມສາມາດຂອງຕົນທີ່ຈະນຳເອົາຫລັກການຫລືວິທີການນັ້ນ ໆ ໄປໃຊ້ໃຫ້ເກີດຜົນ ເຮົາຕ້ອງຍອມຮັບວ່າໃນການອະພິບາລສິດຂອງແຕ່ລະຄົນນັ້ນແຕກຕ່າງກັນໄປໃນແຕ່ລະເທື່ອ ຊຶ່ງໝາຍເຖິງບັນຫາຂອງແຕ່ລະບຸກຄົນແຕກຕ່າງກັນ ສະຖານະການຂອງແຕ່ລະບຸກຄົນນັ້ນແຕກຕ່າງກັນ ຄວາມຮ່ວມມືຂອງເຈົ້າຂອງບັນຫາມີລະດັບທີ່ແຕກຕ່າງກັນ ສິ່ງແວດລ້ອມຄວາມເປັນຢູ່ແລະຄວາມເຂົ້າໃຈຂອງຜູ້ປະສົບບັນຫາກໍແຕກຕ່າງກັນໄປດ້ວຍ ທີ່ຈະບອກວ່າຜູ້ເປັນສິດຍາພິບາລຈະຕ້ອງໃຊ້ຫລັກການໃດ ຫລືວິທີການແນວໃດນັ້ນ ຜູ້ເປັນສິດຍາພິບາລເອງຕ້ອງເປັນຜູ້ພິຈາຣະນາເຖິງອົງປະກອບຫລາຍ ໆ ດ້ານ ແລະດ້ານນຶ່ງທີ່ລືມບໍ່ໄດ້ແມ່ນຕົວຂອງສິດຍາພິບາລເອງ ທີ່ຈະຕ້ອງເຂົ້າໃຈເຖິງຄວາມຖະນັດຄວາມສາມາດຂອງຕົນ ຮູ້ຈັກຂອງປະທານທີ່ພຣະເຈົ້າປະທານໃຫ້ ແລະການທີ່ຕົນເອງໄດ້ເປັນທີ່ຍອມຮັບນັບຖືຂອງສະມາຊິກວ່າຢູ່ໃນຣະດັບໃດ

ເມື່ອເຈົ້າຊີວິດຊາອູນເອີ້ນໃຫ້ທ່ານດາວິດອອກຣົບເພື່ອປ້ອງກັນຊົນຊາດອິສຣາເອນ ທ່ານດາວິດແທນທີ່ຈະນຸ່ງຊຸດນັກຣົບຢ່າງທີ່ກະສັດຊາອູນເຄີຍນຸ່ງ ແຕ່ດາວິດກັບໃຊ້ຄວາມຖະນັດຂອງຕົນ ໂດຍນຳເອົາຫີນ 5 ກ້ອນກັບສາຍກະຖຸນ ຊຶ່ງຕົນເອງມີຄວາມຖະນັດໝັ້ນໃຈແລະມີປະສົບການ ເພາະວ່າເຄີຍໃຊ້ເປັນປະຈຳໃນການປ້ອງກັນລູກແກະຂອງຕົນຈາກສັດຮ້າຍເຊັ່ນໝາປ່າຈິ້ງຈອກ ແລະໂຕສິງ ທ່ານດາວິດໄດ້ນຳໄຊຊະນະຢ່າງໃຫຍ່ຫລວງໃນການປ້ອງກັນຊົນຊາດອິສຣາເອນ ຈາກການບຸກຣຸກຂອງພວກຟີລິສຕິນ ອັນເປັນວິທີການທີ່ແຕກຕ່າງໄປຈາກກະສັດຊາອູນ ຊຶ່ງຕ້ອງສວມເຄື່ອງຊົງອອກຣົບຄົບຊຸດ

ຕົວຢ່າງດັ່ງກ່າວແມ່ນເປັນພຽງຂໍ້ແນະນຳເລັກນ້ອຍທີ່ສະແດງໃຫ້ເຮົາໄດ້ເຂົ້າໃຈຢ່າງແຈ່ມແຈ້ງວ່າ ຜູ້ເປັນສິດຍາພິບາລແຕ່ລະຄົນຕ້ອງສະແຫວງຫາ ແລະສຳຫລວດເບິ່ງຕົນເອງ ວ່າຕົນເອງນັ້ນມີຄວາມຖະນັດໃນແນວໃດ ມີຄວາມສາມາດພິເສດໃນດ້ານໃດແດ່ ແລະມີຂໍ້ບົກພ້ອງຫລືຈຸດອ່ອນແນວໃດ ເພື່ອຈະໄດ້ແກ້ໄຂຈຸດບົກພ້ອງຫລືຈຸດອ່ອນນັ້ນ ໆ ການຮູ້ຈັກເສີມສ້າງຕົນເອງແລະເລືອກເອົາຫລັກການ ແລະວິທີການທີ່ເໝາະສົມໄປໃຊ້ໃນການອະພິບາລສິດ ໃນເວລາດຽວກັນຜູ້ເປັນສິດຍາພິບາລກໍຕ້ອງຮູ້ຈັກພິຈາຣະນາເຖິງແກະແຕ່ລະຕົວ ທັງທີ່ຢູ່ໃນຄອກແລະຢູ່ນອກຄອກດ້ວຍ ວ່າມີຄວາມແຕກຕ່າງກັນຢ່າງໃດ ເພາະວ່າການອະພິບາລສິດນັ້ນເປັນການຮັບໃຊ້ທີ່ລະອຽດອ່ອນ ແມ່ນການເບິ່ງແຍງລ້ຽງດູແກະແຕ່ລະຕົວ ທີ່ມີລັກສະນະນິສັຍທີ່ແຕກຕ່າງກັນ ມີສະຕິປັນຍາ ຄວາມສາມາດ ຄວາມເຂົ້າໃຈທີ່

ແຕກຕ່າງກັນອີກ ທັງມີບັນຫາແລະມີສະພາບແວດລ້ອມທີ່ແຕກຕ່າງກັນໄປດ້ວຍ ຜູ້ເປັນສິດຍາພິບາລຈະເຂົ້າເຖິງແຕ່ລະຄົນໄດ້ຕ້ອງໃຊ້ຫລັກການ ແລະວິທີການແຕກຕ່າງກັນ ເພື່ອໃຫ້ເໝາະສົມແລະເກີດຜົນໃນແຕ່ລະຄົນ

1. ການອະພິບາລສິດຈະຕ້ອງໃຊ້ທັງການປອບປະໂລມ ແລະການທ້າທາຍໃຫ້ຜູ້ທີ່ປະສົບບັນຫາຮູ້ຈັກຕໍ່ສູ້ ແລະປະເຊີນບັນຫາໄປພ້ອມກັນ ໃຫ້ຮູ້ຈັກການແກ້ໄຂບັນຫາຢ່າງໝັ້ນໃຈ ໂດຍອາໄສຄວາມເຊື່ອທີ່ມີໃນພຣະເຈົ້າເປັນຫລັກຍຶດຖື
2. ການອະພິບາລສິດຈະຕ້ອງໃຊ້ພຣະຄຣິສທັມຄັມພີເປັນຫລັກມາດຕະຖານໃນການແກ້ໄຂບັນຫາ ແລະການວາງແຜນການຊ່ວຍເຫລືອທຸກຊະນິດ ແຜນການນັ້ນຕ້ອງບໍ່ຂັດກັບຄວາມເຊື່ອໃນພຣະຄຣິສທັມຄັມພີ ຄວາມຮອບຮູ້ໃນວິຊາການອື່ນ ໆ ຈະໃຊ້ເປັນພຽງສ່ວນປະກອບໃນການແກ້ບັນຫາເທົ່ານັ້ນ ແລະຄວາມຮູ້ທັງວິທະຍາການທີ່ຈະເລືອກໃຊ້ ສິ່ງເຫລົ່ານີ້ຈະຕ້ອງບໍ່ຂັດແຍ້ງກັບຄຳສອນໃນພຣະຄຣິສທັມຄັມພີຈຶ່ງຈະພິຈາຣະນາໃຊ້ໄດ້
3. ການອະພິບາລສິດບໍ່ໄດ້ຈຳກັດເອົາໄວ້ໃຫ້ແກ່ສິດຍາພິບາລເທົ່ານັ້ນ ແຕ່ຄຣິສຕຽນທຸກຄົນທີ່ໄດ້ຮັບການອົບຮົມ ແລະການຝຶກແອບມາຢ່າງພຽງພໍ ຕ່າງກໍສາມາດທຳໜ້າທີ່ນີ້ໄດ້ສເມີກັນ
4. ການອະພິບາລສິດນັ້ນມີເປົ້າໝາຍທີ່ມຸ່ງຈະຊ່ວຍບຸກຄົນຕ່າງ ໆ ທີ່ມີບັນຫາ ໃຫ້ເກີດການແກ້ໄຂປ່ຽນແປງ ແລະເກີດການຈະເຣີນຂຶ້ນໃນດ້ານຕ່າງ ໆ ຊຶ່ງລວມໄປເຖິງທຸກ ໆ ດ້ານ ທັງຝ່າຍຮ່າງກາຍ ຈິດໃຈ ອາຣົມສັງຄົມ ແລະທາງຈິດວິນຍານອີກດ້ວຍ

## ນຶ່ງ. ການອະພິບາລສິດໃນຍຸກຕ່າງ ໆ

ການອະພິບາລສິດໄດ້ເລີ້ມໃຊ້ກັນຕັ້ງແຕ່ຄຣິສຈັກສມັຍຍຸກແລກມາແລ້ວ ໂດຍໃນແຕ່ລະຍຸກສມັຍມັກເລືອກໃຊ້ວິທີການທີ່ແຕກຕ່າງກັນອອກໄປ ຕາມສະຖານະການ ຕາມສິ່ງແວດລ້ອມຂອງຍຸກສມັຍນັ້ນ ໆ ແລະຕາມຄວາມຈຳເປັນ ດັ່ງຈະເຫັນໄດ້ຈາກຍຸກຕ່າງ ໆ ດັ່ງນີ້

### 1. <u>ຍຸກໂບຮານ</u> (Primitive Christian)

ຍຸກນີ້ຕັ້ງຕົ້ນແຕ່ສມັຍພຣະເຢຊູຄຣິສຊົງເລີ້ມສັ່ງສອນປະຊາຊົນ ຈົນເຖິງປະມານປີ ຄ.ສ.100 ວິທີການຂອງການອະພິບາລສິດ ໃຊ້ພຽງວິທີໜູນໃຈໃຫ້ເຫລົ່າຜູ້ເຊື່ອຍຶດໝັ້ນໃນຄວາມເຊື່ອຈົນເຖິງທີ່ສຸດ ແມ່ນວ່າຈະຕ້ອງປະເຊີນກັບຄວາມຕາຍກໍຕາມ

### 2. <u>ຍຸກການຂົ່ມເຫັງຄຣິສຈັກ</u> (Under Oppression)

ຍຸກສມັຍນີ້ຢູ່ໃນເວລາຣະຫ່ວາງ ປີ ຄ.ສ.100 - 306 ຊຶ່ງເປັນເວລາທີ່ຄຣິສຕຽນໄດ້ຮັບການຂົ່ມເຫັງຈາກມະຫາຈັກກະພັດໂຣມັນຫລາຍອົງ ທີ່ປົກຄອງຣາຊອານາຈັກໂຣມັນ ໃນຍຸກນີ້ໄດ້ໃຊ້ວິທີການສນັບສນູນ ຄຣິສຕຽນທີ່ທໍ້ຖອຍແລະໄດ້ກະທຳບາບໃຫ້ກັບຄືນດີກັບພຣະເຈົ້າໂດຍການສາຣະພາບບາບ ການແກ້ຕົວໃໝ່ກັບໃຈໃໝ່ ແລະໃຫ້ກຳລັງໃຈແກ່ຄຣິສຕຽນທີ່ກຳລັງຖືກຂົ່ມເຫັງໃຫ້ມີຄວາມອົດທົນຕໍ່ໄປ

3. **ຍຸກເລີ່ມເຟື້ອງຟູ** (ຄຣິສຕຽນເປັນທີ່ຍອມຮັບນັບຖື, Christian Culture)

ຍຸກນີ້ຢູ່ໃນຣະຫວ່າງ ສັດຕະວັດທີ່ 4 ເມື່ອຣາຊອານາຈັກໂຣມັນໄດ້ຍອມຮັບຄຣິສສາສນາໃຫ້ເປັນສາສນາປະຈຳອານາຈັກໂຣມັນແລ້ວ ໂດຍຈັກກະພັດຄອນສະແຕນຕິນ ຄຣິສຈັກໄດ້ມີການປ່ຽນຮູບແບບໃໝ່ ຍຸກນີ້ການອະພິບາລສິດເນັ້ນການຟື້ນຟູ ແລະນຳປະຊາຊົນຈຳນວນຫລາຍໃຫ້ປ່ຽນຄວາມເຊື່ອເກົ່າ ຖິ້ມສາສນາເກົ່າໃຫ້ກັບໃຈເປັນຄຣິສຕຽນໃຫ້ຖືກຕ້ອງ ໂດຍຍຶດຖືເອົາຫລັກຄຳສອນຂອງພຣະຄຣິສທັມຄັມພີເປັນຫລັກ

4. **ຍຸກມືດທາງສາສນາ** (Dark Age)

ຍຸກນີ້ຢູ່ຣະຫ່ວາງ ສັດຕະວັດທີ່ 5 - 10 ຍຸກນີ້ເປັນຍຸກທີ່ຄຣິສຈັກມີອຳນາດສູງສຸດ ຜູ້ເປັນສິດຍາພິບາລໄດ້ຮັບການຍົກຍ້ອງຢ່າງສູງ ແຕ່ຜູ້ນຳທາງສາສນາໄດ້ຫລົງອຳນາດ ແລະໃຊ້ອິດທິພົນໃນທາງທີ່ຜິດແລະເພື່ອປໂຍດຂອງຕົນເອງທຳໃຫ້ຄຣິສຈັກເສື່ອມເສັຍແລະຕົກຕ່ຳເປັນຢ່າງຍິ່ງ ຈຶ່ງເອີ້ນຍຸກນີ້ວ່າ ຍຸກມືດທາງສາສນາ ຍຸກນີ້ເປັນຍຸກທີ່ຜູ້ນຳທາງສາສນາໃຊ້ອຳນາດ ແລະການບັງຄັບເປັນຫລັກໃນການອະພິບາລສິດ

**ການອະພິບາລສິດໃນຍຸກມືດນີ້ເນັ້ນມາດຕະຖານດັ່ງນີ້**

1) ໃຫ້ຄຣິສຕຽນຖ່ອມຕົວຫລາຍທີ່ສຸດ
2) ຕໍ່ສູ້ກັບຄວາມຕ້ອງການຂອງເນື້ອໜັງ ໂດຍການທໍຣະມານກາຍດັ່ງພວກລືສີແລະພວກອອກບວດ
3) ຍອມຢູ່ໃຕ້ອຳນາດຂອງຣັຖບານ ແລະສາສນາໂດຍບໍ່ມີຂໍ້ໂຕ້ແຍ້ງໃດ ໆ ທັງສິ້ນ
4) ຕ້ອງສາຣະພາບບາບຕໍ່ສິດຍາພິບາລເປັນປະຈຳ
5) ຫ້າມຕັ້ງຄຳຖາມຕໍ່ຜູ້ນຳໂດຍເດັດຂາດ
6) ນັກບວດຫ້າມທົວ ແລະມີແນວມ່ວນຊື່ນອື່ນ ໆ
7) ຜູ້ເຊື່ອໃຫ້ເວົ້ານ້ອຍທີ່ສຸດ ໂດຍສນັບສນູນໃຫ້ຈຳສິລເປັນປະຈຳ

5. **ຍຸກກາງ** (Mediaval Christiandom)

ຍຸກນີ້ຢູ່ໃນຣະຫວ່າງສັດຕະວັດທີ່ 11 - 13 ໃນຍຸກນີ້ການອະພິບາລສິດໄດ້ກໍ່ຕັ້ງຂຶ້ນເປັນສະຖາບັນທີ່ເຂັ້ມແຂງຫລາຍ ພວກບິຊຊອພ (Bishop) ຫລືສິດຍາພິບາລມີສິດທິອຳນາດຫລາຍ ເພາະການອະພິບາລສິດຖືກນັບລວມເຂົ້າກັບພິທີກັມທີ່ສຳຄັນຂອງຄຣິສຈັກດ້ວຍ ແມ່ນ

1) **ພິທີສະຖາປະນາ** ນຳໂດຍສິດຍາພິບາລເທົ່ານັ້ນ ເປັນການສົ່ງຕໍ່ອຳນາດໃຫ້ກັບຄົນຣຸ່ນໃໝ່ໃນການປົກຄອງເຫລົ່າຜູ້ເຊື່ອທັງໝົດ
2) **ພິທີບັບຕິສມາ** ເປັນພິທີທີ່ສິດຍາພິບາລກະທຳ ເພື່ອເປັນເຄື່ອງໝາຍຂອງການຮັບບຸກຄົນເຂົ້າເປັນສະມາຊິກໃໝ່ຂອງຄຣິສຈັກ
3) **ພິທີຣະລຶກເຖິງພຣະເຢຊູ** ເປັນພິທີທີ່ສິດຍາພິບາລເທົ່ານັ້ນທີ່ມີສິດກະທຳ ເພື່ອນຳເຫລົ່າຜູ້ເຊື່ອເຂົ້າຮ່ວມໃນສາມັກຄີທັມກັບອົງພຣະເຢຊູຄຣິສ

**6. ຍຸກຟື້ນຟູແລະການປະຕິຮູບທາງສາສນາ** (Renewal and Reform)

ຍຸກນີ້ຢູ່ໃນຣະຫວ່າງ ສັດຕະວັດທີ່ 14-16 ຍຸກນີ້ເປັນຍຸກທີ່ມີການຟື້ນຟູສິນລະປະແລະວັດທະນະທັມທົ່ວທວີປຢຸໂຣບ ລວມທັງມີການປະຕິຮູບທາງສາສນາອີກດ້ວຍ ບົດບາດຂອງສິດຍາພິບາລໃນຍຸກນີ້ຈຶ່ງເປັນການໃຫ້ກຳລັງໃຈແລະນຳປະຊາຊົນກັບມາຫາພຣະເຈົ້າ ເພື່ອໃຫ້ເກີດຄວາມເຂົ້າໃຈໃນເຣື້ອງຄວາມຣອດພົ້ນອັນແທ້ຈິງ ເປັນຍຸກທີ່ອຳນາດຂອງສິດຍາພິບາລລົດນ້ອຍຖອຍລົງໄປ

**7. ຍຸກທີ່ຈະເຣີນຮຸ່ງເຮືອງທາງສາສນາ** (Enlightaenment Period)

ຍຸກນີ້ຢູ່ຣະຫວ່າງສັດຕະວັດທີ່ 17 - 18 ເປັນຍຸກທີ່ເກີດປັດຊະຍາສາຂາຕ່າງ ໆ ຂຶ້ນຢ່າງຫລວງຫລາຍທົ່ວໂລກ ບົດບາດຂອງການອະພິບາລສິດມຸ່ງໄປສູ່ດ້ານສອນຜູ້ເຊື່ອໃຫ້ເດີນໃນທາງທີ່ຖືກຕ້ອງ ແລະຫລີກໜີຈາກຄຳສອນທີ່ຜິດຈາກພຣະຄຣິສທັມຄັມພີເປັນສ່ວນຫລາຍ

**8. ຍຸກຫລັງຄວາມຈະເຣີນຮຸ່ງເຮືອງຂອງຄຣິສສາສນາ** (Post Christian Era)

ຍຸກນີ້ຢູ່ຣະຫ່ວາງສັດຕະວັດທີ່ 18 - 19 ໃນຍຸກນີ້ສາສນາໄດ້ກາຍເປັນເຣື້ອງສ່ວນຕົວຂອງບຸກຄົນຕ່າງ ໆ ໄປແລ້ວ ປະຊາຊົນເລີ້ມມີສິດເປັນຕົວຂອງຕົວເອງຫລາຍຂຶ້ນ ອິດທິພົນຂອງຄຣິສຈັກແລະອົງການຕ່າງ ໆ ທີ່ມີຕໍ່ຊີວິດຂອງປະຊາຊົນ ລົດນ້ອຍຖອຍລົງ ບົດບາດຂອງການອະພິບາລສິດກາຍເປັນການໃຫ້ຄຳປຶກສາແກ່ຜູ້ທີ່ຕ້ອງການເທົ່ານັ້ນ ແລະເປັນການແນະນຳສເນີຂໍ້ຄວາມຄິດເຫັນໃຫ້ແກ່ສະມາຊິກເທົ່ານັ້ນ ຊຶ່ງແລ້ວແຕ່ເຂົາຈະຕັດສິນໃຈເລືອກເອົາ

## ສອງ. ຫລັກແລະວິທີການອະພິບາລສິດໃນປັດຈຸບັນ

ໃນສັດຕະວັດທີ່ 20 ທີ່ກຳລັງກ້າວສູ່ສັດຕະວັດທີ່ 21 ນີ້ ສະຖານະການໃນໂລກມີການປ່ຽນແປງຫລາຍໂດຍສະເພາະຢ່າງຍິ່ງທາງດ້ານວິທະຍາການມີການປ່ຽນແປງຢ່າງຫລວງຫລາຍ ການສື່ສານທາງວິທະຍຸ ໂທຣະທັດ ແລະທາງຄອມພິວເຕີ ຜ່ານອິນເທີເນັທ (Internet) ໄດ້ເຂົ້າມາມີບົດບາດຕໍ່ຊີວິດຂອງມວນຊົນ ມີຜູ້ຄົນຈຳນວນຫລາຍ ທີ່ອ້າງຕົວວ່າເຊື່ອໃນພຣະເຈົ້າແລະຮັບຟັງຄຳສອນໂດຍຜ່ານທາງວິທະຍຸແລະທາງໂທຣະທັດ ແລະທາງອິນເທີເນັທ ຄົນຈຳນວນຫລາຍໄດ້ສະແຫວງຫາແຫລ່ງຄວາມຮູ້ແຮງຊູໃຈ ການໃຫ້ຄຳແນະນຳສັ່ງສອນ ແລະການແກ້ບັນຫາຊີວິດຊຶ່ງເລືອກຫາໄດ້ຈາກສື່ມວນຊົນຫລາຍບ່ອນ ແຕ່ເຖິງປານນັ້ນສິ່ງເຫລົ່ານີ້ກໍບໍ່ສາມາດທີ່ຈະທົດແທນເຣື້ອງການອະພິບາລສິດໃນຄຣິສຈັກໄດ້ ຄຳສັ່ງຂອງພຣະເຢຊູຄຣິສເຣື້ອງ **"ຈົ່ງລ້ຽງລູກແກະຂອງເຮົາ"** ຍັງຄົງເປັນຄຳສັ່ງທີ່ສຳຄັນໂດຍຜູ້ທີ່ເປັນສິດຍາພິບາລຈະລະເລີຍເມີນເສີຍບໍ່ໄດ້ ໂດຍສະເພາະຢ່າງຍິ່ງໃນຄຣິສຈັກລາວແລ້ວ ສະມາຊິກຍັງມີຄວາມເຂົ້າໃຈໃນສາສນາຄຣິສບໍ່ເລິກຊຶ້ງ ແລະບໍ່ມີພື້ນຖານທີ່ໝັ້ນຄົງໃນດ້ານຄວາມເຊື່ອ ອີກທັງຍັງຂາດເຂີນໃນຫລາຍ ໆ ດ້ານ ແລະບໍ່ມີບົດຮຽນຂໍ້ຊຽນຢ່າງພຽງພໍ ດັ່ງນັ້ນການອະພິບາລສິດຈຶ່ງຍັງເປັນເຣື້ອງທີ່ຢູ່ໃນຣະດັບຂອງຄວາມສັມພັນຣະຫ່ວາງສິດຍາພິບາລກັບສະມາຊິກ ໃນລັກສະນະຂອງບຸກຄົນຕໍ່ບຸກຄົນຊຶ່ງຍັງຕ້ອງອາສັຍການລ້ຽງດູ ການເອົາໃຈໃສ່ຝ່າຍວິນຍານ (High Touch) ຫລາຍກວ່າການເພິ່ງພາອາສັຍວິທະຍາການໃໝ່ທີ່ກຳລັງກ້າວໜ້າ (High Tech) ເມື່ອເປັນດັ່ງນີ້ແລ້ວຈຶ່ງເກີດຄຳຖາມຂຶ້ນມາອີກວ່າ ມີຫລັກການອັນໃດທີ່ຈະເປັນແນວທາງຫລືວິທີການ ຊຶ່ງສິດຍາພິບາລຈະຕ້ອງສຶກສາຄົ້ນຄວ້າ ເພື່ອເອົາໄວ້ເປັນແບບຢ່າງ ໃນເຣື້ອງການອະພິບາລສິດ ໂດຍທີ່ສິດຍາພິບາລແຕ່ລະທ່ານຕ້ອງດຸໝັ້ນສະ

ແຫວງຫາ ແລະຮຽນຮູ້ເອົາ ແລະໃນເວລາດຽວກັນຕ້ອງຮູ້ນຈັກອົບຮົມສັ່ງສອນສິດໃຫ້ເກີດຄວາມເຂົ້າໃຈອັນຖືກຕ້ອງໃນເລື້ອງການອະພິບາລສິດ ຫລັກການອະພິບາລສິດໂດຍທົ່ວໄປໃນປັດຈຸບັນນີ້

1. ມີຄວາມສັມພັນໄມຕີອັນດີຕໍ່ສະມາຊິກແລະຄົນໂດຍທົ່ວໄປ ແມ້ແຕ່ຄົນແປກໜ້າກໍຕາມ
2. ອະພິບາລສິດໂດຍການນໍາພາໃຫ້ຄຣິສຈັກຈະເຣີນເຕີບໂຕແລະມີສະມາຊິກເພີ່ມຂຶ້ ນເລື້ອຍ ໆ
3. ການອະພິບາລສິດໂດຍການຮູ້ຈັກໃຫ້ການອົບຮົມສັ່ງສອນຢ່າງມີປະສິດທິພາບ
4. ໃຫ້ຄໍາແນະນໍາປຶກສາອະພິບາລສິດໂດຍການໃຫ້ຄໍາປຶກສາແກ່
   ກ. ຄົນທີ່ຕຽມຈະແຕ່ງງານ
   ຂ. ບັນຫາຂອງຄູ່ສົມຣົດ (ບັນຫາຂອງພໍ່ບ້ານແມ່ເຮືອນ)
   ຄ. ບັນຫາຄວາມແຕກແຍກຂອງຄອບຄົວ
   ງ. ບັນຫາຂອງໜຸ່ມສາວ ບັນຫາຂອງຜູ້ອະວຸດໂສ ບັນຫາຂອງເດັກນ້ອຍ ແລະອື່ນ ໆ

## ສາມ. ວິທີອະພິບາລສິດໂດຍທົ່ວໄປ

### 1. ການສ້າງມິດຕະພາບ

ວິທີນີ້ເປັນວິທີແລກທີ່ສິດຍາພິບາລທຸກຄົນຄວນໃຊ້ໃນການສ້າງຄວາມຮູ້ຈັກກັນ ແລະຄວາມສນິດສນົມກັບສະມາຊິກທຸກຄົນ ສະມາຊິກບາງຄົນອາດຈະຕ້ອງໃຊ້ເວລານານກວ່າຈະສາມາດສ້າງມິດຕະພາບທີ່ດີໄດ້ ແຕ່ສະມາຊິກສ່ວນຫລາຍຈະຍອມຮັບມິດຕະພາບຂອງສິດຍາພິບາລ ແລະຜູ້ຮັບໃຊ້ຂອງພຣະເຈົ້າໃນເວລາອັນສັ້ນ

### 2. ການໃຫ້ຄໍາໜຸນໃຈ

ສິດຍາພິບາລຈະຕ້ອງໃຫ້ຄໍາປອບປະໂລມຈິດໃຈ ແລະຄໍາໜຸນໃຈແກ່ສະມາຊິກຢູ່ສະເມີ ທັງໃນຍາມທີ່ເຂົາຕົກທຸກໄດ້ຍາກ ແລະໃນຍາມທີ່ເຂົາພົບບັນຫາຫລືມີຄວາມສັບສົນບໍ່ແນ່ໃຈໃນຊີວິດ

### 3. ການຮັບຟັງຄວາມທຸກແລະຄວາມຮູ້ສຶກຜິດບາບຂອງສະມາຊິກ

ສະມາຊິກສ່ວນຫລາຍມີຄວາມໄວ້ວາງໃຈໃນຕົວສິດຍາພິບາລ ແລະຜູ້ຮັບໃຊ້ຂອງພຣະເຈົ້າວ່າເປັນຕົວແທນຂອງພຣະເຈົ້າ ເປັນບຸກຄົນທີ່ເຂົາສາມາດເປີດເຜີຍຄວາມລັບຕ່າງ ໆ ທີ່ຢູ່ໃນຈິດໃຈຂອງເຂົາໄດ້ ໂດຍບໍ່ຢ້ານວ່າ ສິດຍາພິບາລຈະນໍາຄວາມລັບຂອງເຂົາໄປເປີດເຜີຍໃຫ້ຄົນອື່ນຟັງ ສິດຍາພິບາລຈຶ່ງທໍາໜ້າທີ່ຮັບຟັງຄວາມທຸກແລະຄໍາສາຣະພາບຜິດບາບ ທີ່ຢູ່ໃນຈິດໃຈຂອງສະມາຊິກເປັນຈໍານວນຫລາຍຢູ່ສເມີ ຊຶ່ງເປັນການສະແດງເຖິງຄວາມຮັກຄວາມຫ່ວງໃຍ

### 4. ການເປັນຄຣູຜູ້ສອນ

ສິດຍາພິບາລແລະຜູ້ຮັບໃຊ້ທຸກຄົນມີໜ້າທີ່ ໆ ສໍາຄັນທີ່ສຸດ ແມ່ນການສອນໃຫ້ສະມາຊິກຮູ້ຈັກພຣະວັຈນະຂອງພຣະເຈົ້າ ແລະກະຕຸ້ນເຕືອນໃຫ້ພວກເຂົາປະຕິບັດຕາມຢ່າງສມ່ຳສເມີທຸກວັນ

ສິດຍາພິບາລຍັງເປັນຜູ້ສອນເຖິງມາດຕະຖານຂອງການດຳເນີນຊີວິດຄຣິສຕຽນ ໃຫ້ແກ່ສະມາຊິກຂອງຄຣິສຈັກອີກດ້ວຍ

5. <u>ການໃຫ້ຄຳແນະນຳປຶກສາໂດຍຕົງ</u>

ທຸກຄັ້ງທີ່ມີການອະພິບາລສິດນັ້ນເປັນການໃຫ້ຄຳແນະນຳປຶກສາໂດຍຕົງ ເພື່ອຊ່ວຍເຫລືອສະມາຊິກໃນການແກ້ໄຂບັນຫາຕ່າງ ໆ ທີ່ໄດ້ເກີດຂຶ້ນແລ້ວ ຫລືທີ່ກຳລັງຈະເກີດຂຶ້ນໃນອານາຄົດກໍຕາມ ຊຶ່ງສິດຍາພິບາລອາດເຮັດໄດ້ 3 ວິທີດ້ວຍກັນຄື

ກ. **ການໃຫ້ຄຳປຶກສາແບບງ່າຍ ໆ** ຊຶ່ງບໍ່ຕ້ອງອາສັຍການກະຕຽມຕົວປານໃດ ໂດຍອາສັຍພຣະຄຣິສທັມຄັມພີໂດຍກົງ ຫລືໂດຍໃຊ້ຫລັກການຕາມທັມມະຊາດຕາມຄຳແນະນຳໂບລານທີ່ບໍ່ຂັດກັບຄຳສອນຂອງພຣະຄຣິສທັມຄັມພີ

ຂ. **ການໃຊ້ວິທີຈິດບຳບັດ** (Psychotheraphy) ຊຶ່ງຕ້ອງອາສັຍການວາງແຜນແລະການຕຽມຕົວເປັນຢ່າງດີ ແລະສິດຍາພິບາລຫລືຜູ້ຮັບໃຊ້ຈະຕ້ອງໄດ້ຜ່ານການອົບຮົມ ມີຄວາມຮູ້ແລະປະສົບການໃນງານດ້ານນີ້ຢ່າງພຽງພໍ

ຄ. **ການແນະນຳສະມາຊິກໃຫ້ໄປຫາບຸກຄົນທີ່ມີຄວາມຊຳນານເປັນພິເສດໃນບັນຫາສະເພາະເຣື້ອງຂອງສະມາຊິກ** ເພາະມີບັນຫາຫລາຍເຣື້ອງຫຍຸ້ງຍາກແລະສັບສົນທາງຈິດ ຊຶ່ງເກີນຄວາມສາມາດຂອງສິດຍາພິບາລທີ່ຈະຊ່ວຍເຫລືອໄດ້ຢ່າງຖືກຕ້ອງແລະເໝາະສົມ ໃນກໍຣະນີເຊັ່ນນີ້ ສິດຍາພິບາລກໍສົມຄວນທີ່ຈະແນະນຳສະມາຊິກໄປພົບກັບບຸກຄົນອື່ນທີ່ມີຄວາມສາມາດຊຳນານເປັນພິເສດໃນເຣື້ອງເຫລົ່ານັ້ນ

ສົ່ງ 8/25/99

# ບົດທີ 6
# ການອະພິບາລສມາຊິກໃໝ່

ການເປັນສມາຊິກໃໝ່ຂອງຄຣິສຈັກ ເປັນການເຂົ້າສ່ວນໃນພຣະກາຍຂອງພຣະຄຣິສ ເພາະວ່າພຣະກາຍຂອງພຣະຄຣິສ ແມ່ນຄຣິສຈັກ (ກຊ 1:24) ດ້ວຍເຫດນີ້ເອງ ເມື່ອຜູ້ນຶ່ງຜູ້ໃດມີຄວາມເຊື່ອສັດທາໂດຍມອບຊີວິດໄວ້ໃນຄວາມຄຸ້ມຄອງຂອງອົງພຣະເຢຊູຄຣິສ ເຂົາຜູ້ນັ້ນກໍເປັນຄົນຂອງພຣະເຈົ້າ ຢູ່ໃນຄອບຄົວຂອງພຣະອົງ (ອຟ 2:19) ແລະເຂົາຜູ້ນັ້ນໄດ້ເຂົ້າເປັນສມາຊິກຂອງຄຣິສຈັກໂດຍພຣະໂລຫິດ ອັນເປັນສາຍເລືອດແຫ່ງພັນທະສັນຍາ ເພາະເຂົາໄດ້ເຂົ້າຮ່ວມໃນພຣະກາຍຂອງພຣະຄຣິສ ແລະຕ່າງກໍເປັນອະວັຍວະຂອງພຣະກາຍນັ້ນ (1 ກທ 12:27)

## ນຶ່ງ. ຄວາມໝາຍຂອງສມາຊິກໃໝ່

ເມື່ອເຮົາເອີ້ນຜູ້ນຶ່ງຜູ້ໃດເປັນ "ສມາຊິກໃໝ່ຂອງຄຣິສຈັກ" ເຮົາໝາຍເຖິງຜູ້ໃດ? ເຮົາມີຄວາມເຊື່ອວ່າ ສຳລັບພຣະເຈົ້າແລ້ວ ບໍ່ມີຜູ້ໃດທີ່ເປັນຄົນໃໝ່ ຫລືເປັນຄົນແປກໜ້າ ເພາະພຣະເຈົ້າໄດ້ເລືອກເຮົາເປັນໄພ່ພົນຂອງພຣະອົງໂດຍການເສັຍສລະຊີວິດຂອງພຣະເຢຊູຄຣິສ (ຢຮ 10:15-18) ດັ່ງນັ້ນຜູ້ນຶ່ງຜູ້ໃດຮັບເຊື່ອຕ້ອນຮັບເອົາພຣະເຢຊູຄຣິສເປັນພຣະຜູ້ຊ່ວຍໃຫ້ຣອດພົ້ນນັ້ນ ເປັນພາກສ່ວນຂອງການເລືອກສັນຂອງພຣະເຈົ້າ ພຣະອົງຊົງເລືອກເຮົາທັງຫລາຍໃຫ້ເປັນປະຊາກອນຂອງພຣະອົງໄວ້ຕັ້ງແຕ່ກ່ອນທີ່ຈະຊົງວາງຮາກສ້າງໂລກ (ອຟ 1:4) ດ້ວຍເຫດນີ້ພຣະເຈົ້າຈຶ່ງເປັນເຈົ້າຂອງ ຫລືມີກັມມະສິດເໜືອເຮົາ ພຣະອົງມີພຣະປະສົງໃຊ້ເຮົາໃນວຽກງານຂອງພຣະອົງ ໂດຍທາງຄຣິສຈັກຂອງພຣະອົງໃນໂລກນີ້ ດ້ວຍເຫດນີ້ຜູ້ເຊື່ອໃໝ່ຈຶ່ງເປັນຜູ້ໃໝ່ສຳລັບຄຣິສຈັກໃນໂລກນີ້ ແລະໃໝ່ສຳລັບຕົວຂອງຜູ້ກ່ຽວ ທີ່ຄຣິສຈັກຈະຕ້ອງລ້ຽງດູເບິ່ງແຍງ ໂດຍສະເພາະຢ່າງຍິ່ງຊີວິດທາງດ້ານຝ່າຍຈິດວິນຍານໃຫ້ໃຫຍ່ຂຶ້ນ ໃນເວລາດຽວກັນຕົວຜູ້ເຊື່ອເອງກໍກຳລັງເຂົ້າສູ່ສະພາບໃໝ່ປ່ຽນຊີວິດໃໝ່ແລ້ວ (Transformed) ທີ່ຕ້ອງການຄຳແນະນຳເພື່ອໃຫ້ຮູ້ຈັກການດຳເນີນຊີວິດໃໝ່ທີ່ຖືກຕ້ອງ ແລະເໝາະສົມກັບສະພາບໃໝ່ທີ່ພຣະເຈົ້າໄດ້ຊົງໂພດປະທານໃຫ້

## ສອງ. ການລ້ຽງດູເບິ່ງແຍງສມາຊິກໃໝ່

ເມື່ອຜູ້ນຶ່ງຜູ້ໃດໄດ້ຕ້ອນຮັບພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ຣອດຂອງເຂົາແລ້ວ ທາງດ້ານຝ່າຍຈິດວິນຍານຂອງຜູ້ນັ້ນເຂົາໄດ້ຮັບຄວາມຣອດພົ້ນແລ້ວ (ຣມ 10:9, ຢຮ: 5:24) ການຮັບບັພຕິສມາຕາມພຣະມະຫາບັນຊາຂອງພຣະເຢຊູຄຣິສ (ມທ 28:19-20) ເປັນຂັ້ນຕອນທີ່ຜູ້ເຊື່ອຕ້ອງປະຕິບັດຕາມມາ ແຕ່ກ່ອນທີ່ຈະເຂົ້າສູ່ພິທີບັພຕິສມາເປັນສມາຊິກສົມບູນຂອງຄຣິສຈັກທ້ອງຖິ່ນ ຄຣິສຈັກສ່ວນຫລາຍມີການອົບຮົມສຳລັບສມາຊິກໃໝ່ ເປັນຣະຍະເວລາ 6 ອາທິດບ້າງ 3 ເດືອນບ້າງ ຫລືບາງເທື່ອເປັນເວລາ 6 ເດືອນ ແລ້ວແຕ່ສະຖານະການແລະຄວາມເໝາະສົມຂອງຄຣິສ

ຈັກແລະຜູ້ກ່ຽວ ການອົບຮົມບາງເທື່ອຈັດເປັນຫ້ອງຮຽນ ບາງເທື່ອເຮັດເປັນການສ່ວນຕົວ ທັງນີ້ເພື່ອໃຫ້ຜູ້ເປັນຄຣິສຕຽນໃໝ່ໄດ້ມີຄວາມຮູ້ຄວາມເຂົ້າໃນສະພາບການຖານະໃໝ່ ທີ່ເຂົາຈະຕ້ອງມີພາກສ່ວນຮ່ວມໃນຊີວິດຂອງຄຣິສຈັກທ້ອງຖິ່ນ ທີ່ພຣະເຢຊູໄດ້ມອບໝາຍໃຫ້ມີສ່ວນຮັບຜິດຊອບ ແລະໃນເວລາດຽວກັນເຂົາຈະໄດ້ຮັບການອະພິບາລລ້ຽງດູຊີວິດຝ່າຍຈິດວິນຍານສຳລັບຄຣິສຈັກ ເພື່ອໃຫ້ເຂົາ *"ຈະເຣີນຂຶ້ນໃນພຣະຄຸນແລະໃນຄວາມຮູ້ ຊຶ່ງມາຈາກພຣະເຢຊູຄຣິສອົງພຣະຜູ້ເປັນເຈົ້າ ພຣະຜູ້ໂຜດໃຫ້ພົ້ນຂອງເຮົາທັງຫລາຍ"* (2 ປຕ 3:18) ໃນຄຣິສຈັກມີຜູ້ທີ່ໄດ້ຮັບຂອງພຣະຣາຊທານໃນການຮັບໃຊ້ຮ່ວມກັນ *"ເພື່ອຈັດຕຽມໄພ່ພົນພຣະຄຣິສໃຫ້ຈະເຣີນຂຶ້ນ ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນໍ້າໜຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງເລື່ອງພຣະບຸດຂອງພຣະເຈົ້າ ຈົນກວ່າເຮົາຈະເປັນຄົນໃໝ່ເຕັມສ່ວນ ຄືເຕັມເຖິງຂນາດຄວາມສົມບູນຂອງພຣະຄຣິສ"* (ອຟ 4:12-13)

ດັ່ງນັ້ນ "ການອະພິບາລສມາຊິກໃໝ່" ຈຶ່ງເປັນສ່ວນທີ່ສຳຄັນທີ່ຈະນຳສມາຊິກໃໝ່ໃຫ້ຕິດແທກກັບຄຣິສຈັກ ແລະເລີ້ມມີສັມພັນທະພາບກັບສມາຊິກຜູ້ອື່ນ ໃນການມີຊີວິດຄຣິສຕຽນຮ່ວມກັບຜູ້ອື່ນ ແລະຮັບໃຊ້ພຣະເຈົ້າຮ່ວມກັບຜູ້ອື່ນ ເພາະວ່າຖ້າຄຣິສຈັກບໍ່ໄດ້ໃຫ້ການອະພິບາລລ້ຽງດູແລະໃຫ້ຄຳແນະນຳທີ່ຖືກຕ້ອງແລ້ວ ກໍຈະເຮັດໃຫ້ຜູ້ເຊື່ອໃໝ່ສັບສົນ ການໃຫ້ການແນະນຳຕັ້ງແຕ່ຊ່ວຍໃຫ້ຜູ້ເຊື່ອໃໝ່ຮູ້ຈັກດຳເນີນຊີວິດຄຣິສຕຽນແລະຮັບຜິດຊອບໃນແຕ່ລະຂັ້ນຊ່ວຍໃຫ້ເຂົາເຂົ້າໃຈໃນຄວາມໝາຍຂອງສາສນາພິທີທີ່ເຂົາເຂົ້າປະກອບສ່ວນ ຢ່າງມີຄວາມໝາຍ

ເມື່ອເປັນດັ່ງນັ້ນແລ້ວ ທ່ານອາດຖາມວ່າແມ່ນໃຜຈະເປັນຜູ້ຮັບຜິດຊອບໃນການອະພິບາລລ້ຽງດູ ບຸກຄົນທີ່ມີສ່ວນກ່ຽວຂ້ອງໃນວຽກນີ້ ອາດຈະເປັນຄົນໝົດທັງຄຣິສຈັກກໍວ່າໄດ້ ເພາະຄົນໃໝ່ຜູ້ນີ້ງເຂົ້າປະກອບສ່ວນໃນກາຍດຽວຄືຄຣິສຈັກ ດັ່ງນັ້ນຄົນທັງຄຣິສຈັກສົມຄວນຕ້ອງມີສ່ວນຮ່ວມໃນການອະພິບາລລ້ຽງດູແລະຮັບຕ້ອນເອົາສມາຊິກໃໝ່ເຂົ້າໃນຄອບຄົວຂອງພຣະເຈົ້າ ແຕ່ບໍ່ໄດ້ໝາຍຄວາມວ່າທຸກຄົນຈະເຂົ້າສ່ວນລ້ຽງດູເບິ່ງແຍງໃນເວລາດຽວກັນ ແຕ່ໝາຍຄວາມວ່າທຸກຄົນໃນຄຣິສຈັກສົມຄວນມີສ່ວນໃນການທັກທາຍປາສັຍ ຖາມຂ່າວ ແລະຜູກມິດໄມຕຣີ ສ່ວນການແນະນຳແລະການອົບຮົມສິດສອນ ເປັນພາກສ່ວນສຳຄັນແລະຄວາມຮັບຜິດຊອບຂອງບຸກຄົນດັ່ງຕໍ່ໄປນີ້

**ກ. ສິດຍາພິບາລ (Pastor)**

ເມື່ອມີຜູ້ເຂົ້າເປັນສມາຊິກໃໝ່ ສິດຍາພິບາລເປັນບຸກຄົນສຳຄັນທີ່ຈະຕ້ອງເຂົ້າພົວພັນ ຄືກັບພໍ່ເຮືອນທີ່ມີສມາຊິກໃໝ່ເກີດຂຶ້ນໃນຄອບຄົວ ທີ່ສິດຍາພິບາລຈະຕ້ອງສ້າງສັມພັນທະພາບ ແລະໃຫ້ຂໍ້ແນະນຳຕ່າງ ໆ ອັນກ່ຽວຂ້ອງກັບຄວາມເຊື່ອແລະກົດຣະບຽບຂອງຄຣິສຈັກ ຕລອດຈົນການຈັດຕຽມໝາຍກຳໜົດການສຳລັບພິທີບັພຕິສມາ ເມື່ອເຖິງເວລາອັນເໝາະສົມ ຜູ້ນັ້ງຜູ້ໃດຈະຮັບບັພຕິສມາເຂົ້າເປັນສມາຊິກສົມບູນຂອງຄຣິສຈັກນັ້ນ ຈຳເປັນຕ້ອງມີການແນະນຳອົບຮົມເສັຍກ່ອນທີ່ຈະເຂົ້າຮັບບັພຕິສມາ ທີ່ເຮັດແນວນີ້ບໍ່ແມ່ນເປັນການຍືດເວລາຂອງຄວາມຣອດພົ້ນຂອງຜູ້ກ່ຽວໃຫ້ຍາວອອກໄປ ທີ່ຈິງແລ້ວ ຄວາມຣອດພົ້ນນັ້ນເປັນຂອງຜູ້ກ່ຽວໃນເວລາທີ່ເຂົາໄດ້ສາຣະພາບບາບ ແລະ ຕ້ອນຮັບເອົາພຣະເຢຊູຄຣິສເປັນອົງພຣະຜູ້ເປັນເຈົ້າ ການແນະນຳອົບຮົມລ້ຽງດູເປັນພາກສ່ວນຂອງການອະພິບາລ ທີ່ມຸ່ງໝາຍຊ່ວຍໃຫ້ສມາຊິກໃໝ່ຮູ້ຈັກດຳເນີນຊີວິດຄຣິສຕຽນທີ່ຖືກຕ້ອງ ຮູ້ຈັກພາຣະໜ້າທີ່ຄວາມຮັບຜິດຊອບ ແລະການມີພາກສ່ວນຮ່ວມສາມັກຄີທັມແລະຮັບໃຊ້ຮ່ວມກັບພີ່ນ້ອງໃນຄຣິສຈັກດຽວກັນ ການໃຫ້ຄຳແນະນຳອາດເຮັດໄດ້ເປັນການສ່ວນຕົວ ແລະເປັນກຸ່ມຫລືຫ້ອງຮຽນ ແຕ່ເຖິງແມ່ນວ່າຈະໃຫ້ການອົບຮົມເປັນກຸ່ມກໍຍັງມີຄວາມສຳຄັນ ທີ່ສິດຍາພິບາລຕ້ອງຫາໂອກາດເວົ້າເປັນການສ່ວນຕົວ ເພື່ອໃຫ້ຮູ້ແຈ້ງແນ່ໃຈວ່າຜູ້ກ່ຽວໄດ້ຮັບຄວາມຣອດພົ້ນຢ່າງແມ່ນແທ້ແລະຖືກຕ້ອງ ນີ້ເປັນສິ່ງສຳຄັນທີ່ຜູ້ເປັນສມາຊິກໃໝ່ຕ້ອງມີຈຸດເລີ້ມຕົ້ນຊີວິດຄຣິສຕຽນຂອງເຂົາທີ່ຖືກຕ້ອງ

Deacon

### ຂ. ຜູ້ປົວລະບັດ (Decon)

ສິດຍາພິບາລເປັນຜູ້ທີ່ເປັນຫລັກສຳຄັນໃນການອະພິບາລລ້ຽງດູສມາຊິກໃໝ່ ແຕ່ວຽກການໜ້າທີ່ຮັບຜິດຊອບຂອງທ່ານແນວອື່ນ ໆ ນັ້ນມີຫລາຍແນວ ທີ່ຕ້ອງຮັບໃຊ້ໃນຄຣິສຈັກ ດັ່ງນັ້ນມີຄວາມຈຳເປັນທີ່ສິດຍາພິບາລຕ້ອງມອບໝາຍໃຫ້ຜູ້ປົວລະບັດຜູ້ນຶ່ງຜູ້ໃດເປັນຜູ້ຮ່ວມປະກອບສ່ວນໃນການເບິ່ງແຍງ ຊຶ່ງຜູ້ປົວລະບັດແຕ່ລະທ່ານເປັນຜູ້ທີ່ໄດ້ຮັບພາຣະໜ້າທີ່ໃນການເບິ່ງແຍງຢ້ຽມຢາມໂດຍກົງຕັ້ງແຕ່ຕົ້ນທີ່ໄດ້ເຂົ້າຮັບຕຳແໜ່ງໜ້າທີ່ ຊຶ່ງເປັນໄປຕາມຫລັກການບໍຣິຫານຂອງຄຣິສຈັກ ເມື່ອຜູ້ໃດໄດ້ຮັບເລືອກເປັນຜູ້ປົວລະບັດໃຫ້ຮັບຜິດຊອບວຽກການຮັບໃຊ້ ກໍຈະຕ້ອງມີການມອບໝາຍຄອບຄົວຂອງສມາຊິກຈຳນວນນຶ່ງໃຫ້ເບິ່ງແຍງ ເພື່ອໃຫ້ເປັນຜູ້ປະກອບສ່ວນຮ່ວມໃນການທຳໜ້າທີ່ອະພິບາລລ້ຽງດູສມາຊິກ ຜູ້ປົວລະບັດໃນຄຣິສຈັກສ່ວນຫລາຍໄດ້ປ່ອຍປະລະເລີຍໜ້າທີ່ນີ້ ກັບໄປສົນໃຈໃນການໃຊ້ສິດທິອຳນາດໃນການປົກຄອງ ຫລືການແລ່ນວຽກແນວອື່ນໃນວັນອາທິດ ແທນການວຽກຢ້ຽມຢາມລ້ຽງດູ ຊຶ່ງມີຄວາມສຳຄັນຫລາຍ ສິດຍາພິບາລສົມຄວນຈະແນະນຳຕົວຜູ້ປົວລະບັດທີ່ຈະມີສ່ວນເບິ່ງແຍງສມາຊິກໃໝ່ໃຫ້ຮູ້ຈັກຢ່າງເປັນທາງການ ເພື່ອເປັນຈຸດເລີ້ມຕົ້ນຂອງທັງສອງຝ່າຍໃນການຜູກສັມພັນທະພາບກັນ

### ຄ. ຫ້ອງຮຽນວັນອາທິດ (Sunday School)

ຫ້ອງຮຽນວັນອາທິດ ເປັນພາກສ່ວນທີ່ສມາຊິກໃໝ່ຈະເຂົ້າຮ່ວມ ແລະເຂົ້າສນິດເປັນໝູ່ສຫາຍກັບສມາຊິກອື່ນໄດ້ດີທີ່ສຸດ ເປັນການຍາກທີ່ຄົນ ໆ ນຶ່ງຈະສາມາດເຂົ້າແທກກັບຄົນໝົດທັງກອງປະຊຸມໃນບັດດຽວ ການເຂົ້າກັບຄົນກຸ່ມນ້ອຍເປັນການງ່າຍ ໂດຍສະເພາະຢ່າງຍິ່ງຫ້ອງຮຽນວັນອາທິດທີ່ເປັນຄົນໃນຣະດັບດຽວກັນອາຍຸວັຍທີ່ໃກ້ຄຽງກັນ ສ່ວນປະກອບສຳຄັນທີ່ຈະຊ່ວຍອະພິບາລລ້ຽງດູໃຫ້ສມາຊິກໃໝ່ໃຫ້ໃຫຍ່ຂຶ້ນແມ່ນໃນຫ້ອງຮຽນວັນອາທິດ ແມ່ນບົດຮຽນຄຳສອນຈາກພຣະວັຈນະຂອງພຣະເຈົ້າ ທີ່ນາຍຄຣູຜູ້ສອນຕ້ອງມີການຕຽມຕົວຢ່າງດີ ແລະຄວາມຮັກແພງຂອງໝູ່ສຫາຍໃນຫ້ອງຮຽນວັນອາທິດ ຊຶ່ງຄຣິສຈັກສ່ວນຫລາຍບໍ່ໄດ້ເຂົ້າໃຈເຖິງຄວາມສຳຄັນນີ້ ການສອນທີ່ຂາດປະສິດທິພາບແລະຣິດເດດແຫ່ງພຣະວັນະຂອງພຣະເຈົ້າ ແລະຂາດມິຕພາບຂອງສມາຊິກໃນຫ້ອງຮຽນວັນອາທິດ ເຮັດໃຫ້ການຮຽນບໍ່ໜ້າສົນໃຈແລະບໍ່ສາມາດດຶງດູດໃຈຂອງຜູ້ຮຽນ ເປັນເຫດໃຫ້ຄົນມາສາຍເພາະບໍ່ເຫັນສ່ວນດີຂອງຫ້ອງຮຽນວັນອາທິດ ສິ່ງເຫລົ່ານີ້ເປັນສິ່ງທີ່ພວກເຮົາສົມຄວນຮ່ວມມືກັນປັບປຸງກັນທຸກຝ່າຍ ເລີ້ມຈາກການອະທິຖານໄຫວ້ວອນສຳລັບນາຍຄຣູໃຫ້ມີຄຳສອນທີ່ມີປະສິດທິພາບ ແລະປະກອບດ້ວຍຣິດອຳນາດຂອງພຣະເຈົ້າ ສມາຊິກໃນຫ້ອງຮຽນຄວນມີສ່ວນຜູກພັນມິຕພາບໃຫ້ໃກ້ຊິດ ແລະມີຈິດໃຈຮັບຕ້ອນຜູ້ມາໃໝ່ ໂດຍມີໃຈສຳນຶກວ່າການເຮັດເຊັ່ນນີ້ ເປັນສ່ວນນຶ່ງທີ່ຕົນມີພາກສ່ວນໃນການຮັບໃຊ້ພຣະເຈົ້າ ແລະມີສ່ວນຮ່ວມໃນການເປັນພະຍານນຳວິນຍານມາເຖິງພຣະຄຣິສ ດັ່ງນັ້ນການສ້າງສັມພັນທະພາບ ແມ່ນທັມມະຊາດຕົວສຳຄັນທີ່ຜູກພັນຈິດໃຈຂອງຄົນເຂົ້າໄວ້ດ້ວຍກັນໄດ້ ຫ້ອງຮຽນວັນອາທິດເປັນຄົນກຸ່ມນ້ອຍທີ່ຈະສາມາດມີສັມພັນທະພາບກັນໄດ້ຢ່າງທົ່ວເຖິງ ດ້ວຍເຫດນີ້ພວກເຮົາທີ່ເປັນນັກຮຽນຫ້ອງຮຽນວັນອາທິດ ສົມຄວນມີຄວາມເຂົ້າໃຈວ່າ ເຮົາເປັນສ່ວນນຶ່ງທີ່ສາມາດຊ່ວຍໃນການອະພິບາລສມາຊິກໃໝ່

## ສາມ. ຂໍ້ແນະນຳໃນການອະພິບາລສມາຊິກໃໝ່

ເຮົາເຫັນໄດ້ວ່າ **ການອະພິບາລສມາຊິກໃໝ່** ຈະຕ້ອງປະກອບດ້ວຍບຸກຄົນຫລາຍຝ່າຍທີ່ເປັນສ່ວນປະກອບໃນການອະພິບາລລ້ຽງດູສມາຊິກໃໝ່ ອັນເປັນສິ່ງທີ່ພຣະວັຈນະຂອງພຣະເຈົ້າໄດ້ສອນໄວ້ວ່າ *"ທີ່ທ່ານທັງຫລາຍໄດ້ຊຳຣະຈິດໃຈຂອງຕົນໃຫ້ບໍຣິສຸດດ້ວຍຄວາມເຊື່ອຟັງຄວາມຈິງ ຈົນມີຄວາມຮັກພວກພີ່ນ້ອງຢ່າງຈິງໃຈ ພວກທ່ານຈົ່ງຮັກ*

*ຊຶ່ງກັນແລະກັນດ້ວຍເຕັມໃຈ"* (1 ປຕ 1:22) ຄວາມຮັກຂອງພຣະຄຣິສເປັນສິ່ງທີ່ໃຫ້ທຸກຄົນໂຮມເຂົ້າຫາກັນໃນການຮັບໃຊ້ແລະມີສ່ວນຮ່ວມໃນການລ້ຽງດູເບິ່ງແຍງ ການອະພິບາລສມາຊິກໃໝ່ເປັນສ່ວນທີ່ມີຄວາມຈໍາເປັນຫລາຍກວ່າສມາຊິກໂດຍທົ່ວໄປ ເພາະຜູ້ທີ່ເຂົ້າເປັນສມາຊິກໃຫມ່ມີຫລາຍສິ່ງຫລາຍແນວທີ່ບໍ່ຮູ້ຈັກ ທີ່ພວກເຮົາຕ້ອງເອົາໃຈລ້ຽງດູເບິ່ງແຍງ ແລະເລີ້ມຕົ້ນໃຫ້ຖືກຕ້ອງ ທ່ານອາດມີແນວຄວາມຄິດຖາມວ່າ ສມາຊິກໃຫມ່ມີສິ່ງໃດທີ່ຈໍາເປັນຕ້ອງການຄໍາແນະນໍາໃຫ້ເຂົາຮູ້ຈັກແນວໃດບ້າງ?

**ກ. ການດໍາເນີນຊີວິດຄຣິສຕຽນ**

ຄຣິສຕຽນຈະຕ້ອງດໍາເນີນຊີວິດແນວໃດຕໍ່ສັງຄົມທີ່ຢູ່ອ້ອມຂ້າງເຂົາ ເປັນສັງຄົມທີ່ເຊື່ອໃນສາສນາທີ່ແຕກຕ່າງກັນ ສັງຄົມທີ່ມີພາສາແລະຮີດຄອງທີ່ແຕກຕ່າງກັນ ໂດຍສະເພາະຢ່າງຍິ່ງ ສັງຄົມໃນປັດຈຸບັນນີ້ທີ່ມີການປ່ຽນແປງຢູ່ຕລອດເວລາ ເຮົາບໍ່ສາມາດເຂົ້າໃຈແລະຮູ້ຈັກໄດ້ໝົດທຸກແນວ ຄໍາຖາມນີ້ເປັນສິ່ງທີ່ຢູ່ໃນຈິດໃຈຂອງຜູ້ເຊື່ອໃໝ່ສເມີ ມີຄວາມຈໍາເປັນສໍາລັບຜູ້ທີ່ມີສ່ວນຮ່ວມໃນການອະພິບາລສິດຈະຕ້ອງມີຄໍາແນະນໍາ ຈາກປະສົບການຄວາມເຊື່ອທີ່ໄດ້ຮັບແສງສວ່າງຈາກພຣະວັຈນະຂອງພຣະເຈົ້າ ແລະປະສົບການຊີວິດທີ່ຕົນໄດ້ເຄີຍດໍາເນີນຊີວິດຮ່ວມກັບພຣະເຢຊູຄຣິສ ເພາະຄໍາຕອບຫລືຄໍາແນະນໍາຈາກປະສົບການຊີວິດ ທີ່ມີພື້ນຖານຢູ່ໃນພຣະວັຈນະຂອງພຣະເຈົ້າ ແລະສັມພັນທະພາບຮ່ວມກັບພຣະເຢຊູຄຣິສເປັນສິ່ງທີ່ມີຄຸນຄ່າແກ່ຄຣິສຕຽນໃໝ່ ເປັນຄວາມຈິງທີ່ໜູນຈິດໜູນໃຈໃຫ້ເກີດພລັງພາຍໃນຂຶ້ນ ການມີຊີວິດຄຣິສຕຽນແລະການດໍາເນີນຊີວິດຄຣິສຕຽນບໍ່ແມ່ນເປັນການຝືນໃຈ ທີ່ເຮົາຈະໃຫ້ຄໍາແນະນໍາແຕ່ຂໍ້ພຣະທັມແລ້ວບັງຄັບໃຫ້ໄປປະຕິບັດຕາມ ແຕ່ການດໍາເນີນຊີວິດຄຣິສຕຽນເປັນການສໍາແດງອອກເຖິງນິສັຍໃຈຄໍຄວາມປະພຶດແລະລັກສນະພິເສດອັນເປັນຕົວຈິງຂອງຄຣິສຕຽນ ທີ່ຜູ້ເຊື່ອນັ້ນໄດ້ປ່ຽນໃໝ່ແລ້ວ (Transformed) ຜູ້ເຊື່ອຈໍາເປັນຕ້ອງມີພຣະເຢຊູຄຣິສໃນຊີວິດຂອງເຂົາຈິງ ໆ ດັ່ງທີ່ທ່ານໂປໂລກ່າວວ່າ ***"ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກໍາລັງເຮົາ"*** (ຟປ 4:13) ຄໍາແນະນໍາຫລືຄໍາສັ່ງສອນທີ່ເກີດຈາກປະສົບກັບພຣະວັຈນະ ແລະປະສົບການກັບພຣະເຢຊູຄຣິສເປັນສິ່ງທີ່ຊ່ວຍໃຫ້ຄຣິສຕຽນໃໝ່ເຫັນຄວາມເປັນຈິງໃນການດໍາເນີນຊີວິດໄດ້ຊັດແຈ້ງຍິ່ງຂຶ້ນ

ການອະພິບາລສມາຊິກໃໝ່ໃຫ້ດໍາເນີນຊີວິດແບບຄຣິສຕຽນ ກ່ອນອື່ນເຮົາຕ້ອງຮຽນຮູ້ຈັກວ່າ ຄຣິສຕຽນແມ່ນຜູ້ໃດ ຄໍາວ່າ **"ຄຣິສຕຽນ"** ເປັນຄໍາຊຶ່ງອອກສຽງຕາມພາສາອັງກິດ ຊຶ່ງມີຄວາມໝາຍເຖິງ ກຸ່ມຊົນທີ່ມີຄວາມເຊື່ອຕິດຕາມເປັນສາວົກຂອງພຣະຄຣິສຕ໌ (Christ) ຜູ້ໃດທີ່ບອກວ່າຕົວເປັນຄຣິສຕຽນ ແມ່ນຜູ້ທີ່ມີສັມພັນທະພາບກັບພຣະຄຣິສ ຮັບຄວາມຣອດພົ້ນຈາກພຣະຄຣິສຜູ້ຕາຍໄຖ່ບາບຂອງເຂົາເທິງໄມ້ກາງເຂນ ແລະມີຄໍາໝັ້ນສັນຍາຈະຕິດຕາມເປັນສາວົກຂອງພຣະຄຣິສຕລອດຊີວິດຂອງເຂົາ ສັມພັນທະພາບທີ່ເຮົາມີກັບພຣະຄຣິສນີ້ບໍ່ແມ່ນເປັນການຊົ່ວຄາວເທົ່ານັ້ນ ແຕ່ເປັນສັມພັນທະພາບທີ່ເປັນຄໍາໝັ້ນສັນຍາອັນຖາວອນຕລອດໄປ ສັມພັນທະພາບທີ່ກ່າວເຖິງນີ້ມີສ່ວນປະກອບສໍາຄັນສອງປະການດັ່ງນີ້

1. **ຊີວິດເຂົ້າສນິດກັບພຣະຄຣິສ** ແມ່ນຊີວິດຂອງພຣະຄຣິສກາຍເປັນຊີວິດຂອງຜູ້ທີ່ຕິດຕາມພຣະອົງ ຊຶ່ງໄດ້ບັງເກີດໃໝ່ແລ້ວ (ຢຮ 3:3) ແລະພຣະອົງຈະເຮັດໃຫ້ຜູ້ນັ້ນໄດ້ຮັບສ່ວນໃນສະພາບໃໝ່ຂອງພຣະອົງ (2 ປຕ 1:4) ພຣະຄຣິສຕ່າງຫາກຊົງມີຊີວິດຢູ່ໃນເຂົາ (ຄຕ 2:20) ແລະເຂົາຈະໃຫຍ່ຂຶ້ນທຸກຢ່າງສູ່ພຣະອົງຜູ້ເປັນສີສະ ຄືພຣະເຢຊູຄຣິສຊົງເປັນຊີວິດຂອງເຂົາ (ອຟ 4:15)

2. **ເຂົ້າສນິດໃນຄວາມຮັກຂອງພຣະຄຣິສ** ແມ່ນຄຣິສຕຽນຮັກພຣະເຢຊູຄຣິສເພາະພຣະອົງຮັກພວກເຮົາກ່ອນ (1 ຢຮ 4:19) ຄວາມຮັກສະແດງໃຫ້ເຫັນເຖິງຄວາມຈົງຮັກພັກດີ ຄຣິສຕຽນຈຶ່ງຟັງແລະປະຕິບັດຕາມພຣະປະສົງຂອງພຣະຄຣິສ ແລະມີຊີວິດຢູ່ເພື່ອພຣະຄຣິສ (ຟປ 1:21)

ສັມພັນທະພາບທີ່ຄຣິສຕຽນມີໃນພຣະເຢຊູຄຣິສນັ້ນ ໄດ້ຮັບການທົດສົງ (ຊະໂລມ ເຈີມ) ແຕ່ງຕັ້ງໄວ້ສຳລັບພຣະເຈົ້າ ໃນພຣະຄຣິສທັມຄັມພີພາກພັນທະສັນຍາເດີມ **"ການທົດສົງ"** ເປັນສັນຍາລັກຂອງການແຕ່ງຕັ້ງຫລືສະຖາປະນາຜູ້ປະກາດພຣະທັມ ປະໂຣຫິດ ແລະກະສັດ ໂດຍໃຊ້ນ້ຳມັນທົດສົງ ນ້ຳມັນນັ້ນເປັນເຄື່ອງໝາຍສັນຍາລັກໝາຍເຖິງພຣະວິນຍານບໍຣິສຸດ ຊຶ່ງມີຄວາມໝາຍດຽວກັບທີ່ພຣະບິດາຊົງທົດສົງພຣະເຢຊູ ພຣະບຸດອົງດຽວຂອງພຣະອົງດ້ວຍພຣະວິນຍານບໍຣິສຸດ (ກຈ 10:38) ແລະພຣະບິດາຊົງທົດສົງຄຣິສຕຽນດ້ວຍພຣະວິນຍານບໍຣິສຸດຄືກັນ (2 ກທ 1:21-22) ສິ່ງເຫລົ່ານີ້ມີຄຸນຄ່າແລະຄວາມໝາຍສູງສຸດ ສັມພັນທະພາບທີ່ຄຣິສຕຽນມີໃນພຣະເຢຊູຄຣິສ ເປັນສິ່ງທີ່ຈະນຳໄປແລກກັບສິ່ງອື່ນໃດໃນໂລກນີ້ບໍ່ໄດ້ ດັ່ງນັ້ນ ການເປັນຄຣິສຕຽນຈຶ່ງໝາຍເຖິງ ການຮັບເອົາພຣະວິນຍານຂອງພຣະຄຣິສ ເປັນຜູ້ທີ່ບໍຣິບູນດ້ວຍພຣະຄຸນແລະດ້ວຍຣິດເດດອຳນາດຂອງພຣະອົງ ຄຣິສຕຽນເປັນຜູ້ທີ່ພຣະເຈົ້າຊົງທົດສົງໄວ້ ເພື່ອໃຫ້ມີຊີວິດທີ່ບໍຣິສຸດ ແຍກໄວ້ຈາກໂລກແຕ່ເປັນຂອງພຣະອົງ

**ມີບັນໄດສີ່ຂັ້ນທີ່ຊ່ວຍເຮັດໃຫ້ເຮົາມີຄວາມໝັ້ນໃຈ** ວ່າເຮົາເປັນຄຣິສຕຽນທີ່ມີສັມພັນທະພາບກັບພຣະຄຣິສຢ່າງແທ້ຈິງ ຊຶ່ງມີດັ່ງຕໍ່ໄປນີ້

1. ຜູ້ທີ່ເປັນຄຣິສຕຽນນັ້ນຕ້ອງໄວ້ວາງໃຈໃນພຣະຄຣິສວ່າ ພຣະອົງຊົງເປັນພຣະຜູ້ຊ່ວຍໃຫ້ຮອດພົ້ນຂອງເຂົາ
2. ຜູ້ທີ່ເປັນຄຣິສຕຽນນັ້ນຕ້ອງຖວາຍຕົວໃຫ້ແກ່ພຣະຄຣິສ ໃນຖານະທີ່ພຣະອົງຊົງເປັນເຈົ້າຊີວິດຂອງເຂົາ
3. ຜູ້ທີ່ເປັນຄຣິສຕຽນນັ້ນຕ້ອງຮັບເອົາພຣະວິນຍານບໍຣິສຸດໄວ້ເປັນຂອງສ່ວນຕົວ ແລະເປັນຜູ້ນຳພາໃນການດຳເນີນຊີວິດ ໂດຍຄວາມເຊື່ອທາງພຣະຄຣິສ
4. ຜູ້ທີ່ເປັນຄຣິສຕຽນນັ້ນຕ້ອງຂັບຕາມພຣະຄຣິສໃນຖານະທີ່ພຣະອົງຊົງເປັນເຈົ້ານາຍ ຫລືຜູ້ບັງຄັບບັນຊາຊີວິດຂອງເຂົາ ເຂົາຍອມອຸທິດຊີວິດເພື່ອຮັບໃຊ້ຜູ້ອື່ນໂດຍເຫັນແກ່ພຣະຄຣິສ

ການດຳເນີນຊີວິດຄຣິສຕຽນບໍ່ແມ່ນຈະສົມບູນໃນບາດກ້າວດຽວ ຫລາຍຕໍ່ຫລາຍເທື່ອຜູ້ເປັນຄຣິສຕຽນໃໝ່ກໍເຂົ້າໃຈຜິດ ແລະຜູ້ອະພິບາລລ້ຽງດູກໍມີຄວາມຫວັງໃຈຜິດ ທີ່ຫວັງໃຫ້ຜູ້ເປັນຄຣິສຕຽນໃໝ່ສົມບູນຄົບຖ້ວນໃນບາດດຽວຊີວິດຄຣິສຕຽນເປັນຊີວິດທີ່ມີການຈະເຣີນເຕີບໂຕ ຈາກບາດກ້າວນຶ່ງໄປສູ່ອີກບາດກ້າວນຶ່ງ ຄືກັບເດັກນ້ອຍທີ່ຈະເຣີນຕາມສ່ວນຂອງເຂົາເອງ ໄປຕາມວັນເວລາແຫ່ງຊີວິດ ແລະປະສົບການຊີວິດ ຄຳແນະນຳຂອງເຮົາເປັນຄຳສິດສອນທີ່ຕຽມໃຈຂອງເຂົາໃຫ້ພ້ອມ ແລະມີຄວາມເຂົ້າໃຈຈາກຄວາມຈິງຂອງພຣະເຈົ້າ ທີ່ຈະຮັບກັບສະພາບການທີ່ເຂົາຈະປະເຊີນ **ສິ່ງທີ່ຊ່ວຍໃຫ້ສມາຊິກໃໝ່ມີຊີວິດຄຣິສຕຽນທີ່ຈະໃຫຍ່ຂຶ້ນ** ແມ່ນສ່ວນປະກອບດັ່ງຕໍ່ໄປນີ້

1. **ອ່ານພຣະຄຣິສທັມຄັມພີ ເພາະ**
   - ພຣະຄຣິສທັມຄັມພີເປັນອາຫານແຫ່ງຊີວິດ
   - ພຣະຄຣິສທັມຄັມພີເປັນແສງສວ່າງແຫ່ງຊີວິດ
   - ພຣະຄຣິສທັມຄັມພີເປັນແວ່ນແຍງໃຫ້ຄວາມຈິງຂອງຊີວິດ
   - ພຣະຄຣິສທັມຄັມພີເປັນອາວຸດ ເພື່ອປ້ອງກັນບໍ່ໃຫ້ຊີວິດຕົກລົງໄປໃນການທົດລອງ
   - ພຣະຄຣິສທັມຄັມພີເປັນຫລັກໃນການຮັບໃຊ້ ເພື່ອນຳພາໃຫ້ຜູ້ອື່ນໄດ້ຮັບຊີວິດໃໝ່

ສ່ວນວິທີການອ່ານ ຕ້ອງສຶກສາຊອກຫາວິທີທີ່ຖືກຕ້ອງ ແລະເໝາະສົມກັບເວລາແລະສະຖານະການ ແຕ່ທຸກ ເທື່ອທີ່ອ່ານພຣະຄຣິສທັມຄັມພີຕ້ອງເລີ້ມດ້ວຍການອະທິຖານ ເພື່ອຂໍການຊົງນຳແລະຄວາມເຂົ້າໃຈຈາກການສຳແດງຂອງພຣະເຈົ້າ ຈະເຮັດໃຫ້ການອ່ານນັ້ນມີຊີວິດຊີວາ

**2. ອະທິຖານໄຫວ້ວອນ** ການອະທິຖານເປັນການສົນທະນາຫລືເວົ້າກັບພຣະເຈົ້າດ້ວຍຈິດວິນຍານ ແລະຄວາມຈິງ ພຣະເຈົ້າຕິດກັບເຮົາທາງພຣະຄຣິສທັມຄັມພີ ແລະເຮົາທູນພຣະອົງໂດຍທາງການອະທິຖານອ້ອນວອນຕໍ່ພຣະອົງ *"ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເຣື່ອງຄວາມປາຖນາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນ ແລະການອ້ອນວອນຂໍ ພ້ອມກັບການຂອບພຣະຄຸນ ແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິສ"* (ຟປ 4:6-7) ສິ່ງເຫລົ່ານີ້ຕ້ອງເຮັດດ້ວຍຄວາມເຊື່ອ ແມ່ນຄວາມເຊື່ອເປັນຮາກຖານຂອງການອະທິຖານ *"ນີ້ແຫລະ ເປັນຄວາມແນ່ໃຈທີ່ເຮົາທັງຫລາຍມີຢູ່ຕໍ່ພຣະອົງ ຄືຖ້າພວກເຮົາທູນຂໍສິ່ງໃດທີ່ເປັນຕາມພຣະທັຍຂອງພຣະອົງ ພຣະອົງກໍຈະຊົງໂຜດຟັງເຮົາ ແລະຖ້າເຮົາທັງຫລາຍຮູ້ວ່າພຣະອົງຊົງໂຜດຟັງແລ້ວ ເມື່ອພວກເຮົາທູນຂໍສິ່ງໃດ ພວກເຮົາຈຶ່ງຮູ້ວ່າພວກເຮົາໄດ້ຮັບສິ່ງທີ່ພວກເຮົາຂໍຈາກພຣະອົງນັ້ນ"* (1 ຢຮ 5:14-15)

ມີຜູ້ສົມທຽບການອະທິຖານກັບການຫາຍໃຈວ່າ ການຫາຍໃຈສຳຄັນສຳລັບຊີວິດມະນຸດສັນໃດ ການອະທິຖານກໍສຳຄັນສຳລັບຊີວິດຄຣິສຕຽນສັນນັ້ນ ຈຶ່ງເປັນສິ່ງສຳຄັນທີ່ຈະຕ້ອງຈັດເວລາໄວ້ອະທິຖານຄືກັນກັບສິ່ງອື່ນໃນຊີວິດປະຈຳວັນ ເຊັ່ນ ການຮັບປະທານອາຫານ ການເຮັດວຽກ ການສຶກສາ ເຮົາຈະກ່າວວ່າ "ເຮົາບໍ່ມີເວລາຮັບປະທານອາຫານ ເຮົາບໍ່ມີເວລາເຮັດວຽກ ເຮົາບໍ່ມີເວລາສຶກສາສິ່ງຕ່າງ ໆ" ຖ້າປະຕິເສດສິ່ງເຫລົ່ານີ້ຢູ່ຕລອດເວລາຄືກັບທີ່ມີຄົນປະຕິເສດການໃຊ້ເວລາໃນການອະທິຖານ ຮ່າງກາຍຂອງເຮົາຈະອ່ອນແອ ເຮົາຈະບໍ່ມີເງິນໃຊ້ໃນຄອບຄົວ ເຮົາກໍຈະບໍ່ມີຄວາມຮູ້ຄວາມເຂົ້າໃຈກັບໂລກທີ່ເປັນໄປຢູ່ທຸກມື້ນີ້ ແລະບໍ່ມີຄວາມເຂົ້າໃຈທີ່ຈະເຂົ້າກັບສະພາບການໃນຊີວິດປະຈຳວັນ ດັ່ງນັ້ນແລ້ວການອະທິຖານເປັນສິ່ງຈຳເປັນໃນພາກສ່ວນນຶ່ງຂອງຊີວິດຄຣິສຕຽນ ທີ່ຜູ້ເຊື່ອໃໝ່ຕ້ອງໄດ້ຮັບຄຳແນະນຳໃຫ້ຮູ້ຈັກ ບໍ່ແມ່ນວ່າຄອຍຖ້າໃຫ້ມີບັນຫາເສັຍກ່ອນແລ້ວຄ່ອຍຮຽນຮູ້ການອະທິຖານ

**3. ແບ່ງປັນພຣະພອນສຳລັບຄອບຄົວ** ຄອບຄົວເປັນພາກສ່ວນນຶ່ງຂອງທຸກຊີວິດ ແມ່ນວ່າຜູ້ເຊື່ອໃໝ່ຈະເປັນພໍ່ເຮືອນ ຫລືແມ່ເຮືອນ ຫລືລູກເຮືອນ ສົມຄວນທີ່ຈະນຳພຣະພອນກັບຄືນໄປເຖິງຄອບຄົວຂອງຕົນ ທ່ານໂປໂລໃຫ້ຄຳແນະນຳແກ່ຜູ້ທີ່ເປັນຄຣິສຕຽນໃໝ່ບໍ່ໃຫ້ປະຖິ້ມຜົວຫລືເມັຽທີ່ບໍ່ມີຄວາມເຊື່ອ "ເພາະວ່າຜົວທີ່ບໍ່ມີຄວາມເຊື່ອ ກໍໄດ້ຮັບການຊົງຊຳຣະຍ້ອນເມັຽ ແລະເມັຽທີ່ບໍ່ມີຄວາມເຊື່ອກໍໄດ້ຮັບການຊົງຊຳຣະຍ້ອນຜົວນັ້ນ ຖ້າບໍ່ດັ່ງນັ້ນລູກຂອງເຈົ້າທັງຫລາຍກໍບໍ່ບໍຣິສຸດ ແຕ່ບັດນີ້ລູກເຫລົ່ານັ້ນກໍບໍຣິສຸດແລ້ວ" (1 ກທ 7:14) ຂໍ້ນີ້ເຮັດໃຫ້ເຮົາເຫັນວ່າ ຄົນນຶ່ງທີ່ເລີ້ມມີຄວາມເຊື່ອໃນຄອບຄົວ ສາມາດມີຜົນໃນການຊຳຣະຄົນອື່ນ ໆ ໃຫ້ມາເຖິງຄວາມຣອດພົ້ນ ການຊຳຣະທີ່ທ່ານໂປໂລກ່າວເຖິງນີ້ ແມ່ນເປັນການມີຊີວິດໃໝ່ທີ່ເປັນພະຍານເຖິງພຣະຄຣິສ ອັນເປັນແບບຢ່າງນຳພາໃຫ້ຄົນໃນຄອບຄົວມາເຖິງຄວາມຣອດພົ້ນໃນພຣະຄຣິສ

ຄອບຄົວເປັນພາກສ່ວນຂອງຊີວິດສ່ວນຕົວ ທີ່ເຮົາຕ້ອງເອົາໃຈໃສ່ ການທີ່ເຮົາເປັນຄຣິສຕຽນບໍ່ແມ່ນເປັນການປະຖິ້ມບໍ່ເອົາໃຈໃສ່ຄອບຄົວ ຫັນມາສົນໃຈແຕ່ພີ່ນ້ອງໃນຄຣິສຈັກແທນ ຄືກັບ "ໄດ້ໃໝ່ລືມເກົ່າ" ແຕ່ໃນທາງກົງກັນຂ້າມກໍເພາະເຮົາເປັນຄຣິສໄດ້ຮັບຄວາມຮັກຄວາມຣອດພົ້ນຈາກພຣະຄຣິສ ຈຶ່ງສົມຄວນນຳເອົາສິ່ງທີ່ດີເລີດປະເສີດເຫລົ່ານີ້ໄປແບ່ງປັນໃຫ້ກັບຄົນທີ່ເຮົາຮັກຫລາຍທີ່ສຸດ ແມ່ນຄົນໃນຄອບຄົວ ທ່ານໂປໂລຍັງໄດ້ແນະນຳໃຫ້ຄຣິສຕຽນມີຄວາມ

ເຊື່ອຟັງ ແລະຄວາມຮັກ ຕລອດຈົນໃຫ້ການສັ່ງສອນຕາມຫລັກຂອງອົງພຣະຜູ້ເປັນເຈົ້າ (ກຊ 3:18-21, ອຟ 6:1-4) ຜູ້ເປັນສມາຊິກໃໝ່ຈຳເປັນຕ້ອງການຄຳແນະນຳແລະຄຳໜຸນໃຈ ທີ່ຊ່ວຍໃຫ້ເຂົາຮູ້ຈັກປະຕິບັດຕໍ່ຄອບຄົວຂອງເຂົາ ເພາະນັ້ນເປັນກຸ່ມຄົນໜ່ວຍແຮກທີ່ເຂົາຈະຕ້ອງປະເຊີນແລະໃຫ້ຄຳພະຍານ ຖ້າເຂົາວາງຕົວເປັນແບບຢ່າງທີ່ຖືກຕ້ອງ ໃນຕອນທຳອິດ ແລະມີພະຍານທີ່ດີໃຫ້ແກ່ຄອບຄົວຂອງເຂົາ ກໍຈະເປັນພຣະພອນໄປສູ່ທຸກຄົນໃນຄອບຄົວ ສິ່ງທີ່ສຳຄັນຢ່າໃຫ້ສມາຊິກໃໝ່ປະເຊີນບັນຫາຢູ່ໃນຄອບຄົວຂອງເຂົາແຕ່ຜູ້ດຽວ ຢ່າງໂດດດ່ຽວ ຜູ້ທີ່ອະພິບາລລ້ຽງດູຈຳເປັນຕ້ອງໃຫ້ການຢ້ຽມຢາມ ອະທິຖານເພື່ອ ແລະໜຸນໃຈຢູ່ສເມີ ເມື່ອພຣະເຈົ້າເປີດໂອກາດກໍສົມຄວນທີ່ຈະນຳພຣະວັຈນະ ຫລືຂ່າວປະເສີດໄປເຖິງຄອບຄົວສມາຊິກໃໝ່ເຊັ່ນກັນ

**4. ຮ່ວມສາມັກຄີທັມກັບຜູ້ອື່ນໃນໂບດ** ຈິງຢູ່ "ໂບດ" ແມ່ນຕົວຕຶກອາຄານ ແຕ່ການທີ່ສມາຊິກໄປເຕົ້າໂຮມຊຸມນຸມກັນກໍກາຍເປັນຄຣິສຈັກ ຄຣິສຈັກເປັນຕົວບຸກຄົນມາຊຸມນຸມກັນນັ້ນຄືກັບຄອບຄົວຂອງພຣະເຈົ້າ ທີ່ມີສມາຊິກເປັນພີ່ນ້ອງກັນ ຄຣິສຈັກເປັນພຣະກາຍ ມີພຣະເຢຊູຄຣິສເປັນສີສະ ແລະເຮົາຕ່າງກໍເປັນອວັຍວະຂອງກາຍນັ້ນ ແລະຕ່າງກໍມີໜ້າທີ່ແຕກຕ່າງກັນ ນັກຟຸຕບອລທີ່ດີຕ້ອງເຂົ້າຫລິ້ນຢູ່ໃນທີມສັນໃດ ການເປັນຄຣິສຕຽນທີ່ດີກໍຕ້ອງຮ່ວມກິຈການຮັບໃຊ້ໃນຄຣິສຈັກສັນນັ້ນ ດັ່ງນັ້ນຄຣິສຕຽນຈຶ່ງໄປສາມັກຄີທັມກັນທີ່ໂບດ ໂດຍມີຈຸດປະສົງດັ່ງນີ້

- ເພື່ອສັຣເສີນແລະຂອບພຣະຄຸນພຣະເຈົ້າທີ່ຊົງຮັກແລະດີຕໍ່ເຮົາ
- ເພື່ອປາກົດຕົວເປັນພະຍານໃຫ້ຄົນອື່ນຮູ້ວ່າເຮົາເປັນຄົນຂອງພຣະຄຣິສ
- ເພື່ອນະມັສການພຣະເຈົ້າ ແລະອະທິຖານທູນຂໍຮ່ວມກັບຜູ້ອື່ນ
- ເພື່ອຮຽນຮູ້ເຖິງຊີວິດຄຣິສຕຽນໃຫ້ຫລາຍຍິ່ງຂຶ້ນ
- ເພື່ອຮ່ວມກຳລັງກັບຜູ້ອື່ນໃນການຮັບໃຊ້ພຣະເຈົ້າ
- ເພື່ອຮັບພຣະພອນທີ່ພຣະເຈົ້າຈະມອບແກ່ຊີວິດຂອງເຮົາຮ່ວມກັນ

ເມື່ອເຮົາຖ່ານໄຟກ້ອນນຶ່ງອອກຈາກເຕົາໄຟລົງສູ່ພື້ນດິນ ຖ່ານນັ້ນກໍຈະເຢັນລົງ ແລະດັບໄປສັນໃດ ຄວາມຮັກໃນພຣະຄຣິສຂອງຄຣິສຕຽນກໍຄືກັນ ຖ້າຢູ່ຫ່າງຄຣິສຈັກກໍຈະເຢັນລົງແລະດັບໄປ ໃນທາງກົງກັນຂ້າມຖ້າເຮົາຍິ່ງສຸມໃສ່ຖ່ານລົງໄປໃນເຕົາໄຟ ເມື່ອຖ່ານຕິດຕໍ່ໄຟຊຶ່ງກັນແລະກັນ ກໍຈະໄດ້ພລັງຄວາມຮ້ອນເຕີ່ມຫລາຍຍິ່ງຂຶ້ນ ດັ່ງນັ້ນການໄປໂບດຮ່ວມສາມັກຄີທັມ ສຶກສາພຣະຄຣິສທັມຄັມພີ ຈຶ່ງຖືວ່າເປັນກິຈການສຳຄັນຍິ່ງຂອງຄຣິສຕຽນ ທີ່ຕ້ອງເຮັດເປັນປະຈຳທຸກອາທິດ ອັນນີ້ແຫລະເປັນທັມມະຊາດຂອງຜູ້ທີ່ດຳເນີນຊີວິດຄຣິສຕຽນ

**5. ຮັບໃຊ້ພຣະເຢຊູຄຣິສ** ພຣະເຢຊູຄຣິສໄດ້ວາງແບບຢ່າງໄວ້ ສຳລັບຄຣິສຕຽນໃນການຮຽນຮູ້ການຮັບໃຊ້ ພຣະອົງຊົງກ່າວວ່າ **"ແຕ່ຝ່າຍເຮົາ ເຮົາຢູ່ຖ້າມກາງພວກທ່ານເປັນເໝືອນຜູ້ຮັບໃຊ້"** (ລກ 22:27) ທ່ານໂປໂລກ່າວວ່າ ***"ຜູ້ທີ່ເຈົ້າທັງຫລາຍຮັບໃຊ້ນັ້ນ ແມ່ນພຣະຄຣິສເຈົ້າ"*** (ກຊ 3:24) ການຮັບໃຊ້ເປັນຫລັກສຳຄັນຍິ່ງປະການນຶ່ງຂອງຄຣິສຕຽນ ພຣະພອນແຫ່ງຂ່າວປະເສີດຂອງພຣະຄຣິສນັ້ນ ມີໄວ້ກໍເພື່ອສົ່ງເສີມພຣະສງ່າຣາສີຂອງພຣະເຈົ້າ ແລະຄວາມຈະເຣີນກ້າວໜ້າຂອງມະນຸດໃຫ້ຮຸ່ງເຮືອງ ແລະເປັນສິ່ງສຳຄັນທີ່ຜູ້ອະພິບາລລ້ຽງດູຈະຕ້ອງມີພາກສ່ວນໃນການໃຫ້ຄຳແນະນຳແກ່ສມາຊິກໃໝ່ຕັ້ງແຕ່ຕົ້ນ ເພື່ອເປັນການສ້າງແນວຄວາມເຊື່ອແລະຄວາມຄິດທີ່ຖືກຕ້ອງໄວ້

ພຣະເຢຊູຄຣິສຊົງເປັນຜູ້ຮັບໃຊ້ຂອງພຣະເຈົ້າ **"ແລະຊົງຮັບສະພາບຂ້ອຍຂ້າ"** (ຟປ 2:7) ເພື່ອຈະໃຫ້ພຣະປະສົງຂອງພຣະເຈົ້າສຳເຣັດ ແມ່ນການໄຖ່ມະນຸດທັງປວງ ການສິ້ນພຣະຊົນເທິງກາງແຂນເປັນແບບຢ່າງໃນການຖວາຍ

ຕົວ ໃນການເສັຍສລະ ແລະສຳແດງພຣະຄຸນຄວາມຮັກຂອງພຣະເຈົ້າ ຄຣິສຕຽນຮຽນຮູ້ຈັກແບບຢ່າງຂອງພຣະຄຣິສ ເພື່ອຈະຮັບໃຊ້ຜູ້ອື່ນ ອັນເປັນງານທີ່ພຣະເຈົ້າມີພຣະປະສົງໃນຊີວິດຂອງຜູ້ທີ່ພຣະເຈົ້າເລືອກສັນ (ມທ 25:40)

**ຂ. ພາຣະໜ້າທີ່ແລະການມີສ່ວນຮ່ວມໃນພັນທະກິຈຂອງຄຣິສຈັກ**

ການດຳເນີນຊີວິດຕາມທີ່ເຮົາໄດ້ກ່າວໄປແລ້ວ ຈະເຫັນໄດ້ວ່າ ຈຸດສູນຮວມປະການທຳອິດແມ່ນຊີວິດສ່ວນຕົວກັບພຣະຄຣິສ ພາກສ່ວນທີ່ສອງແມ່ນຊີວິດຮວມກັບພີ່ນ້ອງຄຣິສຕຽນໃນຄຣິສຈັກ ການແນະນຳອະພິບາລສມາຊິກໃໝ່ໃຫ້ຮູ້ຈັກພາຣະໜ້າທີ່ແລະການມີສ່ວນຮ່ວມໃນຄຣິສຈັກເປັນສິ່ງທີ່ສຳຄັນອີກປະການນຶ່ງ ເພື່ອເປັນການໃຫ້ຜູ້ກ່ຽວຮູ້ຈັກໜ້າທີ່ຮັບຜິດຊອບຂອງເຂົາ ທີ່ຕ້ອງເຂົ້າສ່ວນຮ່ວມໃນການຜູກພັນກັບຜູ້ອື່ນໃນຄຣິສຈັກ ຜູ້ທີ່ເຂົ້າມາເປັນສມາຊິກໃໝ່ຫລາຍຄົນອາດບໍ່ເຄີຍໄດ້ຮັບການແນະນຳຈາກຜູ້ໃດເລີຍ ແຕ່ກໍຖືກຕຳໜິວ່າບໍ່ໄດ້ຮັບຜິດຊອບໜ້າທີ່ຂອງຕົນ ອັນເປັນເຫດໃຫ້ຜິດຫວັງແລະໝົດກຳລັງໃຈກັນທຸກຝ່າຍ

ກ່ອນອື່ນເຮົາຕ້ອງທຳຄວາມເຂົ້າໃຈວ່າ ການເຂົ້າເປັນ **"ສມາຊິກສົມບູນຂອງຄຣິສຈັກ"** ມີຄວາມໝາຍແລະພາຣະໜ້າທີ່ຮັບຜິດຊອບແນວໃດ? ການເຂົ້າເປັນສມາຊິກສົມບູນຂອງຄຣິສຈັກ ແມ່ນໝາຍເຖິງຜູ້ທີ່ເຊື່ອວາງໃຈໃນພຣະເຢຊູຄຣິສໄດ້ຜ່ານພິທີບັບຕິສມາເຂົ້າເປັນສມາຊິກ ແລະປະກາດຕົວເປັນສມາຊິກຂອງຄຣິສຈັກທ້ອງຖິ່ນທີ່ຕົວເອງເປັນສມາຊິກຢູ່ ແລ້ວຮັບການອົບຮົມສິດສອນໃນຄວາມເຊື່ອ ສາມາດທີ່ຈະເປັນພະຍານເຖິງພຣະຄຸນແລະຄວາມຮັກຂອງອົງພຣະເຢຊູຄຣິສ ແລະສາມາດທີ່ຈະສອນຄົນອື່ນ ໆ ໄດ້ດ້ວຍ

ສມາຊິກທຸກຄົນຕ່າງກໍມີຂອງພຣະຣາຊທານຝ່າຍວິນຍານຫລື "ພອນສວັນ" ທີ່ພຣະເຈົ້າຊົງປະທານໃຫ້ຕາມຊອບພຣະທັຍຂອງພຣະອົງ (1 ກທ 12:1, 11,18) ຜູ້ທີ່ເປັນສມາຊິກຈຶ່ງສົມຄວນພິຈາຣານາຕົນເອງວ່າໄດ້ຮັບຂອງພຣະຣາຊທານແນວໃດ ແລ້ວມອບຕົວບົວລະບັດໜ້າທີ່ນັ້ນຕາມຂອງພຣະຣາຊປະທານທີ່ຕົນມີຢູ່ ເພື່ອງຽກງານຂອງພຣະເຈົ້າຈະໄດ້ຈຳເຣີນຂຶ້ນ (1 ກທ ບົດທີ 14-16, ຣມ 12:6-8)

ສມາຊິກຄຣິສຈັກທຸກຄົນຕ່າງກໍເປັນເໝືອນອະວັຍວະ ແຕ່ລະສ່ວນໃນພຣະກາຍຂອງພຣະເຢຊູຄຣິສ ທຸກຄົນຈຶ່ງຕ່າງມີໜ້າທີ່ໄປຄົນລະຢ່າງເໝືອນອະວັຍວະໃນຮ່າງກາຍ ຈຶ່ງບໍ່ສົມຄວນທີ່ຈະຢ້ານລື່ນກັນ ອວດຕົວກັນ ແລະດູໝິ່ນຜູ້ອື່ນ ແຕ່ສົມຄວນຊ່ວຍເຫລືອຮ່ວມມືຊຶ່ງກັນແລະກັນ ເພື່ອຊ່ວຍໃຫ້ຄຣິສຈັກຈະເຣີນກ້າວໜ້າສູ່ຄວາມໄພບູນຂອງພຣະຄຣິສ ແລະຖວາມກຽດແດ່ພຣະອົງ (ອຟ 4:11-13, 1 ກທ 12:14-30)

ສມາຊິກທີ່ດີຂອງຄຣິສຈັກຈະບໍ່ເອົາແຕ່ຄອຍຖ້າຮັບການອົບຮົມສິດສອນຈາກບັນດາຜູ້ນຳເທົ່ານັ້ນ ເຂົາສົມຄວນດີອົກດີໃຈທີ່ຈະຮັບຜິດຊອບຊີວິດຈິດວິນຍານຂອງຕົນແລະຂອງຄຣິສຈັກ ດັ່ງຕໍ່ໄປນີ້

1. ອ່ານພຣະວັຈນະຂອງພຣະເຈົ້າ (ຖ້າບໍ່ຮູ້ຈັກອ່ານໃຫ້ຜູ້ອື່ນອ່ານໃຫ້ຟັງ) ເພື່ອເປັນການພິຈາຣານາພຣະວັຈນະຂອງພຣະເຈົ້າ ໃຫ້ເຂົ້າໃຈພຣະປະສົງຂອງພຣະອົງເພື່ອຂັບຕາມ ໃນຊີວິດປະຈຳວັນ
2. ຮ່ວມນະມັສການ ແລະອະທິຖານກັບສມາຊິກຢ່າງສມ່ຳສເມີ
3. ຍິນດີແບ່ງປັນຄວາມຮູ້ຄວາມເຂົ້າໃຈໃນພຣະວັຈນະຂອງພຣະເຈົ້າ ແລະປະສົບການຊີວິດຄຣິສຕຽນ ເພື່ອໜູນໃຈພີ່ນ້ອງຄຣິສຕຽນດ້ວຍກັນ

4. ຮ່ວມຮັບຜິດຊອບພັນທະກິຈຫລືວຽກການຂອງຄຣິສຈັກ ໃນຕຳແໜ່ງໜ້າທີ່ຮັບຜິດຊອບທີ່ຕົນໄດ້ຮັບການຊົງເອີ້ນຮຽກຈາກພຣະເຈົ້າ ແລະສຽງສນັບສນຸນຈາກສມາຊິກ ເຊັ່ນ ຕຳແໜ່ງໜ້າທີ່ຜູ້ບໍລະບັດ ຜູ້ປ່າວປະກາດຂ່າວປະເສີດ ຫລືເປັນກັມມະການໃນຝ່າຍຕ່າງ ໆ

5. ມີສ່ວນຮ່ວມໃນການຖວາຍຊັບ ເພື່ອການດຳເນີນວຽກການຕ່າງ ໆ ຂອງຄຣິສຈັກ

6. ຮ່ວມກິຈການ ແລະການບໍຣິການຂອງຄຣິສຈັກແລະຊຸມນຸມຊົນສເມີ

7. ໃຫ້ກຽດແລະເຊື່ອຟັງຄຳແນະນຳ ຕັກເຕືອນຂອງເພື່ອນສມາຊິກແລະບັນດາຜູ້ນຳຄຣິສຈັກ

8. ຮ່ວມທຸກແລະສຸກກັບບັນດາສມາຊິກຂອງຄຣິສຈັກ

9. ເປັນແບບຢ່າງແກ່ຄົນທີ່ເຊື່ອທັງປວງ ທັງໃນທາງວາຈາ ແລະການປະພຶດ ໃນຄວາມຮັກ ໃນຄວາມເຊື່ອ ແລະໃນຄວາມບໍຣິສຸດ

10. ອົບຮົມສິດສອນລູກຫລານຫລືຄົນໃນຄອບຄົວກຽວກັບຫລັກໃນການດຳເນີນຊີວິດຄຣິສຕຽນ

**ຄ. ຄວາມໝາຍແລະການມີເຂົ້າສ່ວນຮ່ວມໃນສາສນາພິທີ**

ພິທີຂອງຄຣິສຈັກນິກາຍໂປເທັສແຕນສ່ວນຫລາຍ ທີ່ຖືເປັນກົດຣະບຽບຢ່າງເປັນທາງການ (Ordinances) ມີສອງພິທີ ແມ່ນພິທີບັພຕິສມາ ແລະພິທີຣະລຶກເຖິງພຣະເຢຊູຄຣິສ ພິທີທັງສອງນີ້ຄຣິສຈັກຖືວ່າເປັນພິທີທີ່ໄດ້ຮັບບັນຊາມອບໝາຍຈາກພຣະເຢຊູຄຣິສ ເປັນພິທີທີ່ມີຄວາມສຳຄັນອັນກ່ຽວຂ້ອງກັບຄວາມຣອດພົ້ນໃນພຣະເຢຊູຄຣິສ ພິທີອື່ນ ໆ ສ່ວນຫລາຍເປັນການເສີມສລອງໃນເທສກາລແລະໂອກາດທີ່ຕ່າງ ໆ ກັນ ເຊັ່ນ ວັນຄຣິສມາສ ວັນອີສເຕີ ນອກນັ້ນອາດມີພິທີຂອງຄອບຄົວທີ່ຄຣິສຈັກຈະຕ້ອງມີສ່ວນຮ່ວມຖ້າຜູ້ກ່ຽວເປັນສມາຊິກຂອງຄຣິສຈັກ ເຊັ່ນ ພິທີແຕ່ງງານ ພິທີສົບ ແຕ່ພິທີທີ່ພຣະເຢຊູຄຣິສໄດ້ແຕ່ງຕັ້ງໃຫ້ຄຣິສຈັກແລະຜູ້ເຊື່ອມີພາກສ່ວນຮັບຜິດຊອບມີພຽງສອງພິທີ ທີ່ສມາຊິກສົມບູນທຸກຄົນຕ້ອງເຂົ້າສ່ວນຮ່ວມ ແລະປະຕິບັດຕາມພຣະບັນຊາຂອງພຣະເຢຊູຄຣິສ ດັ່ງນັ້ນຜູ້ອະພິບາລລ້ຽງດູຕ້ອງມີພາກສ່ວນແນະນຳໃຫ້ສມາຊິກໃໝ່ມີຄວາມເຂົ້າໃຈເມື່ອເຂົາເຂົ້າຮ່ວມພິທີ

**1. ພິທີບັພຕິສມາ** ເປັນພິທີສຳລັບຜູ້ເຊື່ອທີ່ໄດ້ຕ້ອນຮັບພຣະເຢຊູຄຣິສແລ້ວ ຜ່ານການອົບຮົມຂອງຄຣິສຈັກເຖິງຄວາມເຊື່ອພື້ນຖານສຳລັບການດຳເນີນຊີວິດຄຣິສຕຽນ ແລະຕ້ອງການເຂົ້າສ່ວນຮ່ວມເປັນສມາຊິກສົມບູນຂອງຄຣິສຈັກທ້ອງຖິ່ນ ພິທີບັພຕິສມາເປັນພິທີທີ່ຄຣິສຈັກມີກຳໜົດໃຫ້ຮັບເທື່ອດຽວສຳລັບສມາຊິກທຸກຄົນ ອານຈະມີສມາຊິກໃໝ່ບາງຄົນທີ່ເຄີຍຮັບທີ່ສູນອົບພະຍົບຫລືຄຣິສຈັກບາງແຫ່ງແລ້ວ ເມື່ອຕ້ອງການເຂົ້າເປັນສມາຊິກສົມບູນໃນຄຣິສຈັກແຫ່ງໃໝ່ແລ້ວ ທາງຄຣິສຈັກແຫ່ງໃໝ່ຮ້ອງຂໍໃຫ້ຮັບບັພຕິສມາໃໝ່ອີກເທື່ອນຶ່ງ ທັງນີ້ແມ່ນເພາະຄວາມເຊື່ອຂອງຄຣິສຈັກຕ່າງກັນ ເປັນຄົນລະຄະນະນິກາຍ ທີ່ມີຄວາມເຊື່ອໃນຄວາມໝາຍຂອງພິທີບັພຕິສມາຕ່າງກັນ ຈຶ່ງໄດ້ຮ້ອງຂໍໃຫ້ຮັບບັພຕິສມາໃໝ່ຕາມຄວາມເຊື່ອຂອງຄຣິສຈັກທີ່ຈະເຂົ້າເປັນສມາຊິກ ແຕ່ກໍມີຄຣິສຕຽນບາງຄົນຂໍຮັບບັພຕິສມາໃໝ່ເພາະວ່າເມື່ອຜູ້ກ່ຽວຮັບບັຕິສມາເທື່ອກ່ອນນັ້ນຜູ້ກ່ຽວບໍ່ຮູ້ຈັກຄວາມໝາຍອັນແທ້ຈິງ ຈຶ່ງຮ້ອງຂໍໃຫ້ທາງຄຣິສຈັກບັພຕິສມາໃໝ່ອີກເທື່ອນຶ່ງດ້ວຍຄວາມເຊື່ອແລະຄວາມເຂົ້າໃຈທີ່ຖືກຕ້ອງ ຈະເຫັນໄດ້ວ່າຜູ້ທີ່ອະພິບາລລ້ຽກດູສມາຊິກໃໝ່ມີຄວາມສຳຄັນທີ່ຈະໃຫ້ຜູ້ເປັນສມາຊິກໃໝ່ຮັບບັພຕິສມາດ້ວຍຄວາມເຂົ້າໃຈໃນຄວາມເຊື່ອ ແລະຄວາມໝາຍອັນຖືກຕ້ອງ

ຄວາມໝາຍແລະຄວາມສຳຄັນຂອງພິທີບັບຕິສມາແກ່ຜູ້ເຊື່ອ **ແມ່ນຄຣິສຈັກປະກອບພິທີບັບຕິສມາເນື່ອງ** ຈາກໄດ້ສືບທອດເຈຕນາຣົມຂອງພຣະເຢຊູຄຣິສໂດຍການຮັບພັນທະກິຈແລະພຣະບັນຊາຂອງພຣະອົງ ແລະຄຣິສຈັກໄດ້ເຮັດພິທີນີ້ຕໍ່ ໆ ກັນມາໃນທຸກຍຸກທຸກສມັຍດ້ວຍການຂັບຕາມພຣະມະຫາບັນຊາຂອງພຣະເຢຊູຄຣິສ (ມທ 28:29) ຫລັກຄວາມເຊື່ອໃນພິທີນີ້ມີຄວາມສຳຄັນສຳລັບຜູ້ເຊື່ອໃໝ່ ເພື່ອໃຫ້ຜູ້ເຊື່ອໃໝ່ໄດ້ຢືນຢັດຄວາມເຊື່ອຂອງຕົນຕໍ່ໜ້າສາທາຣະນະຊົນ ທີ່ຕົນໄດ້ມອບຊີວິດຂອງຕົນໄວ້ໃນການຄຸ້ມຄອງຂອງພຣະເຢຊູຄຣິສ ອົງພຣະຜູ້ເປັນເຈົ້າຂອງຕົນ ເປັນການຍອມຮັບຂອງຜູ້ເຊື່ອໃໝ່ໃນການເຂົ້າສ່ວນຮ່ວມໃນຄວາມຕາຍ ແລະໃນການຄືນພຣະຊົນຂອງພຣະເຢຊູຄຣິສ (ກຊ 2:12) ແລະເລີ້ມຕົ້ນມີຊີວິດໃໝ່ພາຍໃຕ້ການຄຸ້ມຄອງນຳພາຂອງພຣະຄຣິສ (ຣມ 6:3-4) ຜູ້ທີ່ຮັບບັບຕິສມາເປັນຜູ້ທີ່ໄດ້ເຂົ້າສ່ວນຮ່ວມຢູ່ໃນຊີວິດຂອງຄຣິສຈັກສາກົນ (1 ກທ **12:13) ໂດຍໃຊ້ນ້ຳເປັນເຄື່ອງໝາຍສັນຍາລັກ**

ການສິດສອນອະພິບາລລ້ຽງດູສມາຊິກໃໝ່ ໃຫ້ມີຄວາມເຂົ້າໃຈຊັດແຈ້ງເຖິງພິທີບັບຕິສມາເປັນເຣື່ອງສຳຄັນ ແລະບາງເທື່ອກໍຈຳເປັນຕ້ອງໃຊ້ເວລາຫລາຍໃນການສອນ ເພື່ອໃຫ້ຜູ້ເຊື່ອໃໝ່ມາເຖິງຄວາມຈິງໃນພຣະເຢຊູຄຣິສ ແລະເປັນສິ່ງຈຳເປັນສຳລັບເຂົາທີ່ຈະບັບຕິສມາຢ່າງມີຄວາມໝາຍພຽງເທື່ອດຽວໃນຊີວິດຂອງເຂົາ

**2. ພິທີຣະລຶກເຖິງພຣະເຢຊູ** ເປັນພິທີທີ່ພຣະເຢຊູຄຣິສໄດ້ຕັ້ງຂຶ້ນໃນການຮັບປະທານອາຫານຄາບສຸດທ້າຍ ເພື່ອໃຫ້ສາວົກຣະລຶກເຖິງການຮ່ວມໂຕະອາຫານແລງກັບພຣະອົງໃນມື້ນັ້ນ ຄຳພາສາອັງກິດສ່ວນຫລາຍນິຍົມໃຊ້ເອີ້ນວ່າ Lord's Supper (ການຮ່ວມອາຫານແລງກັບອົງພຣະຜູ້ເປັນເຈົ້າ) ພິທີນີ້ພຣະເຢຊູຕັ້ງຂຶ້ນເພື່ອໃຫ້ສາວົກຂອງພຣະອົງຣະລຶກເຖິງພຣະອົງວ່າ ພຣະອົງໄດ້ສະລະຊີວິດຂອງພຣະອົງເອງເປັນຄ່າໄຖ່ສຳລັບມະນຸດສະໂລກ ເປັນພັນທະສັນຍາແຫ່ງຄວາມຮັກໝັ້ນຄົງຂອງພຣະເຈົ້າທີ່ມີຕໍ່ຄຣິສຈັກ (ມທ 26:26-29, ມກ 14 22:-26, ລກ 22:15-20, 1 ກທ 11:23-26) ພຣະອົງຊົງຕັ້ງພິທີນີ້ດ້ວຍຄວາມຮັກ ຄວາມຜູກພັນຮ່ວມກັບສິດຂອງພຣະອົງ ແລະມີພຣະບັນຊາໃຫ້ສາວົກຂອງພຣະອົງເຮັດພິທີນີ້ສືບທອດຕໍ່ໄປ ເພື່ອຣະລຶກເຖິງພຣະອົງຈົນກວ່າພຣະອົງຈະສະເດັດກັບມາອີກ ດັ່ງນັ້ນຜູ້ທີ່ມີຄວາມເຊື່ອ ເປັນໃໝ່ສົມຄວນຮູ້ຈັກຄວາມໝາຍ ແລະຮູ້ຈັກຕຽມຈິດໃຈໃນການເຂົ້າຮ່ວມພິທີກັບສມາຊິກຄົນອື່ນ ໆ

## ສີ່. ຂໍ້ພຣະທັມສຳລັບອະພິບາລລ້ຽງດູສມາຊິກໃໝ່

ຂໍ້ພຣະທັມຕໍ່ໄປນີ້ ຂໍມອບໄວ້ເປັນແນວທາງສຶກສາ ແລະໃຊ້ປະກອບສ່ວນໃນການໃຫ້ການອະພິບາລລ້ຽງດູແກ່ສມາຊິກໃໝ່ ໃນຍາມທີ່ທ່ານຕ້ອງການ ໃນເວລາທີ່ໃຫ້ຄຳແນະນຳຫລືໄປຢ້ຽມຢາມ ຖ້າມີໂອກາດໄດ້ສຶກສາໄວ້ລ່ວງໜ້າກ່ອນກໍຈະໃຊ້ໃຫ້ເກີດຜົນດີຍິ່ງຂຶ້ນ

1. ຄວາມແນ່ໃຈໃນຄວາມລອດພົ້ນ ເພາະພຣະສັນຍາຂອງພຣະເຈົ້າຜູ້ເຊື່ອ
   - ເປັນບຸດຂອງພຣະເຈົ້າ.................................................ໂຢຮັນ 1:12-13
   - ມີຊີວິດອັນຕລອດໄປເປັນນິດ........................................ໂຢຮັນ 3:16, 6:47
   - ຈະບໍ່ຈິບຫາຍ...........................................................ໂຢຮັນ 3:16, 10:28
   - ຈະບໍ່ຖືກພິພາກສາ .....................................................ໂຢຮັນ 5:24
   - ຢູ່ໃນພຣະຫັດຂອງພຣະບິດາ ..........................................ໂຢຮັນ 10:28-29
   - ໂດຍພຣະໂລຫິດຂອງພຣະເຢຊູ.........................................ໂຣມ 3:24-25
   - ບໍ່ມີໃຜປັບໂທດຜິດບາບໄດ້ ..........................................ໂຣມ 8:33-34

- ຄວາມຮັກຂອງພຣະເຈົ້າບໍ່ສູນເສັຍ ................................ໂຣມ 8:35-39
- ຊົງປະທັບຕາໄວ້ຕລອດໄປເປັນນິດ................................ເອເຟໂຊ 1:13, 4:30
- ໄດ້ຮັບການໄຖ່ບາບ................................ເອເຟໂຊ 1:7
- ສົມບູນເປັນນິດ ................................ເຮັບເຣີ 10:14
- ໄດ້ຮັບການລົບບາບ ................................ເຮັບເຣີ 10:17-18
- ບັງເກີດໃໝ່ ................................1 ເປໂຕ 1:3
- ມີພຣະບຸດຈຶ່ງມີຊີວິດ................................1 ໂຢຮັນ 5:12
- ໃຫ້ເຮົາມີຄວາມໝັ້ນໃຈ ................................1 ໂຢຮັນ 5:13

2. **ຊີວິດທີ່ມີການປ່ຽນແປງ**
   - ບາບບໍ່ຄອບຄອງແລ້ວ ................................ໂຣມ 6:14
   - ພຣະເຈົ້າຊົງຕີສອນ ................................ເຮັບເຣີ 12:5-8
   - ຊັງຄວາມບາບ ................................1ໂຢຮັນ 1:5-10
   - ເຊື່ອຟັງຄຳສັ່ງຂອງພຣະເຈົ້າ ................................1ໂຢຮັນ 2:3-6
   - ບໍ່ຮັກສິ່ງຂອງໃນໂລກ................................1ໂຢຮັນ 2:15-17
   - ຮັກພີ່ນ້ອງຄຣິສຕຽນ ................................1ໂຢຮັນ 3:14-15
   - ສຳນຶກຜິດທັນທີ................................1ໂຢຮັນ 3:19-21
   - ຊນະໂລກ ຊນະບາບ ................................1ໂຢຮັນ 5:3-4

3. **ຢ່າຍອມແພ້ການລໍ້ລວງ**
   - ຢ່າຍອມຮັບໃຊ້ເນື້ອໜັງ................................ໂຣມ 6:15-16
   - ຢ່າສົນໃຈສິ່ງທີ່ເປັນຝ່າຍເນື້ອໜັງ ................................ໂຣມ 8:5
   - ຢ່າຈັດຫຍັງໄວ້ບຳຣຸງເນື້ອໜັງ................................ໂຣມ 13:14
   - ຢ່າຄົບຄົນຊົ່ວ ................................1 ໂກຣິນໂທ 15:33
   - ຢ່າເອົາໃຈເນື້ອໜັງ................................ຄາລາເຕັຽ 5:16
   - ຢ່າເວົ້າເຣື່ອງທີ່ເປັນສິ່ງຊົ່ວ................................ເອເຟໂຊ 5:11-12
   - ຢ່າໄວ້ໃຈໃນເນື້ອໜັງ ................................ຟີລິບປອຍ 3:3
   - ຈົ່ງປະຫານໂລກີຍະວິສັຍ ................................ໂກໂລຊາຍ 3:5-10
   - ຈົ່ງປະຖິ້ມຄວາມຊົ່ວ ................................2 ຕີໂມທຽວ 2:19
   - ຈົ່ງຫລີກໜີສິ່ງທີ່ລໍ້ລວງ ................................2 ຕີໂມທຽວ 2:22
   - ຢ່າໃຫ້ກິເລສຊັກນຳງ່າຍ ໆ ................................ຢາໂກໂບ 1:14-15

4. **ຈົ່ງເອົາຊນະການລໍ້ລວງ**
   - ຂໍໃຫ້ພຣະເຢຊູຊ່ວຍ ................................ມັດທາຍ 6:13
   - ຈົ່ງອະທິຖານສເມີ ................................ມັດທາຍ 26:41

- ຈົ່ງສົນໃຈໃນສິ່ງຊຶ່ງເປັນຂອງຝ່າຍວິນຍານ ........................ ໂຣມ 8:5-6
- ຈົ່ງມີຊັຍໂດຍພຣະຄຣິສ ............................................. ໂຣມ 8:37
- ຈົ່ງຖວາຍຕົວແດ່ພຣະເຈົ້າ ........................................... ໂຣມ 12:1
- ຈົ່ງນ້ອມນຳຄວາມຄິດໃຫ້ຢູ່ໃຕ້ບັງຄັບ ............................. 2 ໂກຣິນໂທ 10:5
- ພຣະຄຣິສມີຊີວິດຢູ່ໃນເຮົາ ........................................... ຄາລາເຕັຽ 2:20
- ດຳເນີນຊີວິດຕາມພຣະວິນຍານ........................................ ຄາລາເຕັຽ 5:16, 25
- ຈົ່ງປະກອບດ້ວຍພຣະວິນຍານ ......................................... ເອເຟໂຊ 5:18
- ຈົ່ງຄິດເຣື່ອງທີ່ດີ......................................................... ຟີລິບປອຍ 4:8
- ພຣະເຢຊູຊົງເສີມກຳລັງ ................................................ ຟີລິບປອຍ 4:13
- ຈົ່ງຕໍ່ສູ້ໂດຍຄວາມເຊື່ອ ................................................. 1 ໂກຣິນໂທ 6:12
- ຈົ່ງສຶກສາພຣະວັຈນະ .................................................. 2 ຕີໂມທຽວ 3:16
- ຈົ່ງຮ່ວມປະຊຸມກັບຄຣິສຕຽນ.......................................... ເຮັບເຣີ 10:25
- ຈົ່ງອຸດສ່າຈົນສຸດກຳລັງ................................................. 2 ເປໂຕ 1:5-8

5. **ເງື່ອນໄຂໃຫ້ໄດ້ຮັບຄຳຕອບໃນການອະທິຖານ**

- ສາຣະພາບບາບກ່ອນ .................................................. ບົດເພງສັຣເສີນ 66:18
- ອະທິຖານດ້ວຍໃຈຈິງ ບໍ່ແມ່ນອວດໃຫ້ຄົນຊົມ .................. ມັດທາຍ 6:5-6
- ຢ່າເວົ້າຊ້ຳຄຳເກົ່າ ........................................................ ມັດທາຍ 6:7-8
- ຕ້ອງເຊື່ອວ່າຈະໄດ້ຮັບສິ່ງທີ່ຂໍນັ້ນ .................................. ມາຣະໂກ 11.24
- ຈົ່ງໃຫ້ອະພັຍຄົນທີ່ຜິດຕໍ່ເຮົາກ່ອນ .................................. ມາຣະໂກ 11:23-26
- ຢ່າທໍ້ໃຈ.......................................................................... ລູກາ 18:1
- ຈົ່ງຖ່ອມໃຈລົງ ບໍ່ອວດຕົວຕໍ່ພຣະເຈົ້າ ............................. ລູກາ 18:9-14
- ອ້ອນວອນໃນພຣະນາມຂອງພຣະເຢຊູ............................... ໂຢຮັນ 14:13
- ເຂົ້າສນິດຢູ່ໃນພຣະເຢຊູ .............................................. ໂຢຮັນ 15:7
- ອະທິຖານຢ່າງສມ່ຳສເມີ.................................................. 1 ເທຊະໂລນິກ 5:17-18
- ຂໍໂດຍຄວາມເຊື່ອຢ່າສົງສັຍ ........................................... ຢາໂກໂບ 1:7-8
- ຢ່າຂໍເພື່ອກິເລສຕັນຫາ .................................................. ຢາໂກໂບ 4:3
- ຢູ່ກັບພັຣຍາດ້ວຍຄວາມເຂົ້າໃຈ ເພື່ອບໍ່ໃຫ້ມີສິ່ງຂັດຂວາງ ..... 1 ເປໂຕ 3:7
- ເຮັດຕາມຄຳສັ່ງຂອງພຣະເຈົ້າ ......................................... 1 ໂຢຮັນ 3:22
- ຂໍຕາມພຣະປະສົງຂອງພຣະເຈົ້າ...................................... 1 ໂຢຮັນ 5:14-15

6. **ຈະອະທິຖານເຣື່ອງຫຍັງ**

- ເພື່ອຜູ້ທີ່ຂົ່ມເຫັງເຮົາ ..................................................... ມັດທາຍ 5:44
- ໃຫ້ໂລກເຊື່ອຟັງພຣະເຈົ້າ................................................. ມັດທາຍ 6:10
- ຂໍຊົງໂຜດປະທານສິ່ງຈຳເປັນ .......................................... ມັດທາຍ 6:11

- ຂໍຊີງໂພດຍົກໂທດ ........................................................ ມັດທາຍ 6:12
- ອະພັຍໂທດຜູ້ທີ່ທຳຜິດຕໍ່ເຮົາ........................................ ມັດທາຍ 6:12
- ເພື່ອຊນະການລໍ້ລວງ .................................................. ມັດທາຍ 6:13
- ໃຫ້ມີຄົນງານຂອງພຣະເຈົ້າຫລາຍຂຶ້ນ ............................ ມັດທາຍ 9:38
- ເພື່ອພີ່ນ້ອງທີ່ມີຄວາມລຳບາກ........................................ ກິຈການ 12:5
- ເຣື່ອງທຸກຢ່າງ ........................................................... ຟີລິບປອຍ 4:6
- ເພື່ອຜູ້ຮັບໃຊ້ຂອງພຣະເຈົ້າ ............................................ ໂກໂລຊາຍ 4:3
- ເພື່ອຄຣິສຈັກຂອງເຮົາ................................................... ໂກໂລຊາຍ 4:12
- ເພື່ອຄົນທັງຫລາຍ........................................................ 1 ຕີໂມທຽວ 2:1
- ເພື່ອກະສັດແລະຜູ້ນຳປະເທດ ........................................ 1 ຕີໂມທຽວ 2:2
- ເພື່ອຄົນທີ່ຍັງບໍ່ເຊື່ອ ..................................................... 1 ຕີໂມທຽວ 2:4
- ເພື່ອຄົນທີ່ເຈັບປ່ວຍ...................................................... ຢາໂກໂບ 5:15
- ເພື່ອກັນແລະກັນ ........................................................ ຢາໂກໂບ 5:16

ລົງ 10-18-99

# ບົດທີ 7
# ການໃຫ້ຄຳປຶກສາໃນເຫດການທີ່ຊຸກເສີນ
# (Crisis)

ຂ້າພະເຈົ້າກ້າວເຂົ້າເຮືອນມາດ້ວຍຄວາມຮູ້ສຶກທີ່ອິດເໝື່ອຍ ຈາກການເຮັດວຽກຕລອດວັນທີ່ຜ່ານມາ ແລະມີຄວາມຫວັງໃນໃຈວ່າຈະໄດ້ພັກຜ່ອນສະບາຍໃນຄືນນັ້ນ ແຕ່ວ່າວຽກໃນເຮືອນຍັງຄາຢູ່ ກໍຍັງມີຫລາຍຢ່າງຫລາຍແນວ ກວ່າຈະເຮັດແລ້ວກໍເລີຍ 10 ໂມງປາຍຕອນດຶກ ຢ່າງໃດກໍຕາມຂໍຂອບຄຸນພຣະເຈົ້າ ແລ້ວກໍເຂົ້ານອນສະບາຍ.

ເວລາ 1 ໂມງເຊົ້າມີສຽງໂທຣະສັບດັງສະນັ່ນເຮັດໃຫ້ຂ້າພະເຈົ້າຕື່ນທັງຫລັບທັງຝັນ ຕົກອົກຕົກໃຈຈົນໃຈສັ່ນ ແມ່ນຜູ້ໃດໂທມາດຶກດື່ນປານນີ້ ແມ່ນໃຜເຈັບ ແມ່ນໃຜຕາຍ ໂທມາແຕ່ຕ່າງລັດບໍ່ ຫລືຕ່າງປະເທດຄືໂທມາດຶກດື່ນແທ້ໜໍ

ໃນຮອບຊີວິດທີ່ຮັບໃຊ້ພຣະເຈົ້າຜ່ານມາ ຂ້າພະເຈົ້າໄດ້ພົບກັບເຫດການເຊັ່ນນີ້ຫລາຍເທື່ອ **"ເຫດການທີ່ຊຸກເສີນ"** ບໍ່ວ່າແຕ່ໃນເວລາດຶກດື່ນແນວນີ້ ຫລືໃນເວລາກາງວັນແທ້ ໆ ທີ່ກຳລັງເຮັດວຽກຢູ່ຫ້ອງການກໍມີຄົນໂທມາບອກວ່າ ດ່ວນ! ຜູ້ນີ້ຖືກເຈັບ ຜູ້ນັ້ນກິນຢາຕາຍສົ່ງໂຮງໝໍ ຄອບຄົວນັ້ນລູກເສັຍ ຄອບຄົວນີ້ມີບັນຫາ ຜົວເມັຍຜິດຖຽງກັນເກີດເຣື່ອງຕີກັນ ອາຈານຕ້ອງໄປແຈ້ງຄວາມກັບຕຳຣວດ ຕ້ອງໄປເຊັນໜັງສືກັບທະນາຍຄວາມ ຕ້ອງໄປແປພາສາໃຫ້ນາຍໝໍ ຕ້ອງໄປສານໃຫ້ຄຳພະຍານແກ້ຊຸນສານ ຕ້ອງໄປປອບໃຈຜູ້ເຖົ້າ ຕ້ອງໄປຊູກຍູ້ຊູໃຈຄົນເຈັບ ຕ້ອງໄປຫາເຂົ້າປາອາຫານແກ່ຄອບຄົວທີ່ປະສົບບັນຫາ ຕ້ອງໄປນອນເຝົ້າຢູ່ກັບຄອບຄົວທີ່ເກີດເຫດການຊຸກເສີນ ຍັງມີບັນຫາຫລາຍ ສິ່ງຫລາຍແນວ ທີ່ບໍ່ສາມາດຈະບັນລະຍາຍໃຫ້ໝົດໄດ້ ນີ້ເປັນພຽງຕົວຢ່າງເທົ່ານັ້ນ

## ນຶ່ງ. ເຫດການຊຸກເສີນແມ່ນຫຍັງ? (What is Crisis ?)

ເຫດການຊຸກເສີນແມ່ນສະຖານະການທີ່ເກີດຂຶ້ນຢ່າງໄວ ເກີດຂຶ້ນທັນດ່ວນ ເປັນເຫດຊຸກເສີນຊຶ່ງຜູ້ກ່ຽວຂ້ອງອາດຈະຮູ້ຕົວ ຫລືບໍ່ຮູ້ຕົວລ່ວງໜ້າມາກ່ອນ ແຕ່ເຈົ້າທຸກບໍ່ໄດ້ຕຽມການຫລືບໍ່ສາມາດຕຽມຕົວໄວ້ລ່ວງໜ້າ ເພື່ອຮັບມືກັບເຫດການ ແລະບໍ່ຮູ້ຕົວວ່າສະຖານະການໃນຮູບແບບນັ້ນຈະເກີດຂຶ້ນກັບຕົວເອງ ຫລືກັບຄອບຄົວຂອງຕົນເອງ ເຫດການເຊັ່ນນີ້ນຳຄວາມຕົກອົກຕົກໃຈມາສູ່ຜູ້ກ່ຽວຢ່າງຫລວງຫລາຍ ທີ່ເຮັດໃຫ້ເຈົ້າທຸກບໍ່ຮູ້ຈັກວ່າຈະຮັບມື (handle) ຫລືແກ້ໄຂ (Re-do) ຫລືຕອບໂຕ້ (answer) ກັບບັນຫາໄດ້ແນວໃດ ເຈົ້າທຸກຢູ່ໃນລັກສະນະທີ່ຕົກຢູ່ໃນຄວາມຂະມ່າໃຈທີ່ບໍ່ຮູ້ຈັກຈະຄິດແກ້ໄຂແນວໃດເລີຍ ສັງເກດໄດ້ວ່າຜູ້ທີ່ຕົກຢູ່ໃນລັກສະນະແນວນີ້ ມັກມີທາງອອກທາງດຽວ ແມ່ນຮ້ອງຂໍໃຫ້ຜູ້ທີ່ຢູ່ໃກ້ຊິດສະນິດສະນົມຊ່ວຍ ຫລືໂດຍຮ້ອງຂໍໃຫ້ຜູ້ທີ່ຕົນເອງນັບຖືໄວ້ວາງໃຈ ໃຫ້ເຂົ້າມາຮັບກັບສະຖານະການອັກຊຸກເສີນນີ້ ເພື່ອນຳພາເອົາຕົວຂອງຜູ້ກ່ຽວກັບຄືນສູ່ສະພາບເດີມຫລືສະພາບທັມມະດາ ທີ່ສາມາດຕັ້ງຕົວ ແລະຕັ້ງ

ສະຕິໃໝ່ ຫລືຊ່ວຍໃຫ້ເກີດການຕັ້ງໃຈໃໝ່ ທີ່ຈະຮູ້ຈັກການດຳເນີນການແກ້ໄຂແລະຮັບກັບບັນຫາ ໂດຍຂໍການຊ່ວຍເຫລືອນຳພາຈາກພຣະເຈົ້າ ແລະຜູ້ທີ່ຢູ່ໃກ້ຊິດ ຊຶ່ງສະລຸບຄວາມໂດຍຫຍໍ້ວ່າ ເຫດການທີ່ຊຸກເສີນແມ່ນສະພາບການທີ່ຫຍຸ້ງຍາກທີ່ເກີດຂຶ້ນ ເຮັດໃຫ້ເຈົ້າທຸກຕົກຢູ່ໃນສະພາບທີ່ຖືກບີບບັງຄັບ ທັງໃນດ້ານຮ່າງກາຍແລະຈິດໃຈ ຮວມເຖິງຄວາມເຂັ້ມແຂງຝ່າຍວິນຍານຈິດໃຫ້ລົດນ້ອຍຖອຍລົງ ຈົນບໍ່ສາມາດຊ່ວຍຕົນເອງໄດ້

ຄວາມໃນພາສາຈີນ **"ເຫດຊຸກເສີນ"** (Crisis) ມາຈາກຄວາມນຶ່ງແປວ່າ **"ອັນຕລາຍ"** ແລະແປວ່າ **"ໂອກາດ"** ດັ່ງນັ້ນເຫດການຊຸກເສີນ ຈຶ່ງເປັນໂອກາດທີ່ຈະນຳຜູ້ກ່ຽວເຂົ້າສູ່ສະພາບການທີ່ອັນຕລາຍ ແຕ່ຈະຮ້າຍແຮງຫລາຍຫລືໜ້ອຍນັ້ນ ຂຶ້ນຢູ່ກັບເຣື່ອງທີ່ເກີດຂຶ້ນ CRISIS (ຄຣາຍຊິສ) ໃນຂໍ້ຄວາມພາສາອັງກິດມາຈາກຄຳວ່າ CRY (ຄຣາຍ) ຮ້ອງໄຫ້ ຮ້ອງອອກ ຮ້ອງຫາ

## ສອງ. ລັກສະນະຂອງສະຖານະການຊຸກເສີນແລະການຮັບມືກັບສະຖານະການ

**(1) ລັກສະນະທີ່ຮູ້ຕົວລ່ວງໜ້າ** ວ່າສະຖານະການຊຸກເສີນຈະເກີດຂຶ້ນ ຕົວຢ່າງຣັດຖະບານສະຫະຣັດອາເມຣິກາແລະຫລາຍ ໆ ປະເທດທົ່ວໂລກກຳລັງຮັບກັບສະຖານະການທີ່ຈະເກີດຂຶ້ນໃນປີ 2000 ຊຶ່ງຄາດວ່າອາດຈະເປັນເຫດການຊຸກເສີນທີ່ກໍ່ໃຫ້ເກີດພັຍຢ່າງໃຫຍ່ຫລວງແກ່ປະຊາຊົນໃນດ້ານຕ່າງ ໆ ຫລືຕົວຢ່າງບັນຫາໃກ້ຕົວເຊັ່ນຫົວໜ້າຄອບຄົວຫລືພໍ່ເຮືອນເປັນພະຍາດໂລກຮ້າຍ ນາຍໝໍບອກວ່າຈະຕ້ອງຕາຍພາຍໃນ 6 ເດືອນຫລື 1 ປີແມ່ບ້ານແມ່ເຮືອນກໍຕົກໃນສະພາບທີ່ຕ້ອງຕຽມຕົວຮັບກັບສະຖານະການອັນຊຸກເສີນທີ່ກຳລັງກ້າວເຂົ້າມາ

__ການຮັບມື__ ສະຖານະການຊຸກເສີນແບບທີ່ຮູ້ຕົວລ່ວງໜ້ານີ້ ຜູ້ກ່ຽວສາມາດຮ້ອງຂໍຄວາມຊ່ວຍເຫລືອໄດ້ລ່ວງໜ້າ ສຳລັບຜູ້ທີ່ຈະໃຫ້ຄວາມຊ່ວຍເຫລືອ ກໍສາມາດນຳເອົາຂໍ້ມູນມາສຶກສາ ມາພິຈາຣະນາຮ່ວມກັບຜູ້ກ່ຽວ ແລ້ວຫາທາງອອກທີ່ດີທີ່ສຸດ ເພື່ອ" ຮັບມື " ກັບສະຖານະການທີ່ຈະເກີດຂຶ້ນຊຶ່ງອາດຈະຊ່ວຍໃຫ້ຜູ້ກ່ຽວບໍ່ຕ້ອງຕົກຢູ່ໃນສະພາບທີ່ຮ້າຍແຮງແຕ່ຜ່ອນຜັນໃຫ້ຜູ້ກ່ຽວສາມາດຜ່ານພົ້ນເຫດການອັນຊຸກເສີນໄດ້ ຍ້ອນໄດ້ຕຽມຕົວຕຽມໃຈ ແລະພຣະເຈົ້າໄດ້ປ່ຽນສະພາບການອັນຮ້າຍນັ້ນໃຫ້ກາຍເປັນດີໄດ້

**(2) ລັກສະນະທີ່ບໍ່ສາມາດຮູ້ຕົວວ່າຈະເກີດ** ແມ່ນສະຖານະການຊຸກເສີນທີ່ເປັນອຸບັດຕິເຫດ ຕົວຢ່າງ ເຄື່ອງຈັກຕັດມື ຣົດຕຳກັນ(ຣົດຊົນກັນ) ເກີດເຈັບໜັກ ຫລືຕາຍການທຳຮ້າຍປົ້ນຈີ້ ຖືກຕີຖືກຂ້າ ຖືກໄລ່ອອກຈາກງານ ໄຟໄໝ້ເຮືອນ ຜົວໜີປະເມັຍ ເມັຍໜີປະຜົວ ລູກຖືກລັກພາໜີ

__ການຮັບມື__ ສະຖານະການອັນຊຸກເສີນໃນຮູບແບບທີ່ບໍ່ສາມາດຮູ້ຕົວໄດ້ລ່ວງໜ້ານີ້ ມີຄວາມຮ້າຍແຮງກວ່າລັກສນະທີ່ຮູ້ຕົວລ່ວງໜ້າວ່າເຫດການຈະເກີດຂຶ້ນ ເພາະວ່າຜູ້ກ່ຽວຕ້ອງຕົກຢູ່ໃນຄວາມຂະມ່າໃຈ ຕົກໃນຄວາມຮູ້ສຶກທີ່ມືດໝົດທຸກດ້ານ ບໍ່ຮູ້ຈັກຈະເຮັດຫຍັງທຳຫຍັງ ຄິດບໍ່ອອກ ບໍ່ຮູ້ວ່າຈະຮັບມືກັບສະຖານະການໄດ້ຢ່າງໃດ ດັ່ງນັ້ນຜູ້ທີ່ຖືກເອີ້ນຮຽກໃຫ້ຊ່ວຍ ຕ້ອງເຂົ້າຮັບສະຖານະການອັນຊຸກເສີນນັ້ນຢ່າງໄວ ແລະກະທັນຫັນ ບາງກໍຣະນີຜູ້ເຂົ້າຊ່ວຍເຫລືອຕ້ອງເປັນຜູ້ຮັບມືສະຖານະການທັງໝົດ ອາດມີການຕັດສິນໃຈແກ້ໄຂບັນຫາອັນຊຸກເສີນແທນເຈົ້າທຸກ ອາດຈຳເປັນຕ້ອງໃຊ້ຊັບສິນ (Resource) ຊ່ວຍໂດຍສຸດຄວາມສາມາດໃນທຸກດ້ານ ທັງທາງດ້ານກຳລັງຝ່າຍຮ່າງກາຍ ຝ່າຍຈິດໃຈ ແລະຝ່າຍວິນຍານຂອງຜູ້ທີ່ເຂົ້າໄປຊ່ວຍ ແລະຕ້ອງຊ່ວຍໃຫ້ຜູ້ທີ່ປະສົບກັບບັນຫາສາມາດກັບຄືນສູ່ສະພາບປົກກະຕິ ທັງທາງຮ່າງກາຍແລະຈິດໃຈທີ່ຈະໃຫ້ເຂົາສາມາດຢືນຢູ່ໄດ້ ແລະສາມາດຮັບມືກັບເຫດການທີ່ເກີດຂຶ້ນໄດ້ດ້ວຍຕົວເຂົາເອງ

ສະລຸບໂດຍຍໍ້ເຖິງການຮັບມືກັບເຫດການຂຸກເສີນໃນທຸກຮູບແບບຕ້ອງກ່ຽວຂ້ອງກັບສິ່ງເຫລົ່ານີ້

1. ມີເຫດຂຸກເສີນທີ່ເກີດຂຶ້ນ
2. ມີການຮ້ອງຂໍໃຫ້ຊ່ວຍ
3. ມີຜູ້ເຂົ້າໄປຊ່ວຍ
4. ຜູ້ຮ້ອງຂໍຄວາມຊ່ວຍເຫລືອຕ້ອງໃຫ້ຄວາມຮ່ວມມື ເພື່ອຜູ້ທີ່ເຂົ້າຊ່ວຍຈະໄດ້ຊ່ວຍຢ່າງຖືກຕ້ອງກັບບັນຫາ
5. ຫາກວ່າຜູ້ຮ້ອງຂໍຄວາມຊ່ວຍເຫລືອບໍ່ສາມາດໃຫ້ຄວາມຮ່ວມມືໄດ້ ຍ້ອນຕົກຢູ່ໃນສະພາບທີ່ເວົ້າບໍ່ໄດ້ ຄິດບໍ່ອອກ ຜູ້ທີ່ເຂົ້າໄປຊ່ວຍຕ້ອງໃຊ້ຄວາມສາມາດຢ່າງທີ່ສຸດ ທັງທາງຮ່າງກາຍ ຈິດໃຈ ແລະຄວາມຄິດ ເພື່ອແກ້ໄຂ

   ສະຖານະການ
6. ຜູ້ໃຫ້ຄວາມຊ່ວຍເຫລືອຕ້ອງຊ່ວຍໃຫ້ເຈົ້າທຸກສາມາດກັບຄືນສູ່ສະພາບທີ່ດີຂຶ້ນ ຈົນກວ່າເຈົ້າທຸກຈະສາມາດຊ່ວຍ ຕົນເອງໄດ້ ຫລືໃນກໍຣະນີຮ້າຍແຮງຫລາຍ ຕ້ອງນຳເອົາຫລາຍຄົນເຂົ້າມາຮ່ວມມືກັນ ເພື່ອຊ່ວຍເຫລືອເຈົ້າທຸກ
7. ຜູ້ໃຫ້ຄວາມຊ່ວຍເຫລືອຕ້ອງຮູ້ຈັກ ແລະກ້າຕັດສິນໃຈທີ່ຈະເລືອກເອົາສິ່ງທີ່ດີ ຫລືດີທີ່ສຸດ ທີ່ມີຢູ່ໃນເວລານັ້ນ ເພື່ອບັນເທົາຄວາມທຸກຂອງຜູ້ທີ່ຮ້ອງຂໍຄວາມຊ່ວຍເຫລືອ ໃນເວລາທີ່ເຈົ້າທຸກຕັດສິນໃຈບໍ່ໄດ້
8. ຜູ້ໃຫ້ຄວາມຊ່ວຍເຫລືອຕ້ອງຮູ້ຈັກສະເນີຂໍ້ແກ້ໄຂ ຫລືແນະນຳໃຫ້ເຈົ້າທຸກມີຄວາມແນ່ນອນໃນເຣື່ອງການຕັດສິນໃຈ ແລະເລືອກເອົາທາງເດີນທີ່ຈະຊ່ວຍກູ້ໃຫ້ສະຖານະການດີຂຶ້ນ
9. ຜູ້ໃຫ້ຄວາມຊ່ວຍເຫລືອຕ້ອງຮູ້ຈັກເອີ້ນຮ້ອງໃຫ້ຜູ້ອື່ນເຂົ້າມາຊ່ວຍຮ່ວມມື ເພື່ອກອບກູ້ສະຖານະການໃຫ້ດີຂຶ້ນ ອາດຈະຕ້ອງຂໍຮ້ອງເຣື່ອງເຂົ້າປາອາຫານ ເຄື່ອງນຸ່ງຫົ່ມ ທີ່ພັກພາອາໄສ ການເງິນ ເວລາ ກຳລັງແຮງງານ ຄວາມຄິດ ຄວາມເຫັນໃຈ ການເດີນທາງໄປຕິດຕໍ່ເຣື່ອງ ແລະການເສັຍສະລະດ້ານຕ່າງ ໆ ຈາກຄົນຫລາຍຝ່າຍ.
10. ຜູ້ໃຫ້ຄວາມຊ່ວຍເຫລືອ ຕ້ອງເລີ້ມຕົ້ນຊ່ວຍໂດຍໄວ ຢ່າງດີທີ່ສຸດແລະດຳເນີນຕໍ່ເນື່ອງການຊ່ວຍເຫລືອຈົນກວ່າເຈົ້າທຸກສາມາດຮັບພາລະຕໍ່ໄປໄດ້ ຫລືມີຜູ້ອື່ນທີ່ເໝາະສົມກວ່າມາຮັບຊ່ວງດຳເນີນການຕໍ່ໄປ

## ສາມ. ຂັ້ນຕອນຂອງຄວາມຊ່ວຍເຫລືອຫລືກອບກູ້ເຫດການທີ່ຂຸກເສີນ

<u>ຄຳວ່າ CRISIS ຂຍາຍຄວາມໝາຍອອກໄດ້ດັ່ງນີ້</u>

| | |
|---|---|
| C- Connect | ແມ່ນການເຂົ້າກ່ຽວຂ້ອງຕິດຕໍ່ກັບສະຖານະການໂດຍໄວ |
| R- Reflect | ແມ່ນການສະທ້ອນ ຄິດເຖິງ ທົບທວນເຫດການທີ່ເກີດຂຶ້ນ |
| I- Identify | ແມ່ນການເຂົ້າໃຈເບິ່ງເຫັນສາເຫດ ທີ່ກໍ່ໃຫ້ເກີດເຫດການ |
| S- Stress ( or Strengths ) | ແມ່ນນ້ຳໜັກຄວາມບີບຄັ້ນທີ່ມີຕໍ່ສະຖານະການ |
| I- Implement | ແມ່ນການລົງມືເຮັດໃຫ້ສຳເຣັດ ເຕັມໃຈກູ້ສະຖານະການໃຫ້ດີຂຶ້ນ |
| S- Strategies | ແມ່ນການວາງຫລັກການຂັ້ນຕອນ ເພື່ອຊ່ວຍກູ້ສະຖານະການຢ່າງມີລຳດັບຂັ້ນຕອນ |

1) C -Connect ຄົນທີ່ໃຫ້ຄວາມຊ່ວຍເຫລືອຕ້ອງຕັດສິນໃຈຢ່າງເດັດຂາດ ທີ່ຈະເຂົ້າກ່ຽວຂ້ອງກັບສະຖານະການ ໂດຍບໍ່ລັງເລໃຈ ເພາະວ່າການລັງເລໃຈຈະເປັນຜົນຮ້າຍຕໍ່ເຈົ້າທຸກ ຖ້າມີຄວາມລັງເລໃຈຕ້ອງຮ້ອງຂໍຄວາມຊ່ວຍເຫລືອຕໍ່ຈາກຜູ້ອື່ນໂດຍດ່ວນ ແລ້ວຕົນເອງຫລີກອອກຫ່າງເປີດທາງໃຫ້ຜູ້ອື່ນທີ່ເຂົາຊ່ວຍໄດ້ ເຂົ້າຊ່ວຍທັນທີ ຜູ້ທີ່ເຂົ້າຊ່ວຍໂດຍທັນທີນັ້ນຕ້ອງຮູ້ຈັກເຊື່ອມໂຍງຕໍ່ເນື່ອງເຖິງເຫດການທີ່ເກີດຂຶ້ນໂດຍໄວ ແລະສ້າງຄວາມໝັ້ນໃຈກະຊັບຄວາມສັມພັນອັນໜັກແໜ້ນ ເພື່ອໃຫ້ເຈົ້າທຸກເກີດຄວາມໄວ້ວາງໃຈ ໂດຍການໄປຫາເຈົ້າທຸກທັນທີ ເພື່ອມີການສຳຜັດໃຫ້ເກີດຄວາມໝັ້ນໃຈ ເຊັ່ນເບິ່ງຫາເຈົ້າທຸກ ຈັບມືຖືແຂນໂອບໄຫລ່ ຕ້ອນຮັບ ສະແດງເຖິງຄວາມເຫັນອົກເຫັນໃຈ ແລະເຕັມໃຈທີ່ຈະຊ່ວຍ

2) R- Reflect ຜູ້ໃຫ້ຄວາມຊ່ວຍເຫລືອສາມາດເກັບກຳເອົາເຫດການທີ່ເກີດຂຶ້ນໄດ້ໂດຍໄວ ມີການທົບທວນເຖິງສະພາບການທີ່ເກີດຂຶ້ນເປັນຂັ້ນເປັນຕອນ ຖາມເຖິງເຫດການ ຕັ້ງໃຈຟັງ ສະແດງຄວາມສົນໃຈເຖິງບັນຫາ ສະແດງຄວາມເຫັນອົກເຫັນໃຈ ປລອບຂວັນສະແດງຄວາມຈິງໃຈ ທີ່ຈະຊ່ວຍໃຫ້ຄວາມໝັ້ນໃຈແກ່ເຈົ້າທຸກວ່າຈະບໍ່ປະຖິ້ມເຂົາ

3) I- Identify ຜູ້ໃຫ້ຄວາມຊ່ວຍເຫລືອຕ້ອງສາມາດເຂົ້າໃຈເຖິງສະຖານະການ ແລະສາເຫດທີ່ກໍ່ໃຫ້ເກີດບັນຫາ ໂດຍໃຫ້ເຈົ້າທຸກຫລືຜູ້ທີ່ກ່ຽວຂ້ອງເລົ່າເຣື່ອງໃຫ້ຟັງເຖິງສະຖານທີ່ ໆ ເກີດເຫດການ ເວລາອາການຄວາມເປັນມາພ້ອມທັງຜູ້ທີ່ມີສ່ວນກ່ຽວຂ້ອງກັບເຫດການ ຫາກວ່າຜູ້ໃຫ້ຄວາມຊ່ວຍເຫລືອບໍ່ສາມາດເຂົ້າໃຈເຖິງສາເຫດແຫ່ງບັນຫາ ກໍຈະບໍ່ສາມາດແກ້ໄຂບັນຫາໄດ້ຖືກຈຸດ ແຕ່ເມື່ອເຂົ້າໃຈສາເຫດຂອງບັນຫາດີແລ້ວ ກໍຈະເກີດການສະເນີແນະ ແລະນຳໃຫ້ເກີດການຕັດສິນໃຈເລືອກວ່າຈະດຳເນີນການຊ່ວຍເຫລືອເປັນຂັ້ນຕອນຕໍ່ໄປໃນທາງໃດດີ ໃນບາງກໍຣະນີເຈົ້າທຸກອາດບໍ່ຮູ້ຈັກຕົນເອງ ແລະບໍ່ຍອມເລົ່າບັນຫາສາເຫດໃຫ້ຟັງ ຫລືອາດຈະປະຕິເສດການຊ່ວຍເຫລືອ ຜູ້ໃຫ້ຄວາມຊ່ວຍເຫລືອອາດຈະຕ້ອງຫາຜູ້ອື່ນເຂົ້າມາແທນທີ່ ຊຶ່ງເຈົ້າທຸກມີຄວາມໃກ້ຊິດ ຄວາມໄວ້ວາງໃຈ ຫລືມີຄວາມເຂົ້າໃຈກັນໄດ້ ທີ່ຈະຢູ່ໃນວັຍ ອາຍຸ ເພດ ທີ່ຢູ່ໃນຣະດັບດຽວກັນກັບເຈົ້າທຸກ

4) S- Stress (or Strengths) ຜູ້ໃຫ້ຄວາມຊ່ວຍເຫລືອຕ້ອງຮູ້ຈັກວ່າ

ກ. **ຄວາມບີບຄັ້ນ** (Stress) ຂອງບັນຫາສາເຫດຫລືສະຖານະການ ທີ່ເກີດຂຶ້ນໄດ້ກໍໃຫ້ເກີດຄວາມຮ້າຍແຮງປານໃດ ມີຄວາມໜັກໜ່ວງ ພຽງໃດ ແລະຢູ່ໃນຣະດັບໃດ ?

ຂ. **ກຳລັງຄວາມສາມາດ** (Strengths) ທີ່ຈະໃຫ້ຄວາມຊ່ວຍເຫລືອ ຄວາມສາມາດທີ່ຈະແກ້ບັນຫາໄດ້ນັ້ນມາແຕ່ໃສ ຕົນເອງສາມາດຊ່ວຍເຂົາໄດ້ຫລືບໍ່ ຫລືຕ້ອງຫາຄວາມຊ່ວຍເຫລືອຈາກບ່ອນອື່ນ

5) I- Implement ຜູ້ໃຫ້ຄວາມຊ່ວຍເຫລືອຕ້ອງລົງມືເຮັດ ຫລືໃຫ້ຄວາມຊ່ວຍເຫລືອທັນທີ ດ້ວຍຄວາມເຕັມໃຈເພື່ອກູ້ສະຖານະການໃຫ້ດີຂຶ້ນ ຊຶ່ງຂຶ້ນຢູ່ກັບສະພາບການວ່າຮ້າຍແຮງຫລາຍຫລືບໍ່ ໂດຍອາໃສການຕັດສິນໃຈ ວ່າຈະເຮັດໄດ້ດ້ວຍກຳລັງຂອງຕົນເອງ ຫລືຮຽກເອີ້ນໃຫ້ຜູ້ອື່ນເຂົ້າມາຊ່ວຍ ຊຶ່ງອາດໝາຍເຖິງການແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຣວດ ຫລືໜ່ວຍດັບເພີງທີ່ຈະເຂົ້າມາຮັບມືກັບເຫດການທັນທີ.

6) S- Strategies ຜູ້ໃຫ້ຄວາມຊ່ວຍເຫລືອຕ້ອງມີຫລັກການ ແລະຂັ້ນຕອນຂອງການຊ່ວຍເຫລືອໂດຍໄວແລະຊ່ວຍໄດ້ທັນເວລາ ຫລັກການຂັ້ນຕອນທີ່ກ່າວເຖິງນີ້ແມ່ນຄວາມຄິດ ແລະແບບແຜນທີ່ເກີດຂຶ້ນທັນທີທີ່ຮີບດ່ວນ ຊຶ່ງອາດຈະບໍ່ດີທີ່ສຸດ ແຕ່ວ່າມັນດີທີ່ສຸດໃນເວລານັ້ນ ຫລືດີກວ່າທີ່ບໍ່ໄດ້ເຮັດຫຍັງເລີຍ ເພື່ອກູ້ສະພາບການໃຫ້ດີຂຶ້ນ ຫລັງຈາກນັ້ນແລ້ວຈຶ່ງວາງຫລັກການຕໍ່ໄປ ເພື່ອຊ່ວຍເຫລືອຕໍ່ເນື່ອງເລື້ອຍໄປຈົນກວ່າເຈົ້າທຸກສາມາດຊ່ວຍຕົນເອງໄດ້ ໂດຍພິຈາຣະນາວ່າ ກຳລັງຄວາມສາມາດທີ່ຈະຊ່ວຍມາແຕ່ໃສ ເຮັດໄດ້ແນວໃດ ໃຊ້ເວລາດົນນານ ຫລືຕ້ອງໃຊ້ຈຳນວນເງິນເທົ່າໃດ ເລີ້ມຕົ້ນເມື່ອໃດ ໃຜເປັນຜູ້ເຮັດ ໃຜແມ່ນຜູ້ເບິ່ງແຍງຕໍ່ໄປແລ້ວຜົນດີຈະເກີດຂຶ້ນແນວໃດແດ່.

## ສີ່. ການອະພິບາລສິດໃນຍາມຊຸກເສີນ.

ຖານະຂອງສິດຍາພິບາລ ໄດ້ຮັບຄວາມສຸກພົບກັບຄວາມຍິນດີ ເມື່ອມີເດັກນ້ອຍເກີດໃໝ່ໃນຄອບຄົວຂອງສະມາຊິກ ຍິນດີທີ່ລູກແກະຂອງຕົນໄດ້ເລື່ອນຍົດ ເລື່ອນຕຳແໜ່ງສູງ ຍິນດີທີ່ເຫັນເຂົາຊື້ເຮືອນໃໝ່ ແລະມີຣິຖຸຄົນງານຍິນດີທີ່ເຫັນຄົນໜຸ່ມສາວໃນຄຣິສຈັກໄດ້ເຂົ້າສູ່ພິທີແຕ່ງງານ ມີຄວາມດີໃຈທີ່ໄດ້ເຫັນເດັກນ້ອຍໄດ້ລາງວັນຈາກໂຮງຮຽນ ແລະຜູ້ເຖົ້າສະລອງວັນເກີດຄົບຮອບ 100 ປີ ແຕ່ໃນອີກດ້ານນຶ່ງຂອງການອະພິບາລສິດ ທ່ານສິດຍາພິບາລ ຕ້ອງເສົ້າໝອງຮ້ອງໄຫ້ນຳລູກແກະແລະສະມາຊິກ ເມື່ອເຖິງຄາວທຸກຍາກ ຕ້ອງໄດ້ຮ່ວມທຸກນຳ ໃນຍາມເຫດຊຸກເສີນ ສະພາບການທີ່ລຳບາກຍິ່ງຕ້ອງເຂົ້າໃກ້ໃຊ້ເວລາ ແລະໃຫ້ຄວາມແນະນຳຊ່ວຍເຫລືອ ພຣະທັມໂຣມ 8:22 ໄດ້ກ່າວວ່າ *"ເຮົາທັງຫລາຍຮູ້ຢູ່ວ່າສັພສິ່ງທີ່ຊົງສ້າງມານັ້ນກໍກຳລັງ ໂອຍຄາງ ແລະເປັນທຸກເຈັບປວດດ້ວຍກັນມາຈົນທຸກວັນນີ້"* ຍ້ອນວ່າໂລກນີ້ຕົກໃນບາບ ແຕ່ແລກເດີມທີ່ມາ ເຮົາຮູ້ວ່າເຮົາໜີຈາກຄວາມທຸກຍາກ ແລະສະພາບການແຫ່ງຄວາມຄວາມທຸດຍາກບໍ່ໄດ້ ເພາະວ່າເຮົາຍັງຢູ່ໃນໂລກນີ້ ແຕ່ສິ່ງທີ່ຊູໃຈເຮົາທັງຫລາຍແມ່ນວ່າ ພຣະເຈົ້າຊົງຢູ່ນຳເຮົາ ແລະພຣະອົງຊົງເປັນພຣະເຈົ້າທີ່ເຮົາຮ້ອງຫາ ມາປອບຂວັນ ມານຳພາ ມາຊ່ວຍເຫລືອ ມາເບິ່ງແຍງ ແລະຄູ້ມຄອງຮັກສາໃຫ້ປອດພັຍ ໃຫ້ຄວາມທຸກຮ້າຍນັ້ນພ່າຍໜີໄປ ພຣະທັມເພັງສັນລະເສີນ 71:6 ກ່າວວ່າ *"ຂ້ານ້ອຍໄວ້ໃຈນຳພຣະອົງຕລອດຊົ່ວຊີວິດຂອງຂ້ານ້ອຍ ເພາະວ່າພຣະອົງຊົງຄູ້ມຄອງຂ້ານ້ອຍຕັ້ງແຕ່ຂ້ານ້ອຍໄດ້ເກີດມາ ຂ້ານ້ອຍຈະສັນລະເສີນພຣະອົງຕລອດໄປ"*

ພຣະທັມເພັງສັນລະເສີນ 34:15 ກ່າວວ່າ *"ພຣະຜູ້ເປັນເຈົ້າຊົງຄອຍເຝົ້າເບິ່ງແຍງຄົນຊອບທັມ ແລະຊົງຟັງສຽງຮ້ອງຂໍຂອງພວກເຂົາ"* ຄວາມເຫລົ່ານີ້ສົມຄວນເປັນຄຳອ້ອນວອນຂອງສິດຍາພິບາລ ແລະພຣະທັມເອຊາຢາ 51:1 ໄດ້ສະເນີຄວາມໝັ້ນໃຈແກ່ຜູ້ຢູ່ໃນຄວາມທຸກວ່າ *"ຈົ່ງຟັງເຖີ້ນ ຜູ້ທີ່ຕ້ອງການຄວາມພົ້ນເອີຍ ພຣະຜູ້ເປັນເຈົ້າກ່າວວ່າ ຄືພວກເຈົ້າທີ່ມາຫາເຮົາເພື່ອໃຫ້ເຮົາຊ່ວຍເຫລືອນັ້ນ ຈົ່ງຄິດຫາໂງ່ນຫີນທີ່ພວກເຈົ້າໄດ້ມາ ຈົ່ງຄິດເຖິງບໍ່ຫີນຈາກບ່ອນທີ່ພວກເຈົ້າ ໄດ້ຂຸດມານັ້ນ"*

ສິດຍາພິບາລຖືກເອີ້ນມາເພື່ອຢູ່ໃກ້ຊິດກັບສະມາຊິກ ເໝືອນດັ່ງຜູ້ລ້ຽງແກະທີ່ເຝົ້າຝູງແກະຂອງພຣະເຈົ້າທັງກາງວັນແລະກາງຄືນ. ດັ່ງນັ້ນສິດຍາພິບາລຈຶ່ງຕ້ອງຕຽມຕົວຂອງຕົນໃຫ້ພ້ອມຢູ່ສະເມີ ເພື່ອຕອບສນອງຕໍ່ຄວາມຕ້ອງການຂອງສະມາຊິກໃນຍາມຊຸກເສີນ.

1. ສິດຍາພິບາລຕ້ອງໄດ້ຮັບການອົບຮົມຝຶກຝົນຕົນເອງໃຫ້ຕຽມພ້ອມ ເມື່ອເກີດເຫດຊຸກເສີນ ຕົວຢ່າງເຂົ້າຮັບການອົບຮົມເຣື່ອງການໃຫ້ຄຳປຶກສາແນະນຳ (Counseling) ສົນໃຈອ່ານໃບປິວຫລືປຶ້ມຄວາມຄວາມທີ່ກ່ຽວຂ້ອງກັບເຫດການຊຸກເສີນແນວຕ່າງ ໆ ມີຂໍ້ພຣະຄັມພີໄວ້ພ້ອມສຳລັບສະພາບການຕ່າງ ໆ ມີຄຳອ້ອນວອນອະທິຖານທີ່ສະແດງເຖິງຄວາມເອົາໃຈໃສ່ ແລະຕົງຈຸດກັບຄວາມຕ້ອງການຂອງສະມາຊິກ
2. ສິດຍາພິບາລຕ້ອງມີເຄື່ອງມືອຸປະກອນຕ່າງ ໆ ໄວ້ພ້ອມ ເພື່ອຕິດຕໍ່ກັບສະມາຊິກຫລືໜ່ວຍງານຕ່າງ ໆ ເຊັ່ນ ສະມຸດໂທຣະສັບທີ່ມີໝາຍເລກທີ່ສຳຄັນ ເຊັ່ນສະຖານີຕຳຣວດ ກອງດັບເພີງ ໂຮງໝໍ ແລະລາຍຊື່ຜູ້ນຳຄຣິສຈັກ.
3. ສິດຍາພິບາລຕ້ອງມີການສິດສອນສະມາຊິກໃຫ້ຮູ້ຈັກການຮ່ວມມືກັນໃນຍາມຊຸກເສີນ ມີການວາງແບບແຜນຢ່າງຍໍ້ ໆ ເພື່ອສະດວກໃນການຕິດຕໍ່ຂໍຄວາມຊ່ວຍເຫລືອ ຝຶກຝົນກັມມະການ ແລະເຈົ້າໜ້າທີ່ແຕ່ລະຝ່າຍໃຫ້ຮູ້ຈັກປະຕິບັດໜ້າທີ່ຂອງຕົນຢ່າງທັນເວລາ
4. ສິດຍາພິບາລຄວນຈັດຫາ ໃຫ້ມີກອງສະນັບສະນູນຢູ່ເບື້ອງຫລັງ ຕົວຢ່າງ ຄະນະສັດຣີ ຄະນະຜູ້ບົວລະບັດອະທິຖານເພື່ອຢູ່ບໍ່ຂາດ ມີການພັດປ່ຽນເວລາເບິ່ງແຍງ ເຝົ້າຍາມ ແລະຮັກສາໃນຍາມທີ່ມີເຫດຮ້າຍເກີດແກ່ຄອບຄົວໃດຄອບຄົວນຶ່ງ
5. ສິດຍາພິບາລຕ້ອງຮູ້ຈັກສະພາບຈິຕສາດ (Psychology) ຂອງບຸກຄົນ ວ່າຢູ່ໃນລະດັບໃດ ຕ້ອງການຂນາດຂອງຄວາມຊ່ວຍເຫລືອແນວໃດ ສິດຍາພິບາລຕ້ອງຮູ້ຈັກຄວາມສາມາດຂອງຕົນແລະຕ້ອງຍອມຮັບວ່າ ບັນຫາບາງແນວຕົນເອງບໍ່ສາມາດຊ່ວຍເຫລືອໄດ້ ຕ້ອງກ້າຫານທີ່ຈະນຳພາໃຫ້ເຈົ້າທຸກໄດ້ພົບກັບການຊ່ວຍເຫລືອຢ່າງພຽງພໍ ຈາກນາຍໝໍຈິຕວິທະຍາ ຫລືຜູ້ຊ່ຽວຊານບັນຫານັ້ນ ໆ

ແຕ່ໃນທີ່ສຸດນີ້ ຜູ້ເປັນສິດຍາພິບາລຕ້ອງສະແດງເຖິງແບບຢ່າງໃນຄວາມເຊື່ອ ຄວາມຮັກ ແລະຄວາມຫວັງທີ່ມີຢູ່ໃນອົງພຣະເຢຊູຄຣິສອົງພຣະຜູ້ເປັນເຈົ້າຂອງເຮົາ ເພື່ອເປັນແບບຢ່າງແກ່ລູກແກະທີ່ຕົກຢູ່ໃນສະພາບການແຫ່ງຄວາມທຸກຍາກ ເຂົາຈະໄດ້ມີທີ່ເພິ່ງພາອາໄສ ແລະທີ່ຍຶດໜ່ຽວ ເພາະວ່າຄວາມຊ່ວຍເຫລືອຂອງເຮົາມາຈາກໃສ ຄວາມຊ່ວຍເຫລືອຂອງເຮົາມາຈາກພຣະເຈົ້າ *"ການຊ່ວຍເຫລືອຂ້າພະເຈົ້າມາຈາກພຣະຜູ້ເປັນເຈົ້າ ຊຶ່ງເປັນພຣະຜູ້ສ້າງສວັນຊັ້ນຟ້າ ແລະແຜ່ນດິນໂລກ"* (ພຣະທັມເພງສັນລະເສີນ121:2)

11-23-99

# ບົດທີ 8

## ແນະນຳການອະພິບາລຄອບຄົວ

## (Family)

ຄອບຄົວເປັນໜ່ວຍສັງຄົມແລກ ທີ່ມີຄວາມສັມຄັນທີ່ສຸດ ທີ່ພຣະເຈົ້າໄດ້ສຖາປນາໄວ້ ເພື່ອເປັນສຖາບັນທີ່ຮັບຄຳອວຍພອນຈາກພຣະເຈົ້າ ທີ່ຈະໃຫ້ມີລູກຫລານເກີດທົ່ວແຜ່ນດິນ ແລະຮູ້ຈັກໜ້າທີ່ປົກຄອງສັພສິ່ງໃນໂລກນີ້ແທນພຣະອົງ ໂດຍທັມມະຊາດແລ້ວທຸກ ໆ ຊີວິດທີ່ເກີດຂຶ້ນມາໃໝ່ຈະໄດ້ຮັບການລ້ຽງດູ ຮັບການເບິ່ງແຍງຮັກສາໃຫ້ຈະເຣີນຂຶ້ນທັງໃນດ້ານຮ່າງກາຍ ແລະຈິດໃຈຈາກຜູ້ເປັນພໍ່ເປັນແມ່ ໂດຍໃຫ້ການອົບຮົມສິດສອນ ຕາມວັຍແລະອາຍຸເພື່ອວ່າທຸກຄົນຈະໄດ້ຢູ່ຮ່ວມກັນເປັນຄອບຄົວ ຊຶ່ງເຮົາເອີ້ນໜ່ວຍສັງຄົມນີ້ວ່າ **"ຄອບຄົວ"** ອັນເປັນແຫລ່ງຫລືຈຸດເລີ້ມຕົ້ນຂອງການຫລໍ່ຫລອມຊີວິດໃຫ້ໃຫຍ່ຂຶ້ນໃນທິດທາງທີ່ຖືກຕ້ອງເໝາະສົມ ເພື່ອເປັນໜ່ວຍຂອງສັງຄົມທີ່ເຂັ້ມແຂງແລະສຳຄັນທີ່ສຸດ ທີ່ຈະສ້າງພື້ນຖານຄວາມໝັ້ນຄົງໃຫ້ແກ່ຊຸມຊົນ ແລະຄວາມເຂັ້ມແຂງແກ່ປະເທດຊາດ ດັ່ງມີຄຳຂວັນໄວ້ວ່າ "Family is a Society Fundation.." ຊຶ່ງມີຄວາມໝາຍວ່າ "ຄອບຄົວເປັນຮາກຖານອັນສຳຄັນຂອງສັງຄົມ" ໂດຍສະເພາະຢ່າງຍິ່ງແລ້ວຄອບຄົວຄຣິສຕຽນທີ່ມີພຣະເຈົ້າເປັນສູນກາງແຫ່ງຄວາມເຊື່ອ ຊຶ່ງແຕ່ລະຄອບຄົວຈຳເປັນຕ້ອງໄດ້ຮັບການສິດສອນໃຫ້ຮູ້ຈັກ ແລະເຂົ້າໃຈເຖິງຄວາມຮັກຂອງພຣະເຈົ້າທີ່ຜູກພັນເຂົາທຸກຄົນໃຫ້ເປັນອັນນຶ່ງອັນດຽວກັນ ຊຶ່ງແຕ່ລະຄົນອາສັຍຢູ່ນຳກັນເປັນຄອບຄົວ ໃຫ້ຄວາມຊ່ວຍເຫລືອເກື້ອກູນກັນ ແລະຈະເຣີນເຕີບໃຫຍ່ເປັນສ່ວນປະກອບອັນເຂັ້ມແຂງຂອງຊຸມຊົນແລະປະເທດຊາດຕໍ່ໄປ ແຕ່ທີ່ສຳຄັນທີ່ສຸດ ແມ່ນວ່າຄອບຄົວຄຣິສຕຽນສົມຄວນທີ່ຈະມີແບບຢ່າງໃນດ້ານຊີວິດການເປັນຢູ່ ທີ່ຖວາຍກຽດຕິຍົດແດ່ພຣະເຈົ້າ ດັ່ງຄຳຂວັນພາສາອັງກິດທີ່ກ່າວໄວ້ວ່າ

**HOME**
Where each lives for the other
And all live for God

## ຄົວເຮືອນ

**ແມ່ນສຖາບັນທີ່ ໆ ທຸກຄົນມີຊີວິດຢູ່ເພື່ອກັນແລະກັນ**
**ແລະທຸກຄົນທີ່ຢູ່ໃນຄົວເຮືອນນັ້ນ ຕ່າງມີຊີວິດຢູ່ເພື່ອອົງພຣະຜູ້ເປັນເຈົ້າ**

**ສິດຍາພິບາລອະພິບາລຄອບຄົວສມາຊິກ**

ຜູ້ເປັນສິດຍາພິບາລຕ້ອງໃຫ້ຄວາມໃກ້ຊິດ ແລະສັງເກດເບິ່ງແຕ່ລະຄອບຄົວຂອງສມາຊິກໂດຍມີຈຸດປະສົງວ່າ ໃນຖານະສິດຍາພິບາລຈະລ້ຽງດູລູກແກະໃຫ້ເຂົາຖືກຕ້ອງປອງດອງກັນ ແລະເປັນຄອບຄົວທີ່ດີ ເປັນຄອບຄົວທີ່ມີຄວາມສຸກໄດ້ຮັບພຣະພອນຈາກພຣະເຈົ້າ ຄວາມເຂັ້ມແຂງຂອງຄອບຄົວຈະກາຍເປັນຄວາມເຂັ້ມແຂງຂອງຄຣິສຈັກ ແລະເປັນແສງສວ່າງແກ່ຊຸມຊົນ ການສັງເກດເບິ່ງຄອບຄົວສມາຊິກ ຜູ້ເປັນສິດຍາພິບາລອາດຈະຈັດໄວ້ເປັນ 3 ລັກສະນະດັ່ງນີ້

<u>ລັກສະນະທີ່ 1 ຄອບຄົວທີ່ມີຄວາມສຸກ</u> ລັກສນະຄອບຄົວແບບທີ່ 1 ນີ້ຈະເປັນຄອບຄົວທີ່ໂດຍປົກຕິແລ້ວບໍ່ມີບັນຫາ ຫລືຫາກວ່າມີບັນຫາກໍມັກຈະເປັນບັນຫາເລັກ ໆ ນ້ອຍ ໆ ຕາມທັມມະດາທີ່ຕ້ອງພະເຊີນ ເພື່ອຄວາມຢູ່ຮອດໃນໂລກນີ້ ແລະສ່ວນຫລາຍແມ່ນບັນຫາທີ່ແກ້ໄດ້ໂດຍຄົນໃນຄອບຄົວ ແລະທຸກຄົນໃນຄອບຄົວຟັງຄວາມຊຶ່ງກັນແລະກັນ ພ້ອມທັງໃຫ້ການສນັບສນຸນເກື້ອກູນກັນ ເພື່ອໃຫ້ຜ່ານພົ້ນພາວະສຸກເສີນ ເຮົາຕ້ອງຍອມຮັບວ່າ ຄອບຄົວແນວນີ້ ມີຄວາມສຸກດີແລ້ວ ຊຶ່ງໃນຖານະສິດຍາພິບາບໄດ້ແຕ່ເບິ່ງແຍງຢູ່ຫ່າງ ໆ ແລະດີໃຈ ຂອບພຣະຄຸນພຣະເຈົ້າສຳລັບຄອບຄົວແບບນີ້ ສິດຍາພິບາລບໍ່ສົມຄວນຖືໂອກາດເອົາປຽບ ຫລືເຮັດໃຫ້ຕົວເອງເປັນພາຣະຕໍ່ຄອບຄົວເຫລົ່ານີ້ ແຕ່ສາມາດສົ່ງເສີມສນັບສນຸນຄອບຄົວທີ່ມີຄວາມສຸກນີ້ ໃຫ້ຮູ້ຈັກແບ່ງປັນ ແລະຊ່ວຍເຫລືອຄອບຄົວອື່ນ ໆ ຫລືສມາຊິກອື່ນ ໆ ຕໍ່ ໆ ໄປ

<u>ລັກສະນະທີ່ 2 ຄອບຄົວທີ່ເລີ້ມມີບັນຫາ</u> ຄອບຄົວແບບນີ້ ເລີ້ມຊີ້ໃຫ້ເຫັນບັນຫາ ເຊັ່ນ ສມາຊິກໃນຄອບຄົວເລີ້ມບໍ່ຟັງຄວາມກັນ ແລະບໍ່ຕິດຕໍ່ເວົ້າຈາກັນ ຫລືບໍ່ຍອມຮ່ວມມືໃນການແກ້ບັນຫາທີ່ມີຢູ່ໃນຄອບຄົວ ເລີ້ມມີການເຂົ້າໃຈຜິດກັນເລັກນ້ອຍ ແລ້ວເກັບສະສົມໄວ້ ບໍ່ນານກໍຣະເບີດອອກມາເປັນບັນຫາທີ່ໃຫຍ່ຂຶ້ນ ສມາຊິກໃນຄອບຄົວເບິ່ງລັກສະນະຂອງບັນຫາທີ່ແຕກຕ່າງກັນ ສິດຍາພິບາລສາມາດເຂົ້າຊ່ວຍເຫລືອໄດ້ ແຕ່ຕ້ອງຣະວັງຢ່າເຮັດໃຫ້ບັນຫາເລັກກາຍເປັນບັນຫາໃຫຍ່ ການຮັບຟັງຄວາມຄິດເຫັນຂອງທຸກ ໆ ຄົນໃນຄອບຄົວແມ່ນເຣື່ອງສຳຄັນ ແລະຂໍ້ສເນີແນະການແກ້ບັນຫາສົມຄວນມາຈາກຄຳແນະນຳຂອງສມາຊິກໃນຄອບຄົວ ຜູ້ເປັນສິດຍາພິບາລຕ້ອງວາງຕົວເປັນກາງ ແລະປະສານໃຫ້ທຸກສິ່ງທຸກຢ່າງເຂົ້າຫາກັນຢ່າງທັມຊາດ ໂດຍບໍ່ເຂົ້າກ້າວກ່າຍເຣື່ອງການຕັດສິນ ວ່າຝ່າຍໃດຖືກ ຝ່າຍໃດຜິດ ແຕ່ສເນີໃຫ້ແຕ່ລະຝ່າຍເຂົ້າໃຈໃນຝ່າຍກົງຂ້າມ ໂດຍໃຊ້ຄຳສອນຂອງພຣະຄັມພີເປັນເຄື່ອງເຕືອນຈິດໃຈໃນການແກ້ບັນຫາ

<u>ລັກສະນະທີ່ 3 ຄອບຄົວທີ່ມີບັນຫາແລ້ວ</u> ບາງຄັ້ງເປັນເຣື່ອງຍາກທີ່ຈະແກ້ໄຂບັນຫາທີ່ໄດ້ເກີດຂຶ້ນແລ້ວ ສິດຍາພິບາບລຕ້ອງຫາວິທີທາງ ທີ່ຈະຊ່ວຍໃຫ້ຄົນໃນຄອບຄົວເຫັນເຖິງບັນຫາແທ້ ໆ ທີ່ເປັນຕົ້ນເຫດໃຫ້ເກີດຄວາມທຸກ ຄວາມແຕກແຍກ ການແກ້ໄຂບັນຫາໃນຄອບຄົວແນວນີ້ເປັນເຣື່ອງຍາກ ສິດຍາພິບາລຕ້ອງຣະມັດຣະວັງໃຫ້ຫລາຍທີ່ສຸດ ທີ່ຈະບໍ່ເປັນຜູ້ຈຸດຊະນວນໃຫ້ບັນຫາເກີດລຸກລາມໃຫຍ່ຂຶ້ນໂດຍບໍ່ຈຳເປັນ ບັນຫາທີ່ມີຢູ່ອາດຈະຍຸ່ງຍາກຫລາຍແນວ ຫລືອາດຈະກ່ຽວຂ້ອງກັບເງິນຄຳຈຳນວນຫລາຍ ຢ່າງໃດກໍຕາມສິດຍາພິບາລຕ້ອງຊ່ວຍໃຫ້ຄົນໃນຄອບຄົວໃຫ້ຢູ່ຮ່ວມກັນ ເກີດການຜູກພັນກັນໃໝ່ ໂດຍຕັ້ງຄວາມຫວັງ ແລະມີຄວາມເຊື່ອວ່າ ພຣະເຈົ້າຈະເປັນສູນກາງແຫ່ງການແກ້ໄຂບັນຫາ ຊຶ່ງອາດຕ້ອງໃຊ້ເວລາ ແລະຄວາມອົດທົນ ແລະຄວາມຕັ້ງໃຈຢ່າງແທ້ຈິງ ເພື່ອໃຫ້ບັນຫາເຫລົ່ານັ້ນໄດ້ຜ່ານພົ້ນໄປ ມີການຕັ້ງຕົ້ນໃໝ່ແລະມີຄວາມຫວັງໃໝ່ ສິ່ງສຳຄັນແມ່ນບໍ່ກັບໄປຂຸດຄົ້ນບັນຫາເດີມມາໃຫ້ເກີດຄວາມ

ຫວຸ້ນວາຍອີກ ຊຶ່ງຈະຊ່ວຍໃຫ້ບັນຫາທີ່ມີຢູ່ນັ້ນເຊົາລົງ ວິທີທີ່ດີທີ່ສຸດ ທີ່ສິດຍາພິບາລສົມຄວນນໍາໄປໃຊ້ ແມ່ນການເວົ້າຈາກັບສມາຊິກແຕ່ລະຄົນໃນຄອບຄົວທີ່ກ່ຽວຂ້ອງກັບບັນຫາ ແລ້ວຈຶ່ງນໍາເຂົາທັງໝົດເຂົ້າມາເວົ້ານໍາກັນ ເພື່ອຫາຂໍ້ສລຸບໃນການແກ້ບັນຫາຮ່ວມກັນ ການຕິດຕາມຜົນຫລັງຈາກຂໍ້ສລຸບທີ່ໄດ້ຕົກລົງກັນໃນຄອບຄົວ ເປັນເຣື່ອງລະອຽດອ່ອນແລະສໍາຄັນຫລາຍ ສິດຍາພິບາລສົມຄວນຈະໄດ້ຮັບການອົບຮົມເປັນພິເສດໃນເຣື່ອງແບບນີ້ ເພື່ອຮູ້ຈັກຫລັກການ ແລະວິທີໃຫ້ຄວາມຊ່ວຍເຫລືອ ແລະເພື່ອຣະວັງຣະໄວບໍ່ໃຫ້ຕົວສິດຍາພິບາລເອງກາຍເປັນຄົນທີ່ເຂົ້າໄປເປັນສາເຫດເຮັດໃຫ້ບັນຫາລາມໃຫຍ່ໂຕຂຶ້ນອີກ

| ລັກສະນະຄອບຄົວທີ່ບໍ່ມີຄວາມສຸກ | ລັກສະນະຄອບຄົວທີ່ມີຄວາມສຸກ |
|---|---|
| 1. ຄົນໃນຄອບຄົວບໍ່ສົນໃຈຄວາມຮັບຜິດຊອບ | 1. ຄົນໃນຄອບຄົວແບ່ງປັນພາຣະຄວາມຮັບຜິດຊອບ |
| 2. ເວົ້າຈາບໍ່ໜ້າຟັງ ບໍ່ຄິດວ່າຈະເຮັດໃຫ້ຄົນອື່ນເສັຍໃຈ | 2. ຖະນອມນໍ້າໃຈກັນ ເວົ້າຈາກັນດີ ໆ |
| 3. ຕ່າງຄົນຕ່າງຢູ່ ຕ່າງຄົນຕ່າງໄປ | 3. ຢູ່ນໍາກັນ ໄປນໍາກັນ ເປັນສ່ວນຫລາຍ |
| 4. ບໍ່ເຫັນອົກເຫັນໃຈກັນ ບໍ່ຕ້ອງການເຂົ້າໃຈກັນ | 4. ເຫັນອົກເຫັນໃຈກັນ ພຍາຍາມເຂົ້າໃຈອີກຝ່າຍນຶ່ງ |
| 5. ບໍ່ຮັກ ບໍ່ສົງສານ ບໍ່ດູໝັ້ນ ບໍ່ເສັຍສລະ | 5. ຮັກແລະສົງສານ ດູໝັ້ນ ເສັຍສລະ |
| 6. ເຈົ້າອາຣົມ ຄິດເປັນແກ່ຕົວ ບໍ່ຍອມແບ່ງປັນ | 6. ຄິດເຫັນແກ່ຄົນໃນຄອບຄົວ ຮູ້ຈັກຍອມແບ່ງປັນ |
| 7. ບໍ່ເຄົາຣົບ ບໍ່ເກງໃຈກັນ | 7. ເກີດຄວາມເຄົາຣົບ ເກງໃຈກັນ |
| 8. ຜິດໃຈກັນງ່າຍ ເວົ້າມ່ວນບໍ່ເປັນ ບໍ່ຄວບຄຸມອາຣົມ | 8. ບໍ່ຜິດໃຈກັນງ່າຍ ເວົ້າຈາມ່ວນ ຮູ້ຈັກຄວບຄຸມອາຣົມ |
| 9. ບໍ່ຮູ້ຈັກຂໍອະພັຍ ບໍ່ຍອມໃຫ້ອະພັຍ | 9. ຮູ້ຈັກຂໍອະພັຍ ແລະຍອມໃຫ້ອະພັຍກັນ |
| 10. ຖືໃຈຕົນເອງເປັນໃຫຍ່ ບໍ່ຍ້ານຍໍາເກງພຣະເຈົ້າ | 10. ຍ້ານຍໍາເກງພຣະເຈົ້າ ຍອມຖ່ອມໃຈລົງເພື່ອເຫັນແກ່ພຣະເຈົ້າ |
| 11. ຄວາມສຸກແມ່ນຂອງຕົວເອງເທົ່ານັ້ນ | 11. ຄວາມສຸກແມ່ນຂອງຄອບຄົວ |
| 12. ຄອບຄົວບໍ່ມີຣະບຽບ | 12. ຄອບຄົວມີຣະບຽບ |

ຈາກຕາຕະລາງທາງເທິງປ່ຽງຫຽບໃຫ້ເຫັນຄວາມແຕກຕ່າງຣະຫວ່າງຄອບຄົວທີ່ມີຄວາມສຸກ ກັບຄອບຄົວທີ່ບໍ່ມີຄວາມສຸກ ຍ້ອນລັກສະນະຂອງຄອບຄົວຂາດຄວາມຮັກຂາດຄວາມຮັບຜິດຊອບ ບໍ່ຍອມເສັຍສລະບໍ່ຍອມເຂົ້າຫາກັນ ເພື່ອປັບຄວາມເຂົ້າໃຈກັນ ບໍ່ຮູ້ຈັກຮັກສານໍ້າໃຈ ບໍ່ເຄົາຣົບ ບໍ່ຍອມຟັງຄວາມກັນ ແລະບໍ່ຮູ້ຈັກການໃຫ້ອາພັບ ສິ່ງທີ່ສໍາຄັນທີ່ສຸດທີ່ເປັນກະແຈໄຂໄປສູ່ຄອບຄົວທີ່ມີຄວາມສຸກ ແມ່ນແຕ່ລະຄອບຄົວມີຄວາມຍ້ານຍໍາເກງແລະຮັກພຣະເຈົ້າ ຍອມຖ່ອມໃຈລົງແລະຂັບຕາມຄວາມສັ່ງສອນຂອງພຣະເຈົ້າ ແລະຍອມໃຫ້ພຣະເຈົ້າຊໍາຣະຈິດໃຈໃຫ້ເສາະໃສແລະໃຫ້ເກີດຣະບຽບໃນຊີວິດ

ສິດຍາພິບາລຜູ້ຮູ້ຈັກການອະພິບາລຄອບຄົວ ຕ້ອງມີຄວາມເຂົ້າໃຈເຖິງຈຸດສໍາຄັນຕ່າງ ໆ ດັ່ງທີ່ໄດ້ກ່າວມາແລ້ວທາງເທິງ ສິດຍາພິບາລຕ້ອງຮູ້ຈັກຈັດໃຫ້ສມາຊິກໄດ້ຮັບການຮຽນຮູ້ເຖິງຄວາມສໍາຄັນໃນແຕ່ແລະຫົວຂໍ້ ໂດຍຈັກ

ໃຫ້ມີການອົບຮົມສິດສອນ ຈັດໃຫ້ມີການສັມມະນາແລະການໃຫ້ຄໍາປຶກສາ ຫລືເຊີນຜູ້ຊໍານານໃນດ້ານຕ່າງ ໆ ເຂົ້າມາອົບຮົມໃຫ້ສມາຊິກຂອງທຸກ ໆ ຄອບຄົວໄດ້ມີໂອກາດຮຽນຮູ້ ແລະເຂົ້າໃຈຮູ້ຈັກເປັນພາກສ່ວນທີ່ດີຂອງຄອບຄົວ ແລະຊ່ວຍໃຫ້ຄອບຄົວຂອງຕົນມີຄວາມສຸກຖວາຍກຽດແດ່ພຣະເຈົ້າ

# ຄຸນຄ່າຂອງຄອບຄົວ

ໂດຍ **ສາສນາຈານ ດຣ. ບຸນຈັນ ວົງສຸຣິທຣ໌**

**ຄອບຄົວແມ່ນຫຍັງ?** ທັມມະດາຄອບຄົວປະກອບດ້ວຍພໍ່ ແມ່ ແລະລູກ ນອກຈາກນີ້ແລ້ວ ຄອບຄົວຍັງມີພີ່ນ້ອງອາສັຍຢູ່ນໍາດ້ວຍ ເຊັ່ນ ພໍ່ປູ່ ແມ່ຍ່າ ແລະພີ່ນ້ອງຄົນອື່ນ ໆ ໃນເມື່ອມີສອງຄົນຂຶ້ນໄປແລ້ວ ຖ້າຕ້ອງການຢູ່ດ້ວຍກັນຢ່າງສັນຕິສຸກແລ້ວ ຄອບຄົວນັ້ນຕ້ອງມີຂໍ້ຕົກລົງກັນເຖິງໜ້າທີ່ຂອງແຕ່ລະຄົນຢ່າງລະອຽດ ຕົວຢ່າງ ເວລາກິນນອນ ໃຜຄົວກິນ ລ້າງຖ້ວຍ...

**ຄອບຄົວໃນສະພາບໃໝ່** ເວລາພວກເຮົາໄດ້ມາອາໄສຢູ່ປະເທດທີ່ຈະເຣີນ ຄອບຄົວຂອງພວກເພີ່ນມີພຽງແຕ່ຜົວ ເມັຍ ແລະລູກເທົ່ານັ້ນ ເວລາພໍ່ແມ່ເຖົ້າແກ່ສະລາແລ້ວ ພວກເພີ່ນພາກັນໄປຢູ່ເຮືອນລ້ຽງຄົນເຖົ້າ ເພື່ອຄວາມສະດວກສ່ວນຕົວ ແລະບາງເທື່ອກໍຍ້ອນບັນຫາຫລາຍ ໆ ຢ່າງ ຕົວຢ່າງ ຍ້ອນບັນຫາສຸຂພາບ ບໍ່ມີບ່ອນຢູ່ພຽງພໍ ບໍ່ຖືກຕ້ອງກັນ...

ຫລັງຈາກພຣະເຈົ້າຊົງສ້າງທຸກຢ່າງແລ້ວ ພຣະອົງໄດ້ສະຖາປະນາຄອບຄົວ ເປັນສະຖາບັນທໍາອິດ (ປຖກ 2: 21-25) ການແຕ່ງງານເປັນຄອບຄົວ ແມ່ນພຣະປະສົງຂອງພຣະເຈົ້າ ແລະຄວາມຕ້ອງການຂອງມະນຸດອີກດ້ວຍ ໃນເມື່ອພຣະເຈົ້າມີພຣະປະສົງໃຫ້ພວກເຮົາມີຄວາມສຸກໃນຄອບຄົວ ແລະຄູນທະວີຂຶ້ນໃນໂລກ ໃຫ້ພວກເຮົາພະຍາຍາມທຸກວິທີທາງທີ່ຈະຮັກສາສະຖານບັນຂອງພຣະເຈົ້າໃຫ້ໝັ້ນຄົງຕລອດໄປ ພຣະຄໍາພີໃໝ່ຊົງສອນເຮົາວ່າ ໃນເມື່ອພຣະເຈົ້າເອົາເຂົາເຂົ້າກັນແລ້ວ ຢ່າໃຫ້ມະນຸດຄົນໃດເຮັດໃຫ້ພາກຈາກກັນນອກເໜືອໃນຖານຫລິ້ນຊູ້ (ມທ 19:4-9)

## ແມ່ນຫຍັງເຮັດໃຫ້ຄົນຢູ່ດ້ວຍກັນເປັນຄອບຄົວໄດ້?

ຄວາມຮັກເປັນສິ່ງທີ່ມະນຸດເຮົາທຸກຄົນປາຖນາ ແຕ່ຕ້ອງເຂົ້າໃຈວ່າ ຄວາມຮັກນັ້ນເກີດຂຶ້ນຈາກຈິດໃຈ ບໍ່ແມ່ນບັງຄັບ ຫລືຕໍ່ສູ້ເໝືອນສົງຄາມ ທັມມະດາຄວາມຮັກເກີດຂຶ້ນເພາະເຮົາເປັນຄົນ ໃຫ້ຄວາມຮັກກ່ອນ ທີ່ສຸດຄວາມຮັກນັ້ນກໍຕາມມາເປັນຂອງຂວັນ "ກິນແຈ່ວບ້ານໂຕຍັງດີກວ່າກິນລາບ ບ້ານຄົນອື່ນ" ຖ້າມີຄວາມຮັກ ພະລັງແຫ່ງຄວາມຮັກເປັນເຊືອກເສັ້ນໃຫຍ່ທີ່ຜູກພັນຫົວໃຈຂອງມະນຸດໃຫ້ຢູ່ດ້ວຍກັນ ກົງກັນຂ້າມຖ້າປາສະຈາກຄວາມຮັກແລ້ວມະນຸດອາດຈະຢູ່ຮ່ວມກັນເປັນຄອບຄົວໄດ້ ແຕ່ພວກເຂົາຈະບໍ່ມີຄວາມສຸກເລີຍ ພວກຜູ້ເຖົ້າແກ່ໂບຮານຍັງກ່າວວ່າ "ເອົາເມັຍ ເອົາຜົວຜິດຄຶດຈົນວັນຕາຍ" ໝາຍຄວາມວ່າ ແຕ່ງງານກັນໂດຍທີ່ບໍ່ມີຄວາມຮັກ ທຸກ ໆ ມື້ມີແຕ່ຜິດຖຽງກັນເໝືອນມີຊີວິດໃນໝົນນາຮົກທັງເປັນ ເວລາຂ້າພະເຈົ້າຈະແຕ່ງງານໃຫ້ຄົນນຶ່ງຄົນໃດ ຄໍາຖາມທີ່ແລກທີ່ຈະຕ້ອງຖາມ

ແມ່ນ "ດ້ວຍເຫດໃດທ່ານທັງສອງຈຶ່ງຢາກແຕ່ງງານກັນ?" ຖ້າເຂົາບໍ່ຮູ້ຄຳຕອບຂ້າພະເຈົ້າກໍໃຫ້ເວລາເຂົາຄຶດກ່ອນໃຫ້ດີ ແລະສວຍໂອກາດອ່ານພຣະຄຳຂອງພຣະເຈົ້າ ຈາກປຶ້ມ 1 ໂກຣິນໂທ 13: 1-13

**ຄວາມຮັກໃນພຣະຄຳພີມີຢູ່ສາມຢ່າງດ້ວຍກັນ**

1. **ຟີໂລ** (Philo) ແມ່ນຄວາມຮັກເໝືອນອ້າຍນ້ອງໃນຄອບຄົວ ໃນຄຣິສຈັກ ໃນໝູ່ບ້ານ ຕົວຢ່າງ ຄົນເກີດໃນຄອບຄົວດຽວກັນ ເປັນອ້າຍນ້ອງແທ່ງສາຍເລືອດ ຫລືເຮົາສາມາດໃຊ້ຄຳເວົ້ານີ້ໄດ້ໃນເມື່ອພົບເຫັນຄົນບ້ານໃກ້ເຮືອນຄຽງ ຫລືຄົນຮູ້ຜູ້ທີ່ດີມີຄູນນະພາບຜູ້ເປັນໜ້ານັບຖື ເຮົາເອີ້ນເຂົາເປັນອ້າຍ ເອື້ອຍ ປ້າ ລຸງ ພໍ່ແມ່ໄດ້

2. **ອາໂຣສ** (Arose) ແມ່ນຄວາມຮັກໄຄ່ລະຫວ່າງບ່າວສາວ ຄວາມຮັກນີ້ເກີດຂຶ້ນເພື່ອຄົນທັງສອງຈະເຂົ້າແຕ່ງງານ ເປັນຜົວເມັຽ ເພື່ອເຂົາທັງສອງຈະກາຍເປັນກາຍກັນດຽວກັນ

3. **ອາກາເປ** (Agape) ແມ່ນຄວາມຮັກອຳມະຕະ ບໍ່ມີຂອບເຂດ ລະຫວ່າງພຣະເຈົ້າກັບມະນຸດ ເຖິງແມ່ນມະນຸດຈະເຮັດຊົ່ວເທົ່າໃດ ອົງພຣະເຈົ້າຍັງບໍ່ໄດ້ປ່ຽນພຣະທັຍ ຮັກເຂົາສະເໝີ ແຕ່ພຣະອົງກຽດຊັງການກະທຳທີ່ຊົ່ວຮ້າຍຂອງພວກເຂົາຕ່າງຫາກ ອົງພຣະເຢຊູໄດ້ຖາມເປໂຕສາມຄັ້ງ ວ່າ "ທ່ານຮັກເຮົາຫລື?" ສອງຄັ້ງພຣະເຢຊູໃຊ້ຄຳເວົ້າ *ອາກາເປ* ສອງຄັ້ງເປໂຕຕອບຄືນໂດຍໃຊ້ຄວາມເວົ້າ *ຟີໂລ* ໃນທີ່ສຸດພຣະເຢຊູໄດ້ປ່ຽນຄຳເວົ້າ *ຟີໂລ* ເພື່ອເປໂຕຈະໄດ້ຕອບຖືກ (ໂຢຮັນ 21:15-19)

ເພື່ອຄວາມເຂົ້າໃຈຢ່າງລະອຽດເຖິງຄວາມໝາຍຂອງຄວາມຮັກແລ້ວ ກະຣຸນາອ່ານພຣະຄຳພີຈາກປຶ້ມ 1 ໂກຣິນໂທ 13:1-13 ໃນບົດນີ້ ອາຈານໂປໂລໄດ້ຂຽນແລະເອົາໄວ້ຢູ່ລະຫວ່າງເຣື່ອງພຣະພອນ ແລະການເວົ້າພາສາແປກ ໆ ວ່າອັນໃດເປັນສິ່ງຈຳເປັນທີ່ຄຣິສຕຽນຕ້ອງມີ

**ຄຳສອນເຖິງຄອບຄົວລະຫວ່າງພັລຍາສາມີ** ໃນພຣະຄຳພີເອເຟໂຊ 5:1-21-33

ພຣະຄຳພີສອນວິທີໃຫ້ຄອບຄົວຢູ່ດ້ວຍກັນຢ່າງມີຄວາມສຸກ ຖ້າຢາກມີຄວາມສຸກແລ້ວຈຳ ເປັນຕ້ອງໃຫ້ກຽດແກ່ກັນແລະກັນເໝືອນເຮົາໄດ້ໃຫ້ກຽດແກ່ພຣະຄຣິສ ພຣະຄຳພີປຽບເໝືອນສາມີເປັນຫົວ ຄືກັບພຣະຄຣິສເປັນປະມຸກຂອງຄຣິສຈັກ ພັລຍາຈຳເປັນຕ້ອງຍອມຟັງຄວາມສາມີ ເໝືອນຍອມຟັງອົງພຣະຜູ້ເປັນເຈົ້າ ນີ້ໝາຍຄວາມວ່າໃຫ້ເມັຽຍອມໃຫ້ຜົວເປັນຜູ້ຕັດສິນໃຈຢ່າງເດັດຂາດ ເຊື່ອໝັ້ນໃນການນຳພາຂອງສາມີ ໃຫ້ສາມີເປັນຫົວໜ້າຄອບຄົວສ່ວນສາມີຈຶ່ງຮັກ ພັລຍາຂອງຕົນເໝືອນພຣະຄຣິສໄດ້ຊົງຮັກຄຣິສຈັກ ຖ້າສາມີມີຄວາມຮັກຕໍ່ພັລຍາຂອງຕົນແລ້ວ ເໝືອນດັ່ງພຣະຄຣິສຊົງຮັກຄຣິສຈັກ ແລະຊົງສະລະພຣະຊົນເພື່ອຄຣິສຈັກນັ້ນ ສາມີຈະບໍ່ໃຊ້ອຳນາດຂົ່ມເຫັງນ້ຳໃຈຂອງຜູ້ເປັນເມັຽ ມີແຕ່ຈະເອົາໃຈໃສ່ໃຫ້ກຽດແລະເບິ່ງແຍງໃນເວລາເຈັບໄຂ້ໄດ້ພະຍາດ ຜູ້ທີ່ຮັກພັລຍາກໍຮັກຕົນເອງ ຜູ້ຕີພັລຍາກໍຕີຕົນເອງ ຂໍ້ 21 ສຳຄັນຕໍ່ຜົວເມັຽ ຈົ່ງຍອມຟັງຊຶ່ງກັນແລະກັນເພາະຄວາມຄວາມຢຳເກງອົງພຣະຄຣິດ

ຫລາຍ ໆ ເທື່ອພັລຍາມີການສຶກສາດີ ແລະຄວາມຮູ້ສູງກວ່າສາມີ ແລະບໍ່ຍອມໃຫ້ສາມີເປັນຜູ້ນຳ ໃຫ້ເຂົ້າໃຈວ່າ ຄວາມຮູ້ເຮັດໃຫ້ອວດຕົວ ຄວາມຮັກເຮັດໃຫ້ຖ່ອມຕົວ ເມັຽທີ່ດີຈຶ່ງຍອມ ຖ້າສາມີຕັດສິນໃຈຜິດກໍໃຫ້ຢູ່ຄຽງຂ້າງ ຢ່າຂອກຊ້ຳໂດຍກ່າວວ່າ "ບອກແລ້ວບໍ່ຟັງ..."

## ຄຳສອນເຖິງຄອບຄົວຫລະຫວ່າງ ລູກກັບພໍ່ແມ່-ເອເຟໂຊ 6:1-4

ພຣະບັນຍັດ 10 ປະການຂໍ້ທີ່ 5 ໄດ້ສັ່ງໃຫ້ລູກເຕົ້ານັບຖືບິດາ ມານດາ ເພື່ອພວກເຮົາຈະມີອາຍຸໝັ້ນຍືນໃນໂລກນີ້ ໃນພຣະຄຳພີໃໝ່ ອາຈານໂປໂລໄດ້ສອນໃຫ້ລູກເຕົ້າ ຈົ່ງນົບນ້ອມເຊື່ອຟັງ ບິດາ ມານດາຂອງຕົນ ເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ເພື່ອເຮົາຈະຢູ່ເຢັນເປັນສຸກແລະມີອາຍຸໝັ້ນຍືນທີ່ແຜ່ນດິນໂລກ ການເຊື່ອຟັງນີ້ແມ່ນສິ່ງທີ່ພຣະເຈົ້າຕ້ອງປະສົງ ເພາະບໍ່ມີພໍ່ແມ່ຄົນໃດມີຄວາມປາຖນາຊົ່ວສຳລັບລູກຂອງຕົນ ຄຳເວົ້າມີອາຍຸໝັ້ນຍືນບໍ່ໄດ້ໝາຍເຖິງແຕ່ມີອາຍຸຍືນຍາວ ເພາະມີຫລາຍ ໆ ຄົນເປັນຄົນຮູ້ຜູ້ດີ ຟັງຄວາມພໍ່ແມ່ ແລະກໍຕາຍໄປເວລາຍັງເປັນໄວລຸ້ນ ແຕ່ໝາຍເຖິງ ການຮັບພຣະພອນຈາກພໍ່ແມ່ຝ່າຍເນື້ອຍໜັງ ແລະທາງວິນຍານຈິດຄືອົງພຣະຜູ້ເປັນເຈົ້າ

ສ່ວນພໍ່ແມ່ນມີໜ້າທີ່ໃຫ້ຄວາມອົບອຸ່ນແກ່ລູກຂອງຕົນເທົ່າທີ່ຈະທຳໄດ້ ພຣະຄຳພີໄດ້ສອນ ຜູ້ເປັນພໍ່ແມ່ວ່າຢ່າລົບກວນລູກຂອງຕົນໃຫ້ຂັດເຄືອງໃຈ ຄືບໍ່ແມ່ນໃຊ້ອຳນາດ ບໍ່ໃຫ້ໂອກາດເດັກ ອອກຄວາມຄິດເຫັນ ມີແຕ່ອ້າງວ່າຕົນເອງເປັນຄົນເກີດກ່ອນ ອີກຢ່າງນຶ່ງບໍ່ແມ່ນແຕ່ເອົາໃຈລູກທຸກປະການ ຢາກໄດ້ຫຍັງກໍເອົາໃຫ້ ໂດຍບໍ່ໄດ້ຄຳນຶງເຖິງຜົນເສັຽຫາຍ ຕົວຢ່າງ ເວລາລູກຄົບຮອບວັນເກີດ 16 ປີ ໃນເມື່ອເຫັນຢູ່ຢາກໄດ້ຣົຖຂີ່ໄປໂຮງຮຽນ ພໍ່ແມ່ກໍຊື້ໃຫ້ຄິດວ່າລູກຈະຮູ້ຈັກຄວາມຮັກ ແລະເພື່ອລູກຈະມີກຳລັງໃຈຮຽນໜັງສື ໃນທີ່ສຸດລູກຖືກຫລອກລວງຈາກເພື່ອນລຸ່ນດຽວກັນ ພາກັນໃຊ້ຣົຖໄປທ່ຽວຫລິ້ນ ດື່ມເຫລົ້າຕາມສັງຄົມຂອງເດັກໜຸ່ມ ໃນທີ່ສຸດທັງລູກແລະຣົຖກໍຖືກອຸປະຕິເຫດຕົກນ້ຳ ດັ່ງນັ້ນຖ້າຮັກລູກໃຫ້ສັ່ງສອນລູກດ້ວຍການອົບຮົມດ້ວຍການຕີສອນແລະເຕືອນສະຕິ ຕາມຫລັກຄຳສອນຂອງອົງພຣະຜູ້ເປັນເຈົ້າ ຄຳໂບຮານເວົ້າຖືກ *"ຮັກງົວໃຫ້ຜູກ ຮັກລູກໃຫ້ຕີສອນ"* ເຮົາຕ້ອງລະວັງໃຫ້ດີ ມີຄວາມແຕກຕ່າງລະຫວ່າງການຕີສອນ ແລະການຕີໃຫ້ເສັຽອົງຄະບໍ່ເໝືອນກັນ ກົດໝາຍໄດ້ບັງຄັບໃຫ້ລາຍງານທັນທີ ໃນເມື່ອເຫັນເດັກນ້ອຍຖືກຕີຢ່າງສາຫັດ ຖ້າບໍ່ຢ່າງນັ້ນຜູ້ທີ່ເຫັນກໍມີຄວາມຜິດໃນຖານະທຳຮ້າຍຮ່າງກາຍເດັກ ເພາະບັນຫາຢ່າງນີ້ເປັນເຫດໃຫ້ເດັກນ້ອຍຫລາຍພັນຄົນກາຍເປັນຄົນເສັຽສະໝອງ (Child Abuse) ສຸຂພາບຕລອດຊີວິ

## ແມ່ນຫຍັງເປັນສິ່ງໃຫຍ່ໆທີ່ເຮັດໃຫ້ຄອບຄົວແຕກແຍກກັນ

ບັນຫາເປັນສິ່ງທີ່ພວກເຮົາຕ້ອງປະສົບແຕ່ລະຄົນ ເປັນຄົນທຸກກໍຂາດເພື່ອນ ເປັນຄົນຮັ່ງກໍມີເພື່ອນຫລາຍໂພດ ບັນຫານີ້ແມ່ນຫຍັງກັນແທ້? ເວລາເຫັນຄົນອື່ນມີບັນຫາກໍເປັນບັນຫາທັມມະດາ ຖ້າບັນຫານັ້ນເກີດຂຶ້ນກັບເຮົາເອງກໍເຫັນວ່າເປັນບັນຫາໃຫຍ່ສະເມີ ບັນຫາແມ່ນສິ່ງທີ່ເກີດຂຶ້ນກັບຕົນເອງ ທີ່ທຳໃຫ້ມີຄວາມທຸກທໍລະມານ ໂດຍສະເພາະແລ້ວ ມາຈາກຄົນທີ່ເຮົາຮັກ ບໍ່ມີຜູ້ໃດສາມາດທຳໃຫ້ພວກເຮົາເຈັບປວດແສນຫາທັດໄປກ່ວາຄົນທີ່ເຮົາຮັກ ກາຍເປັນຄົນທໍລະຍົດ

ບັນຫາອາດເປັນສິ່ງດີກໍໄດ້ ຖ້າຢາກຮູ້ວ່າຄົນອື່ນ ຫລືຕົນເອງເປັນຄົນຢ່າງໃດ ໃຫ້ເບິ່ງເວລາມີບັນຫາ ວ່າຄົນນັ້ນຈະປະພຶດຢ່າງໃດ ຄືຄຳ ຖ້າຢາກຮູ້ວ່າເປັນຄຳແທ້ຈຳເປັນຕ້ອງພິສູດດ້ວຍໄຟ Augustine ບັນພະບູຣຸດຜູ້ຍິ່ງໃຫຍ່ໄດ້ອະທິບາຍເຖິງຕົ້ນເຫດຂອງບັນຫາດັ່ງນີ້

1. ບາງທີເຮົາບໍ່ ເອົາໃຈໃສ່ຕໍ່ໜ້າທີ່
2. ເປັນການອະນຸຍາດຈາກພຣະເຈົ້າໃຫ້ເກີດຂຶ້ນ ?
3. *ພະເຈົ້າອະນຸຍາດໃຫ້ມີບັນຫາ ເພື່ອເຮົາຈະໄດ້ເຫັນພຣະຄູນອັນແທ້ຈິງຈາກພຣະເຈົ້າ ບໍ່ແມ່ນເຮົາສົມຄວນໄດ້ຮັບ ພຣະຄູນຫລືເຮັດເອງໄດ້* *(Smith, Gordon. Listening to God in Times of Choice, p. 55)*

ຕໍ່ລົງໄປນີ້ຈະເປັນຄວາມເຫັນ ຄວາມເຂົ້າໃຈ ແລະປະສົບການຂອງຂ້າພະເຈົ້າເຖິງເລື້ອງທີ່ເຮັດໃຫ້ຄອບຄົວແຕກແຍກກັນ ເລື້ອງຄອບຄົວແຕກແຍກກັນເພາະບັນຫາຫລາຍ ໆ ປະການທີ່ປະດັບສັບສົນກັນ ແຕ່ຂ້າພະເຈົ້າຂໍເລືອກເອົາເຫດຜົນໃຫຍ່ ໆ ມາອະທິບາຍປຶກສາສົນທະນາກັນ ກັບພີ່ນ້ອງເພື່ອພວກເຮົາຈະເຂົ້າໃຈ ຊອກວິທີປ້ອງກັນ ແລະຮູ້ວິທີບັບໃຫ້ເຂົ້າກັນ ເພື່ອຄວາມສຸກຂອງຕົວເອງແລະຄົນອື່ນ ຂ້າພະເຈົ້າຖືວ່າ "ອ້າຍຮູ້ສອງນ້ອງຮູ້ນຶ່ງ ຫລືນ້ອງຮູ້ສອງອ້າຍຮູ້ນຶ່ງ"

**ຄວາມບາບ** (ປະຖົມມະການບົດທີ່ 3)

ໃນເມື່ອພຣະເຈົ້າຊົງສ້າງສັບສິ່ງດີທັງນັ້ນ ແຕ່ມະນຸດພະຍາມານອິດສາໝັ່ນຊອກຫາທຸກ ໆ ວິທີທາງ ທີ່ຈະໃຫ້ຄອບຄົວແຕກແຍກກັນ ເພື່ອລົກຣາກສິ່ງທີ່ພຣະເຈົ້າຊົງຮັກ ຖ້າຈະເບິ່ງໄປເພີງ ໆ ກໍເຫັນວ່າ ຄົນເຮົາທີ່ອາສັຍຢູ່ໃນປະເທດທີ່ຈະເຣີນ ໂດຍສະເພາະປະເທດສະຫາຣັຖອະເມຣິກາ ມີຜູ້ຄົນໄດ້ພົບກັບການບໍ່ເຂົ້າໃຈກັນ ແລະທີ່ສຸດກໍໄດ້ແຕກແຍກກັນໄປ ທຳໃຫ້ຄົນອື່ນຜູ້ບໍ່ມີຄວາມຜິດໄດ້ຮັບເຄາະກັມຢ່າງເສົ້າສະລົດໃຈ ຕາມລາຍງານໃຫ້ເຮົາໄດ້ຮູ້ວ່າ 10 ຄູ່ແຕ່ງງານ ຈະມີປະມານ 5-7 ຄູ່ຢ່າຮ້າງກັນ ຢູ່ປະເທດສະຫະຣັຖບໍ່ມີຄອບຄົວໃດ ທີ່ບໍ່ໄດ້ປະສົບການເຫັນຍາດພີ່ນ້ອງຫລືໝູ່ເພື່ອນໄດ້ຮັບຄວາມທຸກທໍລະມານດ້ານການຢ່າຮ້າງ ໃນເມື່ອສະຖາບັນອັນທຳອິດທີ່ພຣະເຈົ້າສະຖາປະນາສ້າງຂຶ້ນ ໄດ້ຖືກທຳລາຍຢ່າງໜ້າເສັຽດາຍ ມະນຸດເຮົາຈຶ່ງພົບກັບຜົນແຫ່ງຄວາມບາບ ຄືຄວາມຕາຍທັງເປັນ ການຢ່າຮ້າງເປັນຜົນສະທ້ອນຢ່າງຮ້າຍແຮງໄປເຖິງສ່ວນເລິກຂອງຈິດໃຈ ແລະກໍລະເບີດຂຶ້ນມາດ້ວຍການກະທຳຮ້າຍຕໍ່ຄົນອື່ນແລະຕົວເອງ ພຣະຄຳພີອະທິບາຍເຖິງຄວາມບາບວ່າ ຄວາມບາບແມ່ນສິ່ງທີ່ເຮົາເຮັດຕາມໃຈຊອບຕາມຕັນຫາ ຈຶ່ງເຮັດໃຫ້ຫລົງທາງ (ເອຊາຍາ 53:6)

**ບັງຂັບ-ໃຊ້ອຳນາດ**

ພວກນັກຈິດທະວິທະຍາໄດ້ສຶກສາວິຈັຍຄົ້ນຄົ້ວຢ່າງຍາວນານ ແລະສະລຸບໄວ້ວ່າ ບັນຫາໃຫຍ່ທີ່ທຳໃຫ້ຄອບຄົວແຕກສະລາຍນັ້ນ ແມ່ນຄຳເວົ້າສັ້ນ ໆ ແຕ່ມີພະລັງຄື "ການບັງຄັບ" ນັກຈິດຕະວິຍາແລະນັກສັງຄົມສາດຫລາຍ ໆ ຄົນໄດ້ກ່າວວ່າ "ຝູງຊົນບາງຄົນບໍ່ບັງຄັບກັນເລີຍ ບາງຄົນບັງຄັບຈົນເກີນໄປ ພວກເຂົາບໍ່ຮູ້ຈັກວິທີບັງຄັບ ພວກເຂົາຖືກບັງຄັບແລະເຂົາບໍ່ຄອຍມັກ ພວກເຂົາປະຕິເສດການບັງຄັບນັ້ນ ສິ່ງຜິດຖືກບັງຄັບ ຫລືພວກເຮົາບໍ່ຮູ້ຈັກວິທີ ແລະກາລະເວລາທີ່ຄວນຢຸດ ໃຊ້ການບັງຄັບ" *(Foster, Timothy. "The Handbook of Christian Counseling". pp 219 -220)*

ເຖົ້າເກົ່າໂບຮານກ່າວໄວ້ວ່າ "ນ້ຳເຢັນປາຂ້ອນ ນ້ຳຮ້ອນປາໜີ" ນີ້ເປັນສິ່ງວັດແທກວ່າ ເຮົາເປັນຄົນບັງຄັບເດັກນ້ອຍໃນບ້ານເຮົາຫລືບໍ່? ໃນເວລາເຮົາກັບບ້ານຂຶ້ນເຮືອນ ຖ້າເດັກພາກັນແລ່ນ ມາຫາກອດແຂ່ງກອດຂາ ທ່ານເປັນຄົນໃຊ້ອຳນາດຖືກຕ້ອງ ແຕ່ຕົງກັນຂ້າມ ເວລາທ່ານກັບບ້ານ ພໍເດັກນ້ອຍໄດ້ຍິນສຽງຣົຖເຂົ້າມາຈອດ ພວກເຂົາພາກັນແລ່ນໜີໄປລີ້ ນັ້ນສອນວ່າທ່ານອາດເປັນຄົນໃຊ້ອຳນາດບັງຄັບຈົນເກີນໄປ ແລະເດັກຈະບໍ່ເປີດຫົວໃຈລະບາຍສິ່ງໃນໃຈໃຫ້ທ່ານໄດ້ຮູ້ ທ່ານຜູ້ເປັນພໍ່ແມ່ຈະຂາດໂອກາດທີ່ຈະສ້າງຄວາມສຳພັນດີກັບເດັກຂອງທ່ານ ໃນເມື່ອທ່ານເປັນຄົນໃຊ້ອຳນາດບັງຄັບໃນທາງທີ່ຜິດ "ຂັບທີ່ຢູ່ໄດ້ຂັບໃຈຢູ່ຍາກ" ການບັງຂັບນີ້ເກີດຂຶ້ນກັບທາງດ້ານຮ່າງກາຍແລະທາງດ້ານຈິດໃຈ ຫລາຍເທື່ອເດັກອາດຈະຢູ່ກັບເຮົາໄດ້ດ້ວຍຄວາມຈຳໃຈເພາະຖືກບັງຂັບໃຫ້ເຮັດວຽກ ແຕ່ເຂົາຈະ

ຊອກຫາໂອກາດໜີ ໃນເມື່ອເຂົາຖືກບັງຂັບດ້ານຈິດໃຈ

**ຄໍາແນະນໍາ** ຜູ້ເປັນພໍ່ແມ່ນຕ້ອງພະຍາຍາມສ້າງບັນຍາກາດດ້ວຍວາຈາແລະການປະພຶດ ເພື່ອໃຫ້ລູກເຂົ້າໃຈວ່າ ພໍ່ແມ່ນຫວັງດີ ຄວາມຈິງແລ້ວພໍ່ແມ່ມີຄວາມຫວັງດີກັບລູກສະເມີ ຢາກໃຫ້ລູກປະສົບແຕ່ຜົນສໍາເລັດ ແຕ່ເຫັນວ່າ ພໍ່ແມ່ນບໍ່ຮູ້ວິທີທີ່ໃຊ້ກັບລູກ ຕົວຢ່າງ ເວລາຂ້າພະເຈົ້າເປັນເດັກນ້ອຍ ພໍ່ບັງຄັບໃຫ້ຮຽນໜັງສື ນັ້ນຫວັງດີ ແຕ່ພໍ່ຕີດ້ວຍເອົາໝາກກອກສັບຫົວ ໃນເມື່ອບໍ່ມີຄວາມຊົງຈໍາຖ້ອງບົດຮຽນ ໃນເມື່ອພໍ່ໂກດຮ້າຍລົງມືຕີເຮັດໃຫ້ສະມອງຂອງຂ້າພະເຈົ້າມືດແປດດ້ານ ດັ່ງນັ້ນ ເພື່ອໃຫ້ຖືກຕ້ອງ ພໍ່ແມ່ຕ້ອງເຂົ້າໃຈວ່າລູກຂອງຕົນເປັນຄົນສະນິດໃດ ໃຫ້ໃຊ້ຄວາມຍົກຍ້ອງໃຫ້ລາງວັນໃນສິ່ງທີ່ເຮັດໄດ້ ຫລືພະຍາຍາມເຮັດຢ່າງສຸດຄວາມສາມາດ ຢ່າປຽບທຽບກັບລູກຂອງຄົນອື່ນ ຜູ້ທີ່ທ່ານເຫັນວ່າເຂົາດ້ຮຽນໜັງສືເກ່ງ ຖ້າບັງຂັບໃຫ້ໄດ້ A ຕລອດ ໃນເມື່ອເຂົາເຮັດຜິດ ໄດ້ B ເດັກອາດຈະເຊື່ອງບໍ່ໃຫ້ພໍ່ແມ່ຮູ້ ເພາະຢ້ານພໍ່ແມ່ເສັຽໃຈ ເວລາລູກເອົາຄະແນນມາໃຫ້ເບິ່ງ ພໍ່ແມ່ນຄວນຖາມລູກວ່າ ສິ່ງທີ່ເຂົາໄດ້ນັ້ນເປັນຄວາມພະຍາຍາມຢ່າງສຸດຄວາມສາມາດຂອງເຂົາແລ້ວຫລືບໍ່? ຍ້ອງຍໍ ແລະຮູ້ຄູນຄ່າຂອງຄວາມພະຍາຍາມຂອງລູກ

## ການຕິດຕໍ່

ສິນລະປະໃນການປາກເວົ້າເປັນສິ່ງສໍາຄັນໃນຄອບຄົວ ເຖິງແມ່ນພວກເຮົາເວົ້າພາສາດຽວກັນຫລາຍ ໆ ຄັ້ງກໍຍັງເຂົ້າໃຈຜິດກັນເປັນປະຈໍາ ຜົວເມັຽມັກຫາເຣື່ອງໃສ່ກັນວ່າ "ຂ້ອຍເວົ້າຫຍັງກັບເຈົ້ານີ້ ເຈົ້າບໍ່ເຄີຍໄດ້ຍິນ ເຈົ້າຟັງແຕ່ຄົນອື່ນ" ຄວາມຈິງແລ້ວກໍເປັນດັ່ງນັ້ນ ເພາະເຮົາຖືວ່າການເວົ້າຂອງຄົນໃກ້ສິດນັ້ນເປັນກັນເອງ ຈົນເຮົາຟັງກາຍແລະຈໍາບໍ່ໄດ້ເລີຍ

ຄໍາຫລ້າ ໝໍ່ແກ້ວ ນັກຂຽນເພງໄດ້ບັນລະຍາຍວ່າ "ປາກຄ່ອຍຢູ່ຟັງບໍ່ໄດ້ຍິນ ປາກດັງຜູ້ຟັງບໍ່ມັກ" ປື້ມສຸພາສິດ ບົດ 10: 19 ສອນວ່າ ປາກຫລາຍຄົນກໍລໍາຄານເວົ້າຫລາຍ ຄວາມບາບຍັງບໍ່ໄດ້ຂາດ ແຕ່ຜູ້ທີ່ບັງຄັບລີ້ນຂອງຕົນກໍເປັນຄົນສະລາດ" ພວກເຮົາຈະໃຊ້ວິທີໃດ ຈຶ່ງຈະໃຫ້ທັງສອງຝ່າຍຄືຜູ້ເວົ້າແລະຜູ້ຟັງເຂົ້າໃຈກັນ ໃຫ້ສຶກສາຄໍາສົນທະນາລະຫວ່າງຜົວເມັຽທາງຂ້າງລຸ່ມນີ້

<u>*ເມັຽເວົ້າ*</u> *"ນ້ອງຢາກໄປແຕ່ງງານນ້ອງສາວຜູ້ຫລ້າຢູ່ລາວ"*
<u>*ຜົວຕອບ*</u> *"ໄປລະແມ່ ໃຫ້ເອົາລູກຜູ້ນຶ່ງໄປເປັນຄູ່"*
<u>*ເມັຽເວົ້າ*</u> *"ນ້ອງຢາກໃຫ້ທຸກຄົນໄປ ເພາະນີ້ແມ່ນງານແຕ່ງງານຂອງນ້ອງສາວ ເລືອດຂອງນ້ອງ"*
<u>*ຜົວເວົ້າ*</u> *"ອ່າວ! ກະດຽວວ່າຕົກລົງກັນແລ້ວວ່າ ນ້ອງຈະໄປກັບລູກຄົນນຶ່ງ ໄປພໍໃຫ້ມີຕົວແທນ ອ້າຍເສັຽດາຍເງິນ ເພາະເຮົາກໍຍັງເປັນໜີ້ຫລາຍ ອ້າຍອຸກໃຈ ເອົາເງິນໃຫ້ຂອງຂວັນກໍຍັງດີ"*
<u>*ເມັຽເວົ້າ*</u> *"ຕາຍແລ້ວເອົາເງິນໄປໄດ້ຊັ້ນບໍ່...!!!"*

ທ່ານຄິດວ່າທັງສອງຈະລົງລອຍກັນຫລືບໍ່? ຖ້າບໍ່ດັ່ງນັ້ນ ທ່ານເຫັນບັນຫາໃນການສົນທະນາຂອງສອງຜົວເມັຽນັ້ນຫລືບໍ່? ຖ້າທ່ານເປັນຜົວ ເປັນເມັຽຄູ່ນີ້ ທ່ານຈະແກ້ວິທີສົນທະນາກັນຢ່າງໃດ? ຢ່າລືມ ຄໍາເທສນາທີ່ຈ່າຍພູຂອງພຣະເຢຊູກ່າວວ່າ "ຜູ້ອ່ອນໂຍນ ຈະໄດ້ຮັບແຜ່ນດິນໂລກມາເປັນມໍລະ ດົກ" ນັ້ນໝາຍຄວາມວ່າ ຖ້າເຮົາຢາກໄຊຊະນະໃຫ້ເປັນຄົນອ່ອນນ້ອມຖ່ອມຕົວ

## ຂາດເວລາຢູ່ຮ່ວມກັນ

ໃນປະເທດສະຫະຣັດ ພວກເຮົາໃຊ້ເວລາເຮັດການລ້ຽງຊີບດ້ວຍຄວາມທຸກລຳບາກ ບາງຄອບຄົວຜົວເມັຽໄດ້ພົບກັນພຽງວັນເສົາວັນອາທິດເທົ່ານັ້ນ ຜົວໄປເມັຽມາ ເວລາຜູ້ເປັນລູກເລີກຈາກ ໂຮງຮຽນມາກໍອາດໄດ້ພົບແມ່ຫລືພໍ່ ຫາຍາກຈະໄດ້ພົບພໍ່ແມ່ທັງສອງພ້ອມກັນ ດັ່ງນັ້ນ ພວກເຮົາ ຈຶ່ງບໍ່ຄ່ອຍມີຄວາມສັມພັນດີ ຕ່າງຄົນກໍຢູ່ກິນຕາມໃຜລາວ ທີ່ສຸດມາໃນເມື່ອຄວາມຫຼອກລວງມາເຖິງ ພວກເຮົາກໍຕົກເປັນເຫຍື່ອຂອງສັງຄົມຢ່າງໜ້າສົງສານ ເວົ້າຫຍໍ້ ໆ ແລ້ວ ໃນເມື່ອຄວາມຕ້ອງການບໍ່ໄດ້ຕອບສະໜອງ ໃນເມື່ອມີອື່ນຄົນອື່ນມາໃຫ້ຄວາມສົນໃຈຕໍ່ຄວາມຕ້ອງການນັ້ນ ເຮົາກໍເຫັນວ່າ ຊີວິດອາດຈະມີບໍ່ຄວາມສຸກຖ້າໄດ້ມີບັນຍາກາດເຊັ່ນນີ້ມາຄອບຄອງໃນຊີວິດ ຜົວເມັຽທີ່ນອກໃຈກັນກໍເລີ້ມຕົ້ນຈາກບັນຫາຢ່າງນີ້

ຕາມລາຍງານບອກໃຫ້ຮູ້ວ່າ ຜູ້ຊາຍເຮົາໃຊ້ເວລາຢູ່ກັບຄອບຄົວບໍ່ເຖິງ 15 ນາທີຕໍ່ວັນ ເຫລືອນັ້ນໃຊ້ຢູ່ຕາມສະຖານທີ່ທຳງານກັບໝູ່ເພື່ອນ ຫລືໃຊ້ສະນຸກສະນານຄົນດຽວດ້ວຍການອ່ານໜັງສືພິມ ເບິ່ງທໍລະທັດ ທຳຄວາມສະອາດບ້ານ ໄປຫາປາລ່າເນື້ອ ສຳລັບຄົນທີ່ມັກການພະນັນແລ້ວ ຍິ່ງມີບັນຫາໃຫຍ່ ເຮັດງານວັນເກີດໃຫ້ເດັກລູກ ແຕ່ຜູ້ໃຫຍ່ຊຸມກັນຈົນຮ້ອນເວລາໄປການ

**ຄຳແນະນຳ** ໃຫ້ພະຍາຍາມສົນທະນາກັນ ໂດຍການຖາມເຖິງຄວາມສຸກທຸກປະຈຳວັນ ຖ້າເຫັນລູກມາແຕ່ໂຮງຮຽນກໍຖາມເຖິງການຮຽນ ຖ້າເຫັນຜົວເມັຽກັບມາແຕ່ວຽກການກໍຊ່ວຍຕ້ອນຮັບໂດຍຮອຍຍິ້ມ ສະແດງເຖິງຄວາມເປັນຫ່ວງ

ຄົນລາວສ່ວນຫລາຍບໍ່ພາຄອບຄົວໄປພັກຜ່ອນ ຄິດວ່າຕົນເອງບໍ່ມີເວລາ ແລະມີເງິນ ແຕ່ມີເວລາກັບເງິນເຮັດຢ່າງອື່ນໄດ້ ດັ່ງນັ້ນ ເວລາລູກເຕົ້າເຂົາຍັງນ້ອຍ ແຕ່ລະປີໃຫ້ພາກັນໄປທ່ຽວຮ່ວມກັນ ເພື່ອພວກເຂົາຈະຮູ້ວ່າເຮົາຮັກແລະເປັນຫ່ວງ ທ່ານຮູ້ບໍ່ ວ່າທ່ານມີເວລາກັບເດັກຂອງທ່ານຢ່າງຫລາຍ 18 ປີ ຖ້າເຮົາບໍ່ຍາດເວລາພາເຂົາໄປຫລິ້ນດ້ວຍກັນແລ້ວ ເຮົາຈະກິນແໜ່ງເມື່ອ ໝົດໂອກາດ ຕາມທຳມະດາແລ້ວເດັກມີອາຍຸປະມານ 13 ປີຂຶ້ນໄປແລ້ວເຂົາບໍ່ຄ່ອຍຢາກໄປກັບພໍ່ແມ່

ການໃຫ້ຄວາມສົນໃຈ ແລະໃຫ້ກຳລັງເດັກນັ້ນເປັນສິ່ງຄຳຄັນ ໃນເມື່ອເດັກຂອງທ່ານໄດ້ຮັບປະກາດໄຊຍະບັດຍົກຍ້ອງ ຫລິ້ນກີລາ ຫລືລາຍການຕ່າງ ໆ ທີ່ໂຮງຮຽນ ພໍ່ແມ່ຄວນພຍາຍາມສະລະເວລາໄປ

## ເງິນ ແລະສັພສິນ

ເງິນກໍເປັນຕົ້ນເຫດອັນສຳຄັນຢ່າງນຶ່ງທີ່ເຮັດໃຫ້ຄອບຄົວແຕກແຍກກັນ ພຣະຄຳພີຍັງກ່າວໄວ້ວ່າ ເງິນເປັນກົກເຄົ້າຂອງຄວາມບາບ ນັ້ນບໍ່ໄດ້ໝາຍຄວາມວ່າໃຫ້ເຮົາເປັນຄົນຍາກຈົນ ແຕ່ພຣະເຈົ້າຕ້ອງການໃຫ້ເຮົາໃຊ້ເງິນ ບໍ່ໃຫ້ເງິນໃຊ້ເຮົາ ຫລືກາຍເປັນຂ້າທາດຂອງເງິນ ເຮັດອັນໃດກໍຄິດເຫັນແກ່ເງິນ ບໍ່ມີເງິນກໍມີບັນຫາ ເຂົ້າຂາດແລງແກງຂາດໝໍ້ກໍມີຄວາມທຸກໃຈ ມີເງິນຫລາຍໂພດກໍມີບັນຫາ ເຮັດໃຫ້ເກີດແນວຄິດບໍ່ດີ ຄຳໂບຮານກ່າວວ່າ "ເຫັນເງິນໜ້າດຳ ເຫັນຄຳໜ້າດ່ອນ" ຕົວຢ່າງ CNN ລາຍງານ ມີຜົວເມັຽຄູ່ນຶ່ງໄດ້ກາຍເປັນຄົນຮັ່ງມີໃນພິບຕາດຽວ ພວກເຂົາຖືກຫວຍຣັຖບານ ມີເງິນເປັນລ້ານບາດດຽວ ເມັຽເປັນຄົນອາຍຸອ່ອນກວ່າ ແລະກໍມີຮູບຮ່າງສວຍງາມດີ ໃນເມື່ອມີເງິນຫລາຍປານນັ້ນກໍຄິດຢາກໄດ້ຄົນດຽວ ຍາກມີເສຣີພາບໃນການເປັນເຈົ້າຂອງຄົນດຽວ ທີ່ສຸດຜູ້ເປັນເມັຽກໍຟ້ອງ

ສາມປ່າຮ້າງ ສານກໍອອກຄໍາສັ່ງໃຫ້ແບ່ງປັນເງິນນັ້ນຄົນລະເຄິ່ງ ຜົວມີຄວາມທຸກໃຈຫລາຍ ມີນັກຂ່າວມາສໍາພາດ ແລະເຂົາກໍບອກວ່າ "ຢາກເປັນຄົນທຸກເໝືອນເດີມ ເພາະມີເມັຽຮັກຢູ່ຄຽງຂ້າງ ເຂົາຍັງເວົ້າວ່າ ຖ້າເອົາເງິນທັງໝົດນີ້ໃຫ້ຄົນອື່ນ ແລ້ວເມັຽຄືນມາຫາ ເຂົາຈະເຮັດ" ນັ້ນໝາຍຄວາມວ່າ ການມີເງິນຫລາຍນັ້ນເປັນຕົ້ນເຫດໃຫ້ມີຄວາມທຸກໄດ້

<u>**ຄໍາແນະນໍາ**</u> ໃຫ້ຕົກລົງກັນວ່າ ໃຜຈະເປັນຄົນຮັກສາເງິນແລະບັນຊີ ໃນເມື່ອຕົກລົງກັນແລ້ວທັງສອງ ຕ້ອງວາງແຜນການໃຊ້ເງິນດ້ວຍກັນໂດຍຈັດໃຫ້ມີງົບປະມານ ແຕ່ລະສາມເດືອນໃດໃຫ້ພາກັນກວດເບິ່ງບັນຊີນໍາກັນວ່າມີການບົກພ່ອງ ຫລືຂາດເຂີນອັນໃດແດ່ ອີກຢ່າງນຶ່ງໃຫ້ໃຊ້ເວລາສົນໃຈດ້ວຍກັນ ຈະທໍາໃຫ້ຜົວເມັຽເຂົ້າໃຈກັນດີເຖິງສັບສົນ ແລະເພື່ອປ້ອງກັນການເຂົ້າໃຈຜິດ ຫ້າມຢ່າງເດັດຂາດ ບໍ່ໃຫ້ເຊື່ອງເງິນຄໍາຈາກກັນ ໃຫ້ສັດຊື່ຕໍ່ກັນ ຜົວເມັຽຄວນຈະມີເງິນຖົງດຽວກັນ ແລະໃຫ້ເສຣີພາບໃນການໃຊ້ຈ່າຍສ່ວນຕົວຕາມງົບປະມານ ໃນເມື່ອເອົາເງິນໃຫ້ໃຊ້ສ່ວນຕົວ ຢ່າຖາມວ່າ ເງິນທາກໍໃຫ້ນີ້ໄປຊື້ຫຍັງໝົດໄວແທ້ ໃຫ້ລາຍງານ...

## ເພດສໍາພັນ

ພຣະຄໍາພີສອນໃຫ້ຜົວເມັຽຈົ່ງທໍາໜ້າທີ່ຂອງຕົນເອງໃຫ້ເໝາະສົມ ພ້ອມດ້ວຍການໃຊ້ເພດລະຫວ່າງຜົວເມັຽ ການໃຊ້ເພດບໍ່ເປັນໜ້າລະອາຍສໍາລັບຜົວເມັຽ, ຖ້າໃຊ້ນອກຈາກພິທີແຕ່ງງານ ແລ້ວກໍຜິດຕໍ່ພຣະເຈົ້າ ແລະຜິດຕໍ່ກັນແລະກັນ ຈຶ່ງເປັນໜ້າລະອາຍທີ່ສຸດ ດັ່ງນັ້ນ ເພື່ອບໍ່ໃຫ້ການທົດລອງເກີດຂຶ້ນ ຜົວເມັຽຕ້ອງໃຊ້ເວລາຢູ່ດ້ວຍກັນຢ່າງຜົວເມັຽ ບໍ່ໃຫ້ປະຕິເສດກັນ ເວັ້ນແຕ່ໄດ້ຕົກລົງກັນ ໃນເວລາຖືສິນອົດອາຫານ ແລະໄຫ້ວວອນ ຫລັງຈາກນັ້ນແລ້ວ ຜົວເມັຽກັບມາຢູ່ຮ່ວມກັນອີກ

ການໃຊ້ເພດລະຫວ່າງຜົວເມັຽນັ້ນແມ່ນໂອກາດສໍາຄັນ ເຮັດໃຫ້ເຮົາໃກ້ຊິດກັນຂຶ້ນ ແລະຮູ້ຈັກຢ່າງເລິກຊຶ້ງ ພໍ່ອາດາມຮູ້ຈັກແມ່ ເອວາໃນພຣະຄໍາພີເດີມ ໝາຍເຖິງການໃຊ້ເພດພັນ ເວລາ ພຣະເຈົ້າກ່າວວ່າ ຜູ້ຊາຍຈະອອກຈາກຄອບຄົວຂອງຕົນໄປຜູກພັນກັບພັລຍາ ແລະພວກເຂົາທັງສອງຈະກາຍເປັນກາຍອັນດຽວກັນນັ້ນ ກໍໝາຍເຖິງການເຂົ້າຮ່ວມທາງເພດ

<u>**ຄໍາແນະນໍາ**</u> ໂດຍສະເພາະຄູ່ຜົວເມັຽທີ່ແຕ່ງງານກັນນານແລ້ວ ຄວາມຮູ້ສຶກຕໍ່ກັນແລະກັນນັ້ນກໍອາດຈືດຈາງລົງ ພວກເຮົາຮູ້ສຶກວ່າເປັນເໝືອນອ້າຍນ້ອງກັນ ດັ່ງນັ້ນ ເພື່ອປ້ອງກັນຈາກການທົດລອງຂອງຄົນອື່ນ ຜົວເມັຽຄູ່ນັ້ນຕ້ອງນັດໝາຍມື້ ເພື່ອຄວາມສໍາພັນທາງເພດຂຶ້ນຕາມອາຍຸສັງຂານ ແລະຄວາມສາມາດ ບໍ່ໃຫ້ອາໄສຄວາມຮູ້ສຶກ ເພາະຄວາມຮູ້ສຶກນັ້ນຕາຍແລ້ວ ແຕ່ໃຫ້ຖືວ່າເປັນໜ້າທີ່ຮັບຜິດຊອບ ແລະຄໍາສັ່ງຈາກອົງພຣະຜູ້ເປັນເຈົ້າ ອີກປະການນຶ່ງ ຢ່າຄິດວ່າຄົນເຮົາເກີດມາແລ້ວ ບໍ່ຈໍາເປັນຕ້ອງຮຽນເຖິງເຣື້ອງເພດມັນເກີດຂຶ້ນຕາມທໍາມະຊາດ ຖ້າເຮົາບໍ່ຮຽນຮູ້ໃຫ້ດີ ຈົນກາຍເປັນຄົນຊໍານານແລ້ວ ເຮົາກໍບໍ່ທໍາໜ້າທີ່ໃຫ້ຄວາມພໍໃຈໃນຖານະເປັນຜົວເມັຽ ພວກເຮົາຕ້ອງຮຽນຮູ້ໃຫ້ ຫລາຍດ້ວຍການສໍ້ຖາມກັບທ່ານໝໍ ຖ້າທ່ານມີບັນຫາທາງດ້ານສຸຂພາບ ຫລືຂໍ້ຂ້ອງໃຈຕ່າງ ໆ

## ເດັກນ້ອຍສອງພາສາແລະທັມນຽມ

ພໍ່ແມ່ພະຍາຍາມທີ່ສຸດທີ່ຈະໃຫ້ລູກເຕົ້າຮັກສາທັມນຽມ ແລະປະເພນີອັນດີງາມຂອງຄົນລາວ ດ້ວຍການເວົ້າ

ພາສາລາວ ໃຊ້ເຄົາລົບປະເພນີທີ່ພໍ່ແມ່ຮູ້ຈັກດີ ຜູ້ເປັນລູກກໍພະຍາຍາມທຳຕາມ ເພື່ອຈະໃຫ້ພໍ່ແມ່ພໍໃຈ ແຕ່ເມື່ອໄປໂຮງຮຽນກໍໄດ້ພົບຄໍາສະມາຄົມກັບຄົນອື່ນ ໆ ເວົ້າພາສາອື່ນອີກ ເວລາກັບບ້ານລູກກໍບໍ່ຈັກວ່າຈະປະຕິບັດກັນຢ່າງໃດເພື່ອພໍ່ແມ່ຈະເຂົ້າໃຈ ຜູ້ເປັນລູກກໍເວົ້າພາສາອັງກິດຄ່ອງແຄ່ວດີ ພໍ່ແມ່ບໍ່ສາມາດຮຽນພາສາໄດ້ໄວ້ເໝືອນເດັກ ຕໍ່ມາຄວາມສໍາພັນແລະການຕິດຕໍ່ ກໍເຊີ່ມສູນລົງເທື່ອລະເລັກນ້ອຍຈົນເຖິງບໍ່ເວົ້າກັນເລີຍ ພໍ່ແມ່ຄິດວ່າລູກລືມຊາດແລະພາສາ ລູກຄິດ ວ່າພໍ່ແມ່ເປັນຄົນໂງ່ເຂົາ ດັ່ງນັ້ນ ບັນຫາໃຫຍ່ຈຶ່ງເກີດຂຶ້ນກັບພວກເຮົາເປັນປະຈຳ ມີຫລາຍຄົນໄດ້ໃສ່ຊື່ເດັກນ້ອຍທີ່ເກີດ ແລະໃຫຍ່ຂຶ້ນໃນຕ່າງປະເທດວ່າ "ເດັກໝາກກ້ວຍ" ເພາະພວກເດັກມີຮູບຮ່າງເໝືອນພໍ່ແມ່ແຕ່ພາຍນອກ ສ່ວນທາງໃນຈິດໃຈແລະແນວຄິດແລ້ວ ເປັນຄົນອະເມຣິກາຢ່າງແນ່ນອນ ທັງສອງຝ່າຍພໍ່ແມ່ແລະລູກໄດ້ຕົກເປັນເຫຍື່ອຢ່າງໜ້າສົງສານ ຍ້ອນສະຖານະການໃນຕ່າງ ປະເທດ ແລະສັງຄົມໃໝ່

**<u>ຄຳແນະນຳ</u>** ຂໍກະແຈທີ່ຈະໃຊ້ແກ້ໄຂບັນຫານີ້ກໍຄື ທັງສອງຝ່າຍຕ້ອງຍ້ອມຮັບ <u>ປ່ຽນແປງ</u>ໃຫ້ເຂົ້າໃນສະພາບໃໝ່ ພໍ່ແມ່ຈຳເປັນຕ້ອງຮັບຮູ້ສະພາບການໃນສະຫະຣັຖອະເມຣິກາ ຫລືແນວຄິດຂອງພວກຕາເວັນຕົກ ຕົວຢ່າງ ບໍ່ເຄີຍບອກກັບລູກວ່າຮັກເຂົາ ກອດຈູບເຂົາ ຍົກຍ້ອງເຂົາ ໃຫ້ໂອກາດເຂົາອອກຄວາມເຫັນ ກໍໃຫ້ເລີ້ມມື້ນີ້ ຕົວຢ່າງ ຂ້າພະເຈົ້າໄປສົ່ງລູກທີ່ບ່ອນລ້ຽງເດັກ ກ່ອນຈະຈາກລູກໄວ້ທີ່ນັ້ນ ລູກສາວຂໍຈູບ ເຫັນວ່າບໍ່ແມ່ນທັມນຽມລາວ ແຕ່ກໍຕ້ອງເຮັດເພື່ອລູກ ຖ້າເຮົາຕ້ອງການໃຫ້ລູກເຮັດຢ່າງໃດ ຜູ້ເປັນພໍ່ແມ່ຕ້ອງປະຕິບັດກ່ອນ ກົດລະບຽບໃນບ້ານຕ້ອງປະຕິບັດນຳກັນ ບໍ່ຢາກໃຫ້ລູກໃຊ້ໂທລະສັບນານ ຕົນເອງກໍຄວນປະຕິບັດເໝືອນກັນ ຢ່າໃຊ້ສິດວ່າຕົນເອງເປັນພໍ່ແມ່ຍ່ອມມີສິດພິເສດ ເພາະເດັກເຂົາເບິ່ງການກະທຳຫລາຍກວ່າຄຳສອນ "ຮູບພາບມີຄ່າຫລາຍກວ່າຄຳເວົ້າ ພັນຄຳ."

## ເຮັດແນວໃດຄອບຄົວຈຶ່ງຈະຢູ່ດ້ວຍກັນຢ່າງມີຄວາມສຸກ

ມີປ້າຍຕິດຣົຖຮຽນໄວ້ວ່າ, "ຄອບຄົວໃດ ໃຊ້ເວລາອ້ອນວອນຮ່ວມກັນເປັນປະຈຳ ຍ່ອມຢູ່ນຳກັນໄດ້ນານກວ່າຄອບຄົວທີ່ບໍ່ເຄີຍທຳ." ນັ້ນໝາຍຄວາມວ່າການອ້ອນວອນ ສຶກສາພຣະຄຳພີດ້ວຍກັນ ສຳຄັນຕໍ່ຊີວິດຄອບຄົວ ໃນໂລກນີ້ ມີສິ່ງທົດລອງຫລາຍຢ່າງ ພ້ອມດ້ວຍມີໄພອັນຕລາຍ ຖ້າເຮົາຮັກລູກ ຮັກເມັຽ ຮັກຜົວ ພວກເຮົາຍ່ອມຝາກຄົນທີ່ເຮົາຮັກໄວ້ນຳພຣະເຈົ້າ ອາໄສພະລັງຈາກພຣະເຈົ້າເພື່ອຕໍ່ສູ້ກັບສິ່ງທີ່ຈະພົບແຕ່ລະວັນ

ໃຫ້ພວກເຮົາພະຍາຍາມຢູ່ດ້ວຍກັນຢ່າງສັນຕິວິຖີຢ່າງສຸດຄວາມສາມາດ ເອົາພຣະເຢຊູເປັນສູນກາງ ເປັນຕົວຢ່າງແລະທີ່ເພິ່ງ ຂໍຈະແຈທີ່ຈະຢູ່ດ້ວຍກັນໄດ້ດີທີ່ສຸດຄື ຮູ້ຈັກຜ່ອນສັ້ນຜ່ອນຍາວ ໃຫ້ອະໄພ ເຊື່ອແລະໄວ້ວາງໃຈ ໃກ້ກຽດແກ່ກັນແລະກັນ ໃຫ້ເອົາຄວາມຮັກເປັນເຊືອກເສັ້ນໃຫຍ່ ຜູກມັດຄອບຄົວເຮົາໄວ້ ດ້ວຍການນຳພາຂອງອົງພຣະຜູ້ເປັນເຈົ້າ ຜູ້ແຕ່ງຕັ້ງແລະສະຖາປະນາຄອບຄົວ ສະພາສິດບົດ 10:2 ສອນວ່າ "...ແຕ່ຄວາມຮັກຖ້ວມຄວາມຜິດທຸກຢ່າງ"

ສງວນສິກຂະສິດ Copyright©Thira Siengsukon
In compliance with copyright restrictions, no portion of these materials may be reproduced in any form without witten permission of the writer.

3/6/00

# ບົດທີ 9
# ສິດຍາພິບາລໃຫ້ຄຳປຶກສາແກ່ຜູ້ສົມຣົດໃໝ່

*"ດ້ວຍເຫດນັ້ນ ຜູ້ຊາຍຈິ່ງລະພໍ່ແມ່ຂອງຕົນໄປຜູກພັນຢູ່ກັບເມັຽ*
*ແລະເຂົາທັງສອງຈະເປັນກາຍອັນດຽວກັນ"*

(ມທ 19:5)

*"ຈົ່ງໃຫ້ການສົມຣົດເປັນທີ່ນັບຖືແກ່ຄົນທັງປວງ*
*ແລະໃຫ້ຕຽງສົມຣົດເວັ້ນຈາກຄວາມຊົ່ວຮ້າຍ"*

(ເຮັບເຣີ 13:4)

ໃນຖານະສິດຍາພິບາລ ມີໜ້າທີ່ສຳຄັນອີກປະການນຶ່ງ ແມ່ນການໃຫ້ຄຳປຶກສາແກ່ຜູ້ທີ່ຕັດສິນໃຈຈະກ້າວເຂົ້າສູ່ຊີວິດການຄອງເຮືອນ ສິດຍາພິບາລສົມຄວນໃຫ້ຄຳປຶກສາ ແລະແນະນຳແກ່ຝ່າຍຊາຍແລະຝ່າຍຍິງ ໃຫ້ເຂົາທັງສອງຮຽນຮູ້ຈັກການເລີ້ມຕົ້ນຊີວິດໃໝ່ຮ່ວມກັນກ່ອນທີ່ຈະເຂົ້າສູ່ພິທີສົມຣົດຫລືການແຕ່ງງານ ຕາມຫລັກການຂອງຄຣິສຈັກ ໂດຍປົກຕິແລ້ວຄຣິສຕຽນທີ່ຕັດສິນໃຈຕ້ອງການເຂົ້າສູ່ພິທີສົມຣົດນັ້ນ ທັງຝ່າຍຊາຍແລະຝ່າຍຍິງ ຈະເຂົ້າມາຫາຜູ້ເປັນສິດຍາພິບາລ ເພື່ອຂໍຄວາມແນະນຳແລະຈັບຈອງສະຖານທີ່ ຕາມວັນເວລາທີ່ຄາດໝາຍໄວ້ ແຕ່ກ່ອນທີ່ຈະເຖິງວັນແຕ່ງງານແທ້ ໆ ຜູ້ເປັນສິດຍາພິບາລຈະຕ້ອງປະກອບໜ້າທີ່ຂອງຕົນ ໂດຍການນັດໝາຍວັນເວລາໃຫ້ທັງຝ່າຍຊາຍແລະຝ່າຍຍິງມາຮັບການອົບຮົມ ຢ່າງນ້ອຍສອງເທື່ອໃນເຣື່ອງການຕັ້ງຕົ້ນຊີວິດໃໝ່ຮ່ວມກັນ

## ສິດຍາພິບາລຕ້ອງມີຄວາມເຂົ້າໃຈເຣື່ອງການແຕ່ງງານ

ໃນຖານະສິດຍາພິບາລ ກ່ອນທີ່ເຮົາຈະກ້າວເຂົ້າໄປສູ່ການໃຫ້ຄຳແນະນຳຜູ້ອື່ນ ເຮົາຕ້ອງຮູ້ຈັກແລະມີປະສົບການພ້ອມທັງຄວາມເຂົ້າໃຈອັນຖືກຕ້ອງ ໃນເຣື່ອງຊີວິດສົມຣົດ (Marriage) ຢ່າງພຽງພໍ ຈຳເປັນທີ່ຜູ້ເປັນສິດຍາພິບາລຕ້ອງໃຊ້ເວລາໃນການຈັດຕຽມຕົນເອງໃຫ້ພ້ອມໃນເຣື່ອງນີ້ ໂດຍການສຶກສາຄົ້ນຄວ້າ ຫລືເຂົ້າຮັບການອົບຮົມໃນດ້ານນີ້ໂດຍກົງ ເພື່ອວ່າການປະຕິບັດຂອງສິດຍາພິບາລໃນຊີວິດຄອບຄົວໂດຍສ່ວນຕົວຈະເປັນແບບຢ່າງແກ່ຜູ້ອື່ນ ເພື່ອວ່າຜູ້ເປັນສິດຍາພິບາລຈະຮູ້ຈັກແລະມີຊີວິດອັນຖືກຕ້ອງທັງໃນການປະຕິບັດຕໍ່ພັລຍາແລະຄອບຄົວ ໂດຍໃຊ້ປະສົບການແລະຄວາມຮູ້ຄວາມເຂົ້າໃຈທີ່ຮັບການອົບຮົມມາ ແລະສາມາດທີ່ຈະນຳໄປໃຫ້ຄຳແນະນຳແກ່ຄູ່ສົມຣົດໃໝ່ໄດ້ສອດຄ້ອງຖືກຕ້ອງກັນດີ ຫລາຍກວ່ານັ້ນອີກ ຜູ້ເປັນສິດຍາພິບາລຕ້ອງຮູ້ຈັກແກ້ໄຂປັນຫາສ່ວນຕົວແລະຄອບຄົວດ້ວຍ ຫາກວ່າຕົນເອງບໍ່ສາມາດແກ້ໄຂບັນຫາໃນຊີວິດສົມຣົດຂອງຕົນເອງແລ້ວ ຈະໄປໃຫ້ຄຳແນະນຳແກ່ຜູ້ອື່ນໄດ້ຢ່າງໃດ?

ເຖິງຢ່າງໃດກໍຕາມ ໃນທີ່ນີ້ບໍ່ໄດ້ໝາຍຄວາມວ່າ ຜູ້ເປັນສິດຍາພິບາລຈະຕ້ອງມີຊີວິດທີ່ສົມບູນຮາບຮື່ນທຸກປະການ ໂດຍບໍ່ມີບັນຫາຫຍັງໝົດ ສະເພາະຢ່າງຍິ່ງຊີວິດການຄອງເຮືອນຂອງຕົນເອງ ແຕ່ວ່າຜູ້ເປັນສິດຍາພິບາລຈຳເປັນຈະໄດ້ຜ່ານປະສົບການ ແລະບັນຫາຫລາຍຢ່າງຫລາຍແນວໃນເລື່ອງການຄອງເຮືອນ ຊຶ່ງແມ່ນສິ່ງທັມມະດາ ແຕ່ດ້ວຍເຫດທີ່ໄດ້ຮັບປະສົບປະການທີ່ຜ່ານພົ້ນມາແລ້ວນັ້ນ ແລະໂດຍອາສັຍຄວາມເຊື່ອ ແລະໂດຍການນຳພາຂອງພຣະເຈົ້າເປັນເຫດໃຫ້ຕົນເອງເກີດປະສົບການ ມີຄວາມເຂົ້າໃຈແລະສາມາດແກ້ໄຂບັນຫາໃນເລື່ອງການຄອງເຮືອນ ສິດຍາພິບາລທີ່ສາມາດຜ່ານພົ້ນອຸປສັກ ແລະສາມາດມີຊັຍຜ່ານພົ້ນຄວາມບໍ່ເຂົ້າໃຈກັນກັບພັລຍາ ແລະມີປະສົບການຂອງການປຸ່ງແປງໃໝ່ເທື່ອລະເລັກເທື່ອລະນ້ອຍທັງຂອງຕົນເອງແລະຂອງຜູ້ເປັນພັລະຍາ ປະສົບການເຫລົ່ານີ້ແຫລະເປັນອຸປະກອນແລະເປັນຄຸນພາບອັນສຳຄັນ ທີ່ຈະໃຫ້ຄຳປຶກສາແກ່ຜູ້ອື່ນ ແກ່ສະມາຊິກໂດຍທົ່ວໄປແລະໂດຍສະເພາະຢ່າງຍິ່ງ ແກ່ຊາຍແລະຍິງທີ່ເຂົ້າມາຂໍຄຳປຶກສາຈາກສິດຍາພິບາລເພື່ອເຂົ້າສູ່ພິທີສົມຣົດ

## ພື້ນຖານການແຕ່ງງານແບບຄຣິສຕຽນ (Christian Marriage)

ສິດຍາພິບາລຜູ້ໃຫ້ຄຳປຶກສາ ສົມຄວນໃຫ້ແນະນຳເຖິງພື້ນຖານການແຕ່ງງານແບບຄຣິສຕຽນແກ່ຄູ່ສົມຣົດໃໝ່ດັ່ງນີ້

**1. ເລີ້ມຕົ້ນຈາກບຸກຄົນສອງຝ່າຍ**

ການແຕ່ງງານແມ່ນເລີ້ມຕົ້ນຈາກການທີ່ຊາຍນຶ່ງ ຍິງນຶ່ງ ຕັດສິນໃຈວ່າຕ້ອງການຈະຮ່ວມຊີວິດຢູ່ນຳກັນ ຜູກພັນກັນດ້ວຍຄວາມຮັກ ແມ່ນຄວາມຜູກພັນທັງທາງດ້ານຈິດໃຈ ແລະຮ່າງກາຍ ໂດຍທີ່ເຂົາທັງສອງຕ້ອງການໃຊ້ຊີວິດຮ່ວມກັນອັນຍາວນານໃນອານາຄົດທີ່ກຳລັງກ້າວເຂົ້າສູ່ຊີວິດຂອງເຂົາ ໂດຍປົກກະຕິແລ້ວທັງຝ່າຍຊາຍແລະຝ່າຍຍິງຕ້ອງມີຄວາມຮັກ ອັນເປັນປັດຈັຍສຳຄັນທີ່ຜູກພັນເຂົາທັງສອງໄວ້ເຂົ້າດ້ວຍກັນ ເພາະວ່າຫາກຂາດຄວາມຮັກແລ້ວຄູ່ສົມຣົດຈະຂາດພະລັງອັນສຳຄັນໃນການຢູ່ຮ່ວມກັນ ຜູ້ເປັນສິດຍາພິບາລຕ້ອງຊ່ວຍໃຫ້ບຸກຄົນທັງສອງສາມາດສະແດງອອກເຖິງເລື່ອງຄວາມຮັກ ໂດຍສະແດງອອກດ້ວຍຄວາມເວົ້າແລະຄວາມຄິດເຫັນໃນເລື່ອງຄວາມຮັກນີ້ອອກມາ ສິດຍາພິບາລສາມາດຖາມຄຳຖາມທັງສອງຝ່າຍ ດັ່ງນີ້

**ຕົວຢ່າງຄຳຖາມ**

- ເຈົ້າ ຮັກ...(ຊື່)......ແມ່ນບໍ່?
- ເຈົ້າບັນຍາຍໄດ້ບໍ່ວ່າ ຄວາມຮັກແມ່ນຫຍັງ?
- ເຈົ້າຮູ້ຕົວວ່າຮັກເຂົາຕັ້ງແຕ່ມື້ໃດ?
- ເຈົ້າຮູ້ສຶກແນວໃດເມື່ອຮູ້ຕົວວ່າຮັກເຂົາຢ່າງສຸດຫົວໃຈ?
- ຫາກວ່າເຈົ້າບໍ່ສາມາດແຕ່ງງານນຳເຂົາ ເຈົ້າຈະຮູ້ສຶກແນວໃດ?

ການຕັ້ງຄຳຖາມໃຫ້ຜູ້ກ່ຽວທີ່ມາຂໍຄຳແນະນຳໄດ້ຕອບນັ້ນເປັນການດີທີ່ສຸດ ເພາະເຫດວ່າຜູ້ຕອບຄຳຖາມຈະຕ້ອງຄິດແລະພິຈາຣະນາ ໂດຍເອົາຄວາມຈິງທີ່ຕົນເອງເຂົ້າໃຈເປີດເຜີຍອອກມາ ແລ້ວຜູ້ເປັນສິດຍາພິບາລຈຶ່ງຈະສາມາດໃຈ້ແຍກ ແລະອະທິບາຍເນື້ອໃນໃຫ້ຜູ້ມາຮັບຄຳແນະນຳໄດ້ເຂົ້າໃຈ ຊ່ວຍໃຫ້ຜູ້ກ່ຽວເບິ່ງເຫັນຕົວເອງແຈ້ງຫລາຍຂຶ້ນໃນເລື່ອງຄວາມຮັກ ສິດຍາພິບາລສົມຄວນອົບຮົມສມາຊິກໃໝ່ໃນເລື່ອງຄວາມຮັກຈາກພຣະທັມ 1 ໂກຣິນໂທ 13:4-7

ພຣະທັມ 1 ໂກຣິນໂທ 13:4-7 ສອນໃຫ້ເຮົາເຂົ້າໃຈເຖິງຄວາມໝາຍຂອງຄຳວ່າ **"ຄວາມຮັກ"** ພຣະທັມຕອນນີ້ຊີ້ໃຫ້ເຂົ້າໃຈວ່າ ຄວາມຮັກມີສ່ວນປະກອບຫລາຍດ້ານຮວມທັງສິ່ງທີ່ເຫັນພ້ອມໃນທາງທີ່ຖືກ ແລະບໍ່ພ້ອມໃນທາງຜິດ ມີດັ່ງຕໍ່ໄປນີ້

(1) **ອົດທົນດົນນານ** ແມ່ນອົດທົນຕໍ່ຄວາມກ້າວຮ້າວ ບໍ່ຮີບຮ້ອນຄອຍຈົນກວ່າພຣະເຈົ້າຈະແກ້ໄຂສິ່ງທີ່ຜິດໃຫ້ຖືກ

(2) **ຄວາມເມດຕາກະຣຸນາ** ແມ່ນຫາທາງຊ່ວຍເຫລືອ ເປັນການສ້າງສັນ ອວຍພອນເຂົາເມື່ອຖືກແຊ່ງດ່າ ຊ່ວຍເຂົາເມື່ອຍາມເຈັບປ່ວຍ ສະແດງອອກເຖິງຄວາມຮັກ

(3) **ບໍ່ເຫິງສາ** ແຕ່ພໍໃຈໃນຕົນເອງ ບໍ່ຢ້ານລື່ນໃນຄວາມສຳເຣັດຂອງຜູ້ອື່ນ

(4) **ບໍ່ອວດອ້າງ** ແຕ່ສະງົບນິ່ງ ບໍ່ສະແດງອອກຈົນເກີນໄປ ເພື່ອຕ້ອງການພຍາຍາມເຮັດໃຫ້ຜູ້ອື່ນເລື່ອມໃສ ຫລືຕ້ອງການເປັນຈຸດສົນໃຈ

(5) **ບໍ່ຈອງຫອງ** ແຕ່ຖ່ອມຕົວ ນຸ່ມນວລມີມາຣະຍາດ

(6) **ບໍ່ຫຍາບຄາຍ** ແຕ່ສຸພາບອ່ອນໂຍນ

(7) **ບໍ່ຄິດເຫັນແກ່ປໂຍດສ່ວນຕົວຢ່າງດຽວ** ຮູ້ຈັກຄິດເຖິງຜູ້ອື່ນ

(8) **ບໍ່ມີໃຈຮ້າຍງ່າຍ** ແຕ່ມີອາຣົມດີ

(9) **ບໍ່ຊອບຈົດຈຳຄວາມຜິດ ຫລືຜູກພາຍາບາດ** ແຕ່ມີຄວາມກະຣຸນາ ບໍ່ໃຫ້ຮ້າຍຜູ້ໃດ

(10) **ບໍ່ຍິນດີໃນການອະທັມ** ໂດຍການນຳເອົາຄວາມຜິດຂອງຜູ້ອື່ນມາເປີດເຜີຍ ແຕ່ຍິນດີໃນການສັດຈິງ ເມື່ອຜູ້ອື່ນປະຕິບັດຕາມຄວາມຈິງ

(11) **ສູ້ທົນທຸກສິ່ງ** ມີຄວາມກ້າຫານ

(12) **ເຊື່ອທຸກສິ່ງບໍ່ຂີ້ສົງສັຍ** ແຕ່ວາງໃຈ ໃຫ້ອະພັຍທຸກຢ່າງ ມີຄຳອະທິບາຍທີ່ຈະສະແດງອອກເຖິງສ່ວນທີ່ດີໃຫ້ຜູ້ອື່ນ

(13) **ໄວ້ວາງໃຈໃນທຸກສິ່ງ** ບໍ່ໝົດຫວັງ ແຕ່ມີຄວາມຫວັງ ບໍ່ລະຖິ້ມຫລືປະຕິເສດ ເພາະວ່າມີຄວາມຫວັງ

(14) **ພຽນທົນເອົາທຸກສິ່ງ** ບໍ່ແມ່ນເປັນຜູ້ທີ່ມັກເອົາຊນະ ແຕ່ເປັນຜູ້ທີ່ບໍ່ຍອມເລີກລົ້ມ ແລະສາມາດອົດທົນຕໍ່ປັນຫາທີ່ຜະເຊີນ

### 2. ພຣະເຈົ້າແມ່ນຜູ້ຜູກພັນຄົນທັງສອງໃຫ້ເປັນອັນນຶ່ງອັນດຽວກັນ

ໃນຖານະທີ່ຄູ່ແຕ່ງງານເປັນຄຣິສຕຽນ ແຕ່ລະຝ່າຍຕ່າງມີພຣະເຈົ້າເປັນອົງປະທານປົກຄອງຊີວິດຂອງເຂົາແຕ່ລະຄົນ ແລະເມື່ອເຂົາທັງສອງຕັດສິນໃຈເຂົ້າສູ່ພິທີສົມຣົດຕາມແບບຄຣິສຕຽນແລ້ວ ໃນພິທີສົມຣົດນີ້ພຣະເຈົ້າໄດ້ສະຖາປະນາແລະຜູກພັນເຂົາທັງສອງເຂົ້າດ້ວຍກັນໃຫ້ເປັນອັນນຶ່ງອັນດຽວກັນ ຄວາມຜູກພັນນີ້ເປັນພັນທະສັນຍາຜູກພັນມັດຊຶ່ງກັນແລະກັນໄວ້ ຣະຫວ່າງຊາຍກັບຍິງ ແລະຣະຫວ່າງຍິງກັບຊາຍ ຕໍ່ໜ້າອົງພຣະຜູ້ເປັນເຈົ້າ ແລະຕໍ່ໜ້າພໍ່ແມ່

ອ້າຍນ້ອງໃນຄອບຄົວ ແລະພ້ອມອ້າຍນ້ອງໃນຄຣິສຈັກ ໃຫ້ເປັນພະຍານໃນ **"ຄວາມຮັກແລະຄວາມຜູກພັນ"** ທີ່ເຂົາທັງສອງມີຕໍ່ກັນ ພຣະເຈົ້າຈຶ່ງສົມຄວນເປັນສູນກາງ ແລະເປັນອົງປະທານໃນຊີວິດຂອງເຂົາທັງສອງ ເພື່ອຊ່ວຍເຫລືອເພື່ອນຳພາ ເພື່ອອວຍພຣະພອນແກ່ຄູ່ສົມຣົດໃໝ່ ໃຫ້ມີຈຸດຫລັກແຫ່ງຄວາມເຊື່ອຖືແລະຍຶດໝັ້ນທີ່ຈະດຳເນີນຊີວິດເປັນຄູ່ຜົວເມັຍທີ່ສາມາດສ້າງຄອບຄົວຢ່າງມີຄຸນນະພາບ ຕາມຄຳສອນຂອງພຣະຄຳພີ ແລະໃຫ້ເປັນໜ່ວຍຂອງສັງຄົມທີ່ເຂັ້ມແຂງຕໍ່ໄປ

**ຜູ້ເປັນສິດຍາພິບາລຊ່ວຍໃຫ້ຄຳປຶກສາໂດຍຕັ້ງຄຳຖາມດັ່ງຕໍ່ໄປນີ້**

- ພຣະເຈົ້າມີບົດບາດໃນຊີວິດຂອງພວກເຈົ້າຕໍ່ກັນແລະກັນແນວໃດ?
- ພຣະເຈົ້າມີສ່ວນໃນພິທີສົມຣົດຂອງພວກເຈົ້າແນວໃດ?
- ພຣະເຈົ້າມີສ່ວນຫລືບົດບາດໃນຊີວິດຂອງເຈົ້າທັງສອງຫລັງຈາກພິທີສົມຣົດແນວໃດ?
- ພຣະເຈົ້າຈະມີສ່ວນໃນຄອບຄົວຂອງພວກເຈົ້າແນວໃດ?

### 3. ການຮ່ວມທຸກຮ່ວມສຸກໃນພັນທະຜູກພັນແລະໜ້າທີ່ຮັບຜິດຊອບ

ຫລັງຈາກພິທີສົມຣົດແລ້ວ ຊຶ່ງເປັນເວລາແຫ່ງຄວາມປິຕິຍິນດີ ມີຄວາມມ່ວນຊື່ນຊຶ່ງເຕັມໄປດ້ວຍຄວາມຮັກຄວາມຫວັງ ແລະຄວາມຕັ້ງໃຈໃໝ່ ສິ່ງເຫລົ່ານີ້ລ້ວນເປັນພະລັງອຳນາດ ເສີມແຮງເສີມກຳລັງໃຈແກ່ຄູ່ສົມຣົດໃນການຕັ້ງຄອບຄົວໃໝ່ ເປັນການເລີ້ມຕົ້ນຂອງຄູ່ສົມຣົດທີ່ຈະມີພັນທະຜູກພັນ ມີໜ້າທີ່ຄວາມຮັບຜິດຊອບ ແລະການຮ່ວມທຸກຮ່ວມສຸກ ເປັນການກ່ຽວດອງທີ່ຕິດສະນິດແໜ້ນຍາວນານຕລອດຊີວິດຂອງເຂົາທັງສອງ ຊຶ່ງທັງສອງຝ່າຍຕ້ອງມີການຮຽນຮູ້ ແລະກະຕຽມຕົນເອງ ເພື່ອສາມາດຮັບກັບສະພາບການໃໝ່ ໆ ທີ່ກຳລັງຈະເກີດຂຶ້ນ ຄວາມຝັນໃຝ່ທີ່ບໍ່ແມ່ນຄວາມແທ້ຈິງຂອງຊີວິດທີ່ຄິດຈະວ່າ ***"ວິວາພາໃຫ້ຂຶ້ນສະວັນ"*** ໂດຍບໍ່ຍອມຮັບກັບສະພາບຊີວິດຄວາມເປັນຈິງມັກຈະພາໃຫ້ເກີດມີບັນຫາຂຶ້ນໃນພາຍຫລັງ ແລະບັນຫາເລັກ ໆ ອາດເກີດສະສົມໄວ້ຫລາຍຈົນບໍ່ອາດຈະແກ້ໄຂໄດ້ອາດພາໃຫ້ເກີດການແຕກແຍກປະຮ້າງກັນໄປໃນທີ່ສຸດ ໃນຂໍ້ນີ້ສິດຍາພິບາລຕ້ອງຊີ້ແນະໃຫ້ທັງສອງຝ່າຍເຫັນເຖິງ**ຄວາມຈິງຂອງຊີວິດວ່າ ຫລັງຈາກພິທີສົມຣົດແລ້ວ ເຂົາທັງສອງຈະສາມາດຮ່ວມທຸກຮ່ວມສຸກກັນແນວໃດ ຈະໜຸນນ້ຳໃຈກັນຕໍ່ສູ້ກັບບັນຫາອຸປະສັກຂອງຊີວິດແນວໃດ** ອີກທັງເຣື່ອງເງິນຄຳ ການທຳມາຫາລ້ຽງຊີບ ແລະການຮູ້ຈັກໃຊ້ຈ່າຍໃຫ້ເໝາະສົມຖືກຕ້ອງແມ່ນແນວໃດ ແລະການຮູ້ຈັກການເກັບອອມ ປະຢັດໄວ້ໃນຍາມຂຸກເສີນເປັນຕົ້ນ ສິ່ງທີ່ສຳຄັນໃນການຮ່ວມທຸກຮ່ວມສຸກກັນ ແມ່ນການຮຽນຮູ້ຈັກການແບ່ງໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະຝ່າຍ

**ຖາມຄຳຖາມຕໍ່ໄປນີ້**

- **ຫລັງຈາກພິທີສົມຣົດແລ້ວ ເຈົ້າຈະຕ້ອງຜູກພັນກັບຄູ່ສົມຣົດແນວໃດ?**
- **ເຈົ້າມີໜ້າທີ່ຫຍັງແດ່? ເຈົ້າຈະຕ້ອງເຮັດຫຍັງແດ່?**
- **ຄວາມຮັບຜິດຊອບຂອງເຈົ້າແມ່ນຫຍັງ?**

### 4. ຄວາມຄາດຫວັງ ຄວາມຜິດຫວັງ ແລະການຍອມຮັບຄວາມບົກພ່ອງຂອງຕົນເອງ ແລະຝ່າຍກົງກັນຂ້າມ

ຊີວິດສົມຣົດໃໝ່ຂອງໜຸ່ມສາວ ແຕ່ລະຝ່າຍບໍ່ວ່າຍິງຫລືຊາຍຕ່າງໆມີຄວາມຄາດຫວັງໃນຝ່າຍກົງກັນຂ້າມ ອິດທິພົນທີ່ກໍ່ໃຫ້ເກີດຄວາມຄາດຫວັງນີ້ ອາດຈະມາຈາກຄວາມໃຝ່ຝັນຂອງຕົນເອງ ຫລືຄ່ານິຍົມຂອງສັງຄົມ ຄວາມຄາດຫວັງບາງແນວອາດຈະມາຈາກຄວາມຝັນໃຝ່ນຳເປັ້ນນິຍາຍ ຫລືການບອກເລົ່າຂອງຜູ້ອື່ນ ຄວາມຄາດຫວັງບາງປະ

ການອາດຈະເປັນສິ່ງທີ່ໄດ້ຮັບການອົບຮົມບົ່ມນິສັຍມາແຕ່ນ້ອຍ ມາຈາກຄອບຄົວ ຫລືຮີດຄອງປະເພນີທີ່ແຕກຕ່າງກັນ ສາເຫດທີ່ເຮັດໃຫ້ເກີດຄວາມຜິດຫວັງຍ້ອນວ່າ ຫລັງຈາກທີ່ທັງສອງຄົນໄດ້ເຂົ້າສູ່ພິທີສົມຣົດແລ້ວ ຕ້ອງມີຊີວິດຢູ່ຮ່ວມກັນຢ່າງໃກ້ຊິດ ຊຶ່ງກໍ່ໃຫ້ເກີດການເບິ່ງເຫັນລາຍລະອຽດຂອງອຸປນິສັຍ ແລະຄວາມບົກພ່ອງບໍ່ສົມບູນຂອງແຕ່ລະຝ່າຍ ເຮັດໃຫ້ເກີດການພິຈາຣະນາ ເກີດການໃຈ້ແຍກ ຊອກຫາຄວາມຜິດຂອງຝ່າຍກົງກັນຂ້າມ ມີການເວົ້າຈາກະທົບກະທຽບ ເຮັດໃຫ້ເກີດຄວາມຜິດຫວັງ ແລະເຈັບປວດໃນຈິດໃຈ ຊຶ່ງຈະສົ່ງຜົນສະທ້ອນອອກມາທັງທາງວາຈາແລະການກະທຳ ເມື່ອເກີດການປະຕິບັດຕໍ່ກັນແລະກັນຢ່າງບໍ່ພໍໃຈແລ້ວ ບັນຫານ້ອຍອາດພາໃຫ້ເກີດເປັນບັນຫາໃຫຍ່ໄດ້ ແລະຖ້າຕ່າງຝ່າຍຕ່າງບໍ່ສາມາດປັບຄວາມເຂົ້າໃຈຕໍ່ກັນແລະກັນໄດ້ແລ້ວ ບັນຫານ້ອຍ ໆ ທີ່ສຸມໃສ່ກັນໄວ້ ອາດບໍ່ສາມາດທີ່ຈະຫາຈຸດຕັ້ງຕົ້ນເພື່ອແກ້ໄຂໄດ້ເລີຍ ດັ່ງນັ້ນຈຶ່ງຈຳເປັນຕ້ອງມີການຮຽນຮູ້ແລະເຂົ້າໃຈເຖິງຄວາມຄາດຫວັງຮ່ວມກັນ

**ສິດຍາພິບາລຜູ້ທີ່ໃຫ້ຄຳປຶກສາ ສົມຄວນໃຊ້ຕາຕະຣາງຂ້າງລຸ່ມໃນການຮຽນຮູ້ຄວາມຫວັງຮ່ວມກັນ**

- ໃຫ້ເຈັ້ຽແຕ່ລະຝ່າຍແລະຖາມວ່າ ທ່ານຄາດຫວັງໃນຕົວຂອງຜູ້ທີ່ຈະເປັນສາມີ/ພັນລະຍາແນວໃດ?
- ຈົ່ງຂຽນຄວາມຄາດຫວັງຫລືຄວາມຄາດໝາຍສຳຄັນຂອງທ່ານຈາກຝ່າຍກົງຂ້າມມາ 12 ຂໍ້
- ຫລັງຈາກຂຽນແລ້ວ ໃຫ້ທັງສອງຝ່າຍແລກປ່ຽນເຈັ້ຽທີ່ຂຽນຂໍ້ຄວາມທີ່ຄາດຫວັງຕໍ່ກັນ
- ຖາມແຕ່ລະຝ່າຍວ່າ ເຂົາສາມາດເຮັດຕາມຄວາມຄາດໝາຍຂອງຝ່າຍກົງກັນຂ້າມໄດ້ຫລືບໍ່?
- ຖ້າໄດ້ແນວໃດໃຫ້ໝາຍໃສ່ຊ່ອງ "ເຮັດໄດ້" ຫລືຈະ "ພຍາຍາມ" ຫລືວ່າເປັນໄປ "ເຮັດບໍ່ໄດ້"
- ໃຫ້ທັງສອງພິຈາຣະນາເຈັ້ຽທີ່ຂຽນໄວ້ທັງສອງສະບັບນັ້ນຮ່ວມກັນ
- ຫາກວ່າສິ່ງທີ່ຄາດຫວັງໄວ້ອີກຝ່າຍນຶ່ງເຮັດບໍ່ໄດ້ ຈະເຮັດແນວໃດ ໃຫ້ສະແດງຄວາມເຫັນຕົກລົງກັນ

| ຈົ່ງຂຽນຄວາມຄາດຫວັງໃສ່ຊ່ອງຂ້າງລຸ່ມ<br>(ຊ່ອງທາງຂວາມືຈະເຮັດນຳຫລັງ) | ເຮັດໄດ້ | ພຍາຍາມ | ເຮັດບໍ່ໄດ້ |
|---|---|---|---|
| 1. | | | |
| 2. | | | |
| 3. | | | |
| 4. | | | |
| 5. | | | |
| 6. | | | |
| 7. | | | |
| 8. | | | |
| 9. | | | |
| 10. | | | |
| 11. | | | |
| 12. | | | |

ສິດຍາພິບາລຕ້ອງອະທິບາຍເຖິງຂັ້ນຕອນທັງສາມຂອງການຂອງການແຕ່ງງານ ເພື່ອທັງສອງຝ່າຍຈະໄດ້ເຂົ້າໃຈສະພາບການທີ່ອ້ອມລ້ອມຄວາມຮູ້ສຶກຂອງເຂົາ ໂດຍສະແດງຮູບແບບໃນຕາຕະລາງທາງລຸ່ມໃຫ້ທັງສອງຝ່າຍໄດ້ສຶກສາ ແລະຕຽມພ້ອມຮັບກັບສະຖານະການ ເພື່ອໃຫ້ຄູ່ມສົມຣົດພິຈາຣະນາເຖິງ ຂັ້ນຕອນທັງສາມຕາມລາຍການທາງລຸ່ມ ແລ້ວແສດງຄວາມຄິດເຫັນວ່າມີສ່ວນກ່ຽວຂ້ອງກັບຄວາມຮູ້ສຶກຂອງເຂົາຢ່າງໃດ

|  |  |  |
|---|---|---|
| **ຂັ້ນຕອນທີ່ຫລົງໄຫລ** | **ຂັ້ນຕອນທີ່ສິ້ນສຸດການຫລົງໄຫລ** | **ຂັ້ນຕອນທີ່ເຕີບໂຕຂຶ້ນ** |
| ວິມານໃນອາກາດ | ຜິດຫວັງ | ຕັ້ງໝັ້ນຄົງຢ່າງມີພື້ນຖານ |
| ສົມບູນພ້ອມ | ຍຸ່ງຍາກໃຈ | ຂ້ອຍຕ້ອງເພິ່ງພາເຈົ້າ |
| ຖືກຕ້ອງທັງໝົດ | ຜິດທັງໝົດ | ເຈົ້າຄິດເຫັນແນວໃດ? |
| ຄູ່ຟ້າຄູ່ແຜ່ນດິນ | ເລີກກັນ | ເຮົາຊຸກຍູ້ກັນຕໍ່ໄປ |
| ລຸ່ມຫລົງ | ເຈັບປວດ | ຂໍໃຫ້ຂ້ອຍຊ່ວຍເຈົ້າ |
| ຍ້ອງຍໍ | ລະເລີຍ | ໝູນໃນ |
| ບໍມີສະຕິ | ແຕກແຍກ | ຄົງທົນຖາວອນ |
| ສວຍງາມ | ໜ້າໝັ່ນໄສ້ | ຟື້ນຄວາມສົດຊື່ນ |
| ມີສະເໜ່ | ເສົ້າໝອງ | ພາກພູມໃຈ |
| ໜ້າຮັກ | ເປັນພາຣະໜັກ | ມີອິສຣະພາບ |
| ຊົມຊື່ນຍິນດີ | ບໍ່ຄ່ອຍສະບາຍນັກ | ສະດວກສະບາຍ |
| ໜ້າຕື່ນເຕັ້ນ | ຂົມຂື່ນ | ນິມິດຕະພາບ |
| ຈິດໃຈຈິດຈໍ່ | ເໝືອນຕິດກັບດັກ | ເບິ່ງຊີວິດຢ່າງກວ້າງຂວາງ |
| ຕົກລົງໃຈຮ່ວມກັນ | ບໍ່ເຄີຍຕົກລົງໃຈຮ່ວມກັນ | ເຮົາຈະດຳເນີນໄປດ້ວຍກັນ |

ຮຽບຮຽງຈາກ H. Norman Wright & Wes Roberts, Before You Say "I Do", Oregon: Harvest House Publishers, 1997, page 29

5. ເງິນຄຳ ການຈັດຫາ ແລະການໃຊ້ຈ່າຍ

ເງິນຄຳເປັນປັດຈັຍສຳຄັນໃນຊີວິດສົມຣົດທີ່ຮອງລົງມາຈາກເລື່ອງຄວາມຮັກ ແລະເພດສຳພັນ ຄູ່ສົມຣົດທຸກຄູ່ບໍ່ສາມາດຫລີບຫນີເລື່ອງເງິນຄຳນີ້ໄດ້ ຍ້ອນວ່າຊີວິດທີ່ຈະຢູ່ລອດປອດພັຍໃນປັດຈຸບັນ ຈຳເປັນຕ້ອງມີເງິນຄຳຢ່າງພຽງພໍສຳລັບການໃຊ້ຈ່າຍໃນສິ່ງທີ່ຈຳເປັນ ທຸກຄົວເຮືອນຕ້ອງມີການຊື້ເຮືອນຫລືເຊົ່າເຮືອນຢູ່ ຕ້ອງມີອາຫານໄວ້ຫລາຍສົມຄວນພໍກຸ້ມຫລາຍ ໆ ຄາບ ຕ້ອງມີການກວດກາສຸຂະພາບໄປຫານາຍໝໍ ຕ້ອງເສັຍພາສີ ຕ້ອງມີພາຫະນະຣົດລາ ຫລືກະທັ່ງເງິນທີ່ຈະຂຶ້ນຣົດ ຫລືລົງເຮືອ ເຮົາຈຳເປັນຕ້ອງມີເຄື່ອງນຸ່ງຫົ່ມ ແລະຢາຮັກສາພະຍາດ ສິ່ງທີ່ກ່າວມານີ້ລ້ວນເປັນສິ່ງຈຳເປັນທີ່ຂາດບໍ່ໄດ້ ຫລາຍກວ່ານີ້ອີກ ເຮົາຍັງຕ້ອງຢູ່ໃນສັງຄົມທີ່ເກື້ອໜູນເຜື່ອແຜ່ກັນໄປມາ ຄົນເກີດ ຄົນແກ່ ຄົນເຈັບ ຄົນຕາຍ ແລະທີ່ສຳຄັນຫລາຍທີ່ສຸດ ແມ່ນເງິນຄຳທີ່ນຳມາຖວາຍແກ່ພຣະເຈົ້າໃນຄຣິສຈັກ

ຄູ່ສາມີພັນລະຍາທີ່ບໍ່ເຂົ້າໃຈກັນໃນເລື່ອງເງິນຄຳກໍ່ໃຫ້ເກີດບັນຫາໃຫຍ່ ແລະລາມໄປສູ່ເລື່ອງແນວອື່ນ ໆ ດັ່ງນັ້ນຄູ່ສົມຣົດໃໝ່ສົມຄວນນັ່ງລົງພິຈາຣະນາເຖິງລາຍຮັບທັງໝົດ ແລະຣາຍຈ່າຍທັງຫລາຍທີ່ຈຳເປັນແລະຂາດບໍ່ໄດ້ວ່າສົມດຸນກຸ້ມກັນຫລືບໍ່ ໃຜຈະເປັນຜູ້ກຳເງິນໃນເລື່ອງໃດ ໃຜຈະເປັນຜູ້ຈັດຫາແນວໃດ ແລະໃຜຈະເປັນຜູ້ຈັບຈ່າຍໂດຍທີ່ທັງສອງຝ່າຍຕ້ອງມີການຕົກລົງລາຍລະອຽດກັນ ເພື່ອບໍ່ໃຫ້ເກີດການເຂົ້າໃຈຜິດຄິດລະແວງກັນ ແຕ່ມີການຈະແຈ້ງເປີດເຜີຍເຖິງການໃຊ້ຈ່າຍ ແລະສິ່ງສຳຄັນທີ່ສຸດແມ່ນຄວາມຊື່ສັດ ແລະການໄວ້ວາງໃຈກັນ

ສິດຍາພິບາລສົມຄວນອະທິບາຍເຖິງຄວາມຈິງໃນເລື່ອງຄວາມສຳຄັນຂອງເງິນຄຳໃຫ້ຊັດແຈ້ງ ແມ່ນວ່າເງິນຄຳມີບົດບາດສຳຄັນໃນການດຳຣົງຊີວິດກໍຈິງ ແຕ່ກໍຕ້ອງຣະມັດຣະວັງ ຢ່າໃຫ້ຄວາມຮັກທີ່ມີຕໍ່ກັນແລະກັນຈືດຈາງໄປຍ້ອນຮັກເງິນຄຳຫລາຍກວ່າ ເຮັດໃຫ້ຂາດຄວາມຮັກທີ່ຈະໃຫ້ກັບຜູ້ທີ່ເຮົາຮັກ *"ເພາະວ່າ ການຮັກເງິນຄຳເປັນເຄົ້າມູນຂອງຄວາມຊົ່ວທຸກຢ່າງ ແລະເພາະເຫດຄວາມໂລບນີ້ແຫລະ ຈຶ່ງຊັກຈູງຜູ້ລາງຄົນໃຫ້ຫລົງໄປຈາກຄວາມເຊື່ອ ແລະແທງຕົວເອງຈົນຊອດດ້ວຍຄວາມເຈັບແສບຫລາຍປະການ"* (1 ຕີໂມທຽວ 6:10) ພຣະຄັມພີຍັງໄດ້ເນັ້ນໜັກເຖິງຄວາມຮັກຕໍ່ກັນວ່າ *"ຢ່າເປັນໜີ້ສິ່ງໃດແກ່ໃຜ ນອກຈາກຄວາມຮັກຊຶ່ງມີຕໍ່ກັນ"* (ໂຣມ 13:8) ຈາກພຣະທັມທັງສອງຕອນນີ້ຊີ້ໃຫ້ເຫັນເຖິງ ຄວາມສຳຄັນທີ່ສິດຍາພິບາລສົມຄວນແນະນຳໃຫ້ກັບຄູ່ສົມຣົດໃໝ່ ໄດ້ມີຄວາມເຂົ້າແລະຕົກລົງກັນໃນເລື່ອງເງິນຄຳນີ້ໃຫ້ດີ ເພາະຖ້າບໍ່ໄດ້ພິຈາຣະນາຮ່ວມກັນໃນຕອນທີ່ເລີ້ມສ້າງຄອບຄົວແລ້ວ ອາດຈະພົບປັນຫາທີ່ຕາມມາ ແລະສະສົມໄວ້ຫລາຍຈົນເຮັດໃຫ້ຄວາມຮັກຈືດຈາງໄປ ຫລືອາດນຳໃຫ້ແຕກແຍກກັນໄດ້ ດັ່ງການພິຈາຣະນາແລະຕັດສິນປັນຫາຮ່ວມກັນມີສ່ວນສຳຄັນ ທີ່ຈະກຳໜົດຄ່າໃຊ້ຈ່າຍຕ່າງ ໆ ໃຫ້ສົມກັບລາຍໄດ້ທີ່ຫາໄດ້ມາ

ສິດຍາພິບາລຜູ້ໃຫ້ຄຳປຶກສາ ຈຳເປັນຕ້ອງອົບຣົມເຖິງເລື່ອງຈັດງົບປະມານຈາກລາຍໄດ້ທີ່ທັງສອງຫາມາໄດ້ແກ່ຜູ້ທີ່ຈະຕ້ອງການເຂົ້າສູ່ພິທີສົມຣົດທັງສອງຄົນ ໂດຍໃຫ້ທັງສອງຈົດລາຍການໃຊ້ຈ່າຍທີ່ຈຳເປັນລົງໃນຊ່ອງທາງຊ້າຍມືໃນໜ້າຕໍ່ໄປ ແລ້ວຮວມຍອດ ລາຍຈ່າຍໃນແຖວສຸດທ້າຍ ສ່ວນລາຍຮັບ ໃຫ້ລົງລາຍການຕ່າງ ໆ ທີ່ເປັນລາຍຮັບທັງໝົດໄວ້ໃນຊ່ອງທາງຂວາມື ແລ້ວຮວມຍອດລາຍຮັບໄວ້ໃນແຖວສຸດທ້າຍ ເມື່ອໄດ້ຍອດທັງລາຍຮັບແລະລາຍຈ່າຍໃຫ້ຮູ້ຈັກສຶກສາປຽບທຽບເບິ່ງວ່າ ລາຍໄດ້ທີ່ຫາມາໄດ້ພຽງພໍກັບລາຍຈ່າຍຫລືບໍ່ ຖ້າບໍ່ພໍ ໃຫ້ທັງສອງປຶກສາກັນວ່າມີລາຍຈ່າຍລາຍການໃດຕ້ອງຕັດໃຫ້ນ້ອຍລົງ ຫລືຈະຕ້ອງຫາທາງຫາລາຍໄດ້ໃຫ້ຫລາຍຂຶ້ນ ຄິດວ່າໃນການຕັ້ງຄອບຄົວໃໝ່ ການທີ່ພຍາຍາມຫາລາຍໄດ້ໃຫ້ຫລາຍຂຶ້ນນັ້ນເປັນການຍາກ ເພາະບໍ່ມີເວລາພໍສຳລັບທຸກ ໆ ສິ່ງ ດັ່ງນັ້ນການພິຈາຣະນາຕັດລາຍຈ່າຍໃຫ້ນ້ອຍລົງ ຈະເປັນຄວາມຈິງຫລາຍກວ່າ (ໃນໜ້າຕໍ່ໄປແມ່ນແບບຝຶກຫັດທີ່ສິດຍາພິບາລຈະມອບໃຫ້ຜູ້ທີ່ມາຮັບຄຳປຶກສາ ເພື່ອໃຫ້ເຂົາທັງສອງເຮັດແລ້ວນຳກັບໄປພິຈາຣະນາ)

| ລາຍຈ່າຍ | | ລາຍຮັບ | |
|---|---|---|---|
| 1. ຖວາຍພຣະເຈົ້າ | $ ........... | 1 .................................... | $ ........... |
| 2. ຄ່າເຮືອນ | $ ........... | 2 .................................... | $ ........... |
| 3. ຄ່ານ້ຳ ຄ່າໄຟ | $ ........... | 3 .................................... | $ ........... |
| 4. ຄ່າອາຫານ | $ ........... | 4 ..................................... | $ ........... |
| 5. ຄ່າຣົດ | $ ........... | 5 ..................................... | $ ........... |
| 6. ຄ່ານ້ຳມັນຣົດ | $ ........... | | |
| 7. ຄ່າປະກັນພັຍທຸກ ໆຢ່າງ | $ ........... | | |
| 8. ຄ່າພາສີທຸກຢ່າງ | $ ........... | | |
| 9. ຄ່າຊື້ເສື້ອຜ້າ | $ ........... | | |
| 10. ຄ່າຢຸກຢາ | $ ........... | | |
| 11. ຄ່າເຄໂບ ໂທຣະທັດ | $ ........... | | |
| 12. ຄ່າໂທຣະສັບ | $ ........... | | |
| 13. ຄ່າອິນເຕີແນດໃຊ້ ຄອມພິວເຕີ | $ ........... | | |
| 14. ຄ່າຕັດຜົມ | $ ........... | | |
| 15. ຄ່າເຄື່ອງໃຊ້ສອຍໃນເຮືອນ | $ .......... | | |
| 16. ຄ່າໜັງສື | $ ........... | | |
| 17. ຄ່າການສຶກສາເລົ່າຮຽນ | $ ........... | | |
| 18. ຄ່າເຄື່ອງເຮືອນ | $ ........... | | |
| 19. ຄ່າເຄື່ອງເສີມສວຍ ສຳອາງ | $ .......... | | |
| 20. ເງິນໃຊ້ຈ່າຍສ່ວນຕົວ | $ .......... | | |
| 21. ເງິນປະຢັດເກັບກຳອອມສິນ | $ .......... | | |
| 22. ເງິນສຳລັບຊ່ວຍເຫລືອລ້ຽງດ ພໍ່ແມ່ພີ່ນ້ອງທີ່ຢູ່ເມືອງລາວ | $ .......... | | |
| 23. ເງິນຄົງຄ້າງໄວ້ສຳລັບຍາມຈຳເປັນ ໃນຍາມຊຸກເສີນ | $ .......... | | |
| **24.ລາຍຈ່າຍອື່ນ ໆ** | **$ ..........** | | |
| **ຮວມລາຍຈ່າຍ** | **$ ..........** | **ຮວມລາຍຈ່າຍ** | $ ........... |

6. ການປຶກສາຫາລື ການເວົ້າຈາໃຫ້ເຂົ້າໃຈ ເພື່ອແກ້ໄຂບັນຫາ ແລະການຍອມຮັບຄວາມບົກພ່ອງ

ຊີວິດຈິງຂອງຄູ່ຜົວເມັຽນັ້ນ ບໍ່ແມ່ນວ່າຈະຍ່າງຢູ່ເທິງເສັ້ນທາງອັນຮາບຮື່ນ ເຕັມໄປດ້ວຍກີບດອກໄມ້ອັນຫອມຫວນສເມີໄປ ເຮົາຕ້ອງຍອມຮັບຊີວິດຄວາມເປັນຈິງວ່າ ເມື່ອບຸກຄົນທັງສອງຮ່ວມຊີວິດມີພັນທະຜູກພັນກັນແລ້ວ ລາງເທື່ອຕ້ອງພົບກັບບັນຫາທີ່ອາດເກີດຂຶ້ນຈາກການກະທຳຂອງເຮົາເອງ ຫລືອາດຈະເປັນບັນຫາທີ່ຜູ້ອື່ນເຮັດໃສ່ເຮົາ ແຕ່ເມື່ອທັງສອງຄົນຕ້ອງພົບກັບບັນຫາແລ້ວ ທີນທາງທີ່ດີທີ່ສຸດແມ່ນການເຂົ້າຫາກັນ ໂອ້ລົມເວົ້າຈາໃຫ້ເຂົ້າໃຈກັນ ແລະຫາທາງແກ້ໄຂ ຫລືຫາທາງອອກໃຫ້ລຸດພົ້ນຈາກບັນຫາ ການຮູ້ຈັກໃຊ້ຄວາມເວົ້າທີ່ຖືກຕ້ອງອ່ອນຫວານ ການຍອມໃຫ້ອະພັຍກັນ ແລະຍອມອ່ອນນ້ອມໃຫ້ແກ່ກັນແມ່ນສິ່ງທີ່ສຳຄັນຫລາຍ ໂດຍສະເພາະຢ່າງຍິ່ງແລ້ວໃນຖານະຄຣິສຕຽນຊຶ່ງເຮົາຮຽນຮູ້ຢູ່ຕລອດເວລາເຖິງຄວາມຮັກຂອງພຣະເຈົ້າ ການໃຫ້ອະພັຍບາບທີ່ພຣະອົງປະທານໃຫ້ ການປະຖິ້ມສິ່ງເກົ່າທີ່ບໍ່ດີ ແລະການຕັ້ງຕົ້ນຊີວິດໃໝ່ ຜູ້ທີ່ເປັນຄຣິສຕຽນໄດ້ຮັບການອົບຮົມຝຶກຝົນໃນເຣື່ອງເຫລົ່ານີ້ຫລາຍ ໆ ເທື່ອດັ່ງນັ້ນຈຶ່ງສົມຄວນທີ່ຈະປະຕິບັດຊີວິດໃຫ້ສົມກັບຄຳສັ່ງສອນທີ່ໄດ້ຮັບມາ ເພື່ອຖວາຍກຽດແກ່ພຣະເຈົ້າ ຂໍໃຫ້ຄູ່ສົມຣົດໃໝ່ພິຈາຣະນາເຖິງ ຂໍ້ເຫລົ່ານີ້

- **ການໃຫ້ກຽດແກ່ກັນແລະກັນ** ຊຶ່ງໝາຍເຖິງຜູ້ເປັນຜົວຮູ້ຈັກຍອມຮັບນັບຖື ໃຫ້ກຽດແກ່ຜູ້ເປັນເມັຽ ແລະຜູ້ເປັນເມັຽໃຫ້ຍອມຮັບນັບຖື ແລະໃຫ້ກຽດແກ່ຜູ້ເປັນຜົວ ຍອມຜ່ອນໜັກຜ່ອນເບົາຮັບຟັງກັນແລະກັນແບ່ງປັນຄວາມຄິດເຫັນສະແດງອອກດ້ວຍຄວາມຮັກ "ເຖິງຢ່າງໃດກໍດີ ພວກທ່ານທຸກຄົນຈົ່ງຮັກພັນລະຍາຂອງຕົນ ເໝືອນຮັກຕົນເອງ ແລະພັນລະຍາກໍຈົ່ງຢຳເກງສາມີຂອງຕົນ" (ເອເຟໂຊ 5:33)
- **ການຮູ້ຈັກເວົ້າຈາ ການໃຊ້ຄວາມເວົ້າທີ່ສຸພາບແລະເໝາະສົມ** ເຂົ້າໃຈເຖິງອາຣົມເມື່ອມີຄວາມທຸກຮ້ອນໃຈ ຮູ້ຈັກການປອບປະໂລມໃຈ ປອບຂວັນ ໂດຍຄວາມເວົ້າເຣື່ອງທີ່ດີໜ້າຟັງເພື່ອໜູນນ້ຳໃຈກັນ ຮູ້ຈັກກ່າວ ຄຳຂໍໂທດຂໍອະພັຍ ຄຳຂອບໃຈ ຄຳທີ່ສະແດງອອກເຖິງຄວາມເຫັນອົກເຫັນໃຈກັນ "ຈົ່ງມີໃຈເມດຕາຕໍ່ກັນ ມີໃຈເອັນດູກັນ ແລະອະພັຍໂທດໃຫ້ກັນ ເໝືອນດັ່ງພຣະເຈົ້າໄດ້ຊົງໂຜດອະພັຍໂທດໃຫ້ແກ່ພວກທ່ານໃນອົງພຣະຄຣິສນັ້ນ" (ເອເຟໂຊ 4:32)
- **ໃຫ້ເວລາແລະໂອກາດທີ່ຈະຕັ້ງຕົ້ນໃໝ່** ໃນການສະແດງຄວາມຮັກຕໍ່ກັນ ສະແດງເຖິງນ້ຳໃສໃຈຈິງ ການຕັ້ງໃຈໃໝ່ບໍ່ຟັງສຽງຍຸຍົງຈາກຜູ້ອື່ນ ແຕ່ໃຫ້ຮັກສາຄວາມເປັນຄຣິສຕຽນ ໃຫ້ພຣະຄຣິສສະຖິດໃນຈິດໃຈຂອງທັງສອງຄົນ ໃຫ້ຄູ່ສົມຣົດຮູ້ຈັກນຳເອົາບັນຫາ ແລະຄວາມທຸກໃຈທັງມວນມາທູນຂໍການຊົງນຳພາຈາກພຣະເຈົ້າ ໃຫ້ຄູ່ສົມຣົດຮູ້ຈັກການຂອບຄູນພຣະເຈົ້າສຳລັບພຣະພອນ ແລະໃຫ້ທັງສອງຄົນຮູ້ຈັກການເປັນພະຍານຮັບໃຊ້ ແລະມີຊີວິດທີ່ຖວາຍກຽດແດ່ພຣະເຈົ້າ
- **ການຍອມຮັບຄວາມບົກພ່ອງຂອງຕົນເອງແລະຂອງຄູ່ສົມຣົດ** ຊີວິດທຸກຊີວິດຕ້ອງຮູ້ຈັກການພັທນາຕົນເອງ ແກ້ໄຂຈຸດອ່ອນແອໃຫ້ເຂັ້ມແຂງ ແລະປັບປຸງສ່ວນທີ່ບົກພ່ອງໃຫ້ສົມບູນ ແຕ່ໃນເວລາດຽວກັນ ຝ່າຍຄູ່ສົມຣົດກໍຈຳເປັນທີ່ຈະຕ້ອງມອງຂ້າມຈຸດອ່ອນແອແລະບົກພ່ອງຂອງແຕ່ລະຝ່າຍ ຍ້ອນວ່າບໍ່ມີຜູ້ໃດສົມບູນຄົບຖ້ວນດີໄປໝົດທຸກແນວ ການຍອມຮັບຊຶ່ງກັນແລະກັນດ້ວຍຄວາມຮັກ ຈຶ່ງເປັນກະແຈທີ່ໄຂໄປສູ່ຄວາມສັນຕິສຸກຂອງຄອບຄົວ ແລະຕ່າງຝ່າຍຕ່າງເກີດຄວາມໝັ້ນໃຈໃນຕົນເອງ
- **ຈົ່ງພໍໃຈໃນສິ່ງທີ່ຕົນມີຢູ່** ຄຳສອນນີ້ມີມາແຕ່ດົນນານແລ້ວ ເພາະວ່າຄວາມຮັກທີ່ເກີດຈາກປາຍລີ້ນ ແຕກຕ່າງຈາກຄວາມຮັກທີ່ເກີດຈາກໃຈ ຫາກພໍໃຈໃນຄູ່ສົມຣົດຂອງຕົນ ແລະພໍໃຈຜູ້ທີ່ເຮົາແຕ່ງງານດ້ວຍ ປັນ

ທາຫລາຍແນວກໍຈະບໍ່ເກີດ ໃນເມື່ອເຮົາມີຄວາມພໍໃຈໃນຜູ້ທີ່ເຮົາຮັກ ເຣື່ອງຄວາມງາມກໍດີ ຄວາມສູງ ຄວາມຕ່ຳ ຄວາມອ້ວນ ຄວາມຈ່ອຍ ຜິວຂາວຫລືດຳ ຈະຮັ່ງມີຍາກຈົນ ຈະທຸກຫລືສຸກ ສຸຂພາບດີຫລືເຈັບປ່ວຍ ເຮົາຈະຮັກແລະບຳຣຸງທະນຸຖນອມກັນໄປ ອັນນີ້ແມ່ນຮັກແທ້ທີ່ເສັຍສລະແບບອາກາເປ້ ຕາມທີ່ພຣະເຢຊູໄດ້ຊົງເປັນແບບຢ່າງແກ່ເຮົາທັງຫລາຍ

**7. ການເຕີບໃຫຍ່ຝ່າຍວິນຍານຈິດໃນພຣະຄຣິສ**

ໃນຖານະທີ່ຄູ່ສົມຣົດເປັນຄຣິສຕຽນ ສິດຍາພິບາລຈຳເປັນຕ້ອງກ່າວເຖິງເຣື່ອງຄວາມເຊື່ອຂອງທັງສອງຝ່າຍ ແລະການເຕີບໂຕໃນດ້ານຄວາມເຊື່ອ ຄູ່ສົມຣົດໃໝ່ສົມຄວນທີ່ຈະສແວງຫາການເຂົ້າໃກ້ຊິດນຳພຣະເຈົ້າ ແລະໃຫ້ພຣະອົງເປັນສູນກາງຂອງຄອບຄົວ ທ່ານ ບິລລີ ແກຣມກ່າວວ່າ "The perfect marriage is a uniting of three persons a man, a woman, and God ! That is what makes marriage holy. Faith in Christ is the most important of all principles in the building of a happy marriage a happy home." ຊຶ່ງແປຄວາມໝາຍໄດ້ວ່າ "ຊີວິດສົມຣົດທີ່ສົມບູນນັ້ນແມ່ນຄວາມເປັນອັນນຶ່ງອັນດຽວກັນຂອງສາມບຸກຄົນ ແມ່ນ ຜູ້ຊາຍ ຜູ້ຍິງ ແລະພຣະເຈົ້າ ນັ້ນແຫລະເປັນສິ່ງທີ່ເຮັດໃຫ້ການແຕ່ງງານນັ້ນບໍຣິສຸດສັກສິດ (holy) ຄວາມເຊື່ອໃນພຣະຄຣິສ ແມ່ນສິ່ງສຳຄັນຫລາຍທີ່ສຸດ ເໜືອບັນດາກົດເກນພື້ນຖານທີ່ຈະຊ່ວຍເສີມສ້າງຄວາມສຸກໃຫ້ແກ່ຄູ່ສົມຣົດ ທີ່ຮູ້ຈັກສ້າງຄົວເຮືອນຂອງຕົນໃຫ້ມີຄວາມສຸກ"

**ສິດຍາພິບາລຜູ້ໃຫ້ຄຳປຶກສາສົມຄວນຕັ້ງຄຳຖາມເຫລົ່ານີ້ໃຫ້ຄູ່ສົມຣົດໃໝ່ຕອບ**

ທ່ານຄິດເຫັນແນວໃດໃນເຣື່ອງຕໍ່ໄປນີ້

- ຄວາມສຳຄັນຂອງການໄປນະມັດສະການພຣະເຈົ້າທີ່ຄຣິສຈັກ?
- ຜູ້ໃດຄວນເປັນຜູ້ໄປນະມັດສະການພຣະເຈົ້າທີ່ຄຣິສຈັກ?
- ຜູ້ໃດຄວນຕັດສິນໃຈໃນເຣື່ອງເງິນຖວາຍແກ່ພຣະເຈົ້າໃນຄຣິສຈັກ?
- ຜູ້ໃດຄວນຈະເປັນຜູ້ອ່ານພຣະຄັມພີປະຈຳໃນເຮືອນ?
- ຜູ້ໃດເປັນຜູ້ອະທິຖານໄຫ້ວວອນພຣະເຈົ້າເປັນປະຈຳ?
- ຜູ້ໃດຈະເປັນຜູ້ສອນລູກເຣື່ອງຂອງພຣະເຈົ້າ?
- ຜູ້ໃດແມ່ນຜູ້ສົມຄວນເຂົ້າໃກ້ຊິດຕິດສະນິດກັບຄຳສອນຂອງພຣະເຈົ້າ?
- ຜູ້ໃດສົມຄວນເຕີບໃຫຍ່ໃນຝ່າຍຄວາມເຊື່ອ?
- ຜູ້ໃດສົມຄວນເປັນຜູ້ຮັບໃຊ້ໃນຄຣິສຈັກ?
- ທ່ານຈະໜູນໃຈພັລຍາໃນເຣື່ອງຂອງພຣະເຈົ້າຢ່າງໃດ?
- ທ່ານຈະໜູນໃຈສາມີໃນເຣື່ອງຂອງພຣະເຈົ້າຢ່າງໃດ?
- ທ່ານເຂົ້າໃຈຢ່າງໃດໃນເຣື່ອງການຮັບໃຊ້ພຣະເຈົ້າ ທີ່ຄຣິສຈັກ?
- ທ່ານເຂົ້າໃຈຢ່າງໃດໃນເຣື່ອງການຖວາຍຊັບ?
- ທ່ານເຂົ້າໃຈຢ່າງໃດໃນເຣື່ອງການອ່ານພຣະຄັມພີ ແລະອະທິຖານ?
- ທ່ານເຂົ້າໃຈຢ່າງໃດໃນເຣື່ອງການສັ່ງສອນລູກຫລານໃນທາງຂອງອົງພຣະຜູ້ເປັນເຈົ້າ?
- ເຮັດແນວໃດຈິດວິນຍານຂອງທ່ານທັງສອງຈຶ່ງຈະເຕີບໂຕໄປພ້ອມກັນ?

ສິດຍາພິບາລສົມຄວນມອບຄຳກອນບົດສອນໃຈແກ່ຄູ່ສົມຣົດໃໝ່ ໃນເວລາໃຫ້ຄຳປຶກສາ ແລະອະທິບາຍຕາມເນື້ອນັຍຂອງບົດກອນແກ່ຄູ່ສົມຣົດໄດ້ຟັງ

# ສັມພັນຮັກ

ຊາຍແລະຍິງ ທີ່ຮ່ວມກັນ ສັມພັນຮັກ
ຕ້ອງຮູ້ຈັກ ທະນຸຖະນອມ ແລະຍອມໃຫ້
ຄິດເກິງເຂົາ ເຂົ້າໃຈກັນ ທັງກາຍໃຈ
ໃຫ້ອະພັຍ ເມື່ອເຮັດຜິດ ຄິດປ່ຽນແປງ

ຍອມຮັບ ຄວາມແຕກຕ່າງ ທີ່ມີຢູ່
ຊ່ອຍເຊີດຊູ ຄູ່ໃຈ ບໍ່ໜ່າຍແໜງ
ຫາກວ່າຮັກ ຄູ່ຄອງ ຕ້ອງສະແດງ
ບໍ່ແສແສ້ງ ແກ້ງເຮັດໃສ່ ໃຫ້ເຈັບໃຈ

ຄວາມສັມພັນ ຕ້ອງເສີມສ້າງ ໃນທາງດີ
ເພື່ອວິທີ ທາງຮັກ ຈັກເສາະໃສ
ເວົ້າວ່າຮັກ ຮັກເຈົ້າ ຈົນໝົດໃຈ
ຂໍມອບໃຫ້ ອົງພຣະຄຣິສ ສຖິດນຳ

ແປງເປັນພາສາລາວຈາກຄຳກອນຂອງທ່ານໄຊຍັນຕ໌ ພິງພັນສະຖາພອນ

ສງວນສິກຂະສິດ Copyright©Thira Siengsukon 2000
In compliance with copyright restrictions, no portion of these materials may be reproduced in any form without witten permission of the writer.

10 ສິງຫາ
-18-2000

# ບົດທີ 10
# ການອະພິບາລສິດໂດຍການເສີມສ້າງກັນແລະກັນ

## ນຶ່ງ. ການເສີມແຮງໃນຄວາມເຊື່ອ

ໃນພຣະທັມອົບພະຍົບ 17:8-13 ໄດ້ສອນເຖິງເຣື່ອງທີ່ໜ້າສົນໃຈກ່ຽວກັບຊາດອິສຣາເອນທີ່ອອກເສິກສູ້ຣົບກັບຊາວອາມາເຫລັກ ທ່ານໂຢຊວຍນຳຊາຍໜຸ່ມອອກເສິກຢູ່ໃນສນາມຣົບ ໃນເວລາດຽວກັນນັ້ນ ໂມເຊກັບອາໂລນ ແລະຮູເລກໍໄດ້ຂຶ້ນໄປຍືນເບິ່ງຢູ່ເທິງເນີນພູ ການສູ້ຣົບເລີ້ມຂຶ້ນ ເມື່ອໃດທີ່ໂມເຊຍົກແຂນຂຶ້ນ ຊາວອິສຣາເອນກໍເປັນຝ່າຍຕີ ແຕ່ພໍໂມເຊປ່ອຍແຂນລົງ ຝ່າຍອາເມເຫລັກກໍເລີ້ມເປນຝ່າຍຕີ ເມື່ອເຫັນແຂນຂອງໂມເຊອ່ອນລົງເພາະຄວາມອິດເມື່ອຍ ອາໂລນກັບຮູເລກໍໄດ້ເອົາກ້ອນຫີນມາໃຫ້ໂມເຊນັ່ງ ໃນເວລາດຽວກັນນັ້ນ ພວກເຂົາກໍຍືນຈັບແຂນໂມເຊຍົກຂຶ້ນຈົນກວ່າຕາເວັນຕົກດິນ ໂດຍວິທີນີ້ ໂຢຊວຍຈຶ່ງໄດ້ຜາບແພ້ທະຫານອາມາເຫລັກຢ່າງສິ້ນເຊີງ ພຣະຜູ້ເປັນເຈົ້າໄດ້ບອກໃຫ້ບັນທຶກເຣື່ອງການໄດ້ໄຊຊນະເສິກນີ້ໄວ້ ແລະທ່ານໂມເຊໄດ້ສ້າງແທ່ນບູຊາ ແລະໃສ່ຊື່ແທ່ນບູຊາວ່າ *"ພຣະຜູ້ເປັນເຈົ້າເປັນທຸງໄຊຂອງຂ້ອຍ"* ( ອພຍ 17:15)

ໃນພຣະທັມອົບພະຍົບ 17:8-13 ໄດ້ໃຫ້ບົດສອນໃຈແກ່ພວກເຮົາຫລາຍ ໆ ແບບ ຊຶ່ງເຣື່ອງສຳຄັນແມ່ນການໄຫວ້ວອນອະທິຖານຂອງໂມເຊທີ່ບໍ່ຂາດສາຍ ເປັນເຫດໃຫ້ເກີດໄຊຢ່າງໃຫຍ່ຫລວງ ແຕ່ໃນພາບເຫດການຂອງພຣະທັມຕອນນີ້ ໄດ້ສະແດງໃຫ້ເຫັນຢ່າງແຈ່ມແຈ້ງວ່າ ໄຊຊນະທີ່ໄດ້ມາບໍ່ແມ່ນເປັນທ່ານໂມເຊແຕ່ຜູ້ດຽວ ແຕ່ວ່າທ່ານອາໂລນແລະທ່ານຮູເລຊຶ່ງຢູ່ຄຽງຂ້າງເສີມແຮງທ່ານໂມເຊ ໃນຂະນະທີ່ຊາຍໜຸ່ມຜູ້ກ້າຫານອີກຈຳນວນຫລາຍພ້ອມໃຈກັນອອກເສິກກັບທ່ານໂຢຊວຍ ສິ່ງສຳຄັນທີ່ສຸດ ແມ່ນວ່າຄົນທັງໝົດມີນ້ຳໃຈ ມີຈຸດປະສົງ ແລະຄວາມເຊື່ອໝັ້ນໃນອົງພຣະຜູ້ເປັນເຈົ້າ ທີ່ພຣະອົງຈະເປັນຜູ້ນຳໄຊມາໃຫ້ແກ່ຊົນຊາດອິສຣາເອນ ອັນເປັນຕົວຢ່າງໃຫ້ແກ່ເຮົາທັງຫລາຍ ທີ່ສົມຄວນນຳມາໃຊ້ໃນຄຣິສຈັກ ໂດຍທີ່ສິດຍາພິບາລຈຳເປັນຕ້ອງຮູ້ຈັກເຄລັດລັບທີ່ຈະນຳພາໃຫ້ສະມາຊິກຊ່ວຍເຫລືອເກື້ອກູລກັນ ເບິ່ງແຍງຮັກສາແລະນຳພາກັນໄປ ອັນເປັນການເສີມສ້າງຊຶ່ງກັນແລະກັນ

ການເສີມສ້າງກັນແລະກັນໃນຄວາມເຊື່ອນັ້ນເປັນເຫດຜົນອັນໃຫຍ່ຫລວງທີ່ພາໃຫ້ຄຣິສຈັກໄດ້ໄຊ ເພາະເຮົາທຸກຄົນຕ້ອງຍອມຮັບວ່າ ແຕ່ລະຄົນມີຂີດຈຳກັດຕ່າງກັນໃນດ້ານຄວາມສາມາດແລະຄວາມອົດທົນ ເຮົາບໍ່ສາມາດເວົ້າໄດ້ວ່າ ເຮົາຮູ້ທຸກສິ່ງ ເຮັດໄດ້ໝົດທຸກແບບ ແລະບໍ່ສາມາດທີ່ຈະເພິ່ງພາອາສັຍຕົນເອງໃນທຸກສິ່ງດ້ວຍ ແຕ່ເຮົາຕ້ອງເພິ່ງພາຊຶ່ງກັນແລະກັນ ແລະເສີມສ້າງກັນແລະກັນໂດຍທາງຄວາມເຊື່ອ

ໃນບົດນີ້ ມີຫົວຂໍ້ທີ່ສອນໃຈແກ່ສະມາຊິກຂອງຄຣິສຈັກຕ່າງ ໆ ໃນປັດຈຸບັນວ່າ ເຮົາທຸກຄົນຕ່າງຢູ່ຮ່ວມກັນໃນຄຣິສຈັກແລະມີພຣະຄຣິສເປັນສູນກາງໃນການດຳເນີນຊີວິດຄຣິສຕຽນ ມີຄຣິສຈັກດັ່ງພຣະກາຍ ທີ່ຣວມເອົາທຸກຄົນເປັນອະວັຍວະຕ່າງ ໆ ລວມເຂົ້າດ້ວຍກັນ ຕ່າງຄົນຕ່າງເສີມສ້າງກັນແລະກັນ ເພື່ອເສີມສ້າງພຣະກາຍຂອງພຣະ

ຄຣິສ ແມ່ນຄຣິສຈັກ ແລະເສີມສ້າງຄວາມເຊື່ອຂອງກັນແລະກັນ ເພື່ອຄວາມເຕີບໃຫຍ່ໃນພຣະຄຣິສ ສິດຍາພິບາລຕ້ອງມີຄວາມເຂົ້າໃຈໃນເຣື່ອງນີ້ຢ່າງແຈ່ມແຈ້ງ ເພື່ອສາມາດເບິ່ງແຍງສະມາຊິກແລະສາມາດນຳພາໃຫ້ສະມາຊິກທຸກຄົນເຂົ້າໃຈເຖິງຄວາມຈຳເປັນຂອງການເສີມສ້າງກັນແລະກັນ ໂດຍການປະຕິບັດໜ້າທີ່ຂອງຕົນໃນຖານະສະມາຊິກໃຫ້ຄົບບໍຣິບູນ

## ສອງ. ການສາມັກຄີທັມກັນ

ການເຕົ້າໂຮມຮ່ວມຊຸມນຸມກັນຂອງຄຣິສຕຽນ ເປັນຮີດຄອງທີ່ຖືເຮັດກັນມາຕັ້ງແຕ່ຕົ້ນ ໃນເວລາດຽວກັນທີ່ພຣະເຢຊູຄຣິສຍັງຊົງພຣະຊົນຢູ່ ພຣະອົງໄດ້ຊົງປະຕິບັດພາຣະກິດທ່າມກາງສານຸສິດຜູ້ທີ່ຕິດຕາມພຣະອົງ ຝູງຊົນຊຸມນຸມກັນເປັນສິບເປັນຮ້ອຍແລະເປັນພັນ ເພື່ອຟັງພຣະທັມຄຳສັ່ງສອນຈາກອົງພຣະເຢຊູຄຣິສ ເຮົາຕ້ອງຍອມຮັບວ່າໃນຈຳນວນປະຊາຊົນຫລວງຫລາຍປານນັ້ນ ຈຳເປັນຕ້ອງມີຜູ້ທີ່ເສັຍສລະບົວລະບັດຮັບໃຊ້ຝູງຊົນຢູ່ບໍ່ຂາດ ໃນທ່າມກາງຝູງຊົນທີ່ແອອັດນັ້ນ ຕ້ອງມີການອະລຸ່ມອະລ່ວຍຊ່ວຍເຫລືອກັນ ຊຶ່ງມີທັງເດັກ ຜູ້ເຖົ້າແລະຄົນເຈັບໄຂ້ ຄົນຕາບອດທີ່ເບິ່ງບໍ່ເຫັນ ຄົນເປັ້ຍເສັຍຂາທີ່ຍ່າງບໍ່ໄດ້ ແມ່ນໃຜທີ່ຊ່ວຍໃຫ້ຄົນເຫລົ່ານີ້ໄດ້ເຂົ້າໃກ້ຊິດພຣະເຢຊູຄຣິສ ຈົນກະທັ່ງພວກເຂົາເຫລົ່ານັ້ນໄດ້ຮັບການສັມຜັດແຕະຕ້ອງປິ່ນປົວໃຫ້ຫາຍດີເປັນປົກຕິຈາກພຣະອົງ ສິ່ງທີ່ສະແດງໃຫ້ເຫັນແຈ້ງ ແມ່ນວ່າການເຕົ້າໂຮມກັນເພື່ອສາມັກຄີທັມແລະເພື່ອນະມັສການອົງພຣະເຢຊູຄຣິສທຸກເທື່ອຕ້ອງມີການອະພິບາລສິດ ແລະຕ້ອງມີຄົນຍອມເສັຍສະລະປະຕິບັດວຽກງານ ເພື່ອຊ່ວຍໃຫ້ຜູ້ທີ່ມາເຂົ້າເຝົ້າພຣະເຢຊູນັ້ນໃຫ້ໄດ້ຮັບພຣະພອນຈາກພຣະເຈົ້າ ການລ້າງເທົ້າອັຄສາວົກຂອງພຣະເຢຊູຄຣິສ ໄດ້ເປັນແບບຢ່າງແກ່ພວກເຂົາໃນເຣື່ອງການຮັບໃຊ້ຊຶ່ງກັນແລະກັນໃນການຍອມເສັຍສະລະ ເພື່ອນຳໃຫ້ຜູ້ທີ່ເຮົາບົວລະບັດມາເຖິງຄວາມຣອດພົ້ນ

ສິດຍາພິບາລຈຳເປັນຕ້ອງມີຄວາມເຂົ້າໃຈ ໃນເຣື່ອງການນຳພາສະມາຊິກທັງໝົດເຂົ້າມາເຕົ້າໂຮມຮ່ວມກັນເປັນຄຣິສຈັກ ອັນເປັນສະຖາບັນທີ່ພຣະຄຣິສໄດ້ແຕ່ງຕັ້ງຂຶ້ນ ເພື່ອໃຫ້ຜູ້ເຊື່ອໄດ້ເຕົ້າໂຮມສາມັກຄີທັມຊຶ່ງກັນແລະກັນ ມີການມ່ວນຊື່ນຊ່ວນຊູຈິດໃຈກັນຫລາຍກວ່າມາຖົກຖຽງບັນຫາຫລືແກ່ງແຍ່ງ ເພື່ອອຳນາດແລະໜ້າຕາຂອງຕົວ ສິດຍາພິບາລຕ້ອງສິດສອນໃນເຣື່ອງນີ້ ຄຣິສຈັກຈະເກີດຄວາມເຂັ້ມແຂງຢ່າງເຕັມກຳລັງໄດ້ດີ ຄຣິສຈັກຈຳເປັນຕ້ອງມີການສາມັກຄີກັນ

## ສາມ. ການສາມັກຄີທັມໃນຄຣິສຈັກສມັຍທຳອິດ

ຄຣິສຈັກທີ່ເກີດຂຶ້ນໃນກຸງເຢຣູຊາເລັມທີ່ບັນທຶກໃນພຣະທັມກິຈການ 2:42-47, 4:32-37 ໄດ້ສະແດງໃຫ້ເຫັນເຖິງຜູ້ເຊື່ອທີ່ສາມັກຄີທັມໃນການສຶກສາພຣະວັຈນະ ສາມັກຄີທັມ ອະທິຖານໄຫວ້ວອນ ແລະຫັກເຂົ້າຈີ່ຣະລຶກເຖິງພຣະເຢຊູຄຣິສ ແລະປະກາດຂ່າວປະເສີດ ແມ່ນຄຣິສຈັກທຳອິດທີ່ຜູ້ເຊື່ອເຕົ້າໂຮມສາມັກຄີທັມກັນ ເພື່ອອຸດຫນຸນຊູໃຈຊຶ່ງກັນແລະກັນ ໃຫ້ຄວາມເຊື່ອທີ່ມີຢູ່ນັ້ນໄດ້ຈະເຣີນເຕີບໃຫຍ່ຂຶ້ນຢ່າງໄວ ຫາກວ່າປຣາສຈາກການເຕົ້າໂຮມຮ່ວມກັນໃນເວລານັ້ນຄຣິສຈັກແຣກກໍຈະບໍ່ເກີດ ແລະຄຣິສຈັກຕໍ່ ໆ ມາໃນປວັດສາດຈະເກີດຂຶ້ນມາໄດ້ໃນແນວໃດນັ້ນຍັງເປັນທີ່ສົງສັຍຢູ່ ຫາກແຕ່ວ່າ ພຣະທັມກິຈການໄດ້ບັນທຶກເຖິງເຣື່ອງການເຕົ້າໂຮມສາມັກຄີທັມກັນຢ່າງແທ້ຈິງ ມີການອະພິບາລສິດຊຶ່ງກັນແລະກັນຢ່າງຖີ່ຖ້ວນໃນໝູ່ສະມາຊິກ ຈົນເກີດຄວາມຫ້າວຫານເຖິງສຸດຂີດ ໃນການປະກາດຂ່າວ

ປະເສີດ ອີກທັງຍອມເສັຍສະລະທຸກສິ່ງ ໄດ້ຂາຍຊັບສິນບັດທັງໝົດຂອງແຕ່ລະຄົນ ແລ້ວເອົາມາຖວາຍລວມກັນເພື່ອພຣະຣາຊະກິຈຂອງພຣະເຈົ້າໃນຄຣິສຈັກ

## ສີ່. ລັກສນະແລະຮູບແບບການສາມັກຄີທັມຂອງຄຣິສຕຽນ

ໃນປັດຈຸບັນຄຣິສຈັກຕ່າງ ໆ ໄດ້ໃຊ້ຮູບແບບຕ່າງ ໆ ໃນການສາມັກຄີທັມສະມາຊິກຂອງຄຣິສຈັກ ໂດຍສ່ວນໃຫຍ່ແລ້ວມີຄວາມຄ້າຍຄືກັນ ແຕ່ມີບາງຄຣິສຈັກອາດຈະໃຊ້ສຽງເພງສຽງດົນຕີສມັຍໃໝ່ ເພື່ອດຶງດູດໃຈສະມາຊິກ ນອກນັ້ນຍັງມີການຊຸມເຂົ້າສາມັກຄີ ຫລືກິຈການອື່ນ ໆ ດ້ວຍ ແຕ່ສິ່ງທີ່ສຳຄັນທີ່ສຸດນີ້ສິດຍາພິບາລຕ້ອງນຳພາສະມາຊິກໃນເຣື່ອງນີ້ໂດຍມີຄວາມເຂົ້າໃຈຕາມຄຳສອນໃນພຣະຄຣິສທັມຄັມພີທີ່ວ່າ "ເຮົາເຮັດສິ່ງສາຣະພັດໄດ້ ບໍ່ມີໃຜຫ້າມ ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນເປັນປໂຍດ ເຮົາເຮັດສິ່ງສາຣະພັດໄດ້ ບໍ່ມີໃຜຫ້າມ ແຕ່ບໍ່ແມ່ນທຸກສິ່ງທີ່ເຮັດໄດ້ນັ້ນຈະໃຫ້ຈະເຣີນຂຶ້ນ... ຈົ່ງເຮັດທຸກສິ່ງເພື່ອຖວາຍພຣະກຽດແດ່ພຣະເຈົ້າ" (1 ກທ 10:23, 31) ຄຳສອນທີ່ສຳຄັນທີ່ສຸດແມ່ນໃຫ້ເຮົາທຸກສິ່ງຖວາຍກຽດແລະເປັນທີ່ພໍພຣະທັຍພຣະເຈົ້າ

ເຮົາຕ້ອງເຂົ້າໃຈວ່າ ຕັ້ງແຕ່ຄຣິສຈັກໄດ້ເລີ້ມຕົ້ນມາໃນປວັດສາດ ສິ່ງນຶ່ງທີ່ຮວບຮວມແຕ່ລະຄຣິສຈັກ ແຕ່ລະນິກາຍໄວ້ໄດ້ໃຫ້ເຂັ້ມແຂງເປັນອັນນຶ່ງອັນດຽວກັນ ແມ່ນການສາມັກຄີທັມພາຍໃນຄຣິສຈັກ ການສາມັກຄີທັມນີ້ເລີ້ມຕົ້ນຈາກການນະມັສການພຣະເຈົ້າຮ່ວມກັນ ອັນເປັນການນະມັສການພາຍໃນຄຣິສຈັກຂອງຕົນເອງ ຊຶ່ງຖືວ່າເປັນສະເໝືອນຄົວເຮືອນໃຫຍ່ອັນນຶ່ງ ດົນ ໆ ມີໂອກາດພິເສດເທື່ອນຶ່ງ ຈຶ່ງມີການນະມັສການຮ່ວມກັນຣະຫວ່າງຄຣິສຈັກຕ່າງ ໆ ອັນເປັນເຕົ້າໂຮມສັງສັນສາມັກຄີທັມ ເພື່ອສະແດງໃຫ້ເຫັນເຖິງຄວາມເຊື່ອອັນດຽວກັນ (ຂໍ້ສັງເກດໃນທີ່ນີ້ເຮົາຈະເຫັນໄດ້ວ່າ ການທີ່ຄຣິສຈັກຕ່າງນິກາຍຫລືຕ່າງຄວາມເຊື່ອກັນນັ້ນ ມັກມີຄວາມຍຸ່ງຍາກເກີດຂຶ້ນໃນການເຕົ້າໂຮມເພາະເປັນການຍາກທີ່ຄົນຕ່າງຄວາມເຊື່ອຈະເຂົ້າຮ່ວມກັນນະມັສການພຣະເຈົ້າຮ່ວມກັນ ຫລາຍເທື່ອຈະມີການຜິດຖຽງກັນເຣື່ອງຫລັກຄວາມເຊື່ອ ຫລືຂໍ້ປະຕິບັດທີ່ແຕກຕ່າງກັນ ອັນອາດເປັນເຫດໃຫ້ເກີດການແຕກສາມັກຄີກັນເອງ)

ໃນການເຕົ້າໂຮມກັນນີ້ ແຕ່ລະຄຣິສຈັກໂດຍສະເພາະຜູ້ເປັນສິດຍາພິບາລຕ້ອງຮູ້ຈັກການອະພິບາລສິດ ແລະເບິ່ງແຍງການເຕົ້າໂຮມທຸກເທື່ອ ໂດຍກຳນົດຈຸດປະສົງຂອງການເຕົ້າໂຮມເພື່ອມຸ່ງໝາຍນຳພາໃຫ້ເກີດຄວາມເປັນອັນນຶ່ງອັນດຽວກັນ ໃຫ້ເກີດການຮຽນຮູ້ເສີມສ້າງກັນແລະກັນ ແມ່ນວ່າຈະເປັນລາຍການມ່ວນຊື່ນກໍດີ ທຸກສິ່ງທີ່ນຳພາມາໃຊ້ຕ້ອງຖືກຕ້ອງກັບຫລັກຄວາມເຊື່ອແລະຄຳສອນຂອງພຣະຄຣິສທັມຄັມພີ ສິດຍາພິບາລແລະສະມາຊິກສົມຄວນຄິດພິຈາຣະນາວ່າ **"ລາຍການເຫລົ່ານີ້ນຳພາໃຫ້ຖວາມກຽດແດ່ອົງພຣະເຢຊູຄຣິສຫລືບໍ່?"** ໂດຍເອົາພຣະຄຣິສທັມຄັມພີແລະຫລັກຂໍ້ເຊື່ອຂອງແຕ່ລະຄຣິສຈັກເປັນມາຕາຖານ ແລະຖືເອົາກົດຣະບຽບຂອງສັງຄົມມາເປັນຂໍ້ສັງເກດນຳດ້ວຍ ຊຶ່ງກົງກັບຄຳສອນຂອງໂປໂລທີ່ວ່າ *"ຢ່າໄດ້ເອົາສິ່ງໃດເປັນເຫດໃຫ້ຊຸນສະດຸດຫລືລົ້ມລົງມາຂວາງທາງຂອງພີ່ນ້ອງ.. ເປັນການດີທີ່ຈະບໍ່ກິນຊີ້ນ ຫລືດື່ມເຫລົ້າແວງ ຫລືເຮັດສິ່ງໃດ ໆ ທີ່ເປັນເຫດໃຫ້ພີ່ນ້ອງສະດຸດ"* (ຣມ 14:13, 21) ທ່ານໂປໂລມີຄຳພະຍານອັນໜັກແນ່ນຈາກຊີວິດຂອງທ່ານ *"ເຮົາບໍ່ໄດ້ໃຫ້ຜູ້ໃດມີເຫດສະດຸດໃຈຈັກຢ່າງ ເພື່ອບໍ່ໃຫ້ການທີ່ເຮົາຮັບໃຊ້ປະຕິບັດນັ້ນເປັນທີ່ເຂົາຕິຕຽນໄດ້ ແຕ່ເຮົາຜູ້ເປັນຄົນຮັບໃຊ້ຂອງພຣະເຈົ້າ ໄດ້ສເນີຕົວໃຫ້ເປັນທີ່ຊອບໃນການທັງປວງ"* (2 ກທ 6:3-4) ແລະໄດ້ກ່າວແກ່ຊາວໂກໂລຊາຍວ່າ *"ເມື່ອເຈົ້າທັງຫລາຍຈະເຮັດສິ່ງໃດດ້ວຍວາຈາ ຫລືດ້ວຍການກະທຳກໍຕາມ ຈົ່ງເຮັດທຸກສິ່ງໃນພຣະນາມຂອງພຣະເຢຊູເຈົ້າ ແລະຂອບພຣະຄຸນພຣະບິດາເຈົ້າໂດຍພຣະອົງນັ້ນ"* (ກຊ 3:17)

## ຫ້າ. ຮູບແບບແລະຈຸດປະສົງຂອງການເຕົ້າໂຮມສາມັກຄີທຳ

ການເຕົ້າໂຮມສາມັກຄີທຳກັນ ມີຫລາຍຮູບແບບ ແລະແຕ່ລະແບບກໍເພື່ອນຳພາໃຫ້ຜູ້ເຂົ້າມາເຕົ້າໂຮມໄດ້ຮັບຄວາມຣອດພົ້ນ ແລະເພື່ອໃຫ້ສະມາຊິກແຕ່ລະຄົນທີ່ຣອດພົ້ນໃຫຍ່ຂຶ້ນໃນຄວາມເຊື່ອ ເປີດໂອກາດໃຫ້ມີການຮຽນຮູ້ເສີມສ້າງຊຶ່ງກັນແລະກັນ ແລ້ວສນັບສນຸນຊ່ວຍຊູຈິດໃຈຂອງກັນແລະກັນ ດັ່ງອ້າຍນ້ອງໃນຄອບຄົວຂອງພຣະຄຣິສ ອັນນີ້ແຫລະເປັນເຫດກໍ່ໃຫ້ເກີດການອະພິບາລລ້ຽງດູຈິດໃຈຂອງກັນແລະກັນ ເພາະວ່າ

*ໃນຍາມລຳບາກ ເຮົາຕ້ອງການຜູ້ຊ່ວຍ*
*ໃນຍາມຍິນດີ ເຮົາຢາກແບ່ງປັນ*
*ໃນຍາມຄັບຂັນ ເຮົາຕ້ອງການຜູ້ປອບໃຈ*
*ບໍ່ວ່າຈະຢູ່ໃສ ເຮົາຕ້ອງການເຮົາຕ້ອງຮັບໃຊ້ເສີມສ້າງ*
*ດັ່ງນັ້ນ ຄຣິສຈັກທີ່ຈະເຣີນຕ້ອງເຕົ້າໂຮມສາມັກຄີທຳກັນ*

## ກ. ການເຕົ້າໂຮມສາມັກຄີທຳໃນກຸ່ມໃຫຍ່

ແມ່ນຮູບແບບການນະມັສການໃນເຊົ້າວັນອາທິດ ການຟື້ນຟູພາຍໃນ ການສລອງໃນລາຍການພິເສດ ການຖືພິທີລະລຶກເຖິງພຣະເຢຊູ ຊຶ່ງບາງຄຣິສຈັກເອີ້ນວ່າ ພິທີມະຫາສະນິດ ການເຕົ້າໂຮມແບບກຸ່ມໃຫຍ່ສິດຍາພິບາລຈຳເປັນຕ້ອງຮູ້ຈັກນຳພາ ແລະຈັດຣະບຽບ ໂດຍມີຜູ້ເຂົ້າມາຮ່ວມບົວລະບັດ ໝາຍເຖິງ ກຸ່ມຜູ້ຮັບໃຊ້ຫລືທຳມະກິຈ ແມ່ນຜູ້ບົວລະບັດ (Deacon) ຄະນະກັມມະການ ຜູ້ໃຫ້ການຕ້ອນຮັບ ຫົວໜ້າກຸ່ມສັຕຣີ ຜູ້ນຳຊາວໜຸ່ມ ນາຍຄຣູ ຫລືຜູ້ເບິ່ງແຍງເດັກນ້ອຍ ທັງໝົດນີ້ເປັນພຽງແຕ່ຕົວຢ່າງຂອງຜູ້ຮ່ວມງານ (Team Work) ທີ່ຈະປະສານງານຮ່ວມກັນ ເພື່ອໃຫ້ການຊຸມນຸມເຕົ້າໂຮມກັນໃນແຕ່ລະເທື່ອເກີດເປັນຣະບຽບຮຽບຮ້ອຍ ເກີດຜົນທີ່ກ້າວໜ້າໄປສູ່ຈຸດປະສົງທີ່ໄດ້ຫວັງໄວ້ ເກີດການຖວາຍກຽດແດ່ພຣະເຈົ້າ ມີຄວາມສງ່າງາມແລະເປັນການຖວາຍສັຣເສີນອົງພຣະເຢຊູເຈົ້າຢ່າງແທ້ຈິງ

ຂໍ້ສັງເກດ ການນະມັສການທີ່ເກີດຜົນ ຈຳເປັນຕ້ອງມີຄວາມເປັນຣະບຽບ ມີລາຍການທີ່ສົ່ງເສີມຝ່າຍຈິດວິນຍານໃຫ້ຊົມຊື່ນຍິນດີ ຄຳເທສນາຫລືຄຳສອນທີ່ປະທັບຈິດໃຈສະມາຊິກ ແລະຊ່ວຍໃຫ້ສະມາຊິກໄດ້ເຂົ້າເຝົ້ານະມັສການພຣະເຈົ້າດ້ວຍຈິດວິນຍານ ແລະຄວາມຈິງແທ້ ໆ

## ຂ. ການເຕົ້າໂຮມກັນໃນກຸ່ມຍ່ອຍ

ອັນເປັນການຣວມຕົວຂອງແຕ່ລະກຸ່ມທີ່ມີຈຸດປະສົງຫລືຄວາມສົນໃຈໃນເຣື່ອງດຽວກັນ ແຕ່ລະກຸ່ມຈັດຂຶ້ນເພື່ອໃຫ້ສອດຄ້ອງກັບຄວາມຕ້ອງການຕາມວັຍ ຕາມອາຍຸ ຫລືຕາມເພດ ຕາມຣະດັບຄວາມເຊື່ອ ເພື່ອວ່າສະມາຊິກໃນກຸ່ມນັ້ນ ໆ ຈະສາມາດເສີມສ້າງຊຶ່ງກັນແລະກັນ ຜູ້ນຳຂອງກຸ່ມເຫລົ່ານັ້ນເປັນເໝືອນຜູ້ລ້ຽງແກະນ້ອຍທີ່ເປັນຕົວແທນຂອງສິດຍາພິບາລ ແລະເປັນຜູ້ບົວລະບັດຮັບໃຊ້ພຣະເຈົ້າໃນການເບິ່ງແຍງຮັກສາສະມາຊິກ ເພາະວ່າໂດຍການອາສັຍສິດພິບາລແຕ່ຜູ້ດຽວຈະບໍ່ສາມາດເບິ່ງແຍງໄດ້ທົ່ວເຖິງ ໂດຍສະເພາະຢ່າງຍິ່ງແລ້ວ ຄຣິສຈັກທີ່ມີສະມາຊິກຈຳນວນຫລາຍ ໆ ເປັນຮ້ອຍຂຶ້ນເມືອ ກໍຈະຕ້ອງພະເຊີນກັບບັນຫານີ້

ຂໍ້ສັງເກດ ສິດຍາພິບາລຕ້ອງເປັນທີ່ປຶກສາຂອງຜູ້ນຳກຸ່ມ ແລະເບິ່ງແຍງຢ້ຽມຢາມໃນກຸ່ມຍ່ອຍນີ້ເປັນບາງເທື່ອ ເພື່ອເປີດໂອກາດໃຫ້ຜູ້ນຳໃນກຸ່ມຍ່ອຍໄດ້ຮັບປະສົບການ ແລະເກີດຄວາມໝັ້ນໃຈໃນການນຳພາຂອງເຂົາ ສິດຍາພິ

ບາລຕ້ອງຮູ້ຈັກໃຫ້ຄຳແນະນຳແກ່ຜູ້ນຳໃນເລື່ອງການນຳພາ ແລະນຳເອາກຸ່ມຍ່ອຍເຫລົ່ານີ້ໃຫ້ເກີດຄວາມຮ່ວມມືກັນ ແລະນຳພາໃຫ້ສອດຄ້ອງຕ້ອງກັນກັບການເຕົ້າໂຮມໃນກຸ່ມໃຫຍ່ ແມ່ນກອງປະຊຸມຂອງຄຣິສຈັກ

### ຄ. ການເຕົ້າໂຮມກັນຢ່າງບໍ່ເປັນທາງການ

ແມ່ນການເຕົ້າໂຮມກັນໂດຍຄວາມສາມັກໃຈຂອງສະມາຊິກທີ່ຮວມຕົວກັນເອງ ຊຶ່ງຢູ່ໃນລັກສະນະຂອງສອງສາມຄອບຄົວ ທີ່ມີນິສັຍໃຈຄໍຖືກອົກຖືກໃຈກັນ ມີການມ່ວນຊື່ນກັນໃນຄອບຄົວ ແລະສ່ວນຫລາຍຈະມີຜູ້ເຂົ້າເປັນສູນກາງຂອງການເຕົ້າໂຮມກັນນັ້ນ ໃນລັກສະນະການເຕົ້າໂຮມສາມັກຄີທຳມກັນແບບນີ້ ອາດຈະບໍ່ມີການສຶກສາພຣະຄຣິສທັມຄັມພີ ແຕ່ຢ່າງນ້ອຍທີ່ສຸດມີການອະທິຖານເພື່ອຜ້າເຂົ້າ ແລະເພື່ອມິດພາບທີ່ສອງຫລືສາມຫລືສີ່ຄອບຄົວທີ່ມີນຳກັນ ໃຫ້ຮູ້ຈັກຮັກແພງ ແລະສະແດງເຖິງຄວາມເປັນປືກແຜ່ນແໜ່ນໜາ ຢ່າໃຫ້ການຮວມຕົວກັນແບບນີ້ເກີດການນິນທາເວົ້າຂວັນເຖິງຜູ້ອື່ນ ຫລືວິພາກວິຈານອາຈານແລະຜູ້ນຳອື່ນ ໆ ສິດຍາພິບາລຕ້ອງມີການສັ່ງສອນຕັກເຕືອນໃຫ້ຄອບຄົວທີ່ເປັນຜູ້ນຳຮູ້ຈັກການນຳພາການເຕົ້າໂຮມນີ້ ແລະໃຫ້ຜູ້ນຳພາມີຄວາມໃກ້ຊິດຕິດແທກກັບສິດຍາພິບາລ ທີ່ຈະແຈ້ງຂ່າວຄາວຄວາມເປັນໄປຂອງກຸ່ມທີ່ເຕົ້າໂຮມ ເພື່ອໃຫ້ເກີດການເສີມສ້າງຫລາຍກວ່າເກີດການແຕກແຍກ ແບ່ງເປັນພັກເປັນພວກ ແລ້ວເກີດຜົນຍ້ອນຄືນມາ ແມ່ນການຕໍ່ສູ້ ຜິດຖຽງກັນໃນຄຣິສຈັກ

<u>ຂໍ້ສັງເກດ</u> ການເຕົ້າໂຮມແບບນີ້ເປັນເລື່ອງທີ່ເກີດຂຶ້ນໂດຍທັມຊາດ ເປັນການເພິ່ງພາແລະອີງກັນໄປກັນມາຂອງສະມາຊິກ ສິດຍາພິບາລບໍ່ມີສິດທີ່ບັງຄັບບັນຊາ ຫລືຄວບຄຸມໄດ້ໂດຍກົງ ແຕ່ວ່າໜ້າທີ່ຂອງສິດຍາພິບາລແມ່ນຊ່ວຍໄຂຈິດໃຈຂອງສະມາຊິກໃຫ້ເຫັນແຈ້ງເຖິງຄວາມສຳຄັນຂອງການສ້າງຄວາມເປັນອັນນຶ່ງອັນດຽວກັນໃນຄຣິສຈັກ

## ທີກ. ຄຳສອນຈາກພຣະຄຣິສທັມຄັມພີເລື່ອງການເສີມສ້າງກັນແລະກັນ

ສິດຍາພິບາລຕ້ອງສອນເຖິງຫົວຂໍ້ຕໍ່ໄປນີ້ຈາກພຣະຄຣິສທັມຄັມພີ ເພື່ອຊິດຊ່ວຍນຳພາໃຫ້ສະມາຊິກໃນຄຣິສຈັກຮູ້ຈັກການເບິ່ງແຍງຮັກສາ ແລະເສີມສ້າງຊຶ່ງກັນແລະກັນ

**1. ສມາຊິກຄຣິສຈັກຕ່າງເປັນອະວັຍວະຂອງກັນແລະກັນ** ພຣະທັມໂຣມ 12:5

ຂໍ້ພຣະທັມຕອນນີ້ ມີຄວາມສຳຄັນຢ່າງຫລວງຫລາຍ ແລະເປັນຈຸດສູນລວມແຫ່ງຄວາມເຂົ້າໃຈຂອງການຮັບໃຊ້ໃນໜ້າທີ່ຕ່າງ ໆ ກັນໃນຄຣິສຈັກ ການຮັບໃຊ້ຢ່າງສັດຊື່ເຕັມໃຈ ຕາມທີ່ພຣະເຈົ້າໄດ້ຊົງເອີ້ນແລະໄດ້ຊົງນຳພານັ້ນເປັນການຖວາຍກຽດ ແດ່ພຣະອົງຢ່າງແທ້ຈິງ ແລະເປັນທີ່ພໍພຣະທັຍພຣະເຈົ້າ ຍ້ອນວ່າພຣະເຈົ້າເອີ້ນຫາເຮົາໃຫ້ເປັນຜູ້ເສີມແຮງຜູ້ອື່ນ ແລະຜູ້ອື່ນໄດ້ເສີມແຮງເຮົາຄືກັນກັບອະວັຍວະຕ່າງ ໆ ໃນຮ່າງກາຍ ສິດຍາພິບາລສົມຄວນຕ້ອງສອນແລະເທສນາເຖິງຄວາມສຳຄັນຂອງອະວັຍວະຕ່າງ ໆ ແລະສອນໃຫ້ສະມາຊິກຂອງຄຣິສຈັກແຕ່ລະຄົນມີຄວາມພາກພູມໃຈແລະຂອບພຣະຄຸນພຣະເຈົ້າໃນເວລາທີ່ຮັບໃຊ້ຮ່ວມກັນໃນຄຣິສຈັກ ເພາະວ່າຖ້າອະວັຍວະອັນນຶ່ງຊົມຊື່ນຍິນດີອະວັຍວະອື່ນກໍຊົມຊື່ນຍິນດີນຳກັນ ໃນຈົດໝາຍຂອງທ່ານໂປໂລມີຂໍ້ພຣະທັມທີ່ສຳຄັນຢູ່ສາມຕອນດ້ວຍກັນທີ່ການອະທິບາຍໜ້າທີ່ຕ່າງ ໆ ໃນພຣະກາຍຂອງພຣະຄຣິສ ແມ່ນພຣະທັມ 1 ໂກຣິນໂທບົດທີ 12 ພຣະທັມໂຣມບົດທີ 12 ແລະພຣະທັມເອເຟໂຊບົດທີ 4 ພຣະທັມທັງສາມຕອນໃຫ້ຄຳສອນສລຸບໄດ້ດັ່ງນີ້

ກ. ບໍ່ມີຜູ້ໃດສາມາດທຳງານໃຫ້ເກີດຜົນໄດ້ດ້ວຍຕົນເອງ ທຸກພາກສ່ວນຂອງພຣະກາຍຂອງພຣະຄຣິສຕ້ອງອາສັຍກັນແລະກັນ

ຂ. ບໍ່ມີຄຣິສຕຽນຄົນໃດສຳຄັນກວ່າຄົນອື່ນ ແມ່ນວ່າຄົນນຶ່ງຄົນໃດຈະມີໜ້າທີ່ ຫລືຕຳແໜ່ງສຳຄັນໃນພຣະກາຍນັ້ນກໍຕາມ ຜູ້ນັ້ນສົມຄວນມີຄວາມຖ່ອມໃຈ ຈົ່ງຣະລຶກສເມີວ່າ ຜູ້ທີ່ມີໜ້າທີ່ຮັບຜິດຊອບຫລາຍທີ່ສຸດກໍຈະຕ້ອງຮັບໃຊ້ຜູ້ອື່ນຫລາຍທີ່ສຸດດ້ວຍ

ຄ. ເຮົາທຸກຄົນຊຶ່ງເປັນອະວັຍວະໃນພຣະກາຍຂອງພຣະຄຣິສ ຈະຕ້ອງພະຍາຍາມຢ່າງຍິ່ງທີ່ຄົງຄວາມເປັນນ້ຳນຶ່ງໃຈດຽງກັນໂດຍມີສັນຕິ ເຮົາຄວນເຮັດທຸກສິ່ງເທົ່າທີ່ເຮັດໄດ້ ເພື່ອປ້ອງກັນການຜິດໃຈກັນແລະຄວາມແຕກແຍກທີ່ອາດເກີດຂຶ້ນ

**2. ຈົ່ງຮັກແພງສະມາຊິກແລະໃຫ້ກຽດກັນແລະກັນ** ພຣະທັມໂຣມ 12:10

ການໃຫ້ກຽດແກ່ກັນແລະກັນ ແລະການຍ້ອງຍໍຊຶ່ງກັນແລະກັນ ແມ່ນໃນທັມນຽມຂອງບ້ານເຮົານັ້ນມີຢູ່ຫລາຍ ແຕ່ແທ້ທີ່ຈິງບໍ່ແມ່ນຍ້ອງຍໍກັນແຕ່ຄວາມເວົ້າ ຫລືໃຫ້ການຍ່ອງຍໍກັນເພື່ອເປັນມາຣະຍາດເທົ່ານັ້ນ ພຣະຄຳຂອງພຣະເຈົ້າສອນແກ່ເຮົາວ່າ *"ຢ່າໃຫ້ເຮົາຮັກດ້ວຍຄວາມເວົ້າແລະດ້ວຍປາກເທົ່ານັ້ນ ແຕ່ຈົ່ງສະແດງຄວາມຮັກອັນແທ້ຈິງດ້ວຍການກະທຳ"* (1 ຢຮ 3:18) ເພື່ອເປັນການເສີມສ້າງກັນແລະກັນໃຫ້ມີກຳລັງໃຈແກ່ກັນແລະກັນ ເມື່ອມີການເຮັດດີເຮັດຊອບ *"ຈົ່ງເຮັດດ້ວຍນ້ຳໃສໃຈຈິງ (ບໍ່ແມ່ນນ້ຳຂຸ່ນໃຈໝອງ) ດ້ວຍຄວາມຢຳເກງອົງພຣະຜູ້ເປັນເຈົ້າ ສິ່ງນຶ່ງສິ່ງໃດທີ່ເຈົ້າເຮັດນັ້ນ ຈົ່ງເຮັດດ້ວຍເຕັມໃຈ ເໝືອນເຮັດຖວາຍແກ່ອົງພຣະຜູ້ເປັນເຈົ້າ ບໍ່ໃຊ່ເໝືອນເຮັດແກ່ມະນຸດ* (ກຊ 3:23) *"ນອກຈາກສິ່ງທັງປວງນີ້ ຈົ່ງເອົາຄວາມຮັກ ທີ່ເປັນສາຍຜູກມັດທຸກສິ່ງໄວ້ໃຫ້ເຖິງຄວາມຄົບຖ້ວນ"* (ກຊ 3:14) ຄວາມຮັກນີ້ແມ່ນຄວາມຮັກອັນແທ້ *"ບໍ່ເຫິງສາ ບໍ່ອວດອ້າງ ບໍ່ຈອງຫອງ"* (1 ກທ 13:4) ການທີ່ຖືວ່າຜູ້ອື່ນດີກວ່າຕົນນີ້ເປັນນ້ຳໃຈຂອງຄຣິສຕຽນ ທີ່ມີຄວາມຊົມຊື່ນຍິນດີເມື່ອເຫັນວ່າຜູ້ອື່ນກ້າວໜ້າກວ່າ ເມື່ອເຫັນຜູ້ອື່ນໄດ້ຮັບກຽດຕິຍົດຫລືປະສົບຄວາມສຳເຣັດ ເຮົາຕ່າງເປັນພາກສ່ວນໃນພຣະກາຍຂອງພຣະຄຣິສ ເມື່ອອະວັຍວະສ່ວນນຶ່ງສ່ວນໃດໄດ້ກຽດພຣະກາຍຂອງພຣະຄຣິສກໍໄດ້ກຽດໄປດ້ວຍ ແລະມີສ່ວນຣາສີຮ່ວມກັນ

**3. ຈົ່ງຍອມຮັບຊຶ່ງກັນກັນແລະກັນ ແລະມີນ້ຳນຶ່ງໃຈອັນດຽວກັນໃນພຣະຄຣິສ** ພຣະທັມໂຣມ 15:5, 7

ການຍອມຮັບຊຶ່ງກັນແລະກັນນັ້ນ ມີສ່ວນສັມພັນກັບການມີນ້ຳນຶ່ງໃຈດຽວກັນ ກ່ອນທີ່ເຮົາຈະເຂົ້າຮ່ວມມືໃຫ້ເກີດມີນ້ຳນຶ່ງໃຈດຽວກັນ ເຮົາຕ້ອງຍອມຕ້ອນຮັບກັນແລະກັນ ເຊັ່ນດຽວກັບທີ່ພຣະຄຣິສໄດ້ຕ້ອນຮັບເອົາຄົນບາບເຂົ້າສ່ວນໃນຣາຊອານາຂອງພຣະອົງ ແລະໄດ້ພັທນາປ່ຽນຊີວິດຂອງເຂົາເຫລົ່ານັ້ນໃຫ້ນ້ຳໃຈໃໝ່ຂຶ້ນໃນພຣະອົງ ໃນສະພາບຄວາມເປັນຄວາມຈິງຂອງຄົນໃນຄຣິສຈັກກໍຄືກັນ ຜູ້ທີ່ເຂົ້າມາອກອອກໃນບໍ່ແມ່ນວ່າທຸກຄົນເປັນຄົນທີ່ມີຄວາມເຊື່ອໃນຣະດັບດຽວກັນ ຫລືມີຖານະເທົ່າທຽມກັນ ສິ່ງທີ່ສຳຄັນສິ່ງນຶ່ງແມ່ນມີການຍອມຮັບຕ້ອນຄົນເຫລົ່າ ໂດຍບໍ່ໄດ້ຖືຄວາມແຕກຕ່າງເປັນອຸປສັກປັນຫາ *"ຝ່າຍເຮົາທັງຫລາຍທີ່ມີຄວາມເຊື່ອເຂັ້ມແຂງ ຄວນອົດທົນຕໍ່ຄົນທີ່ມີຄວາມເຊື່ອຍຸດ ໆ ຢ່ອນ ໆ ແລະບໍ່ຄວນເຮັດຕາມຄວາມຊອບໃຈຂອງຕົນເອງ"* (ຣມ 15:1) ຈົ່ງພິຈາຣະນາທ່າທີແລະການກະທຳຂອງທ່ານກຳລັງ **"ຍອມຮັບ"** ຫລື **"ຕໍ່ຕ້ານ"** ຜູ້ອື່ນ ໂດຍໃຊ້ມາຕາຖານຂອງຕົວເຮົາເອງຫລືບໍ່? ຖ້າເປັນມາຕາຖານທີ່ເຮົາໄດ້ຕັ້ງໄວ້ເອງ ຖ້າເປັນເຊັ່ນນັ້ນເຮົາກໍອາດຈະກຳລັງຕັດສິນຜູ້ອື່ນ ຈົ່ງພິຈາຣະນາທັສນະທ່າທີຂອງເຮົາທີ່ມີຕໍ່ຄຣິສຕຽນຄົນອື່ນ ວ່າເຮົາກຳລັງເລືອກທີ່ຮັກມັກທີ່ຊັງຫລືບໍ່? ເຮົາສົມຄວນຍອມຮັບຜູ້ເຊື່ອທຸກຄົນໃນຖານະເປັນພີ່ນ້ອງໃນພຣະຄຣິສໄດ້ຢ່າງແທ້ຈິງ ດັ່ງນັ້ນແລ້ວຄວາມເປັນນ້ຳນຶ່ງໃຈດຽວກັນກໍຈະເກີດຂຶ້ນ ເພາະນ້ຳໃຈຂອງເຮົາທີ່ຍອມຮັບຜູ້ອື່ນຢ່າງພຣະຄຣິສ ສາຣະສຳຄັນຂອງຄຳອະທິຖານຂອງພຣະເຢຊູອັນລຶກຊຶ້ງ ແມ່ນເພື່ອໃຫ້ພວກສາວົກມີຄວາມເປັນນ້ຳນຶ່ງໃຈດຽວກັນ *"ໂອ ພຣະບິດາຜູ້ບໍຣິສຸດ ຂໍພຣະອົງຊົງໂຜດພິທັກຮັກສາເຂົາໄວ້ໂດຍພຣະນາມຂອງພຣະອົງ ທີ່ພຣະ*

*ອົງໄດ້ຊົງປະທານແກ່ຂ້ານ້ອຍນັ້ນ ເພື່ອເຂົາຈະເປັນອັນນຶ່ງອັນດຽວກັນເໝືອນດັ່ງເຮົາທັງສອງ"* (ຢຮ 17:11) ຈາກນັ້ນພຣະເຢຊູຄຣິສໄດ້ອະທິບາຍເຖິງພຣະປະສົງຂອງພຣະອົງ *"ຂ້ານ້ອຍບໍ່ໄດ້ອ້ອນວອນເພື່ອຄົນເຫລົ່ານີ້ພວກດຽວ ແຕ່ເພື່ອຄົນທັງປວງທີ່ວາງໃຈຂ້ານ້ອຍ ເພາະຖ້ອຍຄຳຂອງເຂົາ ເພື່ອເຂົາທັງໝົດຈະເປັນອັນນຶ່ງອັນດຽວກັນ ດັ່ງທີ່ພຣະອົງຄືພຣະບິດາຊົງສະຖິດໃນຂ້ານ້ອຍ ແລະຂ້ານ້ອຍໃນພຣະອົງ ເພື່ອໃຫ້ເຂົາຢູ່ໃນເຮົາທັງສອງເໝືອນກັນ ເພື່ອໂລກຈະໄດ້ເຊື່ອວ່າແມ່ນພຣະອົງແຫລະຊົງໃຊ້ຂ້ານ້ອຍມາ ແລະກຽດຕິຍົດທີ່ພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນ ຂ້ານ້ອຍກໍໄດ້ໃຫ້ແກ່ເຂົາ ເພື່ອເຂົາຈະເປັນອັນນຶ່ງອັນດຽວກັນ ເໝືອນດັ່ງເຮົາທັງສອງເປັນອັນນຶ່ງອັນດຽວກັນນັ້ນ ຂ້ານ້ອຍຢູ່ໃນເຂົາ ແລະພຣະອົງຢູ່ໃນຂ້ານ້ອຍ ເພື່ອເຂົາຈະເປັນອັນນຶ່ງອັນດຽວກັນຢ່າງສົມບູນ ເພື່ອໂລກຈະໄດ້ຮູ້ວ່າແມ່ນພຣະອົງແຫລະຊົງໃຊ້ຂ້ານ້ອຍມາ ແລະພຣະອົງຊົງຮັກເຂົາເໝືອນດັ່ງທີ່ພຣະອົງຊົງຮັກຂ້ານ້ອຍ"* (ຢຮ 17:20-23) ຖ້າສະມາຊິກທຸກຄົນໃນຄຣິສຈັກໄດ້ຮູ້ຈັກ ແລະມີຄວາມເຊື່ອໝັ້ນທີ່ຈະປະຕິບັດຕາມນ້ຳພຣະທັຍຂອງພຣະເຢຊູຄຣິສທີ່ໄດ້ອະທິຖານໄວ້ ພຣະເຈົ້າຈະໄດ້ຮັບກຽດຕິຍົດຫລາຍທີ່ສຸດໃນຄຣິສຈັກນັ້ນ

**4. ຈົ່ງທັກທາຍແລະເຕືອນສະຕິກັນແລະກັນ** ພຣະທັມໂຣມ 16:16, 15:14

ການທັກທາຍກັນເປັນພາກສ່ວນສຳຄັນຂອງຮີດຄອງປະເພນີບ້ານເຮົາ ເມື່ອພົບກັນກໍຈະຍໍມືໄຫວ້ແລ້ວກ່າວ **"ສະບາຍດີ"** ເປັນການທັກທາຍ ແລະເລີ້ມຕົ້ນມີສັມພັນທະພາບເມື່ອພົບກັນ ຕາມທັມນຽມຊາວເຮັບບຣູ ເຂົາທັກທາຍກັນດ້ວຍ **"ທັມນຽມຈູບອັນບໍຣິສຸດ"** ພຣະຄຣິສທັມຄັມພີພາກພັນທະສັນຍາໃໝ່ມີການກ່າວເຖິງຄຳສັ່ງໃຫ້ທັກທາຍກັນດ້ວຍ **"ທັມນຽມຈູບອັນບໍຣິສຸດ"** 5 ເທື່ອ (ຣມ 16:16, 1 ກທ 16:20, 2 ກທ 13:12, 1 ທຊ 5:26, 1 ປຕ 5:14) ຄຳສັ່ງສອນນີ້ມີຄວາມໝາຍແກ່ຄຣິສຕຽນ ໃຫ້ຄຣິສຕຽນຮູ້ຈັກທັກທາຍຊຶ່ງກັນແລະກັນໃນຖານະພີ່ນ້ອງຊາຍຍິງໃນພຣະຄຣິສດ້ວຍຄວາມຈິງໃຈ ວິທີທີ່ຈະທັກທາຍກັນຍ່ອມຂຶ້ນຢູ່ກັບຄວາມເໝາະສົມແລະການຍອມຮັບຂອງສັງຄົມນັ້ນ ໆ ເຮົາຕ່າງຮູ້ຈັກດີກວ່າ ການຈູບບໍ່ແມ່ນການທັກທາຍທີ່ເໝາະສົມໃນສັງຄົມບ້ານເຮົາ ສິ່ງທີ່ສັງຄົມບ້ານເຮົາຍອມຮັບເປັນສາກົນ ແມ່ນການຍໍມືໄຫວ້ຫລືການຈັບມື ແລ້ວກ່າວ **"ສະບາຍດີ"** ພຣະວັຈນະຂອງພຣະເຈົ້າເນັ້ນໜັກວ່າ ການທັກທາຍກັນນີ້ສົມຄວນເປັນແບບທີ່ **"ບໍຣິສຸດ"** ບໍ່ແມ່ນເຮັດກັນໄປພໍເປັນພິທີຕາມຮີດຄອງເທົ່ານັ້ນ ຫລືເປັນການທັກທາຍທີ່ມີການສັມຜັດຮ່າງກາຍທີ່ແປຄວາມໝາຍໄປທາງອື່ນ ໂດຍສະເພາະການສັມຜັດແຕະຕ້ອງຜູ້ທີ່ເປັນເພດກົງກັນຂ້າມ ເພາະບຸກຄົນບາງຄົນອ່ອນແອແລະໄວຕໍ່ການສັມຜັດ ກໍອາດເປັນເຫດກໍ່ໃຫ້ເກີດບັນຫາຊັກຈູງໄປໃນທາງທີ່ບໍ່ຖືກຕ້ອງ ແລະບໍ່ເໝາະສົມຕໍ່ສັງຄົມ ແລ້ວກໍສ້າງປັນຫາໃຫ້ແກ່ຄຣິສຈັກ

<u>**ຄຳແນະນຳ**</u>ຕໍ່ໄປນີ້ ຈະຊ່ວຍເປັນປໂຍດໃນການປ້ອງກັນປັນຫາທີ່ຈະເກີດຂຶ້ນໃນການທັກທາຍສະແດງຄວາມຮັກແພງກັນ ໂດຍສະເພາະຢ່າງຍິ່ງກັບຜູ້ທີ່ຢູ່ໃນເພດກົງກັນຂ້າມ ຈະເປັນຄົນໂສດຫລືທີ່ແຕ່ງງານແລ້ວກໍຕາມ ຈະເປັນເດັກນ້ອຍຫລືຜູ້ທີ່ໃຫຍ່ແລ້ວ ຈະເປັນໜຸ່ມເປັນສາວແລ້ວກໍຕາມ ເຮົາຄວນຣະມັດຣະວັງເປັນພິເສດ ເພາະອາດກາຍເປັນເຫດກໍ່ໃຫ້ເກີດບັນຫາໃຫຍ່ຕາມມາ ທີ່ບໍ່ແມ່ນຜິດຕໍ່ສັງຄົມເທົ່ານັ້ນ ແຕ່ອາດຜິດຕໍ່ກົດໝາຍບ້ານເມືອງດ້ວຍ

ຊາຍແລະຍິງທີ່ບໍ່ໄດ້ເປັນຍາດກ່ຽວຂ້ອງກັນ ຄວນຕ້ອງຣະວັງຕົວຢູ່ສເມີໃນການສະແດງອອກທັກທາຍກັນໂດຍການສັມຜັດແຕະຕ້ອງພາກສ່ວນຂອງຮ່າງກາຍ ການຍໍມືໄຫວ້ເປັນຮີດຄອງທີ່ສວຍງາມຂອງບ້ານເຮົາ ແລະເປັນການຫລີກລ່ຽງການສັມຜັດແຕະຕ້ອງຮ່າງກາຍທີ່ດີແລະສຸພາບ ຖ້າເຮົາຈະຕາມສັງຄົມຂອງຄົນໃນປະເທດອາເມຣິກາກໍຈະຕ້ອງພິຈາຣະນາເລືອກເອົາການທັກທາຍທີ່ເໝາະສົມ ການຈັບມືເປັນວິທີສຸພາບແລະເປັນສາກົນ ການໂອບກອດຫລືການຈູບບໍ່ແມ່ນຈະເໝາະສົມໃນທຸກກໍຣະນີ ໂດຍສະເພາະຢ່າງຍິ່ງຄົນທີ່ເປັນເພດກົງກັນຂ້າມທີ່ບໍ່ຮູ້ຈັກເລີ້ງເຄີຍກັນ

ມາກ່ອນ ການທັກທາຍທີ່ບໍ່ເໝາະສົມອາດກໍ່ໃຫ້ເກີດການເວົ້າຂວັນ ແລະນຳຄວາມເສັຍຫາຍມາສູ່ຕົວເຮົາ ແລະຄຣິສຈັກອັນເປັນພຣະກາຍຂອງພຣະຄຣິສ ແຕ່ໃນທາງກົງກັນຂ້າມ ການທັກທາຍກັນດ້ວຍຄວາມຮັກແພງທີ່ບໍຣິສຸດໃຈ ຣະມັດຣະວັງ ຈິງໃຈ ເໝາະສົມແລ້ວ ກໍ່ໃຫ້ເກີດຄວາມເປັນນ້ຳນຶ່ງໃຈດຽວກັນ

ເມື່ອເຮົາໄດ້ເລີ້ມຕົ້ນຜູກສັມພັນທະພາບດ້ວຍການທັກທາຍທີ່ຖືກຕ້ອງແລະເໝາະສົມແລ້ວ ທ່ານໂປໂລກ່າວວ່າ *"ພີ່ນ້ອງທັງຫລາຍຂອງເຮົາເອີຍ ເຮົາເຊື່ອແນ່ວ່າພວກເຈົ້າບໍຣິບູນດ້ວຍຄວາມດີ ແລະພ້ອມດ້ວຍຄວາມຮູ້ທຸກຢ່າງ ສາມາດຈະເຕືອນສະຕິກັນແລະກັນໄດ້"* (ຣມ 15:14) ການເຕືອນສະຕິເປັນສັມພັນທະພາບທີ່ກ້າວລຶກຊຶ້ງເຂົ້າໄປອີກຂັ້ນນຶ່ງໃນການເສີມສ້າງປັບປຸງແຕ່ງຄຣິສຈັກໃຫ້ເປັນອັນນຶ່ງອັນດຽວກັນໃນພຣະຄຣິສ ການເຕືອນສະຕິຕ້ອງເຮັດຕາມນ້ຳພຣະທັຍແລະຄຳສອນຂອງພຣະເຈົ້າ ດ້ວຍວິທີທີ່ຖືກກັບພຣະວັຈນະຂອງພຣະອົງ ໂດຍມຸ່ງໝາຍໃຫ້ຜູ້ທີ່ຜິດພາດໄປແລ້ວໄດ້ກັບຕັ້ງຕົວຂຶ້ນໃໝ່ (ຄທ 6:1) ແລະໃຫຍ່ຂຶ້ນໃນຄວາມເຊື່ອ ຂໍ້ແນະນຳໃນການເຕືອນສະຕິມີດັ່ງນີ້

**ກ. ການເຕືອນສະຕິຕ້ອງເຮັດດ້ວຍຄວາມຮັກ ແລະຄວາມຫ່ວງໃຍຢ່າງແທ້ຈິງ** ທ່ານໂປໂລມີຄວາມຮັກຄວາມຫ່ວງໃຍໃນຄຣິສຈັກໄດ້ກ່າວແກ່ຜູ້ນຳໃນເມືອງເອເຟໂຊວ່າ *"ເຫດສະນັ້ນ ຈົ່ງເຝົ້າຣະວັງແລະຈື່ຈຳໄວ້ວ່າ ໃນຣະຫວ່າງສາມປີທັງກາງວັນແລະກາງຄືນ ເຮົາບໍ່ໄດ້ຢຸດຢ່ອນໃນການເຕືອນສະຕິທ່ານທຸກຄົນ ດ້ວຍນ້ຳຕາໄຫລ"* (ກຈ 20:31)

**ຂ. ການເຕືອນສະຕິຕ້ອງເປັນການສ່ວນຕົວ** ໃນທີ່ນີ້ບໍ່ໄດ້ໝາຍຄວາມວ່າ ບໍ່ມີການເຕືອນສະຕິເປັນສ່ວນລວມ ແຕ່ເມື່ອເຮົາມອງຈາກຄວາມເປັນຈິງຂອງປັນຫາແລ້ວຈະເຫັນວ່າ ໃນກໍຣະນີສ່ວນໃຫຍ່ຂອງປັນຫາເກີດຂຶ້ນເປັນການສ່ວນຕົວ ທ່ານໂປໂລໄດ້ກ່າວກັບຄຣິສຈັກເທຊະໂລນິກວ່າ *"ເຮົາໄດ້ເຮັດນຳພວກເຈົ້າທຸກຄົນເໝືອນພໍ່ກັບລູກຂອງຕົນຄືໄດ້ເຕືອນສະຕິໜຸນໃຈພວກເຈົ້າ ແລະສັ່ງເນັ້ນພວກເຈົ້າເພື່ອໃຫ້ດຳເນີນຊີວິດຕາມຢ່າງສົມຄວນຕໍ່ພຣະເຈົ້າ"* (1 ທຊ 2:11) ພຣະຄຣິສທັມຄັມພີໄດ້ກ່າວເຖິງການຕັກເຕືອນຊ້ອງໜ້າຄຣິສຈັກ ໃຫ້ເຮັດຫລັງຈາກທີ່ໄດ້ເວົ້າເປັນການສ່ວນຕົວແລ້ວ ແລະມີຫລັກຖານພະຍານຈາກນຶ່ງຫລືສອງຄົນເປັນທີ່ແນ່ຊັດວ່າ ເຂົາຍັງດຳເນີນຊີວິດໃນຄວາມບາບ (ມທ 18:15-17, 1 ຕທ 5:19)

**ຄ. ການເຕືອນສະຕິຕ້ອງເຮັດຢ່າງຕໍ່ເນື່ອງຈຶ່ງຈະເກີດຜົນ** ຕົວຢ່າງຂອງທ່ານໂປໂລເຫັນໄດ້ຈາກພຣະທັມກິຈການ 20:31 ທີ່ທ່ານໄດ້ກ່າວວ່າ "ທັງກາງວັນແລະກາງຄືນ" ແລະ "ຕລອດສາມປີບໍ່ໄດ້ຢຸດຢ່ອນ" ພຣະວັຈນະຂອງພຣະເຈົ້າປະກອບດ້ວຍການສັ່ງສອນ ການຕັກເຕືອນ ການແນະນຳ ຊຶ່ງຕ້ອງໃຊ້ເວລາອັນຍາວນານທີ່ຈະກ່າວສອນ ແລະໃຊ້ເວລາຕລອດຊີວິດທີ່ຈະປະຕິບັດຕາມ ດັ່ງນັ້ນການເຕືອນສະຕິຈຶ່ງຕ້ອງດຳເນີນຢ່າງສືບເນື່ອງ

**ງ. ການເຕືອນສະຕິຕ້ອງເຮັດດ້ວຍເຈດຕະນາອັນບໍຣິສຸດ** ທ່ານໂປໂລໄດ້ສະແດງເຈດຕະນາອັນບໍຣິສຸດຂອງທ່ານຢ່າງຊັດແຈ້ງເມື່ອທ່ານໄດ້ຂຽນຈົດໝາຍໄປເຖິງຄຣິສຈັກໂກຣິນໂທວ່າ *"ເຮົາບໍ່ໄດ້ຂຽນຂໍ້ຄວາມເຫລົ່ານີ້ ເພື່ອໃຫ້ເຈົ້າທັງຫລາຍລະອາຍ ແຕ່ຂຽນເພື່ອເຕືອນສະຕິພວກເຈົ້າໃນຖານະເປັນລູກທີ່ຮັກຂອງເຮົາ"* (1 ກທ 4:14) ເຮົາຕ້ອງພະຍາຍາມສຸດຄວາມສາມາດທີ່ຈະບໍ່ເຮັດໃຫ້ໄດ້ຮັບຄວາມອັບອາຍ ແມ່ນວ່າເຂົາເປັນຜູ້ທີ່ເຮັດຜິດ ນີ້ເປັນສາເຫດສຳຄັນທີ່ວ່າ ການເຕືອນສະຕິຊ້ອງໜ້າໃນກອງປະຊຸມຕ້ອງເຮັດຫລັງຈາກການເຕືອນສະຕິເປັນການສ່ວນຕົວແລ້ວ ຖ້າຫາກພີ່ນ້ອງຊາຍຫລືຍິງຂອງເຮົາ ໄດ້ຮັບການເຕືອນສະຕິເປັນການສ່ວນຕົວດ້ວຍຄວາມຮັກໃນພຣະຄຣິສກ່ອນແລ້ວອາດຈະນຳພາໃຫ້ເຂົາໄດ້ກັບໃຈປ່ຽນໃໝ່ໄດ້ ດັ່ງນັ້ນການເຕືອນສະຕິຊ້ອງໜ້າກອງປະຊຸມຈຶ່ງບໍ່ຈຳເປັນ

**ຈ. ການເຕືອນສະຕິຄວນເຮັດຢ່າງມີເປົ້າໝາຍທີ່ສະເພາະເຈາະຈົງ** ເມື່ອເຮົາເຕືອນສະຕິຜູ້ອື່ນເຮົາຄວນມີຈຸດມຸ່ງໝາຍຂັ້ນພື້ນຖານຢ່າງດຽວ ແມ່ນການຊ່ວຍໃຫ້ເຂົາໃຫຍ່ຂຶ້ນໃນພຣະຄຣິສຫລາຍຂຶ້ນ ທ່ານໂປໂລກ່າວວ່າ *"ພຣະອົງ*

*ນັ້ນແຫລະ ທີ່ພວກເຮົາປະກາດຢູ່ ໂດຍເຕືອນສະຕິແລະສັ່ງສອນທຸກຄົນດ້ວຍປັນຍາທຸກຢ່າງ ເພື່ອຈະໄດ້ຖວາຍທຸກຄົນຕໍ່ພຣະພັກຂອງພຣະເຈົ້າເໝືອນເປັນຄົນໃຫຍ່ຖ້ວນແລ້ວໃນພຣະຄຣິສ ເພື່ອການນີ້ແຫລະ ເຮົາຈຶ່ງທົນການໜັກໜ່ວງດ້ວຍອິດສາສູ້ ຕາມພຣະກຳລັງຂອງພຣະອົງຜູ້ຊຶ່ງໂຜດກະທຳດ້ວຍຣິດອຳນາດໃນຕົວເຮົາຢູ່"* (ກຊ 128-29)

**ສ. ການເຕືອນສະຕິເພື່ອການເສີມສ້າງການຈະເຣີນໃຫຍ່ຂຶ້ນໃນພຣະກາຍຂອງພຣະຄຣິສ** ການເຕືອນສະຕິນີ້ບໍ່ແມ່ນການເຕືອນສະຕິເພື່ອແກ້ໄຂຄວາມຜິດພາດທີ່ໄດ້ເກີດຂຶ້ນເທົ່ານັ້ນ ແຕ່ເປັນການເຕືອນສະຕິທີ່ເສີມສ້າງຊັກຈູງນຳພາໃຫ້ໃຫຍ່ຂຶ້ນໃນຊີວິດຄຣິສຕຽນ ໃຫ້ຈະເຣີນກ້າວໜ້າໄປໃນສ່ວນທີ່ໄປບໍ່ເຖິງ ທ່ານໂປໂລກ່າວ *"ຈົ່ງໃຫ້ພຣະວັຈນະຂອງຄຣິສສະຖິດຢູ່ໃນໃຈຂອງພວກເຈົ້າຢ່າງບໍຣິບູນ ໃນຂະນະທີ່ທ່ານສັ່ງສອນແລະເຕືອນສະຕິກັນແລະກັນດ້ວຍປັນຍາທຸກຢ່າງ ໃນຂະນະທີ່ທ່ານຮ້ອງເພງດ້ວຍເພງສັຣເສີນ ເພງນະມັສການ ແລະເພງຝ່າຍຈິດວິນຍານດ້ວຍໃຈໂມທະນາຂອບພຣະຄຸນພຣະເຈົ້າ"* (ກຊ 3:16 NIV) ການເຕືອນສະຕິນີ້ ເພື່ອໃຫ້ເຮົາໃຫຍ່ຂຶ້ນໃນພຣະຄຣິສໃນທຸກພາກສ່ວນຂອງຊີວິດຄຣິສຕຽນ ໃນພາຣະຮັບຜິດຊອບຮ່ວມກັນໃນຄຣິສຈັກ

**5. ຈົ່ງຊ່ວຍກັນຮັບພາຣະແລະຮັບໃຊ້ຊຶ່ງກັນແລະກັນ** ພຣະທັມຄາລາເຕັຽ 6:2, 5:13

ການປະຖິ້ມຄວາມບາບໃນຊີວິດຄຣິສຕຽນເປັນເຣື່ອງທີ່ຍາກຫລາຍທີ່ສຸດ ຄຣິສຕຽນຫລາຍຄົນຕ້ອງຜະເຊີນກັບທັມຊາດຂອງເນື້ອໜັງແຕ່ຜູ້ດຽວ ທ່ານໂປໂລຈິດໝາຍໄປເຖິງຊາວຄາລາເຕັຽວ່າ *"ຈົ່ງຊ່ວຍຮັບພາຣະອັນໜັກຂອງກັນແລະກັນ"* (ຄທ 6:2) ເຫດຜົນກໍຢູ່ໃນຂໍ້ຕົ້ນຂອງພຣະທັມຂໍ້ນີ້ *"ພວກພີ່ນ້ອງເອີຍ ຖ້າຄົນໃດຫາກພົບຄົນທີ່ຫລົງຜິດປະການໃດ ເຈົ້າທັງຫລາຍຜູ້ຢູ່ຝ່າຍວິນຍານ ຈົ່ງຊ່ວຍຄົນຢ່າງນັ້ນດ້ວຍຄວາມອ່ອນສຸພາບໃຫ້ກັບຄືນດີໃໝ່ ໂດຍໃຫ້ທຸກຄົນຄິດເຖິງຕົນເອງ ຢ້ານວ່າຕົນຈະຖືກຊັກຈູງໃຫ້ຫລົງໄປ"* (ຄທ 6:1) ຄຣິສຕຽນຕ້ອງມີສ່ວນຮັບຜິດຊອບນຳກັນເມື່ອພີ່ນ້ອງໃນຄຣິສຈັກເຮັດບາບ ຖ້າເຮົາຢາກປະຕິບັດຕາມນ້ຳພຣະທັມຂອງພຣະເຈົ້າ ເຮົາຕ້ອງພະຍາຍາມຊ່ວຍເຫລືອຜູ້ນັ້ນໃຫ້ເຂົາກັບຄືນມາໃນທາງຂອງພຣະເຈົ້າ ຊ່ວຍເຂົາໃຫ້ຍອມຮັບຮູ້ຄວາມບາບຂອງເຂົາ ແລະຊ່ວຍໃຫ້ເຂົາເອົາຊະນະບາບນັ້ນ ຄຣິສຕຽນຜູ້ທີ່ໃຫຍ່ຝ່າຍວິນຍານແລ້ວ ຕ້ອງຮັບຜິດຊອບຢ່າງເຕັມທີ່ໃນການຊ່ວຍເຫລືອຄຣິສຕຽນທີ່ຢູ່ຝ່າຍເນື້ອໜັງ ໂດຍສະເພາະຢ່າງຍິ່ງຜູ້ທີ່ຕົກຢູ່ໃນບາບ ຫລາຍກວ່ານັ້ນເຮົາມີໜ້າທີ່ຮັບຜິດຊອບທີ່ຈະບໍ່ເປັນເຫດໃຫ້ເຂົາເຮັດບາບ *"ແຕ່ຈົ່ງຣະວັງໃຫ້ດີຢ່າໃຫ້ການໃຊ້ເສຣີພາບຂອງເຈົ້າທັງຫລາຍ ເປັນເຫດໃຫ້ຄົນທີ່ມີຄວາມເຊື່ອນ້ອຍສະດຸດໃຈ"* (1 ກທ 8:9) **"ເສຣີພາບ"** ເປັນຄຳທີ່ມີບາງຄົນມີຄວາມເຂົ້າໃຈຜິດ ຄິດວ່າຄຣິສຕຽນຈະເຮັດແນວໃດກໍໄດ້ຕາມໃຈຂອງຕົນເອງ ທີ່ຈິງແລ້ວເສຣີພາບເປັນຄວາມຊ່ວຍເຫລືອຂອງພຣະຄຣິສທີ່ຊ່ວຍໃຫ້ຄຣິສຕຽນຫລຸດພົ້ນບາບ ແຕ່ເຮົາຕ້ອງໃຊ້ເສຣີພາບໃຫ້ຖືກຕ້ອງ ບໍ່ເປັນຫີນສະດຸດແກ່ຜູ້ອື່ນ ແລະໃນເວລາດຽວກັນກໍສົມຄວນໃຊ້ເສຣີພາບຊ່ວຍຜູ້ອື່ນຫລືຮັບໃຊ້ຜູ້ອື່ນໃຫ້ຫລຸດພົ້ນຈາກບາບດ້ວຍ ຄຣິສຕຽນຫລາຍຄົນຢຸດຢູ່ກັບເສຣີພາບທີ່ເຂົາໄດ້ຮັບຈາກພຣະຄຣິສ ແລະບໍ່ໄດ້ຄິດເຖິງການເປັນຜູ້ຮັບໃຊ້ຂອງພຣະຄຣິສ *"ພວກພີ່ນ້ອງເອີຍ ທີ່ຊົງເອີ້ນເຈົ້າທັງຫລາຍກໍເພື່ອໃຫ້ມີເສຣີພາບ ແລະຢ່າເອົາເສຣີພາບນັ້ນເປັນຊ່ອງທາງປ່ອຍຕົວໄປຕາມທັມມະດາໂລກ ແຕ່ຈົ່ງຮັບໃຊ້ຊຶ່ງກັນແລະກັນດ້ວຍຄວາມຮັກເຖີດ"* (ຄທ 5:13) ໝາຍຄວາມວ່າ ເສຣີພາບໃນພຣະຄຣິສ ບໍ່ແມ່ນການໃຊ້ສິດທິໃນການເຮັດບາບ ຫລືບໍ່ແມ່ນວ່າມະນຸດຫລຸດພົ້ນຈາກຄວາມຮັບຜິດຊອບຕໍ່ຄົນອື່ນ ແຕ່ແທ້ທີ່ຈິງແລ້ວ ຄຣິສຕຽນມີພາຣະຮັບຜິດຊອບອັນໃຫຍ່ ເພາະບັດນີ້ເຂົາໄດ້ເຂົ້າມາເປັນສະມາຊິກຄອບຄົວຂອງພຣະເຈົ້າແລ້ວ ໃນຖານະສະມາຊິກຄົນນຶ່ງຂອງຄອບຄົວ ຄຣິສຕຽນມີສິດທິແລະໜ້າທີ່ພິເສດໃນການເປັນຜູ້ຮັບໃຊ້ສະມາຊິກຄົນອື່ນໃນຄອບຄົວດຽວກັນນີ້ ທີ່ຈິງເຮົາຕ່າງເປັນຜູ້ຮັບໃຊ້ຂອງກັນແລະກັນດ້ວຍຄວາມຮັກ ແລະເຮົາຈະພົບເສຣີພາບອັນແທ້ຈິງໃນພຣະເຢຊູຄຣິສ

**6. ຈົ່ງອົດທົນຕໍ່ກັນແລະກັນ ຍອມຟັງຄວາມ ແລະໜູນນໍ້າໃຈກັນ ພຣະທັມເອເຟໂຊ 4:2, 5:21**

ການອະພິບາລສິດຫລືການລ້ຽງດູລູກແກະຂອງພຣະເຈົ້າ ຜູ້ລ້ຽງສິນຄວນເປັນຜູ້ທີ່ອົດທົນຕໍ່ຜູ້ອື່ນ ຍອມຟັງຄວາມຄິດເຫັນຂອງຜູ້ອື່ນ ແລະຮູ້ຈັກໜູນນໍ້າໃຈກັນແລະກັນ ຄຸນສົມບັດທັງສາມກ່ຽວຂ້ອງສຳພັດກັນທີ່ເຮົາສົມຄວນພິຈາຣະນາເບິ່ງໃນແຕ່ລະເຣື່ອງ

**ກ. ຈົ່ງອົດທົນແລະຜ່ອນໜັກຜ່ອນເບົາຊຶ່ງກັນແລະກັນດ້ວຍຄວາມຮັກ** (ອຟ 4:2) ໝາຍເຖິງການອົດກລັ້ນກັບຄຣິສຕຽນຄົນອື່ນ ແມ່ນອົນທົນຕໍ່ນິສັຍແລະຄວາມອ່ອນແອຂອງຄົນອື່ນ ແລະການມີຈິດໃຈໃຫ້ອະພັຍແກ່ຄົນອື່ນທີ່ອາດເຮັດຜິດຕໍ່ເຮົາ ບໍ່ມີໃຜໃນພວກເຮົາດີເລີດ ເຮົາທັງຫລາຍຕ່າງລົ້ມເຫລວໃນດ້ານຄວາມສຳພັນທີ່ມີຕໍ່ກັນ ການທີ່ຈະຄາດຫວັງຈາກຄົນອື່ນໃຫ້ອົດທົນນັ້ນງ່າຍກວ່າຄາດຫວັງຈາກຕົວເຮົາທີ່ຈະອົດທົນ ເມື່ອເຮົາຖືກທົດລອງໃນຄວາມອົດທົນ ເຮົາຕ້ອງຄິດເຖິງພຣະເຢຊູຄຣິສ ແລະທ່າທີຂອງພຣະອົງ ທ່ານໂປໂລກ່າວວ່າ *"ຖ້າແມ່ນຜູ້ໃດມີເຣື່ອງຕໍ່ກັນ ກໍຈົ່ງຍົກໂທດໃຫ້ກັນແລະກັນ ອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດຍົກໂທດໃຫ້ເຈົ້າທັງຫລາຍສັນໃດ ພວກເຈົ້າກໍຈົ່ງຍົກໂທດໃຫ້ກັນແລະກັນສັນນັ້ນ"* (ກຊ 313) ຄຣິສຕຽນບໍ່ສົມຄວນເຮັດການຕອບແທນຫລືແກ້ແຄ້ນຕໍ່ການເຮັດຜິດບາບຂອງຜູ້ນຶ່ງຜູ້ໃດ ການຕອບແທນເປັນທຸຣະຂອງພຣະເຈົ້າ ແທນທີ່ຈະແກ້ແຄ້ນຄຣິສຕຽນສົມຄວນອົດທົນ ເພື່ອເຮົາຈະບໍ່ໃຫ້ຄວາມຊົ່ວມີໄຊຊນະເຮົາ ແຕ່ເຮົາຈະໄດ້ໄຊຊນະຄວາມຊົ່ວດ້ວຍຄວາມດີດ້ວຍຄວາມຮັກ (ຣມ 12:17-21)

**ຂ. ຈົ່ງຍອມຟັງກັນແລະກັນດ້ວຍຄວາມເຄົາຣົບໃນພຣະຄຣິສ** (ອຟ 5:21 NIV) ໝາຍເຖິງການຍອມຕົວຕາມຄຳສັ່ງຫລືຄຳແນະນຳຂອງຄົນອື່ນ ໃນພຣະຄຣິສຜູ້ເຊື່ອທຸກຄົນສາມາດທີ່ຈະຍອມຟັງກັນແລະກັນດ້ວຍຄວາມເຄົາຣົບໃນພຣະຄຣິສໄດ້ ບໍ່ວ່າທ່ານຈະຢູ່ໃນຕຳແໜ່ງໃດ ຄຣິສຕຽນສົມຄວນຕ້ອງສຳພັນກັບຜູ້ອື່ນດ້ວຍທ່າທີຂອງການຍອມຟັງກັນດ້ວຍຄວາມເຄົາຣົບ ການຍອມຟັງຕໍ່ຄຣິສຕຽນຄົນອື່ນ ບໍ່ສົມຄວນຂຶ້ນຢູ່ກັບອາຣົມຄວາມຮູ້ສຶກ ແຕ່ແນວທາງຂອງການຍອມຟັງຕໍ່ກັນນັ້ນຄວນຂຶ້ນຢູ່ກັບສິດທິອຳນາດທີ່ມີຮາກຖານມາຈາກພຣະເຢຊູຄຣິສ ແລະພຣະວັຈນະຂອງພຣະອົງ ດ້ວຍເຫດນີ້ທ່ານໂປໂລຈຶ່ງສອນວ່າ *"ຈົ່ງໃຫ້ພຣະວັຈນະຂອງພຣະຄຣິສສະຖິດຢູ່ໃນໃຈຂອງພວກເຈົ້າຢ່າງບໍຣິບູນ ໃນຂະນະທີ່ທ່ານສັ່ງສອນແລະເຕືອນສະຕິກັນແລະກັນດ້ວຍປັນຍາທຸກຢ່າງ"* (ກຊ 3:16 NIV) ການຍອມຟັງກັນແລະກັນນັ້ນຕ້ອງເລີ້ມຈາກຜູ້ນຳໂດຍເປັນເຮັດເປັນແບບຢ່າງກ່ອນ ຜູ້ນຳສົມຄວນພິຈາຣະນາຕົວເອງວ່າຍອມຟັງຜູ້ອື່ນຫລືບໍ່ ຄຳຖາມຂ້າງລຸ່ມນີ້ເປັນປໂຍດແກ່ທ່ານໃນການພິຈາຣະນາຕົວເອງ

- ຂ້ານ້ອຍຄິດເຫັນຕໍ່ຜູ້ນຳຄົນອື່ນໃນຄຣິສຈັກແນວໃດໃນຖານະທີ່ເປັນສະມາຊິກຂອງຄຣິສຈັກ? ຂ້ານ້ອຍໄດ້ໃຫ້ຄວາມນັບຖືແລະໃຫ້ກຽດອື່ນຫລືບໍ່? ຫລື ຂ້ານ້ອຍຮູ້ສຶກວ່າຕົວເອງສຳຄັນກວ່າຄົນເຫລົ່ານັ້ນ
- ເມື່ອມີຜູ້ອື່ນບໍ່ເຫັນດ້ວຍກັບແນວຄວາມຄິດຂອງຂ້ານ້ອຍ ຂ້ານ້ອຍສະແດງອອກແນວໃດ? ຂ້ານ້ອຍຮູ້ສຶກວ່າເສັຍປຽບຫລືບໍ່? ຂ້ານ້ອຍໂຕ້ຕອບຜູ້ອື່ນດ້ວຍອາຣົມແລະຂັດຂວາງດ້ວຍຕາມໃຈຕົວເອງແມ່ນບໍ່?
- ຂ້ານ້ອຍຍອມຮັບຜິດເມື່ອເຮັດຜິດຫລືບໍ່? ຫລືວ່າ ຂ້ານ້ອຍຕ້ອງເປັນຝ່າຍຖືກສເມີຈຶ່ງຈະສະບາຍໃຈ?
- ຂ້ານ້ອຍປົກບັງຈຸດອ່ອນຂອງຕົວເອງໄວ້ແຕ່ຜູ້ດຽວແມ່ນບໍ່? ແລະຂ້ານ້ອຍປົກບັງຄວາມຮູ້ສຶກແທ້ໂດຍບໍ່ກ້າສະແດງຄວາມຂັດແຍ້ງກັບຜູ້ອື່ນແມ່ນບໍ່?

ຄຳຖາມເຫລົ່ານີ້ຊ່ວຍຜູ້ນຳໃຫ້ເຮົາຮູ້ຈັກຕົວເອງ ວ່າມີຄວາມຮູ້ສຶກແນວໃດເມື່ອໄດ້ຟັງເຣື່ອງຂອງຜູ້ອື່ນ ຫລາຍຕໍ່ຫລາຍເທື່ອ ປັນຫາຢູ່ທີ່ທ່າທີຂອງຜູ້ຟັງ ເຣື່ອງຕ່າງ ໆ ທີ່ໄດ້ຟັງຈຶ່ງບໍ່ໄດ້ຄວາມໝາຍ ຜູ້ເຊື່ອທຸກຄົນໃນຄຣິສຈັກສົມຄວນມີຄວາມເຂົ້າໃຈຢ່າງຊັດເຈນໃນຄຳສອນຂອງພຣະຄັມພີເຣື່ອງການຍອມຟັງກັນແລະກັນ ເປັນການສົມຄວນທີ່ຈະ

ສຶກສາຮ່ວມກັນໃນເຣື່ອງນີ້ ເຮົາຕ້ອງສອນໃຫ້ຮູ້ຈັກວ່າ ການຍອມຮັບຟັງເປັນໄປໄດ້ໂດຍບໍ່ຕ້ອງເສັຍຕຳແໜ່ງອຳນາດ ຫລືຖານະຂອງຕົນ ບິດາມາຣດາຈະຟັງທັສນະຄວາມຄິດຈາກລູກຫລານຂອງເຂົາໄດ້ ໂດຍບໍ່ເສັຍສະຖານະພາບການເປັນຜູ້ປົກຄອງ ແທ້ທີ່ຈິງການຟັງເປັນການສື່ສານຄວາມໝາຍໃຫ້ເກີດຄວາມເຂົ້າໃຈກັນ ອັນຈະເປັນບາດກ້າວນຳພາໄປສູ່ຄວາມເປັນອັນນຶ່ງອັນດຽວກັນ

**ຄ. ເຫດສະນັ້ນຈົ່ງໜູນໃຈກັນແລະຕ່າງຄົນຕ່າງຈົ່ງກໍ່ກັນຂຶ້ນ** (1 ທຊ 5:11 NIV)

ການໜູນໃຈເປັນສ່ວນສຳຄັນທີ່ຈະຊ່ອຍຄຣິສຕຽນໃນການເສີມສ້າງຊຶ່ງກັນແລະກັນຂຶ້ນໃນພຣະຄຣິສ ແມ່ນຕ່າງຄົນຕ່າງກໍ່ກັນຂຶ້ນ ຄຳວ່າ "ກໍ່" ເປັນຄຳທີ່ໃຊ້ໃນການກໍ່ສ້າງ ຄືກັບຫີນທີ່ກໍ່ເປັນອາຄານ ການໜູນໃຈຂອງສະມາຊິກໃນຄຣິສຈັກກໍເປັນການຊິດຊ່ອຍກໍ່ກັນແລະກັນເປັນຄຣິສຈັກ ສ່ວນປະກອບທີ່ສຳຄັນຂອງການໜູນໃຈຊຶ່ງກັນແລະກັນແມ່ນ ພຣະວັຈນະແຫ່ງຄວາມຈິງຂອງພຣະເຈົ້າ *"ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກ ເພື່ອຈະຈະເຣີນຂຶ້ນທຸກຢ່າງຈົນເຖິງພຣະອົງຜູ້ເປັນສີສະ ຄືພຣະຄຣິສ"* (ອຟ 4:15) ແມ່ນແທ້ແນວທາງສຳຄັນແຫ່ງການໜູນໃຈຜູ້ເຊື່ອມີຈຸດສູນລວມຢູ່ໃນຄວາມຈິງຂອງພຣະເຈົ້າ ຄຳເວົ້າທີ່ໃຊ້ເປັນຄຳໜູນໃຈຕ້ອງເປັນຄຳທີ່ເປັນພຣະວັຈນະທີ່ພຣະເຈົ້າໄດ້ເປີດເຜີຍສຳແດງໃຫ້ເຮົາໄດ້ຮູ້ຈັກນ້ຳພຣະທັຍຂອງພຣະອົງ ສ່ວນຜູ້ທີ່ຟັງກໍຕ້ອງຮັບຄຳໜູນໃຈນັ້ນໄວ້ຄືກັບຄຳທີ່ມາຈາກພຣະເຈົ້າຄືກັນ *"ເພາະເຫດນີ້ແຫລະ ພວກເຮົາຈຶ່ງຂອບພຣະຄຸນພຣະເຈົ້າໂດຍບໍ່ຢຸດບໍ່ຢັ້ງ ເພາະເມື່ອພວກເຈົ້າໄດ້ຮັບເອົາພຣະວັຈນະຂອງພຣະເຈົ້າທີ່ໄດ້ຍິນຈາກພວກເຮົານັ້ນ ພວກເຈົ້າບໍ່ໄດ້ຮັບເອົາເໝືອນເປັນຂໍ້ຄວາມຂອງມະນຸດ ແຕ່ໄດ້ຮັບເອົາຕາມຄວາມເປັນຈິງເໝືອນເປັນພຣະວັຈນະຂອງພຣະເຈົ້າ ທີ່ດຳເນີນງານຢູ່ພາຍໃນເຈົ້າທັງຫລາຍທີ່ເຊື່ອ"* (1 ທຊ 2:13) ດັ່ງນັ້ນຈົ່ງໜູນໃຈກັນແລະກັນໃນຄຣິສຈັກຂອງທ່ານດ້ວຍພຣະວັຈນະຂອງພຣະເຈົ້າ ໃຫ້ເປັນພຣະພອນທັງຜູ້ກ່າວຄຳໜູນໃຈແລະຜູ້ຮັບຟັງຄຳໜູນໃຈ ອັນບໍ່ເປັນພຽງແຕ່ການຈະເຣີນຂອງຝ່າຍນຶ່ງຝ່າຍໃດເທົ່ານັ້ນ ແຕ່ເປັນການກໍ່ກັນແລະກັນຂຶ້ນເປັນພຣະກາຍຂອງພຣະຄຣິສ

ສງວນລິກຂະສິດ Copyright©Thira Siengsukon 2000

In compliance with copyright restrictions, no portion of these materials may be reproduced in any form without written permission of the writer.